ປະຫວັດຕົວອັກສອນ

ພາກວິຊາພາສາລາວ-[illegible]

ຄະນະອັກສອນສາດ

ມະຫາວິທະຍາໄລແຫ່ງຊາດ

2005

ສາລະບານ

ໜ້າ

ຄຳນຳ

ພາກທີ I ຕະກູນພາສາຕ່າງໆໃນໂລກ ແລະບໍລິມຄູອັກສອນສາດ

ບົດທີ 1 ວ່າດ້ວຍພາສາ ແລະຕົວອັກສອນ 1

ບົດທີ 2 ຕະກູນພາສາຕ່າງໆ ແລະບໍລິມຄູອັກສອນສາດ 9

ບົດທີ 3 ພີນິເຊຍຜູ້ໃຫ້ກຳເນີດອັກສອນສາດໃນປັດຈຸບັນ 18

ພາກທີ II ວ່າດ້ວຍພາສາ ແລະອັກສອນໃນອິນເດຍ

ບົດທີ 4 ພາສາ ແລະອັກສອນໃນອິນເດຍ 23

ບົດທີ 5 ວ່າດ້ວຍພາສາ ແລະອັກສອນສັນສະກິດ 32

ບົດທີ 6 ວ່າດ້ວຍພາສາ ແລະອັກສອນປາລີ 36

ພາກທີ III ວ່າດ້ວຍພາສາ ແລະອັກສອນໃນລາວ

ບົດທີ 7 ພາສາ ແລະອັກສອນໃນລາວ 39

ບົດທີ 8 ວ່າດ້ວຍຕົວອັກສອນມອນ 43

ບົດທີ 9 ວ່າດ້ວຍຕົວອັກສອນຂອມ 49

ບົດທີ 10 ວ່າດ້ວຍຕົວອັກສອນລື້ສິບສອງປັນນາ 58

ບົດທີ 11 ວ່າດ້ວຍຕົວອັກສອນທຳ 63

ບົດທີ 12 ວ່າດ້ວຍຕົວອັກສອນໄທດຳ 68

ບົດທີ 13 ວ່າດ້ວຍຕົວອັກສອນໄທສະຫຍາມ 74

ບົດທີ 14 ປະຫວັດຄວາມເປັນມາຂອງພາສາລາວ 79

ບົດທີ 15 ປະຫວັດຄວາມເປັນມາຂອງອັກສອນລາວ 91

ເອກະສານອ້າງອີງ 99

ພາກທີ I

ຕະກູນພາສາຕ່າງໆໃນໂລກ ແລະ ບໍລິບົດອັກສອນສາດ

ບົດທີ 1

ວ່າດ້ວຍພາສາ ແລະ ຕົວອັກສອນ

I. ພາສາແມ່ນຫຍັງ ?

1. ຄວາມໝາຍຂອງພາສາ

" ພາສາ " ເປັນຄຳສັບທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ຊຶ່ງແປຕາມຮູບສັບມີຄວາມໝາຍວ່າ ຄຳເວົ້າ ຫລື ຖ້ອຍຄຳ. ຖ້າແປຄວາມໝາຍອອກກວ້າງໆ ພາສາກໍໝາຍເຖິງ ການສະແດງຄວາມຮູ້ສຶກຄວາມໃນໃຈຂອງຕົນອອກມາໃຫ້ຜູ້ອື່ນເຂົ້າໃຈ ໂດຍໃຊ້ການປາກເວົ້າ, ການຂີດຂຽນ ແລະ ເຄື່ອງສັນຍານອື່ນໆ ເປັນສື່ສຳພັນໃນການຕິດຕໍ່ກັນ.

ຕໍ່ຄວາມໝາຍຂອງພາສານີ້ ທ່ານເລນິນ ໄດ້ໃຫ້ນິຍາມວ່າ **" ພາສາແມ່ນພາຫະນະສຳລັບແລກປ່ຽນຄຶບຄ້າແນວຄິດທີ່ສຳຄັນກວ່າໝູ່ຂອງມະນຸດ. "** ນອກຈາກຄຳນິຍາມທີ່ກ່າວມາຂ້າງຕົ້ນນີ້ແລ້ວ, ຍັງມີບັນດານັກພາສາສາດ ໃຫ້ນິຍາມກ່ຽວກັບພາສາແຕກຕ່າງກັນໄປ ເຊັ່ນ ພາສາແມ່ນພາຫະນະສື່ສານສຳລັບຕິດຕໍ່ພົວພັນກັນລະຫວ່າງຄົນກັບຄົນ ແລະ ຄົນກັບສິ່ງອື່ນໆ. ບາງຄົນກໍນິຍາມຢ່າງກວ້າງໆວ່າ ພາສາແມ່ນວິທີໃຊ້ຄຳເວົ້າຂອງຄົນໃນສັງຄົມໜຶ່ງໆ ປະກອບອາຊີບຢູ່ໃນຂົງເຂດວຽກງານອັນດຽວກັນ ຫລື ມີພຶດຕິກຳຢ່າງດຽວກັນເຊັ່ນ ວຽກເຕັກນິກວິທະຍາສາດ, ການແພດ, ພາສາການທູດ... ນິຍາມໜຶ່ງຖືວ່າທັນສະໄໝກວ່າໝູ່ ພັດເວົ້າວ່າ ,ພາສາແມ່ນລະບົບສັນຍານທີ່ໃຊ້ສັນຍານສຽງ (Vocal Sign) ເປັນສຳຄັນ ຫລື ໃຊ້ສິ່ງອື່ນເຊັ່ນ ຂີດເສັ້ນ, ແສງສີ. ເພື່ອສ້າງຄວາມເຂົ້າໃຈ ແລະ ສະແດງຄວາມຮູ້ສຶກນຶກຄິດຂອງບຸກຄົນໜຶ່ງໆຕໍ່ສິ່ງແວດລ້ອມ, ແມ່ນທຸກລະບົບທີ່ມີໂຄງຮ່າງປະກອບດ້ວຍເຄື່ອງໝາຍອື່ນບໍ່ມີສຽງ ແຕ່ສາມາດສຶກສາດ້ວຍທ່າທີ ...

ພາສາທີ່ພວກເຮົານິຍົມໃຊ້ກັນໃນວົງສັງຄົມນັ້ນມີ 2 ພາກສ່ວນໃຫຍ່ຄື ພາສາເວົ້າ ແລະ ພາສາຂຽນ. ເວົ້າສະເພາະພາສາເວົ້າແມ່ນໝາຍເຖິງການສະແດງຄວາມໃນໃຈດ້ວຍຖ້ອຍຄຳໃຫ້ອີກຝ່າຍໜຶ່ງໄດ້ຍິນ ສຽງທີ່ເປັ່ງອອກມານັ້ນ ຈະຕ້ອງມີລະບຽບສຽງ ມີຄວາມໝາຍ ແລະເຂົ້າໃຈກັນໄດ້. ພາສາເວົ້າ ຈະມີຂຶ້ນໄດ້ ກໍຕໍ່ເມື່ອມີຄົນເປັ່ງສຽງສຳນຽງອອກມາທາງຮູຄໍຕໍ່ເນື່ອງກັນຢ່າງເປັນລະບຽບ ເປັນປະໂຫຍກ ແລະ ມີຄວາມໝາຍ ພ້ອມກັນນັ້ນຕ້ອງມີຜູ້ໄດ້ຍິນ ແລະ ຮັບຮູ້. ເພື່ອເຮັດໃຫ້ການແລກປ່ຽນສົນທະນາລະຫວ່າງ 2 ຝ່າຍ ມີຄວາມເຂົ້າໃຈຊຶ່ງກັນແລະກັນ, ພາສາທີ່ສົນທະນາກັນນັ້ນ ຕ້ອງເປັນພາສາດຽວກັນ.

2. ເຄົ້າກຳເນີດຂອງພາສາ

ກ່ຽວກັບບັນຫາເຄົ້າກຳເນີດຂອງພາສານີ້ ກໍມີຫລາຍຄວາມເຫັນແຕກຕ່າງກັນ. ຕາມທັດສະນະຂອງພວກຈິດຕະນິຍົມໃນສະໄໝບູຮານ ກໍຄືປັດຈຸບັນ ເຂົາຖືວ່າ ພາສາກຳເນີດມາຈາກເທບພະເຈົ້າ ຄືເທບພະເຈົ້າເປັນຜູ້ສ້າງພາສາອອກ ຕໍ່ທັດສະນະດັ່ງກ່າວ ເຫັນວ່າບໍ່ມີລັກສະນະວິທະຍາສາດ.

ນັບແຕ່ສະໄໝພັດທະນາຄືນ (ສະຕະວັດທີ 15) ເປັນຕົ້ນມາ, ບັນດານັກທິດສະດີນັກປາດທາງດ້ານພາສາສາດ ໄດ້ເອົາໃຈໃສ່ຄົ້ນຄວ້າເປັນພິເສດຕໍ່ເຄົ້າກຳເນີດຂອງພາສາ ຊຶ່ງເຂົາເຈົ້າໄດ້ໃຫ້ການສັນນິຖານໄວ້ດັ່ງນີ້ :

ກ ພາສາເກີດມາຈາກການລອກແບບສຽງທຳມະຊາດ.

ຂ ພາສາເກີດມາຈາກສຽງອຸທານທີ່ເປັ່ງອອກມາໃນຂະນະທີ່ເກີດຄວາມຮູ້ສຶກຕ່າງໆ

ຄ ພາສາເກີດມາຈາກການກຳນົດກົດບັດຂອງມະນຸດ.

ງ ພາສາເກີດມາຈາກການລອກແບບຂອງສຽງຮ້ອງໃນການອອກແຮງງານ.

ຈ ພາສາເກີດມາຈາກທ່າທີ.

ຕໍ່ບັນດາທິດສະດີ ຫລື ທັດສະນະທີ່ກ່າວມາຂ້າງເທິງນັ້ນ ສະຫລຸບລວມແລ້ວ ແມ່ນເປັນພຽງເຄົ້າກຳເນີດຂອງສັບຄຳເວົ້າເທົ່ານັ້ນ ຍັງບໍ່ທັນສາມາດເປັນເຄົ້າກຳເນີດຂອງພາສາໄດ້. ສຳລັບທັດສະນະຂອງລັດທິມາກ ກ່ຽວກັບເຄົ້າກຳເນີດຂອງພາສາ ໄດ້ໃຫ້ຄຳເຫັນຢ່າງສັດຈະວິພາກວ່າ " ພາສາກຳເນີດຂຶ້ນຈາກການອອກແຮງງານ ກຳເນີດພ້ອມກັບການຄົ້ນຄິດ (ຈິນຕະນາການ) ແລະ ກຳເນີດພ້ອມກັບສັງຄົມມະນຸດ. ຍ້ອນຄວາມຮຽກຮ້ອງຕ້ອງການໃນການແລກປ່ຽນຄົບຄ້າແນວຄິດອາລົມຈິດຢູ່ໃນສັງຄົມ. ຍ້ອນຜົນສະທ້ອນຂອງການອອກແຮງງານ ຈຶ່ງເຮັດໃຫ້ພາສາກຳເນີດພ້ອມກັບໄລຍະວິວັດການຫັນປ່ຽນຈາກທະນີຄົນມາເປັນຄົນ ."

3. ປະເພດຂອງພາສາ

ພາສາ ນອກຈາກຈະແບ່ງອອກເປັນ 2 ພາກສ່ວນ ຄື ພາສາເວົ້າ ແລະ ພາສາຂຽນແລ້ວ, ນັກພາສາສາດສ່ວນຫລວງຫລາຍຍັງເຫັນພ້ອງຕ້ອງກັນວ່າ ພາສາອັນເປັນພາຫະນະສື່ຂ່າວນັ້ນຈັດແບ່ງອອກເປັນ 3 ປະເພດຄື

ກ. ຈັກຂຸພາສາ : ແມ່ນພາສາທີ່ໃຊ້ຕາເປັນອຸປະກອນໃນການສັງເກດເຄື່ອງໝາຍຕ່າງໆເຊັ່ນ ຕົວໜັງສື, ປ້າຍສັນຍານ, ທ່າທີຕ່າງໆເປັນຕົ້ນ. ຫລື ໝາຍເຖິງການສື່ຂ່າວຕໍ່ກັນ, ສ້າງຄວາມເຂົ້າໃຈຕໍ່ກັນດ້ວຍການເຫັນ, ເບິ່ງດ້ວຍຕາ, ຄົນປາກກືກຫູໜວກໃຊ້ພາສາປະເພດນີ້ເປັນປະຈຳ ຄືເຂົາເຈົ້າສະແດງທ່າທາງໃຫ້ກັນເບິ່ງແລ້ວກໍເຂົ້າໃຈກັນ.

ຂ. ໂສຕະພາສາ : ແມ່ນພາສາທີ່ໃຊ້ຫູຮັບຟັງ ເຊັ່ນ ສຽງປາກ, ສຽງໂທລະສັບ, ສຽງສັນຍານອື່ນໆ ຊຶ່ງມີຄວາມໝາຍໄດ້ໂດຍສຽງ ເຊັ່ນ ສຽງໂຫວດຂອງໂຮງງານ, ສຽງແກ, ສຽງກະດິ່ງເປັນຕົ້ນ. ຫລື ໝາຍເຖິງການສື່ສານໂດຍອາໄສສຽງເປັນພາຫະນະຕົ້ນຕໍ ເຊັ່ນ ຊົນຊາດລາວເທິງເຜົ່າໜຶ່ງໃນພາກໃຕ້ຂອງລາວ ໃຊ້ສຽງຄ້ອງເປັນສັນຍານແຈ້ງຂ່າວມໍລະນະກຳ, ສຽງຄ້ອງປະເພດໜຶ່ງໝາຍເຖິງຄົນລະດັບໜຶ່ງ.

ຄ. ສຳຜັດພາສາ : ແມ່ນພາສາທີ່ໃຊ້ຄວາມຮູ້ສຶກທາງດ້ານການສຳຜັດເປັນສຳຄັນ ຫລື ໝາຍເຖິງການສື່ສານສິ່ງຂ່າວໃຫ້ກັນຮັບຮູ້, ເຂົ້າໃຈດ້ວຍການສຳຜັດທາງກາຍອິນຊີ ຄົນຕາບອດໃຊ້ພາສາປະເພດນີ້ເປັນປະຈຳຄື ເຂົາເຈົ້າໄດ້ໃຊ້ມືລູບຄຳວັດຖຸສິ່ງຂອງຕ່າງໆ ເພື່ອຈະໄດ້ຮູ້ວ່າວັດຖຸນັ້ນແມ່ນຫຍັງ. ນອກຈາກນັ້ນ ກໍຍັງມີຕົວໜັງສືທີ່ມີລັກສະນະນູນ ຫລື ເປັນຮອຍ ຊຶ່ງຖືກປະດິດຂຶ້ນສະເພາະຄົນຕາບອດກໍຈັດເຂົ້າໃນປະເພດສຳຜັດພາສາ.

4.) ລັກສະນະ ຫລື ຊະນິດຂອງພາສາ

ພາສາທີ່ໃຊ້ຢູ່ໃນໂລກປັດຈຸບັນນີ້ ມີມາກມາຍຫລາຍພາສາ ບາງພາສາກໍເປັນທີ່ຮູ້ ແລະ ນິຍົມໃຊ້ກັນແຜ່ຫລາຍທົ່ວໂລກ, ບາງພາສາກໍນິຍົມໃຊ້ກັນແຕ່ໃນຊົນຊາດຂອງຕົນ, ບາງພາສາກໍໄດ້ສູນຫາຍຈາກໂລກນີ້ໄປແລ້ວ ເພາະຊົນໃນຊາດນັ້ນສູນພັນ ຫລື ຖືກກືນກິນຊາດປ່ຽນໃຈໄປນິຍົມໃຊ້ພາສາອື່ນ, ບາງພາສາກໍເປັນພາສາຕາຍ ແຕ່ຍັງບໍ່ສູນສະຫລາຍໄປຈາກໂລກ ເພາະເປັນພາສາຂອງຊົນຊາດທີ່ເຄີຍຈະເລີນຮຸ່ງເຮືອງໃນທາງສິລະປະວິທະຍາມາແລ້ວໃນສະໄໝອະດີດ ແລະ ຍັງຄົງເປັນຮາກເຄົ້າສຳຄັນຂອງພາສາປັດຈຸບັນ ຈຶ່ງຍັງໄດ້ຮັບການປົກປັກຮັກສາໃຫ້ຄົງເຄົ້າຮູບພາສາຢູ່ ແຕ່ບໍ່ມີທາງຈະເຕີບໃຫຍ່ຂະຫຍາຍຕົວໃຫ້ຈະເລີນກ້າວໜ້າໄດ້ຕໍ່ໄປ ມີແຕ່ຈະຄົງຕົວຢູ່ ຫລື ເສື່ອມຊຸດສູນສະຫລາຍໄປເທົ່ານັ້ນ ເພາະບໍ່ມີຜູ້ນິຍົມໃຊ້ທັງໃນການເວົ້າ ແລະ ການຂຽນ. ພາສາຊະນິດນີ້ ໄດ້ແກ່ພາສາປາລີ, ສັນສະກິດ, ລາແຕັງ.

ພາສາທີ່ນິຍົມກັນແຜ່ຫລາຍນັ້ນ ມັກເປັນພາສາຂອງຊົນຊາດທີ່ຈະເລີນໃນທາງວັດທະນະທຳ ຫລື ຊົນຊາດທີ່ມີອິດທິພົນໃນທາງເສດຖະກິດ ແລະ ການເມືອງ ແຕ່ການຈຳແນກພາສາອອກເປັນຊະນິດຕ່າງໆນັ້ນ ເພິ່ນບໍ່ໄດ້ຈຳແນກຕາມເຊື້ອຊາດຂອງມະນຸດ ເພາະພາສາບໍ່ກ່ຽວກັບເຊື້ອຊາດ, ຊົນຊາດໜຶ່ງອາດນິຍົມໃຊ້ພາສາຂອງອີກຊາດໜຶ່ງກໍໄດ້ ໂດຍເຫດນີ້ ທາງນິລຸກຕິສາດ[1] ຈຶ່ງໄດ້ແບ່ງພາສາອອກເປັນຊະນິດ ໂດຍຖືເອົາຮູບຄຳ ແລະ ປະໂຫຍກຂອງພາສາເປັນສຳຄັນ ຊຶ່ງເມື່ອກ່າວໂດຍສະຫລຸບແລ້ວມີຢູ່ 4 ຊະນິດ ຄື

ກ. ພາສາຄຳໂດດ (Isolating Language)

ພາສາຄຳໂດດໄດ້ແກ່ພາສາ ທີ່ມີສັບສ່ວນຫລາຍເປັນສັບພະຍາງດຽວ, ເຖິງວ່າບາງສັບຈະມີຫຼາຍພະຍາງກໍໄດ້ຈາກການເອົາຄຳສັບພະຍາງດຽວນັ້ນ ມາປະສົມກັນ ພາສາຊະນິດນີ້ ບໍ່ມີເຄື່ອງສະແດງກ່ຽວຂ້ອງລະຫວ່າງຄຳທີ່ຮຽງຮ່ວມກັນຢູ່ໃນປະໂຫຍກ ແລະ ບໍ່ມີການປ່ຽນແປງຮູບຄຳແຕ່ຢ່າງໃດ. ເມື່ອຕ້ອງການສ້າງປະໂຫຍກກໍເອົາສັບແຕ່ລະສັບມາຮຽງຕິດຕໍ່ກັນເຂົ້າໂລດ.

ຕົວຢ່າງ : ໃນພາສາລາວ, ປະໂຫຍກທີ່ວ່າ " ຂ້ອຍຮັກແມ່ - ແມ່ຮັກຂ້ອຍ, ເສືອກັດເຈົ້າ - ເຈົ້າກັດເສືອ ... " ບັນດາສັບໃນປະໂຫຍກດັ່ງກ່າວ ເຖິງຈະເປັນຕົວຕັ້ງ ຫລື ຕົວປະກອບ ກໍຍັງຮັກສາຮູບເດີມ.

[1] (Etymology) ແມ່ນວິຊາວ່າດ້ວຍທີ່ມາ ແລະຄວາມຂອງຄຳ. ຕາມສາລານຸກົມ (Encyclopedia World Book) ອະທິບາຍໄວ້ວ່າ : ນິລຸກຕິສາດ ແມ່ນການສຶກສາປະຫວັດ ແລະວິວັດທະນາການຂອງສັບ ຫລື ຄຳເວົ້າກ່ຽວກັບເຄົ້າເດີມຂອງມັນ, ຄວາມສຳພັນຂອງສັບທີ່ຄ້າຍຄືກັນກັບພາສາອື່ນ ທີ່ມີເຄົ້າດຽວກັນ ແລະວິຖີທາງທີ່ຄຳນັ້ນໆປ່ຽນໄປຕາມກາລະສະໄໝ.

ພາສາຄຳໂດດ ໄດ້ແກ່ ພາສາລາວ, ໄທ, ຈີນ, ຫວຽດນາມ ...

ຂ. ພາສາຄຳຕິດຕໍ່ (Agglutinative Language)

ພາສາຊະນິດນີ້ ມີການສ້າງຄຳ ໂດຍນຳເອົາຄຳເພີ່ມ ຄື ອຸປະສັກ (prefix), ອາຄົມ (ຄຳກາງສັບ) ແລະ ປັດໄຈ (suffix) ເຂົ້າໄປປະກອບກັບຄຳເດີມ ຄື ທາດ (root). ພາສາຄຳຕິດຕໍ່ມີຢູ່ເກືອບທຸກທະວີບ ຕົວຢ່າງເຊັ່ນ

- ໃນພາສາຂະແມ : ຄຳວ່າ ເປຣີ (ເປີ) ເປັນຄຳກຳມະ ມີຄວາມໝາຍວ່າ "ໃຊ້" ເມື່ອຕື່ມອຸປະສັກ ອໍ ເຂົ້າໄປທາງໜ້າກໍກາຍເປັນ ບໍເຣີ (ບ້ອມເຣີ) ໝາຍເຖິງຄົນຮັບໃຊ້ ຫລື ການຮັບໃຊ້.

- ໃນພາສາມອນ : ຄຳວ່າ Put ໝາຍເຖິງເຈາະດ້ວຍສິ່ວ ເມື່ອຕື່ມອາຄົມ n ເຂົ້າໄປ ກໍກາຍເປັນ Pnut ຊຶ່ງໝາຍເຖິງມີດຕັດ.

ພາສາຄຳຕິດຕໍ່ນີ້ ມີພາສາມອນ, ຂະແມ, ພະມ້າ, ທິເບດ, ຊວາ, ມະລາຍູ ...

ຄ. ພາສາຜັນປ່ຽນຄຳ : (Inflectional Language)

ພາສາຊະນິດນີ້ ໄດ້ແກ່ພາສາທີ່ປ່ຽນແປງທ້າຍຄຳໃຫ້ມີຮູບຕ່າງໆ ໂດຍມີຄຳ ຫລື ຮາກຄຳ ທີ່ເອີ້ນວ່າ ທາດ ເປັນ ຕົວຕັ້ງ. ຕາມລຳພັງແຕ່ຕົວຕັ້ງ ແມ່ນຍັງໃຊ້ເປັນຄຳໃນພາສາຕາມປົກກະຕິບໍ່ທັນໄດ້ ຈະຕ້ອງມີວິພັດປັດໄຈເປັນສ່ວນປະກອບຂ້າງຫລັງຂອງຕົວຕັ້ງນັ້ນ ຈຶ່ງຈະໃຊ້ເປັນຄຳ ແລະ ມີຄວາມໝາຍຕາມພາສານິຍົມໄດ້ ແລະບາງທີກໍປ່ຽນແປງຮູບໄປນຳພ້ອມ ເຊັ່ນໃນພາສາສັນສະກິດ ຄຳວ່າ ນຣ (ນະຣະ) ແປວ່າ ຄົນ, ຜູ້ຊາຍ ບາງທີກໍປ່ຽນແປງຮູບເປັນ ນໂຣ ນຣາ ນເຣນ ນເຣທິ ນເຣ ນເຣສຸ ກໍໄດ້.

" ຄມ " ເປັນພາສາປາລີ ແປວ່າ ໄປ ເປັນຮາກຄຳ ຫລື ທາດທີ່ໃຊ້ເປັນຕົວຕັ້ງ ອາດປ່ຽນຮູບເປັນ ຄົມ ຄາມ ຄມນ ຄຈຉ ຄຕິ ຖ້າມີຄຳອື່ນປະກອບທາງໜ້າ ອາດປ່ຽນຄວາມໝາຍໄປໄດ້ຕ່າງໆ ເຊັ່ນ : ນິຄົມ ປະຕິຄົມ ສັງຄົມ ສິງຄາມ ອາຄົມ ຯລຯ.

ໃນພາສາຝະລັ່ງ ມີການປ່ຽນແປງທ້າຍຄຳ ແລະ ບາງສັບກໍມີການປ່ຽນແປງຮູບໄປນຳພ້ອມ.

ຕົວຢ່າງ ການແຈກຄຳກຳມະ "aller" (ໄປ)

Je vais ຂ້ອຍໄປ	Nous allons ເຮົາໄປ
Tu vas ເຈົ້າໄປ	Vous allez ພວກເຈົ້າໄປ
Il va ລາວໄປ	Ils vont ພວກລາວໄປ

ໃນພາສາອັງກິດ ມີການປ່ຽນແປງທ້າຍຄຳ ແລະ ບາງທີກໍມີການປ່ຽນແປງຮູບໄປພ້ອມ.

ຕົວຢ່າງ ການແຈກຄຳກຳມະ " To be " (ເປັນ, ຢູ່, ແມ່ນ)

I am	We are
You are	You are
He (She, it) is	They are

ພາສາຜັນປ່ຽນຄຳ ໄດ້ແກ່ ພາສາປາລີ, ສັນສະກິດ, ລາແຕັງ, ເກຼັກ, ອາຫລັບ, ລັດເຊຍ, ຝຣັ່ງ, ອັງກິດ ...

(໗.) ພາສາທີ່ມີຄຳລັກສະນະປະໂຫຍກ (Polysynthetic Language)

ພາສາທີ່ມີຄຳລັກສະນະປະໂຫຍກ ຫລື ເອີ້ນອີກຢ່າງໜຶ່ງວ່າ ພາສາຄຳຄວບຫລາຍພະຍາງ ຊຶ່ງມີວິທີໃຊ້ຄຳຫລາຍຄຳມາຕໍ່ກັນ ແລ້ວເກີດເປັນຄຳໜຶ່ງຂຶ້ນ ເຊັ່ນ

- ໃນພາສາແມັກຊິໂກ ຄຳວ່າ Achichilla cho can ມີຄວາມໝາຍວ່າ "ບ່ອນຊຶ່ງຄົນໄຫ້ຈົນນ້ຳຕາແດງ" ຖ້ອຍຄຳອັນຍືດຍາວນີ້ ແຍກອອກເປັນຄຳຍ່ອຍໄດ້ດັ່ງນີ້

Alt	ໝາຍເຖິງ	ແດງ
Chichilitic	,,	ນ້ຳ
Tlcatl	,,	ຄົນ
Chorea	,,	ໄຫ້

ລັກສະນະພາສາຊະນິດນີ້ ໄດ້ແກ່ ພາສາອິນເດຍແດງ, ແມັກຊິໂກ, ແອັດສະກີໂມ ເປັນຕົ້ນ.

ການແບ່ງພາສາອອກເປັນ 4 ຊະນິດດັ່ງກ່າວນີ້ ຖືເອົາແຕ່ພຽງຫລັກການໃຫຍ່ທີ່ພໍຈະແບ່ງພາສາອອກໄດ້ເປັນໝວດໝູ່ເທົ່ານັ້ນ ຈະກຳນົດຕາຍຕົວແນ່ນອນລົງໄປວ່າ ພາສານັ້ນຈະຕ້ອງຈັດເຂົ້າຢູ່ໃນຊະນິດນັ້ນ ໂດຍບໍ່ມີຂໍ້ຍົກເວັ້ນໄດ້ ເຊັ່ນ ພາສາລາວເຮົາສ່ວນໃຫຍ່ເປັນຊະນິດທີ 1 ແຕ່ຖ້າພິຈາລະນາໃຫ້ລະອຽດເຖິງສ່ວນປີກຍ່ອຍ ກໍຈັດຢູ່ໃນຊະນິດທີ 2 ນຳ. ແຕ່ການແບ່ງພາສາເປັນຊະນິດຕ່າງໆ ໂດຍກຳນົດຮູບຄຳນີ້ ບາງທີນັກປາດທາງພາສາສາດ ກໍມີຄວາມເຫັນແຕກຕ່າງກັນ ເຊັ່ນ ບາງຕຳລາກໍຈັດແບ່ງຊະນິດຂອງພາສາອອກເປັນ 3 ຊະນິດ ໂດຍບໍ່ໄດ້ຈັດຊະນິດພາສາທີ່ມີຄຳລັກສະນະປະໂຫຍກເຂົ້ານຳ. ແຕ່ເຖິງຈະແຍກອອກເປັນຈັກຊະນິດກໍຕາມ ຊະນິດທີ່ເປັນສ່ວນສຳຄັນ ຫລື ເປັນຫລັກການໃຫຍ່ທີ່ສະແດງຄວາມແຕກຕ່າງກັນໄດ້ຢ່າງຊັດເຈນນັ້ນ ສາມາດລົງຮອຍກັນໄດ້, ແຕ່ສ່ວນຂໍ້ປີກຍ່ອຍນັ້ນ ເຖິງຈະແຍກແນວໃດ ກໍແຍກໃຫ້ແຕກຕ່າງກັນໂດຍເດັດຂາດບໍ່ໄດ້ ເພາະຂໍ້ປີກຍ່ອຍມັກມີລັກສະນະທີ່ຄືກັນ ແລະ ຕ່າງກັນຢູ່ສະເໝີ ບໍ່ຫລາຍກໍໜ້ອຍ.

(II.) ພາສາຂຽນ

ຍ້ອນການອອກແຮງງານ, ມະນຸດຈຶ່ງມີພາສາເວົ້າ. ພາສາເວົ້ານີ້ ໄດ້ຖືກມະນຸດນຳໃຊ້ ແລະດັດແປງມາເປັນເວລາອັນເຫິງນານ, ຈົນກະທັ້ງມະນຸດມີຄວາມຈະເລີນຂຶ້ນ ຈຶ່ງໄດ້ອອກຫົວຄິດປະດິດສ້າງພາສາຂຽນຂຶ້ນ.

ພາສາຂຽນ ແມ່ນໝາຍເຖິງການສະແດງຄວາມຮູ້ສຶກນຶກຄິດໃຫ້ອີກຝ່າຍໜຶ່ງຮູ້ຈັກດ້ວຍການຂີດຂຽນເປັນເຄື່ອງໝາຍ ຫລື ຕົວໜັງສື. (ພາສາຂຽນແມ່ນເຄື່ອງໝາຍບັນທຶກຄຳເວົ້າ) ພາສາຂຽນນີ້ເປັນສິ່ງສະແດງໃຫ້ເຫັນເຖິງຄວາມຈະເລີນກ້າວໜ້າຂອງມວນມະນຸດໃນດ້ານສະຕິປັນຍາ ແລະ ເປັນບໍ່ເກີດແຫ່ງຄວາມໝັ້ນຄົງຖາວອນທາງດ້ານສິລະປະວິທະຍາຂອງໂລກ, ເພາະມັນສາມາດຖ່າຍທອດຄຳເວົ້າອອກເປັນເຄື່ອງໝາຍໃຊ້ຕິດຕໍ່ແທນຕົວເອງໄດ້ ເຖິງວ່າຈະຢູ່ໃນໄລຍະຫ່າງໄກກັນກໍຕາມ ແລະ ຍັງສາມາດບັນທຶກຄວາມຮູ້ສຶກນຶກຄິດ ແລະ ວິທະຍາການຕ່າງໆໃຫ້ດຳລົງຄົງຢູ່ເປັນມໍລະດົກອັນລ້ຳຄ່າຕົກທອດໄປເຖິງອະນຸຊົນຮຸ່ນຫລັງໄດ້.

1. ພາສາຊຽນຂອງມະນຸດກ່ອນຈະມີຕົວອັກສອນ

ໃນສະໄໝດຶກດຳບັນ ການບັນທຶກພາສາເວົ້າໄວ້ນັ້ນ ບໍ່ໄດ້ໃຊ້ຕົວອັກສອນ ຫລື ໜັງສື ແຕ່ເພິ່ນປະດິດເຄື່ອງໝາຍຮູບພາບຂຶ້ນຕ່າງຫາກ ຊຶ່ງມີລັກສະນະຕາຍໂຕ ຄື ເຄື່ອງໝາຍໜຶ່ງ ໃຫ້ໝາຍບອກຊື່ສິ່ງຂອງນັ້ນໆໂລດ. ບໍ່ແມ່ນເອົາເຄື່ອງທີ່ສ້າງຂຶ້ນນັ້ນມາປະກອບເຂົ້າກັນໃຫ້ໄດ້ຊື່ສິ່ງນັ້ນໆຄືກັນກັບສະໄໝປັດຈຸບັນ.

ຕົວຢ່າງພາສາຊຽນ ຫລື ເຄື່ອງໝາຍບັນທຶກພາສາຂອງມະນຸດໃນສະໄໝດຶກດຳບັນ :

* ພາສາຊຽນຄັ້ງທຳອິດຂອງຊາວສຸເມຣຽນ (4. 000 ກ່ອນ ຄ.ສ.)

ຜູ້ຊາຍ


ເຈົ້າຊີວິດ


ແມ່ຍິງ

ພູ

* ພາສາຊຽນຄັ້ງທຳອິດຂອງຊາວອິນເດຍເດີມ (ດຣາວິດຽນ) (3 000 ປີ ກ່ອນ ຄ.ສ.)


ປາ


ຕົ້ນໄມ້


ພູ


ລາຊະວັງ

* ພາສາຊຽນຄັ້ງທຳອິດຂອງຊາວເກັກບູຮານ (1000 ປີ ກ່ອນ ຄ.ສ.)

ຕົ້ນໄມ້


ລາຊະວັງ


ພູ

* ພາສາຂຽນຄັ້ງທຳອິດຂອງຊາວຈີນບູຮານ



ເມື່ອກ່າວໂດຍລວມແລ້ວ ພາສາຂຽນທີ່ມະນຸດປະດິດຄິດແຕ່ງນັ້ນຄັ້ງທຳອິດນັ້ນ ສ່ວນຫລາຍໄດ້ອາໄສຮູບພາບຕົວຈິງເປັນຫລັກ ແຕ່ຫຍໍ້ຮູບຮ່າງລົງ ພໍໃຫ້ເຫັນເປັນເຄື່ອງໝາຍສຳລັບຊີ້ບອກໃຫ້ຮູ້ວ່າແມ່ນອັນໃດກັນແທ້ ເຊັ່ນ ຕາເວັນ, ເດືອນ, ພູ ... ພາສາຂຽນຊະນິດນີ້ ໃຊ້ສະດວກສຳລັບການບັນທຶກສັບທີ່ເປັນຮູບປະທຳ ແຕ່ບໍ່ສະດວກສຳລັບການບັນທຶກສັບທີ່ເປັນນາມະທຳ ເຊັ່ນ ຮັກ, ຄຽດ, ຫິວ, ດີໃຈ, ເສຍໃຈ ເມື່ອພາສາຂຽນແບບຮູບພາບ ຫລື ແບບເຄື່ອງໝາຍ ຍັງໃຫ້ຄວາມສົມບູນ ແລະຊັດເຈນໃນທາງພາສາບໍ່ພຽງພໍ, ຕໍ່ມາຈຶ່ງເກີດພາສາຂຽນອີກແບບໜຶ່ງ ຊຶ່ງດັດແປງແຕ່ງເຕີມແຕກຕ່າງໄປຈາກພາສາຂຽນແບບຮູບພາບມາເປັນ "ໜັງສື" ຊຶ່ງມີລາຍເສັ້ນສົມມຸດ ທີ່ມຸ່ງໝາຍເຖິງການຖ່າຍສຽງຄຳເວົ້າໃຫ້ຄົບຖ້ວນ ຊຶ່ງເປັນວິທີປານີດ ເພາະບັນທຶກຄຳເວົ້າໄວ້ໄດ້ທຸກຊະນິດ ທັງສັບທີ່ເປັນຮູບປະທຳ ແລະ ນາມະທຳ ສະແດງຄວາມໝາຍໄດ້ຢ່າງລະອຽດ ແລະຊັດເຈນດີກວ່າພາສາຂຽນແບບຮູບພາບ. ພາສາຂຽນຊະນິດນີ້ ເພິ່ນຮຽກວ່າ " ອັກສອນ ".

2. ຄວາມໝາຍຂອງອັກສອນ :

ຄຳວ່າ " ອັກສອນ " ມາຈາກເຄົ້າພາສາບາລີວ່າ ອັກຂຣ (ອັກຂະຫລະ), ຈາກພາສາສັນສະກິດວ່າ ອັກສຣ (ອັກສະຫລະ) ຊຶ່ງແປວ່າ (ບໍ່ຮູ້ຈັກສົ້ນສຸດ ເປັນສິ່ງທີ່ໝົດບໍ່ເປັນ ແລະ ບໍ່ແຂງກະດ້າງ) ເວົ້າກັນງ່າຍໆ ອັກສອນກໍໝາຍເຖິງ ຕົວໜັງສື ທີ່ໃຊ້ຂຽນແທນຄຳເວົ້າ ຊຶ່ງມະນຸດເປັນຜູ້ປະດິດສ້າງຂຶ້ນ ປະກອບດ້ວຍສະຫຼະ ແລະພະຍັນຊະນະເປັນພື້ນຖານ.

ຕົວອັກສອນຊາດໃດ ຊາດນັ້ນກໍຂຽນພາສາຂອງຕົນເອງໄດ້ຢ່າງສະບາຍໃຈ ແລະ ຕາມຄວາມຕ້ອງການ ແຕ່ເປັນການລຳບາກໃນເວລາເພິ່ນເອົາຕົວອັກສອນຂອງຊາດໜຶ່ງໄປຂຽນພາສາອື່ນ ກໍຈະພົບຄວາມຫຍຸ້ງຍາກ ແລະການອອກສຽງກໍບໍ່ຖືກປານໃດ. ດັ່ງນັ້ນ ຕົວອັກສອນລາວ ໃຊ້ຂຽນພາສາລາວ ຈຶ່ງເໝາະ ແລະສະດວກດີ.

24/VII
ຫາມຈຳໜ່າຍ

ຈາກການທີ່ມະນຸດຮູ້ຈັກໃຊ້ຕົວອັກສອນນີ້ເອງ ຈຶ່ງເຮັດໃຫ້ພາສາຂະຫຍາຍຕົວ ແລະຈະເລີນຂຶ້ນເປັນລຳດັບມາ.

3. ຄວາມສຳຄັນຂອງຕົວອັກສອນ

ຕາມທີ່ຮັບຮູ້ກັນມາແລ້ວວ່າ ຫາກວ່າພາສາປາກເວົ້ານັ້ນເປັນຂີດໝາຍຂອງການປ່ຽນສະພາບຂອງຄົນເຮົາອອກຈາກຄວາມເປັນສັດແລ້ວ ຕົວອັກສອນນັ້ນໄດ້ເປັນຂໍກຸນແຈໄຂປະຕູໃຫ້ຄົນກ້າວໄປສູ່ຄວາມ

ກ້າວໜ້າສີວິໄລ. ຜ່ານຍຸກປະຫວັດສາດອັນຍາວນານນັ້ນ ໜັງສື ຫລືຕົວອັກສອນປະເພດຕ່າງໆ ມັນໄດ້ບັນທຶກເອົາເຫດການຕ່າງໆທາງປະຫວັດສາດນັ້ນໄວ້ທຸກດ້ານ ມັນບັນທຶກຜົນງານດ້ານມັນສະໝອງ ຄວາມສະຫລຽວສະຫລາດ ບົດຮຽນ ແລະຜົນສຳເລັດທາງດ້ານຕ່າງໆໄວ້ໃຫ້ຄົນຮຸ່ນຕໍ່ໆກັນມາ ໄດ້ສືບທອດ ແລະນຳເອົາໄປຂະຫຍາຍຕໍ່ໄປ. ຄວາມສຳຄັນຂອງຕົວອັກສອນມີມະຫາສານ ບໍ່ແມ່ນແຕ່ທາງດ້ານປະຫວັດສາດ, ອັກສອນສາດ ແລະວັນນະກຳເທົ່ານັ້ນ ມັນຍັງມີຄວາມໝາຍທາງດ້ານປັດຊະຍາ ແນວຄິດ ທິດຂະຫຍາຍ ບໍ່ວ່າທາງດ້ານຕັ້ງໜ້າ ແລະຫຍໍ້ທໍ້. ນອກຈາກນັ້ນ ມັນຍັງມີຄວາມສຳຄັນໄປເຖິງການສ້າງສັນຕິພາບ, ຄວາມເຂົ້າອົກເຂົ້າໃຈລະຫວ່າງຊາດ ແລະ ມີຄວາມສຳຄັນລະດັບໂລກອີກດ້ວຍ ເພາະວ່າມັນແມ່ນມໍລະດົກ ຫລືສົມບັດທາງວັດທະນະທຳຂອງໂລກອັນໜຶ່ງ, ມັນບໍ່ສະເພາະແຕ່ອຳນວຍໃຫ້ພວກເຮົາແນມເຫັນແຕ່ຄວາມເປັນມາໃນອະດີດຕະການ ແລະມໍລະດົກທາງວັດທະນະທຳເທົ່ານັ້ນ ແຕ່ມັນຍັງອຳນວຍໃຫ້ພວກເຮົາມອງເຫັນອະນາຄົດຕະການອີກດ້ວຍ.

ຄຳຖາມຄົ້ນຄວ້າ

1./ ພາສາມີຄວາມໝາຍແນວໃດ ແລະ ກຳເນີດມາຈາກໃສ ?

2./ ພາສາມີຈັກປະເພດ ແລະ ຈັກຊະນິດ ? ແຕ່ລະປະເພດ ແຕ່ລະຊະນິດເປັນແນວໃດ ?

3./ ພາສາເວົ້າ ແລະ ພາສາຂຽນ ມີອັນແຕກຕ່າງກັນແນວໃດ ?

4./ ອັກສອນແມ່ນຫຍັງ ? ມີຄວາມສຳຄັນແນວໃດ ?

[illegible]

ອັກສອນແມ່ນໃຊ້ສຳລັບຂຽນພາສາເວົ້າ

ຕົວຢ່າງສົມທຽບບາງສັບສຳລັບພາສາຕ່າງໆໃນຕະກຸນອິນໂດ-ເອີຣົບ

ຝຣັ່ງ	ອັງກິດ	ເຢຍລະມັນ	ລາແຕັງ	ເກຣັກ	ເປີເຊຍ	ສັນສະກຼິດ
ແຟຣເຣີ Frère	ບຣະເທີຣ Brother	ບຣູແດ Bruder	ຟຣາເຕີ Frater	ຟຣາເຕຍ Phratêr	ບຣາຕະ Brata	ພຣາຕະ Bhrata
ແມເຣີ Mère	ມາເທີຣ Mother	ມູແຕ Mutter	ມາເຕີ Mater	ມີເຕຍ Metêr	ມາຕາຣ Matar	ມາຕາ Mata
ແປເຣີ Père	ຟາເທີຣ Father	ວາແຕ Vater	ປາເຕີ Pater	ປາເຕຍ Patêr	ປິຕາຣ Pitar	ປິຕາ Pita

ນອກຈາກຕະກູນພາສາທີ່ໄດ້ສະເໜີມາແລ້ວ ຍັງມີຕະກູນພາສາອື່ນໆຕື່ມອີກເຊັ່ນ

- ຕະກູນອູຣານ- ອັນໄຕ (Ouralo-Altaique) ປະກອບດ້ວຍພາສາຮົງກາລີ, ແຟງລັງ, ມົງໂກນ, ແມນຈູ ......

- ຕະກູນ ຊາມິຕິກ- ເຊມິດ (Chamitic-semite) ປະກອບດ້ວຍພາສາເອທີໂອປີອາຫລັບ, ເອຢິບ, ລີບີ, ຊີລີ....

- ຕະກູນອິນໂດ- ອາເມລິກາ ປະກອບດ້ວຍພາສາອິນເດຍແດງເຜົ່າຕ່າງໆໃນທະວີບອາເມລິກາ

II. ບໍລິມະດູອັກສອນສາດ

໑. ແຫລ່ງກຳເນີດອາລະຍະທຳບູຮານຂອງມະນຸດ

ແຫລ່ງກຳເນີດຂອງອະລະຍະທຳບູຮານຂອງມະນຸດ ແມ່ນທະວີບອາຊີ ແລະ ພາກຕາເວັນອອກສ່ຽງເໜືອຂອງທະວີບອາຟຣິກາ. ອາລະຍະທຳບູຮານດັ່ງກ່າວນີ້ ໄດ້ປາກົດຕົວຂຶ້ນຢູ່ຕາມທົ່ງພຽງຕ່ຳຂອງລ່ອງແມ່ນ້ຳຕ່າງໆ ເປັນຕົ້ນວ່າ ລ່ອງແມ່ນ້ຳນິນ (Nile) ໃນປະເທດເອຢິບ, ລ່ອງແມ່ນ້ຳເອີຟຣັດ (Euphrates) ແລະ ຕີເກຣີ (Tigres) ໃນເມໂຊໂປຕາມີ (ປະເທດອີຣັກໃນປັດຈຸບັນ), ລ່ອງແມ່ນ້ຳສິນທຸ (Indus) ແລະ ແມ່ນ້ຳຄົງຄາ (Ganges) ໃນປະເທດອິນເດຍ, ລ່ອງແມ່ນ້ຳຮວງໂຫ (ແມ່ນ້ຳເຫລືອງ) ແລະ ແມ່ນ້ຳຢັງເຊກຽງ ໃນປະເທດຈີນ. ຄວາມຈະເລີນຮຸ່ງເຮືອງທາງດ້ານເຕັກນິກຂອງມວນມະນຸດໃນຍຸກປັດຈຸບັນ ກໍແມ່ນສືບທອດມາຈາກອາລະຍະທຳຂອງຊາວບູຮານທີ່ດຳລົງຊີວິດຢູ່ຕາມລ່ອງແມ່ນ້ຳຕ່າງໆທີ່ໄດ້ກ່າວມານັ້ນ.

໒. ບັນດາວັດທະນະທຳ ແລະ ຕົວອັກສອນຂອງມະນຸດໃນສະໄໝບູຮານ

ກ. ວັດທະນະທຳ ແລະ ຕົວອັກສອນຂອງເອຢິບບູຮານ

ປະເທດເອຢິບເປັນແຫລ່ງອາລະຍະທຳຂອງມະນຸດແຫ່ງທຳອິດຂອງໂລກ ຊາວເອຢິບບູຮານນອກຈາກຈະມີຫົວຄິດປະດິດສ້າງໃນການໝູນໃຊ້ທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ຂອງຕົນແລ້ວເຂົາເຈົ້າຍັງມີຫົວຄິດປະດິດສ້າງໃນການກໍ່ຕັ້ງວັດທະນະທຳ ແລະ ວິທະຍາສາດອັນຮຸ່ງເຮືອງເຫລືອງເຫລື້ອມເປັນຕົ້ນວ່າ ເຂົາເຈົ້າໄດ້ໃຫ້ກຳເນີດວິຊາເລກຄະນິດ, ເລຂາຄະນິດ, ເຄມີ, ສາມາດປະດິດປະຕິທິນ, ມີຄວາມຊຳນານດ້ານສິລະປະກຳ- ສະຖາປະນິກ ແລະທີ່ສຳຄັນກໍໄດ້ແກ່ຕົວອັກສອນແບບຮູບພາບ. ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ປະຊາຊົນເອຢິບໄດ້ສ້າງພື້ນຖານທາງດ້ານວັດທະນະທຳອັນເກົ່າແກ່ມາແຕ່ດົນນານແລ້ວ.

ເວົ້າສະເພາະດ້ານອັກສອນສາດ, ຖືວ່າຊາວເອຢິບບູຮານເປັນຜູ້ປະດິດຕົວອັກສອນແບບຮູບພາບຂຶ້ນໃຊ້ກ່ອນໝູ່ໃນໂລກ (ລະຫວ່າງ 3500 ປີ ກ່ອນ ຄ.ສ); ໃນຂັ້ນຕົ້ນ ເພື່ອບັນທຶກຄວາມຊົງຈຳດ້ວຍພາສາຂຽນຊາວເອຢິບບູຮານໄດ້ແຕ້ມເປັນຮູບພາບໃສ່ເທິງຫີນ (ຝາຜະໜັງຖ້ຳ) ໃນຂັ້ນຕົ້ນນີ້ຮູບດັ່ງກ່າວຍັງບໍ່ສາມາດເອີ້ນວ່າຕົວອັກສອນໄດ້ເທື່ອ, ຍ້ອນວ່າຮູບທີ່ຂຽນຂຶ້ນ ມີຄວາມໝາຍສະເພາະສິ່ງນັ້ນ ຫລື ຮູບເປັນຢ່າງໃດ ຄວາມໝາຍກໍເປັນຢ່າງນັ້ນສະເໝີໄປ ຈະໝາຍເປັນຢ່າງອື່ນບໍ່ໄດ້. ສົມມຸດວ່າ ແຕ້ມຮູບງົວ ກໍຕ້ອງອ່ານວ່າງົວ ຈະອ່ານ ຫລື ອອກສຽງອື່ນ ເຊັ່ນ ເສືອບໍ່ໄດ້.

ຕົວຢ່າງພາສາຂຽນແບບຮູບພາບຂອງຊາວເອຢິບ



ໃນໄລຍະຕໍ່ມາ ຊາວເອຢິບບູຮານໄດ້ພັນຂະຫຍາຍຮູບພາສາຂຽນຂອງເຂົາເຈົ້າໃຫ້ກ້າວໜ້າກວ່າເກົ່າດ້ວຍການເຮັດໃຫ້ຮູບຕ່າງໆທີ່ເຂົາເຈົ້າເຄີຍຂຽນມານັ້ນກາຍເປັນເຄື່ອງໝາຍພະຍາງໜຶ່ງ ເຊັ່ນ ຮູບໃບໄມ້ ອອກສຽງວ່າ ລີຟ (leaf = ໃບໄມ້) ເປັນເຄື່ອງໝາຍພະຍາງໜຶ່ງ ອອກສຽງວ່າ ບີ (bee = ເຜິ້ງ) ກໍເປັນເຄື່ອງໝາຍພະຍາງໜຶ່ງ. ເມື່ອເອົາຮູບເຜິ້ງ ແລະ ໃບໄມ້ ມາຮຽງເຂົ້າກັນເປັນຄຳໜຶ່ງ ເຊິ່ງມີ 2 ພະຍາງ ອ່ານວ່າ ບີລີຟ (Belief = ເຊື່ອ) ຄວາມໝາຍວ່າໃບໄມ້ ແລະ ເຜິ້ງ ອັນເດີມກໍຫາຍໄປກາຍເປັນຄຳທີ່ມີຄວາມໝາຍໃໝ່.

ຖ້າການຂີດຂຽນຂອງຊາວເອຢິບເປັນຮູບຕ່າງໆມີຄວາມໝາຍສະເພາະສິ່ງໜຶ່ງໆແລ້ວການຂຽນໜັງສືກໍຢຸດຕິຢູ່ພຽງນັ້ນ. ແຕ່ເມື່ອຮູບທີ່ຂຽນແຕ່ລະຕົວ ກາຍເປັນເຄື່ອງໝາຍພະຍາງໜຶ່ງ ແລະ ມີກົດອອກສຽງສະເພາະ ຈຶ່ງສາມາດເວົ້າໄດ້ວ່າຮູບດັ່ງກ່າວເປັນຕົວໜັງສື ຫລື ອັກສອນ.

ອັກສອນຂອງຊາວເອຢິບມີເຄື່ອງໝາຍເປັນຮູບພາບ (ມີທັງໝົດ 600 ກວ່າຮູບ ບາງໂຕກໍເປັນຮູບໂດດ, ບາງໂຕກໍປະສົມກັນຄື ເອົາໂຕໂດດມາຮຽງໃຫ້ເປັນຄຳໜຶ່ງ. ຍ້ອນແນວນັ້ນການຂຽນໜັງສືຂອງຊາວເອຢິບຈຶ່ງເປັນວິທີຂຽນຮູບພາບເປັນໝູ່ໆ ໝູ່ໜຶ່ງກໍເປັນຄຳໜຶ່ງ. ເມື່ອເອົາຄຳຕ່າງໆມາຮຽງເຂົ້າກັນກໍກາຍເປັນປະໂຫຍກ.

ເວົ້າລວມແລ້ວອັກສອນຂອງຊາວເອຢິບບູຮານນີ້ ມັກບັນທຶກລົງເທິງຫີນ ໂດຍຄວັດດ້ວຍເຫລັກແຫລມ, ຕົວອັກສອນດັ່ງກ່າວ ຖືກເອີ້ນຊື່ວ່າໄຮໂຣກິບຟິກ (Hieroglyphic) ແປວ່າອັກສອນສັກສິດປະກອບດ້ວຍຮູບຄົນ, ຮູບສັດ, ຮູບຕົ້ນໄມ້ ຫລື ວັດຖຸຕ່າງໆປະສົມເຂົ້າກັນເປັນຄຳ ຫລື ປະໂຫຍກ ເຊິ່ງມີຄວາມໝາຍຢ່າງໃດຢ່າງໜຶ່ງ, ອັກສອນຊະນິດນີ້ສັບສົນຫລາຍອ່ານ ແລະ ຂຽນກໍຍາກ. ເຖິງວ່າໃນສະໄໝຕໍ່ມາໄດ້ຮັບການແກ້ໄຂ ແລະຫຍໍ້ສ່ວນລົງໃຫ້ເປັນລະບົບກວ່າເກົ່າກໍຕາມ, ແຕ່ກໍຍັງອ່ານ ແລະຂຽນຍາກຢູ່ ຈົນໃນທີ່ສຸດບໍ່ມີໃຜໃຊ້ອີກ.

ໃນໄລຍະດຽວກັນນັ້ນ ຊາວເອຢິບບູຮານກໍຮູ້ຈັກປະດິດເຈ້ຍສຳລັບຂຽນໜັງສື, ເພິ່ນຖືກັນວ່າຊາວເອຢິບເປັນຊາດທຳອິດທີ່ຄົ້ນພົບວິທີເຮັດເຈ້ຍ ເຈ້ຍຊຶ່ງຊາວເອຢິບເຮັດຂຶ້ນນັ້ນແມ່ນເຮັດດ້ວຍຫຍ້າຜືຊະນິດໜຶ່ງ ຊື່ວ່າ " ປາປີຣຸດ " (papyrus) ຄຳວ່າ ເປເປີ ໃນພາສາອັງກິດ (paper) ກໍມາຈາກຄຳວ່າ ຫຍ້າເຫລົ່ານີ້ກໍມີຫລາຍຢູ່ຕາມແຄມແມ່ນ້ຳນິນ, ເຂົາເຈົ້າເອົາ ຫຍ້າຊະນິດນີ້ມາແຜ່ອອກເປັນແຜ່ນແລ້ວເອົາມາຕິດຕໍ່ໃສ່ກັນໂດຍໃຊ້ອີກຊຸດໜຶ່ງວາງເຕັ່ງໄປຕາມທາງຂວາງຂອງຕົ້ນຫຍ້າ ຕິດກັນເປັນແຜ່ນໜາແລ້ວຕັດອອກເປັນແຜ່ນຊຕາມຊອບໃຈ . ເຈ້ຍຊະນິດນີ້ ເມື່ອຂຽນແລ້ວ ກໍເອົາມາຕໍ່ໃສ່ກັນເປັນແຜ່ນຍາວ ແລ້ວເກັບມ້ຽນໄວ້ເປັນມ້ວນໆ. ສ່ວນນ້ຳມຶກນັ້ນ ເຂົາເຈົ້າໃຊ້ຢາງໄມ້ສີຂາວ ຫລື ສີດຳຕາມໃຈຊອບຕົ້ມກັບນ້ຳຂ້ຽວໃຫ້ຈົນຂຸ້ນ ແລ້ວໃຊ້ໄມ້ອໍ້ລົນໄຟ ສຸ້ມປາຍໃຫ້ແຫລມ ຈຸ່ມນ້ຳມຶກ ແລ້ວຂຽນ. ເອກະສານ ແລະຕຳລາຕ່າງໆຂອງຊາວເອຢິບທີ່ຍັງຕົກທອດມາຮອດປັດຈຸບັນ ລ້ວນແຕ່ຂຽນໃສ່ເຈ້ຍປາປີຣຸດ ເປັນຕົ້ນວ່າບົດວັນນະກຳ ແລະບົດສູດທາງສາສະໜາ.

ຕົວຢ່າງອັກສອນໄຮໂຣກຣີບຟິກ



ອັກສອນແບບຮູບພາບຂອງຊາວເອຢິບນີ້ແມ່ນຂຽນເປັນຮູບຕ່າງໆແທນຄຳເວົ້າ ບໍ່ມີສະຫລະ , ພະຍັນຊະນະ ; ຄັ້ງທຳອິດຊາວເອີຣົບບໍ່ເຂົ້າໃຈວິທີອ່ານ, ສະໄໝຕໍ່ມາໃນຕົ້ນສະຕະວັດທີ 19 ນາຍທະຫານຝຣັ່ງຍຸກນາໂປລີອົງ ຊື່ວ່າ ຊັງໂປລີກົງ (Champollion) ໄດ້ພົບແຜ່ນຫີນປະຫລາດທີ່ຕາແສງໂຣເສດຕາ (Rosetta). ແຜ່ນຫີນນັ້ນມີອັກສອນເກຣັກ ແລະອັກສອນຮູບພາບຢູ່ແນວລະເບື້ອງ. ລາວຈຶ່ງພະຍາຍາມອ່ານຈົນເຂົ້າໃຈຄວາມໝາຍແລ້ວກໍມີຄົນເຂົ້າໃຈແຜ່ຫລາຍໄປທົ່ວເອີລົບ. ປັດຈຸບັນແຜ່ນຫີນດັ່ງກ່າວໄດ້ຕົກເປັນສົມບັດຂອງຫໍພິພິດຕະພັນແຫ່ງຊາດອັງກິດ.

ຂ. ວັດທະນະທຳ ແລະ ຕົວອັກສອນຂອງຊາວສຸເມຣຽນ

ຊາວສຸເມຣຽນໄດ້ສ້າງເມືອງຂຶ້ນຢູ່ລະຫວ່າງ ແມ່ນ້ຳເອີຟຣັດ ແລະຕີເກຣີ ເຂົາເຈົ້າມີຄວາມຈະເລີນບໍ່ນ້ອຍໜ້າໄປກວ່າເອຢິບ, ມີຄວາມຊຳນານໃນວິທີສິລະປະຍຸດ (ວິຊາການທະຫານ), ວິຊາຄວັດລວດລາຍໃສ່ໂລຫະທາດ (ເຊິ່ງເປັນຕົ້ນສະບັບໃຫ້ແກະລວດລາຍປະຕິມາກຳຂອງຊາວເອີລົບ ແລະອາເມລິກາ), ການກໍ່ສ້າງດ້ວຍດິນໜຽວຕາກແດດ, ອັນສຳຄັນທີ່ສຸດແມ່ນເຂົາເຈົ້າຮູ້ຈັກປະດິດພາສາຂຽນ. ພາສາຂອງຊາວສຸເມຣຽນ ໃນສະໄໝຕົ້ນໆນັ້ນເປັນວິທີການບັນທຶກດ້ວຍຮູບພາບ (ດັ່ງທີ່ໄດ້ສະເໜີໃນບົດທີ 1). ຍ້ອນສາເຫດຈາກການຄ້າຂາຍ ແລະ ການປົກຄອງ ຈຶ່ງສອນໃຫ້ຊາວສຸເມຣຽນຮູ້ຈັກຄິດຈົດລາຍການເປັນຫລັກຖານໄວ້ໂດຍເອົາຕົ້ນອໍ້ມາແຫລມປາຍ ຂຽນລົງໃສ່ເທິງແຜ່ນດິນໜຽວ ຂຽນແລ້ວເອົາໄປຕາກແດດໃຫ້ແຂງ. ແຜ່ນດິນໜຽວຈາລຶກຊະນິດທີ່ເກົ່າແກ່ທີ່ສຸດເພິ່ນສາມາດສັງເກດເຫັນຮູບເຄົ້າເດີມທີ່ມີລວດລາຍເປັນຮູບພາບແບບດຽວກັບຂອງເອຢິບ ວິທີຂຽນຂອງຊາວສຸເມຣຽນ ບໍ່ແມ່ນຂີດ ເພິ່ນໃຊ້ໄມ້ແຫລມກົດແປະລົງໄປເປັນເສັ້ນ ແລ້ວຍົກໄມ້ຂຽນຂຶ້ນແລ້ວກົດແປະຕໍ່ໆໄປອີກ ເຊິ່ງຈະພາດລົງໄປຕາມທາງຕັ້ງ ທາງຂວາງ ຫລື ສະແຄງ ຢ່າງໃດກໍແລ້ວແຕ່ຮູບທີ່ຕ້ອງການຂຽນ ເພາະສະນັ້ນເສັ້ນທີ່ກົດລົງໄປຈຶ່ງເປັນຮູບສາມລ່ຽມ ຫລື ຮູບລູກສອນ ຫລືບໍ່ກໍຮູບຫລິ້ມໄມ້ດັ່ງນີ້ ຫລື . ຖ້າຈະຂຽນເປັນຮູບຫຍັງ ຫລື ເຄື່ອງໝາຍຫຍັງກໍເອົາຮູບຫລິ້ມເຂົ້າຮ່ວມເປັນໝູ່ ຕົວຢ່າງ :  ຊຶ່ງເດີມເປັນຮູບດວງດາວ ຫລື  ຊຶ່ງເດີມເປັນຮູບຕີນ. ໜັງສືຮູບແບບນີ້ ຊາວເອີຣົບຮຽກວ່າ ຮູບຫລິ້ມ (Cuneiform) ຮູບຊຶ່ງໃຊ້ຂີດເສັ້ນເປັນຮູບຫລິ້ມຕໍ່ໆກັນໄປແລະ ຖ້າຂຽນໄວຂຶ້ນກໍຍາກທີ່ຈະສັງເກດຮູບເຄື່ອງໝາຍເດີມໄດ້. ດ້ວຍເຫດນີ້ ຮູບທີ່ຂຽນໃນຮຸ່ນຫລັງຈຶ່ງປ່ຽນຈາກຮູບເດີມໄປຈົນສັງເກດບໍ່ອອກ.

ຕົວຢ່າງອັກສອນຄູນີຟອມ





ຂ້າພະເຈົ້າ ຊື່ ອັດສະຣະບັນນິປານ ຜູ້ສືບຈາກພະເຈົ້າ
ອັດສະຣະ ແລະ ເບນຕິສ

ຄ. ວັດທະນະທຳ ແລະ ຕົວອັກສອນຂອງຊາວຈີນບູຮານ

ຈີນໃນສະໄໝບູຮານມີໜ້າດິນຢູ່ແຖບບໍລິເວນສ່ວນໜຶ່ງຂອງແມ່ນ້ຳຮວງໂຫ ແລະ ຢັງເຊກຽງ. ຊາວຈີນໃນສະໄໝນັ້ນ ມີຄວາມຮູ້ກ່ຽວກັບວິຊາດາລາສາດຢ່າງກ້ວາງຂວາງ, ຮູ້ຈັກປະດິດປະຕິທິນ ເພື່ອຮັບໃຊ້ການກະສິກຳ, ມີຄວາມຈະເລີນທາງດ້ານແພດສາດ. ນອກຈາກນັ້ນເຂົາເຈົ້າຍັງຮູ້ຈັກປະດິດຕົວອັກສອນຂຶ້ນໃຊ້ ໂດຍຈາລຶກລົງໃສ່ກະດູກ ຫລືອອງເຕົ່າ. ໜັງສືດັ່ງກ່າວມີລັກສະນະແບບຮູບພາບ ແລະ ຖືວ່າເປັນຕົວໜັງສືທີ່ເກົ່າແກ່ທີ່ສຸດຂອງຈີນ. ເມື່ອປະມານ 2000 ປີ ລ່ວງມາແລ້ວ ຊາວຈີນສາມາດເຮັດເຈ້ຍໄດ້, ເຈ້ຍທີ່ຊາວຈີນເຮັດນັ້ນ ແມ່ນເຮັດມາຈາກເສດເຄືອງນຸ່ງ ຈາກໃບເຂົ້າ ແລະເປືອກຂອງຕົ້ນມອນ ໂດຍເອົາຂອງສາມຢ່າງນີ້ ມາຕົ້ມໃຫ້ເປື່ອຍ ແລ້ວຖອກໃສ່ຖາດປະໄວ້ໃຫ້ແຫ້ງ ເມື່ອແຫ້ງແລ້ວກໍກາຍເປັນແຜ່ນເຈ້ຍ.

ຕົວຢ່າງພາສາຂຽນແບບຮູບພາບຂອງຊາວຈີນບູຮານ

ນີ້ແມ່ນຮູບຂອງຄົນ ເບິ່ງເຫັນທາງດ້ານຂ້າງ ກຳລັງໂຄ້ງຕົວ ຂາຕັ້ງກົງ ມືຫ້ອຍຢູ່ຂ້າງໆ. ພາສາຈີນກາງອ່ານວ່າ " ເຫຣິນ " ແປວ່າ ຄົນ.

ນີ້ແມ່ນຮູບພາບດວງອາທິດ. ພາສາຈີນກາງ ອ່ານວ່າ " ຣື່ " ແປວ່າ ຕາເວັນ.

ນີ້ແມ່ນຮູບພາບຂອງດວງຈັນຂ້າງແຮມ ພາສາຈີນກາງ ອ່ານວ່າ " ຢ່ວຍ ". ແປວ່າ ພະຈັນ.

ນີ້ແມ່ນຮູບ ພູມີສາມໜ່ວຍຕິດກັນ ພາສາຈີນກາງ ອ່ານວ່າ " ຊານ " ແປວ່າ ພູ.



ນີ້ແມ່ນຮູບຂອງແມ່ນ້ຳ ສະແດງລັກສະນະຮ່ອງຮອຍຂອງກະແສນ້ຳໄຫລ ພາສາຈີນກາງ ອ່ານວ່າ "ສ່ວຍ" ແປວ່າ ແມ່ນ້ຳ.



ນີ້ແມ່ນຮູບດວງຕາ ຈະຂຽນຮູບຕັ້ງ ຫລື ຮູບນອນກໍໄດ້ ພາສາຈີນກາງ ອ່ານວ່າ " ມູ່ " ແປວ່າ ຕາ.



ນີ້ແມ່ນຮູບເຕົ່າ ເບິ່ງເຫັນທາງດ້ານຂ້າງ ພາສາຈີນກາງ ອ່ານວ່າ "ກ້ອຍ" ແປວ່າ ເຕົ່າ.

ນີ້ແມ່ນຮູບເຝືອ ທີ່ມີລັກສະນະເປັນກຸ່ມກ້ອນ ພາສາຈີນກາງ ອ່ານວ່າ " ຫຍຸນ " ແປວ່າ ເຝືອ.

ນີ້ແມ່ນຮູບປາກ ພາສາຈີນກາງອ່ານວ່າ " ໂຂ່ວ " ແປວ່າ ປາກ.



ນີ້ແມ່ນຮູບນົກ ພາສາຈີນກາງ ອ່ານວ່າ "ໝຽວ" ແປວ່າ ນົກ.

ນີ້ແມ່ນຮູບແບ້ ສະແດງເຂົາຂອງແບ້ ແລະສ່ວນຂ້າງລຸ່ມ ນັກຄົ້ນຄວ້າສັນນິຖານວ່າ ເປັນລຳຕົວກັບຂາທັງສີ່ ແລະຫາງ. ພາສາຈີນກາງ ອ່ານວ່າ " ຫຍາງ " ແປວ່າ ແບ້



ນີ້ແມ່ນຮູບມ້າ ພາສາຈີນກາງອ່ານວ່າ " ໝ່າ " ແປວ່າ ມ້າ

ນີ້ແມ່ນຮູບປາ ພາສາຈີນກາງ ອ່ານວ່າ " ຫຍູ " ແປວ່າ ປາ.

ນີ້ແມ່ນຮູບຕົ້ນໄມ້ ເຄິ່ງກາງແມ່ນລຳຕົ້ນ ຂ້າງເທິງຄືກິ່ງ ທາງລຸ່ມຄືຮາກ ພາສາຈີນກາງ ອ່ານວ່າ " ມູ່ " ແປວ່າ ຕົ້ນໄມ້.



ນີ້ແມ່ນຮູບເອກະສານ (ປຶ້ມ) ຂຽນເປັນຮູບໄມ້ຫລາຍອັນມັດຕິດກັນ. ສະໄໝບູຮານ ຈີນໃຊ້ສະຫລັກຕົວອັກສອນລົງເທິງໄມ້ແທນແຜ່ນເຈ້ຍ ແລ້ວມັກໂຮມເຂົ້າກັນເປັນມັດ. ມັດໜຶ່ງເທົ່າກັບເອກະສານ ຫລືປຶ້ມຫົວໜຶ່ງ ພາສາຈີນກາງ ອ່ານວ່າ "ເຊິ່" ແປວ່າ ໜັງສື (ເອກະສານ)

ຂໍໃຫ້ສັງເກດເບິ່ງວ່າ ຕົວໜັງສືແບບຮູບພາບນີ້ ໄດ້ຖ່າຍແບບມາຈາກຮູບຂອງວັດຖຸໂດຍກົງ ຂຽນຫຍາບໆພໍໃຫ້ເຫັນເປັນເຄົ້າ. ເພື່ອໃຫ້ສະດວກແກ່ການຂີດຂຽນ ຫລື ແກະສະຫລັກ ຜິດກັບການແຕ້ມ ຊຶ່ງຕ້ອງໃຫ້ຄືຂອງແທ້ ຕາມສັດສ່ວນຂອງມະນຸດ, ສັດ ຫລືວັດຖຸນັ້ນໆ.

ຕົວໜັງສືແບບຮູບພາບນີ້ ເມື່ອເອົາມາລວມກັນເຂົ້າ ກໍເຮັດໃຫ້ຄວາມໝາຍໃໝ່ຂຶ້ນໄດ້ ຄ້າຍຄືກັບວິທີປະສົມອັກສອນໃນປັດຈຸບັນ ແລະສຳນຽງອ່ານກໍຜິດແຜກແຕກຕ່າງໄປຈາກເດີມນຳ ເຊັ່ນ ຕົວໜັງສື ຕົ້ນໄມ້  ອ່ານວ່າ "ມູ່" ຖ້າເອົາມາໂຮມກັນສອງໂຕເປັນ ອ່ານວ່າ "ຫລິນ" ແປວ່າ ປ່າໄມ້. ການທີ່ຂຽນສອງໂຕຄູ່ກັນສະແດງເຖິງພະຫູພົດ ຄືມີຫລາຍກວ່າໜຶ່ງ ຈຶ່ງມີຄວາມໝາຍວ່າ ປ່າໄມ້.

ເມື່ອໂຮມຕົວໜັງສືພະອາທິດກັບຕົວໜັງສືພະຈັນ ຈະເປັນ ພາສາຈີນກາງ ອ່ານວ່າ "ໝິງ" ແປວ່າ ສະຫວ່າງ, ກະຈ່າງ, ແຈ່ມແຈ້ງ ເປັນຕົ້ນ.

ວິທີນີ້ ຖືວ່າເປັນມູນເຄົ້າຂອງການປະສົມຕົວໜັງສື ຊຶ່ງເປັນເຫດໃຫ້ຮູບ ແລະສຽງຂອງຕົວໜັງສືແບບຮູບພາບຂອງຈີນ ຄ່ອຍໆປ່ຽນໄປຈົນກາຍເປັນຕົວອັກສອນທີ່ຊາວຈີນໃຊ້ໃນທຸກມື້ນີ້.

ຄຳຖາມຄົ້ນຄວ້າ

1./ ຕະກູນພາສາຕ່າງໆໃນໂລກມີຕະກູນໃດແດ່ ? ແຕ່ລະຕະກູນປະກອບດ້ວຍໝວດ ແລະ ພາສາຫຍັງ ?

2./ ແຫລ່ງກຳເນີດອາລະຍະທຳຂອງມະນຸດຢູ່ໃສແດ່ ?

3./ ອັກສອນຄັ້ງທຳອິດທີ່ມະນຸດປະດິດສ້າງຂຶ້ນ ມີຮູບຮ່າງຢ່າງໃດ ? ແມ່ນຊົນຊາດໃດເປັນຜູ້ປະດິດຕົວອັກສອນແບບຮູບຂຶ້ນໃຊ້ກ່ອນໝູ່ໃນໂລກ ? ຈົ່ງເລົ່າຄວາມເປັນມາໂດຍຫຍໍ້.

4./ ຕົວໜັງສືແບບໄຮໂຣກຣິບຟິກ ແລະ ຕົວໜັງສືແບບຄູນິຟອມ ມີຈຸດດີ ຈຸດອ່ອນຕ່າງກັນແນວໃດ ?

ບົດທີ 3

ຟີນີເຊຍຜູ້ໃຫ້ກຳເນີດອັກສອນສາດໃນປັດຈຸບັນ

I. ວ່າດ້ວຍຊົນຊາດຟີນີເຊຍ (Phoenician)

ຊົນຊາດຟີນີເຊຍ ເດີມເປັນພວກທີ່ດຳລົງຊີວິດແບບພະເນຈອນຢູ່ຕາມທະເລຊາຍ ຫາລ້ຽງຊີບດ້ວຍການລ້ຽງສັດ. ພາຍຫລັງອົບພະຍົບກັນມາຕັ້ງພູມລຳເນົາຢູ່ຕາມຝັ່ງທະເລປະເທດຊີຣີ (Syrie)ແລ້ວ ເຂົາເຈົ້າໄດ້ກາຍເປັນນັກເດີນເຮືອຜູ້ຊຳນານ(ຟີນີເຊຍເປັນຊາດທຳອິດທີ່ຜະລິດເຮືອໃບຂຶ້ນໃຊ້ກ່ອນໝູ່ໃນໂລກ)ກາຍເປັນນັກການຄ້າທີ່ຮູ້ຈັກຜະລິດສິນຄ້າ ຊຶ່ງສ່ວນຫລາຍໄດ້ແບບຢ່າງມາຈາກຊາວເອຢິບ. ເຂົາເຈົ້າຮູ້ຈັກຜະລິດເຄື່ອງໃຊ້ທີ່ເຮັດດ້ວຍແກ້ວ, ເຄື່ອງປັ້ນດິນເຜົາ, ຮູ້ຈັກທໍ ແລະຍ້ອມຜ້າລິນນິນ, ຫລໍ່ຫລອມ ແລະສະຫລັກລວດລາຍໃສ່ໂລຫະ . ດ້ວຍຄວາມສາມາດທາງດ້ານການຄ້າ ແລະຜະລິດສິນຄ້າ ຈຶ່ງເຮັດໃຫ້ຊົນຊາດຟີນີເຊຍມີທ່າເຮືອຄ້າຂາຍຢູ່ຫລາຍແຫ່ງ ເປັນຕົ້ນຢູ່ ເກາະໄຊປຣັດ (Cyprus), ເກາະ ສີຊີລີ (Sicily), ເກາະຊາກດີເນຍ (Sardinia), ເກາະກ໊ອກຊີກາ (Corsica), ແຖບຝັ່ງທະເລເມດີເຕຣາເນ (Mediterranean Sea) ແລະຕາມຝັ່ງ ທະເລແອັດລະປາຍອີກຫລາຍແຫ່ງ.

ໃນປີ 814 ກ່ອນ ຄ.ສ. ຊາວຟີນີເຊຍໄດ້ອົບພະຍົບໄປສ້າງເມືອງໃໝ່ທີ່ແຄມຝັ່ງອາຟະລິກາ ກົງກັນຂ້າມກັບເກາະສີຊີລີ ຊຶ່ງມີຊື່ວ່າ ກາກຕາ (Carthage). ຢູ່ທີ່ເມືອງນີ້, ຊາວຟີນີເຊຍໄດ້ເປັນຜູ້ມີອຳນາດກວ່າເກົ່າອີກ. ໂດຍສະເພາະດ້ານການຄ້າແລ້ວ ໄດ້ກາຍເປັນຄູ່ແຂ່ງຂັນຂອງພວກໂຣມັນແຫ່ງກຸງໂຣມ (Rome), ແຕ່ຕໍ່ມາປະມານ 300 ປີ ກ່ອນ ຄ.ສ. ອຳນາດຂອງຟີນີເຊຍກໍຖືກປາບປາມໃຫ້ຢູ່ໃຕ້ອຳນາດຂອງຊົນຊາດໂຣມັນ.

II. ວ່າດ້ວຍຕົວອັກສອນຂອງຟີນີເຊຍ

ຊົນຊາດຟີນີເຊຍບໍ່ພຽງແຕ່ໄດ້ນຳເອົາວິທີຜະລິດສິນຄ້າ, ປະດິດເຮືອໃບ, ວິທີທໍຜ້າ, ຫລໍ່ຫລອມໂລຫະ ແລະຄວັດລວດລາຍສິລະປະມາໃຫ້ແກ່ຊາວໂລກເທົ່ານັ້ນ. ເຂົາເຈົ້າຍັງໄດ້ນຳເອົາສິ່ງຂອງອັນມີຄ່າສູງມາສູ່ມວນມະນຸດນຳອີກ ສິ່ງນັ້ນໄດ້ແກ່ ຕົວອັກສອນ. ໃນຂັ້ນທຳອິດ ຊາວຟີນີເຊຍແມ່ນໃຊ້ຕົວອັກສອນແບບຫລິ່ມໄມ້ຂອງຊາວສຸເມຣຽນທີ່ຂຽນລົງເທິງແຜ່ນດິນໜຽວ ແຕ່ຍ້ອນບໍ່ສະດວກໃນການຂຽນອ່ານ (ໂດຍສະເພາະການຂຽນ) ແລະ ຫຍຸ້ງຍາກໃນການເອົາຕິດໂຕໄປມາ ຈຶ່ງເຊົາໃຊ້ ແລ້ວປ່ຽນໄປສັ່ງຊື້ເຈ້ຍປາປີຣຸດຈາກປະເທດເອຢິບ ພ້ອມທັງໄດ້ປະດິດຄິດສ້າງຕົວອັກສອນເຄື່ອງໝາຍຂອງຕົນເອງຂຶ້ນ ຊຶ່ງມີທັງໝົດ 22 ຕົວ) ເຄື່ອງໝາຍເຫລົ່ານີ້ ບໍ່ປາກົດວ່າໃຊ້ແທນຄຳພະຍາງໜຶ່ງຄືກັບອັກສອນແບບຮູບພາບຂອງເອຢິບ. ເຄື່ອງໝາຍຕົວໜຶ່ງເປັນອັກສອນຕົວໜຶ່ງ, ດ້ວຍເຫດນີ້ ຈຶ່ງຖືວ່າ ຟີນີເຊຍເປັນຊາດທຳອິດທີ່ປະດິດຄິດຫາວິທີຂຽນ ໂດຍມີແຕ່ອັກສອນລ້ວນໆ ຊຶ່ງແມ່ນອັກສອນແທ້ນັ້ນເອງ. (ຄວາມສາມາດໃນການປະດິດຕົວອັກສອນຂອງຊາວຟີນີເຊຍນີ້ ແມ່ນອີງໃສ່ຕົວອັກສອນຮູບພາບຂອງເອຢິບ ແລະອັກສອນຫລິ່ມໄມ້ຂອງສຸເມຣຽນເປັນພື້ນຖານ).

ຟີນີເຊຍຮຽງຕົວອັກສອນແບບໃໝ່ໃຫ້ເຂົ້າລຳດັບ ເພື່ອໃຫ້ຕົວອັກສອນ 22 ຕົວນີ້ ໄດ້ຖານທີ່ຕັ້ງຕາຍຕົວ ເພື່ອຈະໄດ້ທ່ອງຂຶ້ນໃຈ ແລະຮຽນໄດ້ງ່າຍ ເຊັ່ນ ກ ຂ ຄ ອັກສອນລາວຂອງພວກເຮົາ. ສະນັ້ນ ເມື່ອຮຽງລຳດັບແລ້ວ ຖ້າບໍ່ໃຫ້ຊື່ສະເພາະຕົວ ເວລາຮຽນກໍຈະເຮັດໃຫ້ຈື່ຍາກ ເພາະສະນັ້ນຊາວ

ຟີນິເຊຍ ຊຶ່ງໃຫ້ຊື່ອັກສອນຕົວຕົ້ນວ່າ "ງົວ". ຄຳວ່າງົວ ໃນພາສາຟີນິເຊຍອອກສຽງວ່າ ເອເລັຟ (Aleph) ຊຶ່ງຂຶ້ນຕົ້ນດ້ວຍຕົວ . ອັກສອນຕົວທີສອງ ມີຊື່ວ່າ "ເຮືອ" ໃນພາສາຟີນິເຊຍອອກສຽງວ່າເບທ(Beth), ຊຶ່ງຂຶ້ນຕົ້ນດ້ວຍຕົວ . ເອີ້ນຊື່ແບບນີ້ຕໍ່ໆໄປ ຈົນຕະຫລອດຮອດຕົວອັກສອນສຸດທ້າຍ. ເພາະສະນັ້ນ ຖ້າເດັກນ້ອຍຊາວຟີນີເຊຍຈະຮຽນອ່ານຕົວອັກສອນ ກໍອ່ານວ່າ ເອເລຟ, ເບທ ຯລຯ.

ຮູບຕົວອັກສອນຂອງຟີນິເຊຍ



ຕົວອັກສອນທີ່ຊາວຟີນິເຊຍປະດິດຂຶ້ນໃໝ່ນີ້ ສ່ວນຫລາຍແມ່ນພວກພໍ່ຄ້າຟີນິເຊຍເປັນຜູ້ນຳໃຊ້ເຂົ້າໃນການຈົດເລື່ອງລາວກ່ຽວກັບການຄ້າຂາຍຂອງຕົນ. ເຂົາເຈົ້າໃຊ້ຕົວອັກສອນແບບໃໝ່ ຂຽນເທິງແຜ່ນເຈ້ຍປາປີຣຸດ ແລະເຜີຍແຜ່ໄປຫລາຍແຫ່ງໃນເຂດທະເລເມດີເຕຣາເນ ຈົນຮອດເຂດເອີຣົບຕາເວັນຕົກ. ທຳອິດແມ່ນຊາວເກຣັກເປັນຜູ້ຖ່າຍທອດໄປກ່ອນ. ໃນເວລາທີ່ຊາວຟີນິເຊຍນຳສິນຄ້າໄປຂາຍໃນປະເທດເກຣັກ, ຊາວເກຣັກໄດ້ເຫັນພວກພໍ່ຄ້າຟີນິເຊຍຖືແຜ່ນເຈ້ຍສີເຫລືອງ ຊຶ່ງເປັນບັນຊີຂອງພວກເຂົາ. ເທິງແຜ່ນເຈ້ຍນັ້ນ ມີການຂຽນເປັນຮູບເຄື່ອງໝາຍສີດຳໆ, ທຳອິດເມື່ອເຫັນຊາວເກຣັກຄົງບໍ່ໄວ້ໃຈ ແລະຄິດຢ້ານໄປວ່າຄົງເປັນສິ່ງສະໜຽດຈັງໄຮອັນໃດອັນໜຶ່ງ ດັ່ງມີຢູ່ໃນບົດເພງບູຮານຂອງຊາວເກຣັກສະໄໝນີ້ບົດໜຶ່ງ ຮຽກເຈ້ຍແຜ່ນນັ້ນວ່າ "ເຄື່ອງໝາຍຮ້າຍ". ຕໍ່ມາພໍ່ຄ້າເກຣັກຜູ້ທຳການຕິດຕໍ່ກັບພໍ່ຄ້າຟີນິເຊຍ ເຫັນແຜ່ນເຈ້ຍເຫລົ່ານັ້ນຈົນລື້ງຕາຂຶ້ນ, ໃນທີ່ສຸດ ກໍຮຽນເອົາແບບຢ່າງນຳ ຄ່ອຍຄິດດັດແປງມາຂຽນໃນພາສາຂອງຕົນ ໂດຍເອົາຕົວອັກສອນຟີນິເຊຍມາໃຊ້. ຕໍ່ມາ ເກຣັກມີປັນຍາຫລັກແຫລມຂຶ້ນ ຄືໄດ້ສັງເກດເຫັນຕົວອັກສອນຟີນິເຊຍມີຈຳນວນໜ້ອຍອັກສອນບາງຕົວ ກໍບໍ່ມີໃນພາສາເກຣັກ ຈຶ່ງຄິດວິທີຮຽງຕົວອັກສອນໃໝ່ ແລ້ວກໍແຜ່ຜາຍໄປໃນໝູ່ນະຄອນເກຣັກ ຊຶ່ງສຳລັບໃຊ້ສະເພາະໃນກິດຈະການຄ້າຂາຍ ແລະການປົກຄອງເທົ່ານັ້ນ. ສ່ວນຊາວເກຣັກທີ່ຢູ່ໃນຈຳພວກຊົນຊັ້ນສູງ ຍັງອ່ານຂຽນໜັງສືບໍ່ເປັນ, ຍິ່ງກວ່ານັ້ນ ຍັງເຫັນວ່າ ການຂຽນໜັງສືເປັນເລື່ອງທີ່ເປັນຕາຢ້ານ ຊຶ່ງຈະເກີດຄວາມບໍ່ເປັນມຸງຄຸນມາສູ່ຕົນ. ໃນສະໄໝ 693 ປີ ກ່ອນ ຄ.ສ ວິຊາໜັງສືຈຶ່ງໄດ້ແຜ່ຫລາຍຂຶ້ນທົ່ວໄປ, ເດັກນ້ອຍຊາວເກຣັກເວລາຮຽນອ່ານ ກໍເອີ້ນຊື່ຕົວອັກສອນຕາມພາສາຟີນິເຊຍ. ອ່ານອອກຊື່ຕົວອັກສອນ ແຕ່ບໍ່ຮູ້ຈັກວ່າ ຊື່ເຫລົ່ານັ້ນແປວ່າອີ່ຫຍັງ ສຽງຈຶ່ງປ່ຽນໄປຈາກເດີມ, ແຕ່ດັ້ງເດີມ ອ່ານວ່າ ເອເລຟ, ເບທ... ກໍກາຍເປັນ ອັລຟາ, ເບຕາ (Alpha, Beta) ໄປ. ຄຳວ່າຕົວອັກສອນໃນພາສາຝຣັ່ງ ທີ່ຮຽກວ່າ ອານຟາເບ (Alphabet) ກໍມາຈາກຄຳວ່າ ອັລຟາ ເບຕານີ້. ພາຍຫລັງທີ່ຊາວເກຣັກດັດແປງຕົວອັກສອນຟີນິເຊຍມາເປັນຂອງຕົນແລ້ວ ຕໍ່ມາຊາວໂຣມັນກໍໄດ້ນຳເອົາຕົວອັກສອນເກຣັກມາດັດແປງເປັນອັກສອນຂອງຕົນ, ຈາກນັ້ນ ຈຶ່ງແຜ່ຜາຍໄປທົ່ວເອີລົບ. ນອກຈາກຈະເຜີຍແຜ່ໄປທາງເອີຣົບແລ້ວ ຕົວອັກສອນຟີນິເຊຍຍັງເຜີຍແຜ່ມາ

ທາງອາຊີ ແລະໄດ້ເປັນແບບສະບັບໃຫ້ແກ່ຕົວອັກສອນຂອງຫລາຍໆຊາດໃນຂົງເຂດນີ້. ເພາະສະນັ້ນ ຈຶ່ງຖືໄດ້ວ່າ ຊົນຊາດຟີນີເຊຍໄດ້ສ້າງຄຸນປະໂຫຍດອັນໃຫຍ່ຫລວງໃຫ້ແກ່ຊາວໂລກ ຄືໄດ້ປະດິດຕົວອັກສອນແບບອານຟາເບຂຶ້ນໃຊ້ກ່ອນໝູ່ໃນໂລກ.

<u>ສົມທຽບຕົວອັກສອນຟີນີເຊຍ, ເກຣັກ, ລາແຕັງ, ອັງກິດ</u>



ຮູບອັກສອນຟີນີເຊຍ ແລະອັກສອນເກຣັກ ຊຶ່ງເປັນເຄົ້າມູນໃຫ້ແກ່ອັກສອນລາແຕັງ ແລະອັງກິດ.

ຫວ່າງທີ 1 ອັກສອນພີນີເຊຍ, ຫວ່າງທີ 2 ອັກສອນເກຣັກຕອນຕົ້ນ ຂຽນແຕ່ຂວາຫາຊ້າຍ ໂດຍເອົາແບບວິທີຂຽນມາຈາກອັກສອນພີນີເຊຍ. ຫວ່າງທີ 3 ອັກສອນເກຣັກຕອນທ້າຍ ປ່ຽນເປັນຂຽນແຕ່ຊ້າຍໄປຫາຂວາ ຊຶ່ງເປັນແບບໃຫ້ແກ່ອັກສອນລາແຕັງ...

III. ວິວັດທະນາການຂອງອັກສອນໃນໂລກ

ດັ່ງທີ່ກ່າວມາແລ້ວວ່າ: ເມື່ອ 3500 ປີ ກ່ອນ ຄ.ສ ຊົນຊາດເອຢິບໄດ້ປະດິດຕົວອັກສອນແບບຮູບພາບຂຶ້ນໃຊ້. ຈົນເຖິງ 1300 ປີ ກ່ອນ ຄ.ສ ຊົນຊາດພີນີເຊຍໄດ້ປະດິດຕົວອັກສອນແບບອານຟາເບຂຶ້ນໃຊ້ກ່ອນໝູ່ໃນໂລກ. ເມື່ອ 900 ປີ ກ່ອນ ຄ.ສ ຊົນຊາດເກຣັກໄດ້ກ່າຍເອົາແບບອັກສອນເຟນີເຊຍມາເປັນອັກສອນປະຈຳຊາດຂອງຕົນ, ຊຶ່ງໃນເວລາຕໍ່ມາ ອັກສອນເກຣັກນີ້ ໄດ້ຖືກຊົນຊາດໂຣມັນດັດແປງມາເປັນ ອັກສອນລາແຕັງ ແລະອັກສອນລາແຕັງໄດ້ກາຍມາເປັນຕົ້ນກຳເນີດຂອງອັກສອນຊາດຕ່າງໆໃນເຂດພາກພື້ນເອີຣົບ ແລະອາເມລິກາ.

ຢູ່ພາກກາງຂອງທະວີບອາຊີ ແມ່ນຊາວອາຣະມຽນ (Aramian) ໄດ້ກ່າຍເອົາຕົວອັກສອນຂອງຊາວພີນີເຊຍ ແລ້ວນຳໄປແຜ່ພາຍແກ່ຊົນຊາດອາຣັບ. ເມື່ອຊາວອາຣະຍັນເຂົ້າມາສູ່ອິນເດຍນັ້ນ ເຂົາເຈົ້າກໍໄດ້ນຳເອົາແບບອັກສອນພີນີເຊຍເຂົ້າມານຳ ຊຶ່ງຕໍ່ມາໄດ້ກາຍເປັນອັກສອນຂະໂຣດຖີ ຢູ່ທາງພາກຕາເວັນຕົກສຽງເໜືອຂອງອິນເດຍ ແລະໄດ້ຂະຫຍາຍຕົວອອກເປັນອັກສອນພຣາມີ. ອັກສອນພຣາມີນີ້ໄດ້ຂະຫຍາຍຕົວອອກເປັນອັກສອນຄຣົນ ຫລື ປາລີ ຢູ່ທາງພາກໃຕ້ຂອງອິນເດຍ. ເປັນອັກສອນສັນສະກິດ ຫລື ເທວະນະຄະຣີຢູ່ທາງພາກເໜືອຂອງອິນເດຍ.

ຕົວອັກສອນຄຣົນ ຫລື ປາລີ ແລະສັນສະກິດນີ້ ໄດ້ກາຍເປັນແບບສະບັບໃຫ້ແກ່ຕົວອັກສອນລັງກາ, ມອນ, ພະມ້າ, ຂະແມ, ລາວ, ໄທ ... ອັກສອນເຫລົ່ານີ້ ມີຮູບຮ່າງໃກ້ຄຽງກັນ. ການຈັດລຳດັບວັກອັກສອນກໍຄືກັນ, ການປະສົມສະຫລະກັບພະຍັນຊະນະກໍຄືກັນ ຊຶ່ງສະແດງອອກຢູ່ບ່ອນວ່າ ເອົາສະຫລະໄວ້[illegible]ລຸ່ມ, ເບື້ອງເທິງ, ຂ້າງໜ້າ, ຂ້າງຫລັງ ຄືກັນ. ອັກສອນຂອງຊາດຕ່າງໆເຫລົ່ານີ້ ກໍມີອັນແຕກຕ່າງກັນ[illegible]ທຳມະດາ [illegible]ໃນການຂຽນ ຊຶ່ງ[illegible]ຈຶ່ງໝູນໃຊ້ຕາມຄວາມ[illegible]

ຕົວຢ່າງວາດຂຽນຂອງຕົວອັກສອນ ລາວ-ໄທ- ຂະແມ - ມອນ - ພະມ້າ

ລາວ :	ກາ	ເກ	ກີ	ກູ
ໄທ :	กา	เก	กี	กุ
ຂະແມ :	កា	កេ	កី	កុ
ມອນ :	ကာ	ကေ	ကီ	ကု
ພະມ້າ :	ကာ	ကေ	ကီ	ကူ

ສັງເກດເຫັນໄດ້ວ່າ ຕົວອັກສອນຂອງຊາດເຫລົ່ານີ້ ມີລັກສະນະຄ້າຍຄືກັນຫລາຍ ໂດຍສະເພາະແມ່ນການຂຽນສະຫລະໄວ້ທາງຫລັງ, ທາງຫລັງ, ເບື້ອງເທິງ, ເບື້ອງລຸ່ມ. ແຕກຕ່າງກັນສະເພາະແຕ່ສິລະປະ ຫລືວາດຂຽນ.

ແຜນວາດຂະບວນວິວັດຂອງຕົວອັກສອນໃນໂລກ



ຄຳຖາມ

1. ຊົນຊາດຟີນີເຊຍ ມີປະຫວັດຄວາມເປັນມາແນວໃດ ?
2. ດ້ວຍເຫດໃດຊາວຟີນີເຊຍຈຶ່ງປະດິດຕົວອັກສອນແບບໃໝ່ຂຶ້ນ ? ອັກສອນຟີນີເຊຍມີຈັກຕົວ ? ແລະມີຄວາມແຕກຕ່າງກັບອັກສອນແບບຮູບພາບຂອງເອຢິບແນວໃດ ?
3. ບັນດາຕົວອັກສອນຢູ່ໃນໂລກນີ້ ມີວິວັດທະນາການເປັນມາແນວໃດ ? ຈົ່ງອະທິບາຍ.

2. ດ້ວຍເຫດ [illegible]
[illegible]
[illegible] ຟີນີເຊຍ ມີ 22 ຕົວ

* [illegible]
[illegible]
[illegible] ຟີນີເຊຍ.

ພາກທີ II
ວ່າດ້ວຍພາສາ ແລະ ຕົວອັກສອນໃນອິນເດຍ

ບົດທີ 4

ພາສາ ແລະ ອັກສອນໃນອິນເດຍ

I. ອາລະຍະທຳຂອງຊາວອິນເດຍບູຮານ

ອິນເດຍ ແມ່ນປະເທດໜຶ່ງທີ່ມີອາລະຍະທຳອັນຮຸ່ງເຮືອງມາແຕ່ສະໄໝບູຮານນະການ. ແຫລ່ງອາລະຍະທຳບູຮານຂອງອິນເດຍ ໄດ້ປາກົດຕົວຢູ່ຕາມລ່ອງແມ່ນ້ຳສິນທຸ ແລະແມ່ນ້ຳຄົງຄາ. ແມ່ນ້ຳໃຫຍ່ທັງສອງສາຍນີ້ ແມ່ນໄຫລລົງມາຈາກສາຍພູຫິມະໄລ (Himalaya).

ຈາກການຄົ້ນຄວ້າດ້ານປະຫວັດສາດຂອງນັກປະຫວັດສາດ ແລະການຂຸດຄົ້ນຂອງນັກບູຮານຄະດີ, ເພິ່ນສາມາດເກັບກຳຂໍ້ມູນໄດ້ຢ່າງລະອຽດ ກ່ຽວກັບອາລະຍະທຳຢູ່ຕາມລ່ອງແມ່ນ້ຳທັງສອງດັ່ງກ່າວ. ໂດຍສະເພາະຢູ່ຕາມລ່ອງແມ່ນ້ຳສິນທຸ ໄດ້ມີຊາກສະຫລັກຫັກພັງຂອງຕົວເມືອງເກົ່າ. ຄື ເມືອງຮາຣັບປະ (Harappa) ແລະ ເມືອງໂມເຮນໂຈ- ດາໂຣ (Mohenjo-Daro) ຊຶ່ງສັນນິຖານກັນວ່າ ຖືກສ້າງຂຶ້ນໃນປີ 2500- 2000 ກ່ອນ ຄ.ສ.



ຮາຣັບປະ ຖືກັນວ່າເປັນແຫລ່ງອາລະຍະທຳແຫ່ງທຳອິດຂອງອິນເດຍ ປັດຈຸບັນເປັນບ້ານໃນຕາແສງມັນຕະໂຄມະຣີ (Montagomery) ໃນລັດປັນຈາບ ພາກໃຕ້ຂອງປະເທດປາກິດສະຖານ. ເທິງຝັ່ງຕາເວັນອອກຂອງແມ່ນ້ຳຣະວີ (Ravi) ແລະ ຢູ່ທາງໃຕ້ຂອງເມືອງລາຮໍຣ໌ (Lahore) ລົງໄປເລັກນ້ອຍ. ສ່ວນໂມເຮນໂຈ- ດາໂຣ ຕັ້ງຢູ່ໂນນສູງປະມານ 6 ແມັດ ບາງແຫ່ງກໍເກືອບ 12 ແມັດ ຊຶ່ງມີທາດເຈດີ, ສິມ ແລະວິຫານ ຕັ້ງອ້ອມຢູ່, ໃນເຂດຕາແສງລາກະນາ (Larkana) ແຄມແມ່ນ້ຳສິນທຸ. ໂນນນີ້ ຕັ້ງຢູ່ຝັ່ງຕາເວັນຕົກຂອງແມ່ນ້ຳສິນທຸຕອນກາງ ຄື ເຄິ່ງກາງລະຫວ່າງປາກນ້ຳທາງໃຕ້ກັບບ່ອນເຕົ້າໂຮມກັນຂອງສາຂາທັງ 5. ໄລຍະທາງຈາກໂມເຮນໂຈ- ດາໂຣ ຂຶ້ນໄປຫາ ຮາຣັບປະ ປະມານ 700 ກ່ວາກິໂລແມັດ ປັດຈຸບັນຢູ່ໃນເຂດປາກິດສະຖານ. ບໍລິເວນດັ່ງກ່າວມີລັກສະນະຄ້າຍຄືກັນກັບເມືອງຫະຣັບປະ, ເວລານີ້ຖືກນ້ຳກັດເຊາະໄປຫລາຍ ແຕ່ກອງດິນຈີ່ຍັງມີເຫລືອໄວ້ພໍໃຫ້ຄົ້ນຄວ້າຫາຄວາມຈິງໄດ້ຢູ່. ການຂຸດຄົ້ນຄັ້ງໃຫຍ່ໃນປີ ຄ.ສ 1950 ນັ້ນ ໄດ້ເປີດເຜີຍຫລັກຖານທາງດ້ານປະຫວັດສາດ ແລະອາລະຍະທຳຂອງສະໄໝນັ້ນຢ່າງຈະແຈ້ງ. ຜົນຂອງການຂຸດຄົ້ນໄດ້ຊີ້ໃຫ້ເຫັນວ່າ ຊາວເມືອງທັງສອງດັ່ງກ່າວ ມີຄວາມຊຳນານໃນການກໍ່ສ້າງ ຊຶ່ງສະແດງອອກດັ່ງນີ້ ການກໍ່ສ້າງບ້ານເຮືອນມີແຜນຜັງຢ່າງເປັນລະບຽບ, ຖະໜົນສາຍສຳຄັນໃນຕົວເມືອງສ້າງໄວ້ຢ່າງກ້ວາງຂວາງ ບາງແຫ່ງກວ້າງ 3 ແມັດ ບາງແຫ່ງກ້ວາງ 10 ແມັດ ແລະແຕ່ລະສາຍຍາວປະມານ 700-800 ແມັດ ຕັດກັນເປັນສີ່ແຍກຫລາຍແຫ່ງ. ບ້ານເຮືອນເປັນຕຶກ 2 ຊັ້ນ ຕັ້ງລຽນຕາມຖະໜົນ ສ້າງດ້ວຍດິນຈີ່ກໍມີ ດ້ວຍດິນຕາກແດດກໍມີ. ສ່ວນຫລາຍ ແຕ່ລະເຮືອນມີຫ້ອງນ້ຳ, ມີຂັ້ນໄດ, ບ້ຳສ້າງ ແລະທໍ່ລະບາຍນ້ຳ.

อันสำคัญที่สุด ยู่ที่โมเรนโจ- ดาโร มีสะถ่านที่บํลิการนํ้า ที่เรียกกันโดยทั่วไปว่า สะอาบนํ้าใหย่ เนื้อที่ของสะนี้ ยาว 12 แม้ด กว้າງ 7 แม้ด เลิກ 2,5 แม้ด , มีอาคານອ້ອມຮອບສະ ແລະມີຂັ້ນໄດ້ລົງສູ່ສະ. ຄຽງຄູ່ກັບການກໍ່ສ້າງ ເຂົາເຈົ້າຍັງຮູ້ຈັກ ລ້ຽງສັດ- ປູກຝັງ, ຮູ້ຈັກປະດິດເຄື່ອງແຕ່ງຕົວ, ເຄື່ອງປະດັບ, ເຄື່ອງຊັ່ງ, ເຄື່ອງແທກ, ອຸປະກອນປະຈຳເຮືອນ, ອຸປະກອນກິລາ ແລະສາດຕາອາວຸດ. ທາງດ້ານສິລະປະ , ເຂົາເຈົ້າມີຄວາມສາມາດໃນການແກະສະຫລັກ, ການຫລໍ່ຮູບ ແລະ ດ້ານເຄື່ອງປັ້ນດິນເຜົາ. ອັນສຳຄັນ ເຂົາເຈົ້າມີຕົວໜັງສືເປັນຂອງຕົນເອງ.

❁ ຕົວອັກສອນລຸ່ມແມ່ນ້ຳສິນທຸ

ຕົວອັກສອນຂອງລຸ່ມແມ່ນ້ຳສິນທຸນີ້ ເປັນຕົວອັກສອນແບບຮູບພາບ ເຊັ່ນ ເປັນຮູບນົກ, ຮູບປາ ແລະຮູບແບບຕ່າງໆຂອງຄົນ. ອັກສອນທັງໝົດທີ່ຄົ້ນພົບ ມີ 396 ຕົວ, ການຂຽນເລີ່ມຈາກຂວາໄປຊ້າຍ ແຕ່ບາງແຜ່ນຈາລຶກ ຂຽນຈາກຊ້າຍໄປຫາຂວາ ແລະຖ້າຂໍ້ຄວາມມີຫລາຍແຖວ ແມ່ນຂຽນຈາກຊ້າຍໄປຂວາ ແລ້ວຈາກຂວາໄປຊ້າຍວົນວຽນກັນໄປມາ ໂດຍບໍ່ຕ້ອງຂຶ້ນແຖວໃໝ່.

ຕົວອັກສອນເຫລົ່ານີ້ ມີລັກສະນະຄ້າຍຄືກັບອັກສອນຂອງຊາວສຸເມຣຽນ, ເອຢິບ ແລະຈີນ ໃນຍຸກດຽວກັນ ຊຶ່ງເຮັດໃຫ້ນັກຄົ້ນຄວ້າບາງທ່ານເຊື່ອວ່າ ອັກສອນເຫລົ່ານີ້ຄົງມີສ່ວນພົວພັນກັນ.

ຕົວຢ່າງອັກສອນແບບຮູບພາບຂອງຊາວເມືອງຮາລັບປະ - ໂມເຮນໂຈ-ດາໂຣ ໃນກາປະທັບ ແລະ ແຜ່ນທອງແດງ



ຊົນຊາດທີ່ເປັນເຈົ້າຂອງອາລະຍະທຳລຸ່ມແມ່ນ້ຳສິນທຸ ໄດ້ແກ່ຊົນຊາດໃດນັ້ນ ບັນດານັກຄົ້ນຄວ້າກໍໄດ້ໃຫ້ທັດສະນະແຕກຕ່າງກັນ. ແຕ່ສ່ວນຫລາຍເຊື່ອວ່າ ຊົນຊາດດຣາວິດຽນ ເປັນເຈົ້າຂອງອາລະຍະທຳດັ່ງກ່າວ. ອາລະຍະທຳຂອງຊາວພື້ນເມືອງແຫ່ງລຸ່ມແມ່ນ້ຳສິນທຸໄດ້ສ້ຽງສຸດລົງ ເມື່ອຊົນຊາດອາລະຍັນໄດ້ເຂົ້າມາມີອຳນາດ.

ໃນລະຫວ່າງ 2000 ປີ - 900 ປີ ກ່ອນ ຄ.ສ ຊົນຊາດອາລະຍັນ (Arayan) ໄດ້ເຂົ້າມາຂະຫຍາຍອິດທິພົນຢູ່ໃນອິນເດຍ. ຊົນຊາດດັ່ງກ່າວນີ້ ໄດ້ອົບພະຍົບມາແຕ່ທົ່ງຮາບ ຢູເຣເຊຍ (Eurasia) ແຫ່ງປະເທດເປີເຊຍ (ອີຣ່ານ), ພວກເຂົາໄດ້ເຂົ້າມາສູ່ອິນເດຍເປັນຫລາຍໝູ່ຫລາຍເທື່ອ. ພວກອາລະຍັນເຫລົ່ານີ້ ມີພາສາ, ສາສະໜາ ແລະວັດທະນະທຳເປັນຂອງຕົນເອງ. ເມື່ອມາຮອດຊົມພູທະວີບແລ້ວ ເຂົາເຈົ້າກໍ່ເຜີຍແຜ່ພາສາ, ສາສະໜາ ແລະວັດທະນະທຳຂອງຕົນໄປທົ່ວພາກເໜືອຂອງອິນເດຍ (ສາສະໜາຂອງພວກອາລະຍັນໄດ້ແກ່ສາສະໜາພາມ). ພວກອາລະຍັນທີ່ເຂົ້າມາອິນເດຍນຳຫລັງນີ້ ບໍ່ໄດ້ມີການຄົບຄ້າສະມາຄົມກັບຊາວດຣາວິດຽນຢ່າງເສລີ ເພາະເຂົາຖືຕົນເອງວ່າເປັນຜູ້ປະເສີດກ່ວາ. ດ້ວຍເຫດນີ້ ສັງຄົມຂອງອິນເດຍໃນຄັ້ງບູຮານ ຈຶ່ງມີການແບ່ງຊົນຊັ້ນວັນນະ.

II. ພາສາ ແລະ ອັກສອນໃນອິນເດຍ

1. ພາສາໃນອິນເດຍ

- ຍ້ອນປະເທດອິນເດຍເປັນປະເທດທີ່ກວ້າງໃຫຍ່ໄພສານ ມີພົນລະເມືອງຫລາຍກວ່າ 800 ລ້ານຄົນ, ປະກອບດ້ວຍຫລາຍຊົນຊາດຊົນເຜົ່າ ດັ່ງນັ້ນພາສາທີ່ໃຊ້ເວົ້າກັນໃນອິນເດຍ ຈຶ່ງມີເຖິງ 281 ພາສາ (ຖ້າໄລ່ພາສາເລັກພາສານ້ອຍເຂົ້ານຳມີເຖິງ 845 ພາສາ). ແຕ່ຕາມບົດລັດຖະທຳມະນູນຂອງອິນເດຍ ບັນຍັດໄວ້ວ່າ ພາສາທີ່ໃຊ້ເປັນທາງການຢູ່ໃນແຕ່ລະລັດທົ່ວປະເທດມີ 14 ພາສາ ຄື

1	ອັດສຳມິດ	ໃຊ້ໃນແຄວັນ	ອັດສຳ
2	ເບັງກາລີ	"	ເບັງກອນ
3	ກຸຊະຣາດີ	"	ກຸຊະຣາດ
4	ຮິນດີ	"	ພາກເໜືອ- ກາງ
5	ອຸຣະດູ	"	ປັນຈາບ, ອຸຕະຣະປະເທດ
6	ກັນນະດະ	ໃຊ້ໃນແຄວັນ	ໄມຊໍຣ໌
7	ແກັດສະມີຣີ	"	ກັດສະມີຣ໌
8	ມາລາຍາລາມ	"	ເກຣາລະ
9	ມະຣະຖີ	"	ບອມເບ
10	ໂອຣີຢະ	"	ໂອຣິດສາ
11	ປັນຈາບີ	"	ປັນຈາບ
12	ສັນສະກິດ	ເປັນພາສາໃນວັນນະຄະດີ	ມີຮຽນທົ່ວປະເທດ
13	ທະມິນ	ໃຊ້ໃນແຄວັນ	ມັດທະຣາດ, ໄມຊໍຣ໌
14	ເຕລຸຄູ	"	ອັນຕະຣະເທດ

ສ່ວນພາສາກາງທີ່ໃຊ້ທົ່ວປະເທດ ແມ່ນພາສາຮິນດີ ແລະ ອັງກິດ.

ໃນບັນດາພາສາທີ່ກ່າວມາຂ້າງເທິງນັ້ນ ໄດ້ແບ່ງອອກເປັນ 4 ຕະກູນໃຫຍ່ ຄື

໑. ອິນໂດ- ອາລະຍັນ (Indo-Arayan)

ອິນໂດ- ອາລະຍັນ ເປັນພາສາຂອງຊາວອາລະຍັນ. ລັກສະນະຂອງພາສາອາລະຍັນທີ່ເກົ່າແກ່ນັ້ນ ຈະພົບເຫັນໃນຄຳພີພະເວດ (Veda) ຊຶ່ງເຊື່ອກັນວ່າ ຊຸມຂຶ້ນເມື່ອພັນກວ່າປີ ກ່ອນ ຄ.ສ ແລະ ກໍໄດ້ວິວັດທະນາການມາເລື້ອຍໆ ຈົນກະທັ່ງເຖິງສະໄໝພຸດທະການຄື ກ່ອນ ຄ.ສ 600 ປີ ຈຶ່ງປ່ຽນເປັນສັນສະກິດ ຊຶ່ງຕໍ່ມາມີຄົນນິຍົມເວົ້າ ແລະ ໃຊ້ກັນຫລາຍໃນພາກເໜືອຂອງອິນເດຍ.

ຕະກູນພາສາອິນໂດ- ອາລະຍັນໄດ້ແບ່ງອອກເປັນ 3 ຍຸກ :

- ອິນໂດ- ອາລະຍັນຍຸກເກົ່າ (Old Indo-Arayan) ຊຶ່ງໄດ້ແກ່ເວດິກ (Vedic), ຄລາສິກັລ ສັນສະກິດ (Classical Šanskrit).
- ອິນໂດ- ອາລະຍັນຍຸກກາງ (Middle Indo-Arayan) ຊຶ່ງໄດ້ແກ່ ປາລີ (Pali), ອາຣະທະມະຄະທີ ...
- ອິນໂດ- ອາລະຍັນຍຸກໃໝ່ (New Indo-Arayan) ໄດ້ແກ່ ຮິນດີ, ເບັງກາລີ, ປັນຈາບີ, ກັດສະມີຣ໌ , ມາຣະຖີ, ຣາຊະຖານີ, ປະທະຣີ, ອຸຣະດູ, ຮິນດູສະຕານີ, ໂອຣິຍະ ...

໔. ດຣາວິດຽນ (Dravidian)

ດຣາວິດຽນເປັນພາສາຂອງພວກທີ່ຢູ່ຄາບມະຫາສະໝຸດອິນເດຍ ຊຶ່ງມີທັງໝົດ 12 ພາສາ : ທະມິນ, ເຕລຸຄຸ, ກະນະຣີສະ , ມາລາຍາລາມ, ຕຸລຸ, ໂກດະຄຸ , ໂຕທະນະ , ໂກດະ , ກອນດະ , ໂຂນດະ , ໂອຣຽນ ແລະ ຣາຊະມາຣານ ເຊິ່ງໃຊ້ເວົ້າກັນຢູ່ໃນແຄວ້ນມັດທະຣາດ, ໄມຊໍຣ໌, ເກຣາລະ , ໂອຣິດສາ ແລະ ບາງສ່ວນຂອງແຄວ້ນເບັງກອນ.

໖. ອັອດສະຕຣິກ (Austric)

ປະຊາຊົນປະມານ 1,3 % ຂອງພົນລະເມືອງອິນເດຍເວົ້າພາສາຕະກູນອັອດສະຕຣິກ ສ່ວນຫລາຍອາໄສຢູ່ນຳພູເຂົາປ່າດົງທາງທິດຕາເວັນອອກສຽງເໜືອ ແລະ ພາກກາງຂອງປະເທດ. ພາສາທີ່ນັບເຂົ້າໃນກຸ່ມນີ້ເຊື່ອວ່າມີສ່ວນກ່ຽວຂ້ອງພົວພັນກັບພາສາຂອງຊາວອາຊີອາຄະເນທີ່ໄດ້ແຜ່ເຂົ້າສູ່ອິນເດຍທາງທິດຕາເວັນອອກສຽງເໜືອ ຄືທາງແຄວ້ນອັດສຳ ກ່ອນພວກອາລະຍັນອົບພະຍົບເຂົ້າມາສູ່ອິນເດຍ. ພາສາທີ່ນັບເຂົ້າໃນກຸ່ມນີ້ ມີ : ໂກລະ ຫລື ມັນດະ , ສັນຖະຣີ , ມຸນດະຣີ ແລະ ໂຮ ເປັນຕົ້ນ.

໔. ຈີນ- ທິເບດ (Chinese-Tibetan)

ພາສາທີ່ນັບເຂົ້າໃນກຸ່ມນີ້ ມີໃຊ້ ແລະ ເວົ້າກັນຢູ່ແຖບຕີນພູຫິມະໄລດ້ານຕາເວັນຕົກ, ແຄວ້ນເບັງກອນຕອນເໜືອ ແລະ ທີ່ແຄວ້ນອັດສຳ. ພາສາຂອງຕະກູນນີ້ ມີ : ເນີວາລະຣີ, ໄມໄຖ , ມະນີປຸຣຸ , ໄທອາຫົມ ...

2. ອັກສອນໃນອິນເດຍ

ຊົນຊາດໃນອິນເດຍຮູ້ປະດິດອັກສອນຂຶ້ນໃຊ້ມາແລ້ວ ແຕ່ບູຮານນະການ. ບັນດານັກປາດທາງດ້ານອັກສອນສາດໄດ້ໃຫ້ຄຳເຫັນວ່າ ອິນເດຍມີພາສາຂຽນ (ອັກສອນ) ໃຊ້ມາດົນປະມານ 2500 ປີ ກ່ອນ ຄ.ສ ຊຶ່ງສະແດງອອກໃນຂໍ້ມູນທີ່ນັກບູຮານຄະດີ ຄົ້ນພົບທີ່ເມືອງຫະຣັບປະ ແລະ ເມືອງໂມເຮນໂຈ- ດາໂຣ .

ໃນອິນເດຍເວລານີ້ ມີອັກສອນໃຊ້ຢູ່ຫລາຍຊະນິດ ເຊັ່ນ ເທວະນາຄະລີ, ເບັງກາລີ , ອຸຣະດູ, ທະມິນ ເປັນຕົ້ນ ແລະອັກສອນຂອງຊົນກຸ່ມເລັກກຸ່ມນ້ອຍ ຊຶ່ງບໍ່ແຜ່ຫລາຍກໍມີເປັນອັນມາກ. ອັກສອນເຫລົ່ານີ້ ມີກຳເນີດມາຈາກໃສ, ຕັ້ງແຕ່ເວລາໃດ, ໃຜເປັນຜູ້ປະດິດ ? ບັນຫາເຫລົ່ານີ້ຍັງບໍ່ມີໃຜຕອບໄດ້ແນ່ນອນ ເພາະເປັນເລື່ອງເກົ່າແກ່ຫລາຍພັນປີ ຮູ້ແນ່ນອນແຕ່ພຽງວ່າ ພວກພາມເລົ່າສູດພະເວດດ້ວຍພາສາສັນສະກິດ ແລະຕໍ່ມາ ກໍຈາລຶກດ້ວຍຕົວອັກສອນເທວະນາຄະລີແບບທີ່ໃຊ້ກັນຢູ່ໃນປັດຈຸບັນນີ້, ແຕ່ກໍບໍ່ຮູ້ວ່າເລີ່ມຈາລຶກເມື່ອໃດ ດ້ວຍຕົວອັກສອນຊະນິດໃດ ນັກບູຮານຄະດີສ່ວນຫລາຍ ນັບທັງຄົນອິນເດຍ ແລະຄົນເອີລົບ ເຊັ່ນ ເຢລະມັນ, ອັງກິດ, ຝຣັ່ງ, ຣັດເຊຍ ເປັນຕົ້ນ ໄດ້ຄົ້ນຄວ້າເລື່ອງເກົ່າໆໃນອິນເດຍແລ້ວກໍລົງຄວາມເຫັນໄວ້ຕ່າງໆກັນ ກ່ຽວກັບການກຳເນີດຂອງອັກສອນເຫລົ່ານີ້.

ປະເພດຫລັກຖານທີ່ຄົ້ນຄວ້າເຖິງຄວາມເປັນມາຂອງອັກສອນໃນອິນເດຍ

ກ. ປະເພດທັດສະນະ : ນັກປາດຊາວເອີລົບຫລາຍທ່ານທີ່ຊຳນານກ່ຽວກັບເລື່ອງຕາເວັນອອກ (Orientalists) ໄດ້ໃຫ້ທັດສະນະໄວ້ຕ່າງໆກັນດັ່ງນີ້ :

1/ ເບີເນລ (Burnell) ບອກວ່າ ອັກສອນພຣາມີສືບທອດມາຈາກອັກສອນຟີນີເຊຍ ແລະເຂົ້າສູ່ອິນເດຍປະມານສະໄໝພຸດທະການ ຫລື ຫລັງຈາກນັ້ນເລັກນ້ອຍ.

2/ ດຣ. ບູເລີ (Dr. Buhler) ບອກວ່າ ອັກສອນພຣາມີ ມີໃຊ້ປະມານສະໄໝພຸດທະການ ຫລື ກ່ອນນັ້ນປະມານ 200 ປີ ແລະບອກວ່າ ອັກສອນນີ້ ສືບທອດມາຈາກອັກສອນເຊມີຕິກ (Semitic Alphabet) ແຕ່ທ່ານີຜູ້ນີ້ ບໍ່ກ້າຢືນຢັນວ່າ ທັດສະນະຂອງທ່ານຈະຖືກຕ້ອງ ທ່ານຍັງຄິດວ່າມັນອາດຈະ ກ່ອນພຸດທະການເຖິງ 500 ປີ ກໍເປັນໄດ້.

3/ ທັດສະນະຂອງນັກປາດຊາວອິນເດຍ : ນັກປາດຊາວອິນເດຍໄດ້ຄົ້ນຄວ້າຫລັກຖານ ທາງວັນນະຄະດີຫລາຍເລື່ອງ ເຊັ່ນ ນາຣະທະ, ສະມະຣິຕິ , ພະຣິທັດສະປະຕິ, ບົດປະພັນຂອງກາລິ ທາດ, ວັນນະຄະດີເຊນ, ພົງສາວະດານ ເປັນຕົ້ນ ແລ້ວລົງຄວາມເຫັນວ່າ ໃນສະໄໝພຸດທະການ ມີ ຕົວອັກສອນໃຊ້ແລ້ວ.

ຂ. ປະເພດບັນທຶກ ມີຫລັກຖານຈາກການຈົດບັນທຶກຂອງນັກຂຽນສະໄໝບູຮານຫລາຍ ທ່ານ ເຊັ່ນ

1/ ບັນທຶກຂອງພະຈີນ ຖັງຊຳຈັງ ແລະປະທານຸກົມຈີນ ຊື່ ຟາວັນ ຊູຫລິນ (Fawan Shulin) ຮັບຮອງວ່າ ອັກສອນພຣາມີເກົ່າແກ່ຫລາຍ.

2/ ບັນທຶກຂອງນັກປາດອາຫລັບ ຊື່ ອັລເບຣູນີ (Alberuni) ໃຫ້ທັດສະນະວ່າ ອິນເດຍຄົງມີ ອັກສອນໃຊ້ມາຕັ້ງແຕ່ 3101 ປີ ກ່ອນ ຄ.ສ ແລ້ວ ທັດສະນະນີ້ບໍ່ໜັກແໜ້ນປານໃດເພາະຂາດຫລັກ ຖານອັນແນ່ນອນ.

3/ ບັນທຶກຂອງ ເນຍໂຄສ (Nearchos) ແມ່ທັບຄົນໜຶ່ງຂອງພະເຈົ້າອະເລັກຊານເດີ ທີ່ບຸກ ເຂົ້າມາເຖິງອິນເດຍກ່າວໄວ້ວ່າ ຄົນອິນເດຍຮູ້ຈັກຜະລິດເຈ້ຍດ້ວຍເປືອກໄມ້ ແລະ ຜ້າຂາດ (ເຊື່ອວ່າເຂົາ ເຈົ້າຄົງຜະລິດເຈ້ຍໄວ້ຂຽນ ແຕ່ບັນທຶກບໍ່ໄດ້ກ່າວເຖິງອັກສອນເລີຍ).

4/ ເມກັສະເທນີສ (Megasthenes) ທູດເກຣັກປະຈຳລາຊະສຳນັກພະເຈົ້າຈັນທະຄຸບ (ຈັນທຣ ຄຸປຕ໌). ປີ 323-300 ກ່ອນ ຄ.ສ. ບັນທຶກໄວ້ວ່າ ໃນແຜ່ນດິນອິນເດຍ ມີການຝັງເສົາຫີນບອກໄລຍະ ທາງໄວ້ຕາມຖະໜົນ ເພື່ອວ່າຄົນອ່ານໜັງສືອອກ ຈະໄດ້ຮູ້ໄລຍະທາງ ແລະຮູ້ວ່າ ສາລາພັກຮ້ອນ ຈະຢູ່ໃກ້ໄກສ່ຳໃດ ເປັນຕົ້ນ.

ຄ. ປະເພດວັນນະຄະດີ : ວັນນະຄະດີສັນສະກິດຫລາຍເລື່ອງ ເຊັ່ນ ໂຄງສັນລະເສີນວິລະຊົນ, ກາບ, ບົດລະຄອນ, ບົດສູດ ແລະເອກະສານການປົກຄອງ ປະຫວັດສາດ ສິລະທຳ ແລະ ປັດຊະຍາ ເປັນຕົ້ນ ທີ່ແຕ່ງຂຶ້ນກ່ອນສະໄໝໂມລິຍະ (ປີ 323 ກ່ອນ ຄ.ສ.) ນັ້ນ ລ້ວນແຕ່ສະແດງເຖິງຄວາມເກົ່າ ແກ່ຂອງການໃຊ້ອັກສອນ. ບາງເລື່ອງແຕ່ງກ່ອນພຸດທະການກໍມີ ຊຶ່ງ ແມກຊ໌ ມູນເລີ (Max Muller) ບອກວ່າ ບາງເລື່ອງແຕ່ງກ່ອນພຸດທະການເຖິງ 900 ປີ. ບູເລີ (Buhler) ແລະ ວິນເຕີ ນິດຊ໌ (Winter Nitz) ຍິ່ງໜັກເຂົ້າໄປອີກ ຄືບອກວ່າປະມານ 3000- 4000 ປີ ກ່ອນພຸດທະການ (ອາດຈະ ເກີນຄວາມຈິງໄປຫລາຍ).

ອີກອັນໜຶ່ງ ວັນນະຄະດີ 2 ເລື່ອງ ຄື ຣາມາຍະນະ ແລະມະຫາພາຣະຕະ ຊຶ່ງນັກປາດເຊື່ອ ກັນວ່າ ແຕ່ງຂຶ້ນປະມານ 100 ປີ ຫລັງພຸດທະການ ກໍມີຄຳທີ່ກ່ຽວຂ້ອງກັບການຂຽນ ເຊັ່ນ ຢູ່ໃນບົດ ມີ ຄຳວ່າ ລິຂະ ເລຂະ ເລຂະນະ ເລຂະກະ ເປັນຕົ້ນ. ດັ່ງນັ້ນ ບູເລີ ຊຶ່ງເຊື່ອວ່າ ການໃຊ້ຕົວອັກສອນ ນັ້ນ ຄົງມີມາແຕ່ເກົ່າແທ້ ແລະຄຳພີອັດຖະສາດ ຂອງເກົາຕິລະຍະ ຊຶ່ງແຕ່ງກ່ອນສະໄໝພະເຈົ້າອະໂສກ ມະຫາລາດ ກໍໄດ້ກ່າວເຖິງການຂຽນຢູ່ຫລາຍຄຳເຊັ່ນກັນ. ນອກຈາກນີ້ ຍັງມີຫລັກຖານທາງວັນນະຄະດີ

ອີກຫລາຍອັນ ທີ່ມີຄຳກ່ຽວກັບການຂຽນ ການຈາລຶກປາກົດຢູ່ ເຊັ່ນ ໃນຄຳພີອຸປະນິສັດ ເປັນຕົ້ນ ຊຶ່ງເຊື່ອວ່າ ມີມາກ່ອນພຸດທະການປະມານ 100 ປີ ກໍມີຄຳເຫລົ່ານີ້ຢູ່ ຄືໃນສານໂທກະຍະ ອຸປະນິສັດ ມີຄຳວ່າ "ອັກສອນ" ແລະ ໃນບາງຕອນກ່າວເຖິງ "ວາຣະນະ" ຫລື ວັນນະ (ຕົວອັກສອນ) ມາຕຣາ (ເຄື່ອງໝາຍກ່ານອອກສຽງ) ເປັນຕົ້ນ.

໑. ປະເພດຕົວອັກສອນ ຫລັກຖານທີ່ແນ່ນອນທີ່ສຸດທີ່ນັກບູຮານຄະດີນຳມາຢືນຢັນ ທີ່ຈະປະຕິເສດບໍ່ໄດ້ກໍຄື ຕົວອັກສອນຕ່າງໆທີ່ຄົ້ນພົບເວລານີ້ ກໍມີ :

1/ ອັກສອນລ່ອງແມ່ນ້ຳສິນທຸ (The Indus Valley Scripts).

ອັກສອນເຫລົ່ານີ້ເປັນອັກສອນແບບຮູບພາບ (Pictographic) ແລະ ອັກສອນປະເພດເຄື່ອງໝາຍ (Hieroglyphic) ຊຶ່ງ ດຣ. ປານເດຍ໌ ບອກວ່າອາຍຸຂອງອັກສອນເຫລົ່ານີ້ ປະມານ 3500 ປີ ກ່ອນ ຄ.ສ.

2/ ຈາລຶກກ່ອນສະໄໝໂມລິຍະ ຊຶ່ງແຍກອອກເປັນປະເພດໄດ້ດັ່ງຕໍ່ໄປນີ້ :

- ອັກສອນຢູ່ຫລຽນຂອງເມືອງເອຣັນ (Eran) ອ່ານຈາກຊ້າຍໄປຂວາ ຈາກຂວາໄປຊ້າຍ ຊຶ່ງ ບູເລີຢືນຢັນວ່າ ຍຸກທີ່ຂຽນກັບໄປກັບມານີ້ ຕົກຢູ່ໃນສະໄໝ 400 ກ່ອນ ຄ.ສ.

- ອັກສອນທີ່ຫລຽນຕັກສິລາ ຊຶ່ງນັກບູຮານຄະດີ ຖືວ່າ ເປັນຍຸກດຽວກັບ ເອຣັນ.

- ຈາລຶກທີ່ທາດຂອງພະພຸດທະເຈົ້າ ທາດນີ້ພົບທີ່ເມືອງປັດສະຕີ ໃນແຄວັນໂກລົນ ເປັນຄຳຈາລຶກນະມັດສະການພະບໍລົມສາລີລິກະທາດ.

- ຈາລຶກຂອງເຊນ ພົບທີ່ບ້ານອັດຊະເມີ (Ajmer) ຈາລຶກວ່າ " ວີຣາຍະ ພຸຍຄະວະເຕ ຈະຕຸສີເຕ ວະເສ " ລະນຶກເຖິງ ພະມະຫາວີລະ ສາສະດາຂອງສາສະໜາເຊນ.

- ສິລາຈາລຶກມະຫາສະຖານ ຈາລຶກນີ້ເປັນແຜ່ນຫີນ ມີຂໍ້ຄວາມຖວາຍຊີວິດອຸທິດແກ່ພຸທປັນຈະວັກຄີ (ສາວົກລຸ່ມທຳອິດຂອງພະພຸດທະເຈົ້າ) ພົບຢູ່ຕາແຂວງໂບຄຣາ(Bogra) ໃນແຄວັນເບັງກອນ.

3/ ສິລາຈາລຶກສະໄໝພະເຈົ້າອະໂສກມະຫາລາດ

ຖ້າອີງຕາມສິລາຈາລຶກໃນສະໄໝພະເຈົ້າອະໂສກມະຫາລາດເມື່ອ 300 ປີ ກ່ອນ ຄ.ສ. ເປັນເຄົ້າມູນແລ້ວ ຕົວອັກສອນໃນອິນເດຍແບ່ງອອກເປັນ 2 ປະເພດ ດັ່ງນີ້ :

ປະເພດທີ ໑ : ຂຽນແຕ່ຂວາໄປຫາຊ້າຍ ມີໃຊ້ຢູ່ທາງທິດຕາເວັນຕົກສຽງເໜືອຂອງອິນເດຍ ອັກສອນປະເພດນີ້ ມີຊື່ວ່າ ຂະໂຣດຖີ ຊົນເຜົ່າທີ່ໃຊ້ອັກສອນນີ້ ໄດ້ແກ່ພວກຍະວະນະ , ພວກສະກະ ຫລື ສະກິຫຽນ(Scythians), ອາລະຍັນ(Arayan), ອິນໂດແບກຕຣຽນ(Indo-Bactrian), ແບກໂຕຣປາລີ (Bactro-Pali), ກາບູລຽນ (Kabulian) ແລະ ຂະໂຣດຖີ (Kharosthi)ເປັນຕົ້ນ. ຄຳວ່າ ຂະໂຣດຖີນີ້ ເປັນຄຳສັນສະກິດ ເປັນຊື່ເອີ້ນເມືອງອີກເມືອງໜຶ່ງໃນອາຊີກາງ ຄື ເມືອງກັດສະການ (Kaskar) ຊຶ່ງເປັນສູນກາງທີ່ໃຊ້ອັກສອນນີ້ໃນຍຸກຫລັງສຸດ. ເລື່ອງນີ້ ສະເຕນໂຄໂນວ (Sten Konow) ໄດ້ອະທິບາຍໄວ້ວ່າ " ເປັນຄວາມຈິງວ່າ ຫລັກຖານເອກະສານຈຳນວນຫລາຍທີ່ເປັນອັກສອນຂະໂຣດຖີພົບທີ່ເຂດເຕີກີສະຖານຕິດຕໍ່ກັບຈີນ (Chinese Turkestan) ສະເພາະຢ່າງຍິ່ງທາງພາກໃຕ້ຂອງທະເລຊາຍ ແລະວ່າອັກສອນນີ້ທີ່ຮູ້ກັນດີ ກໍມາຈາກລັດໂຂຕານ (Khotan) ເທົ່ານັ້ນ (ເມືອງນີ້ຢູ່ເໜືອກັດສະມີຣ໌). ແຕ່ຢ່າງໃດກໍຕາມ ອັກສອນນີ້ກະຈາຍຢູ່ທົ່ວໄປ ໃຊ້ຈາລຶກພາສາອິນເດຍ. ພໍ່ຄ້າອິນເດຍ

ອາດຈະເປັນຄົນນຳອັກສອນນີ້ເຂົ້າໄປກໍໄດ້, ອັກສອນນີ້ຄົງບໍ່ເກົ່າແກ່ປານໃດ ອາດຈະມີໃຊ້ໃນສະຕະວັດທີ 3 ກ່ອນ ຄ.ສ."

ໃນສີລາຈາລຶກຂອງພະເຈົ້າອະໂສກມະຫາລາດ ມີພຽງ 2 ແຫ່ງທີ່ຈາລຶກດ້ວຍຕົວອັກສອນນີ້ ຄືທີ່ ຊະບັດສະກາຣະຫີ (Shahbazgarhi) ແລະທີ່ ມັນເຊຫະຣາ (Manswhra) ຊຶ່ງຢູ່ຕອນເຫນືອສຸດຂອງອິນເດຍ ສະແດງໃຫ້ເຫັນແຈ້ງວ່າ ສະຖານທີ່ນັ້ນ ຍຸກນັ້ນ ຍັງໃຊ້ອັກສອນນີ້ຢູ່. ພະເຈົ້າອະໂສກຈຶ່ງໃຫ້ຈາລຶກດ້ວຍອັກສອນນີ້.

ປະເພດທີ ໔: ຂຽນແຕ່ຊ້າຍໄປຫາຂວາ ມີໃຊ້ທົ່ວໄປໃນອິນເດຍ ເອີ້ນວ່າ ອັກສອນພຣາມີ (Brahmi). ພຣາມີເປັນອັກສອນທີ່ໃຊ້ຫລາຍໃນສະໄໝພະເຈົ້າອະໂສກມະຫາລາດ ສີລາຈາລຶກທັງໝົດ ເວັ້ນແຕ່ສີລາຈາລຶກສອງແຜ່ນທີ່ກ່າວມາຂ້າງເທິງນັ້ນ ລ້ວນແຕ່ໃຊ້ອັກສອນພຣາມີທັງນັ້ນ. ອັກສອນພຣາມີຍຸກດັ່ງກ່າວນັ້ນງາມກວ່າທຸກຍຸກ ເພາະມີຮູບຫລັກມູນເປັນລ່ຽມ ອ່ານງ່າຍ; ຕໍ່ມາໄດ້ວິວັດທະນາການມາຫລາຍຍຸກເປັນຕົວລ່ຽມ ຕົວມົນ ຕົວງ່ຽງ ຜັນແປຮູບໄປຈົນກາຍເປັນອັກສອນສັນສະກິດ, ຄຣິນ, ລັງກາ, ທິເບດ, ມອນ, ພະມ້າ, ຂະແມ, ລາວ, ໄທ ...

ອັກສອນພຣາມີນີ້ ມີຕົ້ນກຳເນີດມາຈາກໃສ ນັກບູຮານຄະດີທັງເອີລົບ ແລະ ອິນເດຍ ຕ່າງກໍໄດ້ຄົ້ນຄວ້າກັນມາດົນພໍສົມຄວນ. ຈາກການຄົ້ນຄວ້າຂອງທ່ານເຫລົ່ານັ້ນ ພໍສະຫລຸບໄດ້ເປັນ 2 ທັດສະນະດັ່ງນີ້ :

ທັດສະນະທີ ໑ : ມີ 2 ກຸ່ມຄື ກຸ່ມ ກ. ແລະ ກຸ່ມ ຂ.

ກຸ່ມ ກ. ມີທ່ານເອດເວີດ ໂທມັດ(Edward Thomas)ເປັນຕົ້ນ ບອກວ່າ ອັກສອນພຣາມີສືບທອດມາຈາກ ອັກສອນດຣາວິດຽນ ເພາະກ່ອນອາລະຍັນຈະເຂົ້າມາສູ່ອິນເດຍນັ້ນ ພວກດຣາວິດຽນໄດ້ກະຈາຍຢູ່ທົ່ວໄປແລ້ວ ແລະ ມີອາລະຍະທຳບາງຢ່າງຈະເລີນຫລາຍກວ່າພວກເຂົ້າມາໃໝ່ນຳ ແຕ່ ດຣ. ຣາຊພາລີ ປານເດ (Dr. R B Pandey) ຄັດຄ້ານວ່າ ອັກສອນພຣາມີພົບທີ່ອິນເດຍຝ່າຍເໜືອ ບໍ່ແມ່ນພົບທີ່ຝ່າຍໃຕ້. ອີກອັນໜຶ່ງ ຕົວອັກສອນທະມິນ ຫລື ດຣາວິດຽນ ເວລານີ້ກໍຍັງບໍ່ຄົບວັກ ບໍ່ສົມບູນ, ສ່ວນພຣາມີນັ້ນສົມບູນມາດົນແລ້ວ.

ກຸ່ມ ຂ. ມີທ່ານ ຄັນນິແຮມ(Cunningham), ດາວສັນ(Dowson), ລັສເສນ(Lassan) ເປັນຕົ້ນ ບອກວ່າ ອັກສອນພຣາມີມາຈາກອັກສອນສັນຍາລັກ ຫລື ເຄື່ອງໝາຍ (Hieroglyphics)ຂອງອິນເດຍບູຮານ ເພາະໄດ້ຄົ້ນພົບອັກສອນບູຮານທີ່ລ່ອງແມ່ນ້ຳສິນທຸ ເປັນອັກສອນຮູບພາບ (Pictographic) ທ່ານເຫລົ່ານີ້ຈຶ່ງເຊື່ອວ່າ ອັກສອນພາບເຫລົ່ານີ້ ຕໍ່ມາໄດ້ກາຍມາເປັນອັກສອນພຣາມີໃນຍຸກຫລັງ.

ໃນທັດສະນະດັ່ງກ່າວນີ້ ດຣ. ເດວິດ ດີຣິນເຈີ (Dr. David Diringer) ບໍ່ເຫັນດີນຳ ໂດຍການໃຫ້ຂໍ້ຄິດວ່າ :

1/ ການທີ່ອັກສອນ 2 ຊະນິດມີຢູ່ໃນປະເທດດຽວກັນນັ້ນ ບໍ່ໝາຍຄວາມວ່າ ອັກສອນຊະນິດໜຶ່ງຈະລອກແບບຂອງອີກຊະນິດໜຶ່ງ ເຊັ່ນອັກສອນເກຣັກໃນປະເທດເກຣັກນັ້ນ ກໍບໍ່ແມ່ນສືບທອດມາຈາກອັກສອນເກຣັກບູຮານ (ອັກສອນແບບຮູບພາບ) ຫລື ອັກສອນມິໂນນ(Minoan Script)ເລີຍ ເຖິງວ່າຈະບາງຕົວຄ້າຍຄືກັນ ແຕ່ກໍຍັງຂາດຫລັກຖານວ່າເປັນການຮຽນແບບແທ້ໆ ອາດຈະເປັນໄປໂດຍບັງເອີນ ຫລື ສຽງກໍຄືກັນ ອັກສອນກໍອາດຈະໄປຄ້າຍກັນໄດ້.

24 / VII

2/ ອັກສອນລ່ອງແມ່ນ້ຳສິນທຸເປັນປະເພດເຄື່ອງໝາຍເປັນພະຍາງດຽວ, ສ່ວນອັກສອນພຣາມີເປັນອັກຂະຫລະຮຽງຕົວ ຈຶ່ງບໍ່ມີທາງຈະຖ່າຍທອດກັນໄດ້ ນອກຈາກຈະຖ່າຍທອດຈາກອັກຂະຫລະຮຽງຕົວຄືກັນ.

3/ ວັນນະຄະດີສະໄໝພະເວດ ບໍ່ໄດ້ກ່າວເຖິງການຂຽນເລີຍ ເທບພະເຈົ້າກ່ຽວກັບຕົວອັກສອນກໍບໍ່ມີ ມີແຕ່ພຽງເທບທິດາແຫ່ງຄວາມຮູ້ ແລະການສຶກສາ ຄື ສະຣັດສະວະດີ ເທົ່ານັ້ນ.

4/ ຫລັກຖານຕ່າງໆຢືນຢັນວ່າ ປະມານ 800-600 ປີ ກ່ອນ ຄ.ສ. ອັກສອນເຫລົ່ານີ້ຈຶ່ງມີຂຶ້ນໃນອິນເດຍຕອນເໜືອ ແລະຕຳລາຂອງສາສະໜາເຊນກັບພຸດເທົ່ານັ້ນ ທີ່ໄດ້ໃຫ້ຫລັກຖານກ່ຽວກັບການມີຕົວອັກສອນນີ້.

ຢ່າງໃດກໍຕາມ ດຣ. ປານຸເດ ໄດ້ຄັດຄ້ານ ດຣ. ດີຣິນເຈີ ທຸກໆປະດູ ແລະ ຂໍ້ 3 ຂອງ ດຣ. ດີຣິນເຈີ ຖືກປະຕິເສດເລີຍວ່າ ກ່າວຜິດຈາກຄວາມຈິງ ເພາະເທບທິດາສະຣັດສະວະດີເອງກັບພະສະວາມີ ຄື ພະພົມ ປາກົດວ່າ ມີໜັງສືຢູ່ໃນມືຂອງເທບທັງສອງນັ້ນ (ຄືມີເທບພະເຈົ້າຕຳລາແລ້ວ).

ທັດສະນະທີ 4 : ມີ 2 ກຸ່ມຄື ກຸ່ມ ກ. ກຸ່ມ ຂ.

ກຸ່ມ ກ. ມີທ່ານ ອອດເຟຣດ ມູນເລີ (Otfried Mueller), ເຈມ ປຣິນເຊບ (James Prinsep), ເອມິລ ເສນາດ (Emile Senart), ໂຈເຊບ ຮາເລວີ (Joseph Halevy) ແລະ ວິນສັນ (Wilson)ເປັນຕົ້ນ. ມີຄວາມເຫັນວ່າອັກສອນພຣາມີ ສືບທອດມາຈາກອັກສອນເກຣັກ (Greek Origin).

ກຸ່ມ ຂ. ກຸ່ມນີ້ເຫັນວ່າອັກສອນພຣາມີສືບມາຈາກອັກສອນເຊມີຕິກ (Semitic) ແຕ່ອັກສອນເຊມີຕິກມີຫລາຍພາສາເຫລືອເກີນ ດັ່ງນັ້ນນັກປາດທີ່ສະໜັບສະໜູນທັດສະນະນີ້ ຕ່າງກໍມີທັດສະນະແຍກກັນອອກໄປເປັນອີກຫລາຍພວກຄື :

1/ ພວກທີ່ເຫັນວ່າອັກສອນພຣາມີສືບທອດມາຈາກຟີນີເຊຍ (Phoenician Origin) ຊຶ່ງມີທ່ານ ເວເບີ(Weber), ເບນເຟ (Benfey), ເຈນເຊ (Jensen) ແລະ ບູເລີ (Buhler) ເປັນຕົ້ນ. ທ່ານເຫລົ່ານີ້ໃຫ້ເຫດຜົນວ່າ ໜຶ່ງໃນສາມຂອງອັກສອນຟີນີເຊຍ ມີສ່ວນໃກ້ຄຽງຫລາຍກັບອັກສອນພຣາມີບູຮານ ແລະ ທີ່ເຫລືອນັ້ນກໍມີສ່ວນຄ້າຍໆກັນ.

2/ ພວກທີ່ເຫັນວ່າ ສືບທອດມາຈາກເຊມີຕິກຕອນໃຕ້ ຊຶ່ງມີທ່ານ ເທເລີ (Taylor), ດີເກີ (Deeke) ແລະ ແຄນນອນ (Canon) ເປັນຕົ້ນ.

3/ ພວກທີ່ເຫັນວ່າ ສືບທອດມາຈາກເຊມີຕິກຕອນເໜືອ ຊຶ່ງມີທ່ານ ບູເລີ ເປັນຕົ້ນ ແລະຜູ້ອື່ນໆອີກ ທ່ານ ບູເລີ ມີທັດສະນະໄວ້ 2 ຢ່າງ ຄືວ່າ ມາຈາກຟີນີເຊຍ ແລະ ເຊມີຕິກຕອນເໜືອ.

ຢ່າງໃດກໍຕາມ ທັດສະນະທັງໝົດນີ້ ຖືກຄັດຄ້ານໂດຍນັກບູຮານຄະດີຂອງອິນເດຍຫລາຍທ່ານ. ມີ ທ່ານ ດຣ. ປານຸເດ ເປັນຕົ້ນ. ທ່ານເຫລົ່ານີ້ຕ້ອງການຈະດຶງກັບມາໃຫ້ເປັນຂອງອິນເດຍໃຫ້ໄດ້ ຈຶ່ງຍົກເຫດຜົນນາໆປະການມາຄັດຄ້ານ ເພື່ອຊີ້ໃຫ້ເຫັນວ່າ ອັກສອນພຣາມີເປັນຂອງອິນເດຍແທ້ ຊື່ນັ້ນກໍບອກແຈ້ງວ່າເປັນຂອງພວກພາມ ພາມໃຊ້ຂຽນຄຳພີພາມມາແຕ່ບູຮານນະການແລ້ວ ແລະ ບໍ່ຮັບວ່າ ອັກສອນພຣາມີມາຈາກທີ່ໃດໆໃນໂລກ.

ຕາມເອກະສານທີ່ພິມຈຳໜ່າຍໃນປັດຈຸບັນ ສ່ວນຫລວງຫລາຍມີທັດສະນະເປັນເອກະພາບກັນວ່າ ອັກສອນພຣາມີນີ້ແມ່ນສືບທອດມາຈາກອັກສອນຟີນີເຊຍ ເພາະສະໄໝບູຮານມີການຕິດຕໍ່ກັນລະຫວ່າງອິນເດຍກັບອາຊີນ້ອຍໂດຍທາງທະເລມາແລ້ວ ແລະພາມຜູ້ຮັກສາພະເວດ ໄດ້ນຳມາດັດແປງໃຫ້ເຂົ້າຮູບ ແລະໃຫ້ເປັນລະບຽບຂອງພາສາທີ່ເໝາະກັບຄົນອາລະຍັນໃນຍຸກນັ້ນ. ຄັ້ງທຳອິດອາດຈະຍັງ

ບທນສມບູນຄບຖວນ ແລະ ຄັ່ງບໍ່ໄດ້ຮັບຄວາມສົນໃຈເທົ່າໃດ, ເມື່ອເວລາຜ່ານດົນໄປ ພວກພາມໄດ້ປັບປຸງແກ້ໄຂເທື່ອລະໜ້ອຍ ພາມນຳມາຈາລຶກຄຳພີພະເວດ ,ອັກສອນນີ້ຈຶ່ງມີຊື່ວ່າ ພຣາມີ ໄປນຳ.

ຮູບຕົວອັກສອນພຣາມີ ໃນສີລາຈາລຶກຂອງພະເຈົ້າອະໂສກມະຫາລາດ ພົບທີ່ ລຸມພິນີວັນ ບ່ອນປະສູດຂອງເຈົ້າຊາຍສິດທັດຖະ



ເທວານັມປິເຍນ ປິຍທະສິນ ລາຊິນ ວິສຕິວສາພິສິເຕນ
ອຕນ ອາຄາຈ ມຫີຍິເຕ ຫິທ ພຸເທ ຊາເຕ ສາກຍມຸນີຕິ
ສີລາວິຄທພີຈາ ກາລາປິຕ ສີລາຖ(ມ) ເພຈ ອຸສປາປິເຕ
ຫິທ ພຄວໍ ຊ້າເຕຕີ ລຸມມິນີຄາເມ ອຸພລີເກ ກເຕ
ອຖພາຄີເຍຈ

ອັກສອນພຣາມີນີ້ ໃນໄລຍະຕໍ່ມາໄດ້ຂະຫຍາຍກາຍເປັນອັກສອນສັນສະກິດ ຫລື ຮຽກອີກຢ່າງໜຶ່ງວ່າ ເທວະນາຄະລີ ຊຶ່ງມີໃຊ້ຢູ່ທາງພາກເໜືອຂອງອິນເດຍ(ປັດຈຸບັນໃຊ້ບັນທຶກພາສາ ຮິນດີ ແລະ ສັນສະກິດ) ແລະ ອັກສອນປາລີ ຫລື ຮຽກອີກຢ່າງໜຶ່ງວ່າ ຄຣິນ ຊຶ່ງມີໃຊ້ຢູ່ທາງພາກໃຕ້ຂອງອິນເດຍ (ມາຮອດປະຈຸບັນອັກສອນດັ່ງກ່າວກາຍເປັນອັກສອນຕາຍ).

ຄຳຖາມ

1. ຕົວເມືອງເກົ່າຂອງອິນເດຍ ທີ່ນັກບູຮານຄະດີຂຸດຄົ້ນພົບ ມີຊື່ວ່າແນວໃດ ? ເພິ່ນສາມາດເກັບກຳຂໍ້ມູນຫຍັງໄດ້ແດ່ ?
2. ພາສາໃນອິນເດຍມີຈັກພາສາ ແລະ ແບ່ງອອກເປັນຈັກຕະກູນ ?
3. ອີງຕາມສີລາເລກຂອງພະເຈົ້າອະໂສກມະຫາລາດ ຕົວອັກສອນໃນອິນເດຍມີຈັກປະເພດ ? ແຕ່ລະປະເພດເປັນຢ່າງໃດ ?

ບົດທີ ໕

ວ່າດ້ວຍພາສາ ແລະ ອັກສອນສັນສະກິດ

I. ພາສາສັນສະກິດ :

ພາສາສັນສະກິດ ເປັນສາຂາໜຶ່ງຂອງໝວດພາສາອິນໂດ-ອາລະຍັນ ຊຶ່ງສັງກັດໃນອິນໂດ-ອາລະຍັນຍຸກເກົ່າ. ພາສາສັນສະກິດມີປະຫວັດຄວາມເປັນມາດັ່ງນີ້ :

ເມື່ອ 3000 ປີ ກ່ອນ ຄ.ສ. ຄັ້ງທີ່ຊາວອາລະຍັນດຳລົງຊີວິດຢູ່ທີ່ງຮາບຢູເຣຊຽນ ແຫ່ງປະເທດເປີເຊຍ(ອີຣ່ານ)ນັ້ນ, ພາສາຂອງເຂົາເຈົ້າມີຊື່ວ່າ ພຣາມີ ແປວ່າ ພາສາພະພົມ. ຕໍ່ມາເມື່ອ 2500 ປີ ກ່ອນ ຄ.ສ. ພາສາພຣາມີ ໄດ້ປ່ຽນຊື່ເປັນພາສາອາລະຍັນ. ພາສາພຣາມີ ຫລື ອາລະຍັນນີ້ ໄດ້ຖືກປ່ຽນແປງມາເລື້ອຍໆ ຈົນກະທັ່ງເຖິງ 1000 ປີ ກ່ອນ ຄ.ສ. ຊຶ່ງເປັນໄລຍະທີ່ຊາວອາລະຍັນ ໄດ້ເຂົ້າມາມີອຳນາດຢູ່ໃນອິນເດຍຢ່າງສົມບູນ, ເຂົາເຈົ້າໄດ້ໃຫ້ຊື່ໃໝ່ວ່າ ພາສາສັນສະກິດ ຫລື ເທວະພາສາ ຊຶ່ງເຂົາເຊື່ອກັນວ່າ ເປັນພາສາຂອງເທບພະເຈົ້າ.

ຍ້ອນພາສາມີການຂະຫຍາຍໂຕ ແລະບໍ່ຄົງຕົວໃນຮູບເດີມ, ເພິ່ນຈຶ່ງສາມາດແບ່ງພາສາສັນສະກິດອອກເປັນ 2 ໄລຍະ ຄື :

- ເວດິກສັນສະກິດ (Vedic Sanskrit) ແມ່ນພາສາທີ່ໃຊ້ບັນທຶກໃນຄຳພີພະເວດ ເຊິ່ງປະກອບດ້ວຍຄຳສູດມົນກົນຄາຖາ ອ້ອນວອນເທບພະເຈົ້າ, ບົດລູດ ແລະ ບົດເພງສັນລະເສີນເທບພະເຈົ້າຂອງຊາວອາລະຍັນ. ຄຳພີພະເວດນີ້ ເຊື່ອກັນວ່າຂຽນຂຶ້ນໃນປີ 1000 ກ່ອນ ຄ.ສ.
- ກລັດສິກັລ ສັນສະກິດ (Classical Sanskrit)ແມ່ນພາສາທີ່ໃຊ້ບັນທຶກໃນວັນນະຄະດີສະໄໝບູຮານຂອງອິນເດຍ. ເພິ່ນຖືວ່າ ເປັນພາສາມາດຕະຖານ ເພາະມີຫລັກໄວຍາກອນຢ່າງສົມບູນ ຊຶ່ງແມ່ນອາຈານປານີນີ ໄດ້ຮຽບຮຽງຂຶ້ນຢ່າງເປັນລະບຽບຮຽບຮ້ອຍດີ ໃນລະຫວ່າງ 500 ປີ ກ່ອນ ຄ.ສ.

ສັນສະກິດ ແປວ່າ ກັ່ນກອງດີແລ້ວ, ເຮັດໃຫ້ເປັນລະບຽບດີແລ້ວ ໝາຍຄວາມວ່າ ພາສາພຣາມີ ຫລື ອາລະຍັນ ໄດ້ຖືກນັກປາດທາງດ້ານພາສາສາດຂອງອິນເດຍແກ້ໄຂດັດແປງໃໝ່ ຈົນເຫັນວ່າເຂົ້າຮູບເຂົ້າຮອຍດີ ມີລະບຽບແບບແຜນດີ ຈຶ່ງໃຫ້ຊື່ວ່າ ສັນສະກິດ. ດັ່ງນັ້ນ ພວກເຮົາຈຶ່ງສາມາດສະຫລຸບຄວາມໄດ້ວ່າ ພາສາສັນສະກິດ ແມ່ນພາສາທີ່ນັກປາດກັ່ນກອງດີແລ້ວນັ້ນເອງ.

ໃນສະໄໝບູຮານ ຖືກັນວ່າ ພາສາສັນສະກິດເປັນພາສານັກປາດບັນດິດ ຜູ້ອື່ນທີ່ບໍ່ມີຄວາມຮູ້ສູງ ບໍ່ສົມຄວນນຳພາສານີ້ໄປໃຊ້. ເມື່ອເວລາສະແດງລະຄອນ, ແຕ່ລະຕົວລະຄອນ ກໍມີພາສາໃຊ້ຂອງໃຜຂອງລາວ ຄື ຜູ້ທີ່ມີຍົດຖາບັນດາສັກສູງ ຈຶ່ງໃຊ້ພາສາສັນສະກິດໄດ້. ສ່ວນແມ່ຍິງ ຫລື ສາມັນຊົນ ຕ້ອງໃຊ້ພາສາທ້ອງຖິ່ນອື່ນຕາມຄຸນລັກສະນະ ຫລື ຊັ້ນວັນນະຂອງຕົວລະຄອນ.

ໃນປັດຈຸບັນ ພາສາສັນສະກິດ ໄດ້ກາຍເປັນພາສາຕາຍ ແຕ່ກໍຍັງຖືກນຳມາຮຽນ ເພາະຖືວ່າເປັນພາສາຂອງຊົນຊາດທີ່ມີຄວາມຈະເລີນຮຸ່ງເຮືອງທາງດ້ານສິລະປະວັນນະຄະດີວິທະຍາການມາກ່ອນ, ສຳລັບພາສາລາວກໍໄດ້ຮັບອິດທິພົນຈາກພາສາສັນສະກິດບໍ່ແມ່ນໜ້ອຍ. ມີຫລາຍສັບທີ່ພວກເຮົາໃຊ້ໃນປັດຈຸບັນ ໄດ້ເຄົ້າມາຈາກພາສາສັນສະກິດ ຂໍຍົກຕົວຢ່າງສັບໃຫ້ເຫັນດັ່ງລຸ່ມນີ້ :

ບຸລຸດ	ໄດ້ເຄົ້າມາຈາກສັບສັນສະກິດ	ປຸຣຸສ
ສະຫວັນ	"	ສວຣຄ
ມາລະຍາດ	ໄດ້ເຄົ້າມາຈາກສັບສັນສະກິດ	ມາຣຍາທ

ອັດສະຈັນ	"	ອັດສະຈະຍະ
ອາຈານ	"	ອາຈາຣະຍະ
ອາລະຍະທຳ	"	ອາຣຍທັມ.
ປັດຊະຍາ	"	ປຣັດຊຍາ
ທະຫານ		ທຫາຣ

II. ອັກສອນສັນສະກິດ

ເມື່ອຊາວອາລະຍັນເຂົ້າມາມີອຳນາດຢູ່ໃນອິນເດຍແລ້ວ ເຂົາເຈົ້າກໍໄດ້ທຳການເຜີຍແຜ່ ພາສາ-ສາສະໜາ-ວັດທະນະທຳ ແລະຕົວອັກສອນໄປທົ່ວອິນເດຍ. ຕົວອັກສອນທີ່ຊາວອາລະຍັນນຳເຂົ້າມາໃຊ້ໃນອິນເດຍນັ້ນ, ໃນຂັ້ນຕົ້ນ ເອີ້ນວ່າ ອັກສອນພຣາມີ ຊຶ່ງໄດ້ເຄົ້າແບບມາຈາກອັກສອນຟີນີເຊຍ. ໃນເວລາຕໍ່ມາອັກສອນພຣາມີ ໄດ້ຖືກດັດແປງຂະຫຍາຍກາຍມາເປັນອັກສອນສັນສະກິດ ຫລື ເອີ້ນອີກຢ່າງໜຶ່ງວ່າ ເທວະນາຄະລີ ແປວ່າ ຂີດຂຽນໂດຍເທບພະເຈົ້າ ຊຶ່ງນິຍົມໃຊ້ກັນຢູ່ທາງພາກເໜືອຂອງອິນເດຍ.

໑. ຮູບຕົວອັກສອນສັນສະກິດສະໄໝລາຊະວົງປັນລະວະ (ສະຕະວັດທີ ໑)

ສະຫລະ



ພະຍັນຊະນະ







໔. ຮູບຕົວອັກສອນສັນສະກິດ ຫລື ເທວະນາຄະລີ

ສະຫລະ

अ ອະ	आ ອາ	इ ອິ	ई ອີ
उ ອຸ	ऊ ອູ	ऋ ຣິ	ॠ ຣີ
ऌ ລິ	ॡ ລີ	ए ເອ	ऐ ໄອ
ओ ໂອ	औ ເອົາ	अं ອັງ	अः ອຫະ

ສະຫລະທີ່ປະສົມກັບພະຍັນຊະນະ

ा xາ	ि xິ	ी xີ	ु xຸ	ू xູ
ृ ຣິ	ॄ ຣີ	ॢ ລິ	े ເx	ै ໄx
ो ໂx	ौ ເxົາ	ं xັງ	ः ອຫະ	

ພະຍັນຊະນະ

क ກ	ख ຂ	ग ຄ	घ ຄ	ङ ງ
च ຈ	छ ສ	ज ຊ	झ, झ ຊ	ञ ຍ
ट ຕ	ठ ຖ	ड ທ	ढ ທ	ण ນ
त ຕ	थ ຖ	द ທ	ध ທ	न ນ
प ປ	फ ຜ	ब ພ	भ ພ	म ມ
य ຍ	र ຣ	ल ລ	व ວ	श ສ
ष ສ	स ສ	ह ຫ	ळ ລ	

ຄຳຖາມ

1. ພາສາສັນສະກິດມີປະຫວັດຄວາມເປັນມາແນວໃດ ? ສັນສະກິດມີຄວາມໝາຍວ່າຢ່າງໃດ ?
2. ຕົວອັກສອນສັນສະກິດໄດ້ເຄົ້າມູນມາຈາກອັກສອນໃດ ?

ບົດທີ ຝ

ວ່າດ້ວຍພາສາ ແລະ ອັກສອນປາລີ

I. ພາສາປາລີ :

ພາສາປາລີ ແມ່ນພາສາທ້ອງຖິ່ນທີ່ເກົ່າແກ່ພາສາໜຶ່ງຂອງອິນເດຍ, ເປັນສາຂາໜຶ່ງຂອງພາສາປາກຣິດ (Pakrit) ເຊິ່ງເປັນພາສາສາມັນຂອງປະຊາຊົນທົ່ວໄປ. ມັນມີສາຍພົວພັນຢ່າງສະໜິດແໜ້ນກັບພາສາສັນສະກິດ. ຕາມນັກປາດດ້ານພາສາສາດໄດ້ຕີລາຄາວ່າ ພາສາປາລີແມ່ນພາສາໜຶ່ງ ທີ່ສືບຕະກູນມາຈາກເວດິກສັນສະກິດ. ເມື່ອເຮົານຳເອົາສອງພາສານີ້ ມາສົມທຽບໃສ່ກັນແລ້ວ ຈະເຫັນໄດ້ວ່າມີຫລາຍສັບທີ່ຄ້າຍຄືກັນ ດັ່ງເຊັ່ນຕົວຢ່າງຂ້າງລຸ່ມນີ້ :

ປາລີ	ສັນສະກິດ
ມິດຕະ	ມິຕຣ
ອັກຂຣ	ອັກສຣ
ພະຣິຍາ	ພາຣະຍະ
ອະມະຕະ	ອະມະຣິດ
ເນດຕະ	ເນຕຣະ
ຣັດຕິ	ຣາຕຣີ
ອັກຄີ	ອັກຄະນີ
ສິປປະ	ສິລະປະ
ສັນຕິ	ສານຕິ
ພິກຂຸ	ພິກສຸ

ພາສາປາລີ ດັ້ງເດີມບໍ່ແມ່ນຊື່ແນວນີ້, ເປັນພາສາຂອງອິນເດຍພາກໃຕ້ ໃນສະໄໝບູຮານ ມີຊື່ວ່າ ພາສາມະຄະທີ ເພາະເປັນພາສາຂອງຊາວມະຄະທະ ຊຶ່ງມີສູນກາງຢູ່ເມືອງລາຊະຄຶ. ພະພຸດທະເຈົ້າໄດ້ໃຊ້ພາສາມະຄະທີນີ້ ເປັນພາຫະນະໃນການສັ່ງສອນປະຊາຊົນແຫ່ງແຄວ້ນມະຄະທະເປັນຄັ້ງທຳອິດ ເພາະເຫັນວ່າ ພາສານີ້ງ່າຍດີ ແລະເໝາະສົມເປັນພາສາຂອງປວງຊົນທົ່ວໄປຢ່າງແທ້ຈິງ. ພາຍຫລັງທີ່ພຸດທະສາສະໜາຝ່າຍໃຕ້ ຫລື ຫີນະຍານໄດ້ໃຊ້ພາສາມະຄະທີເປັນພາສາບັນທຶກພຸດທະວະຈະນະ ຫລື ທີ່ຮຽກກັນວ່າ ພະໄຕປິດົກແລ້ວ ພາສາດັ່ງກ່າວຈຶ່ງຖືກຮຽກວ່າ ພາສາປາລີ ເພາະນັກປາດທາງພຸດທະສາສະໜາ ໄດ້ວາງລະບຽບກົດເກນເປັນຢ່າງດີ ເພື່ອໃຫ້ພົ້ນຈາກການກ່າວຫາວ່າເປັນພາສາຕ່ຳຕ້ອຍ. (ອິນເດຍສະໄໝນັ້ນຖືວ່າ ພາສາສັນສະກິດເປັນພາສາສັກສິດ, ເປັນພາສາຂອງຊົນຊັ້ນເທິງ, ເປັນພາສາມາດຕະຖານຂອງພວກອາລະຍັນສ່ວນພາສາອື່ນໆຖືວ່າເປັນພາສາຕ່ຳຕ້ອຍ).

ຕໍ່ຄວາມໝາຍຂອງຄຳວ່າ " ປາລີ " ນັກປາດທາງເອີຣົບໃຫ້ຄວາມເຫັນວ່າ : ປາລີໝາຍເຖິງແຖວ ຫລື ໃບຂອງໜັງສື ຊຶ່ງແມ່ນປຶ້ມບັນທຶກສິນທຳນັ້ນເອງ, ພາຍລຸນມາຈຶ່ງກາຍເປັນຊື່ເອີ້ນຂອງພາສາຄື " ພາສາປາລີ ".

ນັກປາດທາງຝ່າຍພຸດທະສາສະໜາ ໃຫ້ຄວາມເຫັນວ່າ ປາລີແມ່ນຊື່ທີ່ຖືກສ້າງຂຶ້ນຈາກເຄົ້າມູນຂອງຄຳວ່າ ປາລ (ປາລະ) ແປວ່າ ປ້ອງກັນ, ຮັກສາ, ອາລັກຂາ, ສະຫງວນ, ຄຸ້ມຄອງ ໝາຍເຖິງວັນນະຄະດີ, ຕຳລາ, ສິນທຳທາງພຸດທະສາສະໜາ ທີ່ຖືກປົກປັກຮັກສານັ້ນເອງ ແລະ ມີຄວາມໝາຍໃນຕົວມັນເອງວ່າ " ບົດສັກສິດ ".

ມາຮອດປັດຈຸບັນນີ, ພາສາປາລີຈັດເຂົ້າຢູ່ໃນປະເພດພາສາຕາຍ ໝາຍຄວາມບໍ່ມີຊາດໃດໃຊ້ເປັນພາສາເວົ້າ ແຕ່ຊ້ຳພັດມີຄວາມສຳຄັນໃນທາງບູຮານຄະດີ ເຊັ່ນດຽວກັບພາສາສັນສະກິດໃນພາກພື້ນອາຊີ ແລະ ພາສາເກຣັກກັບພາສາລາແຕັງໃນພາກພື້ນເອີຣົບ. ບັນດາພາສາເຫລົ່ານີ້ມີສິກສາສ່ວນຫລາຍຕາມມະຫາວິທະຍາໄລ ໂດຍສະເພາະສຳລັບນັກສຶກສາທີ່ຄົ້ນຄວ້າກ່ຽວກັບວັນນະຄະດີ-ພາສາສາດ. ດັ່ງນັ້ນ ບົດບາດ ແລະທີ່ຕັ້ງຂອງພາສາປາລີຈຶ່ງເປັນພາສາບູຮານທີ່ສັງຄົມຍັງຕ້ອງການຢູ່. ສັບພາສາລາວຈຳນວນຫລວງຫລາຍກໍໄດ້ຮັບເຄົ້າສັບມາຈາກພາສາປາລີ ຕົວຢ່າງບັນດາສັບດັ່ງຕໍ່ໄປນີ້ :

ນາຍົກ	ໄດ້ເຄົ້າມາຈາກສັບປາລີ	ນາຍະກະ
ບຸກຄົນ	"	ປຸກຄະລະ
ອາທິດ	"	ອາທິດຈະ
ອຸປະລັກ	"	ອຸປະລັກຄະ
ສັດ	"	ສັດຕະ

II. ອັກສອນປາລີ

ອັກສອນປາລີ ຫລື ເອີ້ນອີກຢ່າງໜຶ່ງວ່າ ຄຣີນ ກໍເຊັ່ນດຽວກັນກັບອັກສອນສັນສະກິດທີ່ໄດ້ສືບທອດມາຈາກອັກສອນພຣາມີ ແຕ່ອັກສອນປາລີບໍ່ໄດ້ດັດແປງຈາກເກົ່າຫລາຍປານໃດ ໝາຍຄວາມວ່າຍັງຮັກສາຮູບຊົງເດີມຂອງຕົວພຣາມີໄວ້ຫລາຍທີ່ສຸດ. ສາເຫດທີ່ເປັນແນວນັ້ນ ກໍຍ້ອນວ່າພາຍຫລັງ ທີ່ພະພຸດທະເຈົ້າປະລິນິພານແລ້ວ, ບັນດາສາວົກກໍໄດ້ທຳການບັນທຶກຄຳສັ່ງສອນຂອງພະພຸດທະອົງດ້ວຍພາສາມະຄະທີ ຊຶ່ງຕໍ່ມາຮຽກວ່າ ພາສາປາລີ ແລະຂຽນດ້ວຍຕົວອັກສອນພຣາມີ ຊຶ່ງໄດ້ມີການດັດແປງບາງເລັກນ້ອຍ ພ້ອມທັງໃຫ້ຊື່ໃໝ່ວ່າ ອັກສອນປາລີ ຕາມຊື່ຂອງພາສາ. ຕໍ່ມາໃນສະໄໝຂອງພະເຈົ້າອະໂສກມະຫາລາດໄດ້ເປັນໃຫຍ່ໃນອິນເດຍ ຈຶ່ງຮຽກຕົວອັກສອນປາລີນັ້ນວ່າ ຄຣີນ.

ຕົວອັກສອນປາລີ ຫລື ຄຣີນນີ້ເອງ ໄດ້ກາຍມາເປັນເຄົ້າໃຫ້ແກ່ຕົວອັກສອນລັງກາ, ມອນ, ພະມ້າ, ຂາມ, ລື້, ຍວນ, ທຳ...

ມາຮອດປັດຈຸບັນນີ້ ອັກສອນປາລີ ຫລື ຄຣີນ ໄດ້ກາຍເປັນໜັງສືຕາຍໄປແລ້ວ ຍ້ອນວ່າບໍ່ໄດ້ຖືກນຳໃຊ້ເຂົ້າໃນການຂີດຂຽນ.

ຮູບຕົວອັກສອນປາລີສະໄໝພະເຈົ້າອະໂສກມະຫາລາດ

* ສະຫລະ



พะยันชะนะ



ຄຳຖາມ

1. ພາສາປາລີມີປະຫວັດເປັນມາແນວໃດ ? ປາລີ ມີຄວາມໝາຍວ່າແນວໃດ ?
2. ຕົວອັກສອນປາລີມີເຄົ້າມູນມາຈາກອັກສອນໃດ ? ປັດຈຸບັນມີໃຊ້ບໍ ?



ພາກທີ III
ວ່າດ້ວຍພາສາ ແລະ ອັກສອນໃນລາວ

ບົດທີ 7
ພາສາ ແລະ ອັກສອນໃນລາວ

I. ບັນດາຊົນຊາດຊົນເຜົ່າໃນລາວ

ປະເທດ ສ.ປ.ປ. ລາວ ຕັ້ງຢູ່ໃຈກາງຂອງແຫລມອິນດູຈີນ ຊຶ່ງເປັນດິນແດນທີ່ສວຍສົດງົດງາມ ແລະອຸດົມຮັ່ງມີມາແຕ່ສະໄໝບູຮານ ຈົນແຕ່ກ່ອນເຄີຍມີຊື່ເອີ້ນວ່າ ສຸວັນນະພູມປະເທດ ຊຶ່ງມີຄວາມໝາຍວ່າ ດິນແດນທີ່ເຕັມໄປດ້ວຍຄຳ. ເຂດແດນປະເທດລາວໃນເສັ້ນຊາຍແດນປັດຈຸບັນນີ້ມີເນື້ອທີ່ກວ້າງປະມານ 236.800 ຕາລາງກິໂລແມັດ ເປັນພາກສ່ວນໜຶ່ງຂອງອານາຈັກລາວລ້ານຊ້າງ ທີ່ກວ້າງໃຫຍ່ໄພສານ ຊຶ່ງຄົງຕົວຢູ່ຢ່າງລືຊາຜາກົດ ຕັ້ງແຕ່ກາງສະຕະວັດທີ 14 ຫາຕົ້ນສະຕະວັດທີ 18.

ພົນລະເມືອງລາວໃນປັດຈຸບັນນີ້ ມີປະມານ 5 ລ້ານກວ່າຄົນ ຊຶ່ງປະກອບດ້ວຍຫລາຍຊົນເຜົ່າ. ໃນເມື່ອກ່ອນ ເພິ່ນເຄີຍຈັດລວມເຂົ້າເປັນ 3 ກຸ່ມຊົນເຜົ່າໃຫຍ່ ໂດຍອີງຕາມລັກສະນະສະເພາະໃນດ້ານພາສາ ວັດທະນະທຳ ດ້ານຮູບແບບການຜະລິດ ແລະ ດ້ານການຕັ້ງພູມລຳເນົາ.

1. ຊົນເຜົ່າລາວເທິງ

ຊົນຊາດລາວເທິງປະກອບດ້ວຍບັນດາເຜົ່າ ທີ່ປາກພາສາໃນໝວດມອນ-ຂະແມ. ເຂົາເຈົ້າເປັນຄົນເດີມ ໄດ້ທຳມາຫາກິນໃນແຜ່ນດິນລາວ ແລະຫລາຍແຫ່ງໃນຂົງເຂດອາຊີ ຕາເວັນອອກສຽງໃຕ້ນີ້ ມາແຕ່ດຶກດຳບັນ. ບັນດານັກຄົ້ນຄວ້າປະຫວັດສາດ ແລະ ບູຮານຄະດີ ເຄີຍໃຫ້ການສັນນິຖານວ່າ ບັນດາເຜົ່າລາວເທິງນີ້ ເຄີຍເປັນເຈົ້າຂອງວັດທະນະທຳອັນເກົ່າແກ່ ຊຶ່ງຍັງມີຮ່ອງຮອຍເຫລືອຄ້າງໄວ້ຢູ່ໃນປະເທດເຮົາຈົນເຖິງປັດຈຸບັນນີ້ ເຊັ່ນວ່າ ໄຫຫີນຢູ່ແຂວງຊຽງຂວາງ, ເສົາຫີນຢູ່ແຂວງຫົວພັນ, ປາສາດຫີນຢູ່ວັດພູຈຳປາສັກ ແລະອື່ນໆ.. ຊົນຊາດລາວເທິງ ເວົ້າລວມຖືໄສຍະສາດ, ເຊື່ອຖື ແລະ ນັບໄຫວ້ຜີສາງມາແຕ່ດົນນານ. ເຂົາເຈົ້າມັກຕັ້ງບ້ານເຮືອນຢູ່ເຂດພູພຽງ ອັນເປັນເງື່ອນໄຂສະດວກໃຫ້ແກ່ຮູບການຜະລິດທີ່ເຂົາເຈົ້າຊຳນານມາແຕ່ກ່ອນຄື ການເຮັດໄຮ່(ເຂົ້າສາລີ) ແລະ ເກັບກູ້ເຄື່ອງປ່າຂອງດົງ.

2. ຊົນເຜົ່າລາວລຸ່ມ

ຊົນຊາດລາວລຸ່ມກວມຈຳນວນຫລາຍກວ່າໝູ່ໝົດໃນພົນລະເມືອງລາວ ປະກອບດ້ວຍບັນດາເຜົ່າທີ່ປາກພາສາໃນໝວດລາວ-ໄທ(ໄຕ). ຊົນຊາດນີ້ໄດ້ເຂົ້າມາຢູ່ໃນດິນແດນແຫ່ງນີ້ແຕ່ເຫິງນານແລ້ວ ມາຮອດສະຕະວັດທີ 8 ຊົນເຜົ່າໄທລາວໄດ້ກ້າວຂຶ້ນສູ່ຖານະທີ່ເປັນເຈົ້າປົກຄອງດິນແດນແຫ່ງນີ້ ໂດຍມີ ຂຸນລໍ ເປັນເຈົ້າຊີວິດອົງທຳອິດຂອງລາວ ຊຶ່ງມີລາຊະທານີຕັ້ງຢູ່ເມືອງຊວາ. ມາຮອດສະຕະວັດທີ 14 ເຈົ້າຟ້າງຸ່ມມະຫາລາດ ໄດ້ທຳການທ້ອນໂຮມບັນດາເມືອງບູຮານຂອງລາວເຂົ້າມາເປັນເອກະພາບ ໂດຍໃສ່ຊື່ວ່າ " ອານາຈັກລ້ານຊ້າງ ".

ຊົນຊາດລາວລຸ່ມມີພື້ນຖານວັດທະນະທຳອັນເກົ່າແກ່ເຫິງນານ ແລະ ອຸດົມຮັ່ງມີ ທັງໄດ້ຮັບອິດທິພົນ ມາຈາກວັດທະນະທຳຂະແມ ແລະອິນເດຍ. ໂດຍຜ່ານທາງພຸດທະສາສະໜາປະຈຳຊາດລາວໃນທົ່ວອານາຈັກລ້ານຊ້າງເອກະພາບ ຕັ້ງແຕ່ກາງສະຕະວັດທີ 14 ເປັນຕົ້ນມາ.

ຊາວລາວລຸ່ມມີຄວາມຊຳນານໃນການເຮັດນານ້ຳ, ເຮັດສວນ ແລະ ລ້ຽງສັດ. ສະນັ້ນ ເຂົາເຈົ້າຈຶ່ງ, ມັກຕັ້ງບ້ານເຮືອນຢູ່ເຂດທົ່ງພຽງລຽບແຄມແມ່ນ້ຳ, ເຂົາເຈົ້າຍັງເປັນຜູ້ມີສີໄມ້ລາຍມືດີໃນດ້ານສະຖາປັດຕະຍະກຳ ແລະ ໃນດ້ານຫັດຖະກຳຂະແໜງຕ່າງໆ ເຊັ່ນ ກໍ່ສ້າງ, ຄວັດລວດລາຍ, ຕ່ຳຜ້າ, ທໍໄໝ, ປັ້ນໝໍ້, ຕີໄອ, ຈັກສານ ແລະເຮັດເຄື່ອງເອ້ດ້ວຍເງິນຄຳ ແລະອື່ນໆ.

3. ຊົນເຜົ່າລາວສູງ

ຊົນເຜົ່າລາວສູງ ລວມມີບັນດາເຜົ່າທີ່ປາກພາສາໃນຕະກູນມົ້ງ-ຢ້າວ ແລະ ພະມ້າ-ທິເບດ. ພວກນັກປະຫວັດສາດ ແລະຊົນເຜົ່າວິທະຍາເຄີຍຢືນຢັນວ່າ ບັນດາເຜົ່າລາວສູງນີ້ ໄດ້ເຄື່ອນຍ້າຍມາຈາກພາກໃຕ້ຂອງປະເທດຈີນ ລົງມາຢູ່ດິນແດນລາວຕັ້ງແຕ່ລະຫວ່າງສະຕະວັດທີ 18 ມານີ້, ສະນັ້ນ ເຂົາເຈົ້າຈຶ່ງມີຮີດຄອງປະເພນີຫລາຍອັນຄ້າຍຄືກັບບັນດາເຜົ່າທີ່ຢູ່ທາງພາກໃຕ້ຂອງປະເທດຈີນເຊັ່ນ ການຖືຜີເຊື້ອ, ຖືຫັກເລື່ອງເຊັ່ງ (ນາມສະກຸນ) ໃນງານພິທີຟື້ນ, ຖືຮີດກິນຈຽງປະຈຳປີ ເປັນປະເພນີປະຈຳຊາດ ແລະໆລໆ. ບັນດາເຜົ່າລາວສູງນີ້ ຊຳນານໃນການເຮັດໄຮ່ປູກຢາຝິ່ນ ແລະ ສາລີ, ສະນັ້ນ ເຂົາເຈົ້າຈຶ່ງມັກຕັ້ງບ້ານເຮືອນຢູ່ເຂດພູສູງທາງພາກເໜືອຂອງປະເທດລາວ ທີ່ມີເງື່ອນໄຂດ້ານດິນຟ້າອາກາດ ເໝາະສົມກັບການຜະລິດດັ່ງກ່າວມານັ້ນ.

ເວົ້າລວມແລ້ວ ທຸກໆຊົນຊາດຊົນເຜົ່າທີ່ກ່າວມານັ້ນ ມີທັງຈຸດພິເສດສະເພາະຂອງຕົນ ແລະມີລັກສະນະພື້ນຖານລວມ ຄື ໃຊ້ພາສາລາວລຸ່ມເປັນພາສາກາງ, ນຳເອົາວັດທະນະທຳຂອງທຸກຊົນເຜົ່າມາໂຮມເຂົ້າກັນເປັນວັດທະນະທຳລວມອັນອຸດົມສົມບູນຂອງໝົດທັງຊາດລາວ ໂດຍມີວັດທະນະທຳລາວລຸ່ມເປັນໃຈກາງ ແລະບໍ່ວ່າຈະຢູ່ພູພຽງ, ພູສູງ ຫລື ທົ່ງພຽງ ກໍລ້ວນແຕ່ຢູ່ຮ່ວມກັນເທິງດິນແດນລາວນີ້ ໂດຍມີການພົວພັນແລກປ່ຽນດ້ານເສດຖະກິດນຳກັນຢ່າງເປັນປະຈຳຕະຫລອດມາ. ຊາວລາວທຸກຊົນເຜົ່າ ລ້ວນແຕ່ມີນ້ຳໃຈຮັກບ້ານເກີດເມືອງນອນດິນດອນຕອນຫຍໍ້ຂອງລາວນີ້, ມີນ້ຳໃຈຮັກການອອກແຮງງານຢ່າງຂະຫຍັນຫ້າວຫັນ, ຮັກຫອມສັນຕິພາບ, ຮັກຄວາມເປັນທຳ, ເດັດດ່ຽວບໍ່ຍອມຈຳນົນໃນການຕໍ່ສູ້ຕ້ານການກົດຂີ່ຂູດຮີດ ແລະການຮຸກຮານທຳລາຍຈາກສັດຕູພາຍໃນ ແລະພາຍນອກ. ເພາະສະນັ້ນ ປວງປະຊາຊົນລາວບັນດາເຜົ່າ ຈຶ່ງສາມັກຄີເຕົ້າໂຮມກັນເຂົ້າເປັນຊາດລາວເອກະພາບຄືປັດຈຸບັນນີ້.

ນ. ພາສາ ແລະ ອັກສອນໃນລາວ

໑. ພາສາໃນລາວ

ປະເທດລາວເປັນປະເທດນ້ອຍ, ມີພົນລະເມືອງບໍ່ຫລາຍ ແຕ່ຊ້ຳພັດປະກອບມີຫລາຍຊົນເຜົ່າຕ່າງກັນ. ອີງຕາມເອກະສານໃນເມື່ອກ່ອນທີ່ກ່າວເຖິງພົນລະເມືອງລາວ ໄດ້ກ່າວໄວ້ວ່າພົນລະເມືອງລາວປະກອບດ້ວຍ 68 ຊົນເຜົ່າ (ແຕ່ໃນເອກະສານປັດຈຸບັນເວົ້າວ່າ ມີປະມານ 40 ກວ່າຊົນເຜົ່າ) ໃນຈຳນວນຊົນເຜົ່າເຫຼົ່ານີ້ ກໍມີພາສາປາກເວົ້າແຕກຕ່າງກັນໄປ. ແຕ່ຕາມກອງປະຊຸມໃຫຍ່ປະຊາຊົນສູງສຸດຄັ້ງປະຖົມມະລຶກ ໄດ້

ປະກາດໃຊ້ພາສາລາວເປັນພາສາກາງ ແລະ ເປັນພາສາທາງລັດຖະການໃນທົ່ວ ສປປ ລາວ.

ຖ້າອີງຕາມຈຸດພິເສດທາງດ້ານພາສາຄຳເວົ້າຂອງແຕ່ລະຊົນເຜົ່າ, ພວກເຮົາອາດຈັດແບ່ງພາສາທີ່ໃຊ້ຢູ່ໃນປະເທດລາວເຮົາອອກເປັນ 6 ໝວດພາສາດັ່ງນີ້:

ກ. ໝວດພາສາລາວ-ໄທ (ໄຕ)

ໝວດພາສາລາວ-ໄທ ຫລື ໄຕ ເປັນໝວດພາສາທີ່ໃຫຍ່ກວ່າໝູ່ໃນລາວ ຊຶ່ງປະກອບດ້ວຍພາສາ ລາວ, ລື້, ຍວນ, ພວນ, ຜູ້ໄທ, ໄທດຳ, ໄທແດງ, ໄທຂາວ... ຊົນເຜົ່າທີ່ປາກພາສາໝວດນີ້ ມັກຕັ້ງພູມລຳເນົາຢູ່ຕາມເຂດທົ່ງພຽງລຽບແຄມແມ່ນ້ຳຂອງ ແລະສາຂາແມ່ນ້ຳລຳເຊໃຫຍ່, ຢູ່ຕາມຫວ່າງພູ ຊຶ່ງເປັນເຂດທີ່ອຸດົມຮັ່ງມີ, ເໝາະສົມໃນການເຮັດນາ ແລະສະດວກໃນການໄປມາຄ້າຂາຍແລກປ່ຽນສິນຄ້າເຊິ່ງກັນ ແລະກັນ.

ຂ. ໝວດພາສາມອນ-ຂະແມ

ບັນດາຊົນເຜົ່າທີ່ປາກພາສາໝວດນີ້ ໄດ້ຕັ້ງພູມລຳເນົາຢູ່ເຂດພູພຽງທາງພາກເໜືອ, ພາກຕາເວັນອອກ ຄືລຽບຕາມສາຍພູຫລວງ ແລະຈຳນວນໜຶ່ງກໍຢູ່ຊອນກັບບັນດາຊົນເຜົ່າໄທລາວ ຕາມເຂດທົ່ງພຽງທາງພາກຕາເວັນຕົກ. ໃນໄລຍະຜ່ານມາ, ພວກເຮົາເຄີຍເອີ້ນບັນດາຊົນເຜົ່າທີ່ປາກພາສາໝວດມອນ-ຂະແມ ນີ້ວ່າ " ລາວເທີງ " ຫລື " ລາວກາງ ".

ພາສາທີ່ນັບເຂົ້າໃນໝວດນີ້ ຢູ່ທາງພາກເໜືອມີ ພາສາກຳມຸ (ຂະມຸ), ບິດ, ລະເມດ, ສາມຕາວ, ດອຍ, ພອງ, ສິງມູນ, ໄພ, ແຊງ ... ຢູ່ທາງພາກກາງ ແລະພາກໃຕ້ມີ ມະກອງ, ຕຣີ, ກະຕາງ, ສວຍ, ປະໂກະ, ກະຕູ, ແງ້, ຕະລຽງ, ອາລັກ, ລະວີ, ລະແວ, ໂອຍ, ເຈັງ, ສະປວນ, ລະເວນ, ຍາເຫີນ, ແຢ້, ສະລາງ, ຕະໂອ້ຍ ...

ຄ. ໝວດພາສາພະມ້າ-ທິເບດ

ບັນດາຊົນເຜົ່າທີ່ປາກພາສາໝວດນີ້ ສ່ວນຫລວງຫລາຍຕັ້ງພູມລຳເນົາຢູ່ທາງພາກເໜືອຂອງລາວ ເຊັ່ນ ຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ. ພາສາທີ່ຂຶ້ນກັບໝວດນີ້ ມີພາສາກໍ (ອີກໍ້), ພູນ້ອຍ, ມູເຊີ, ໂລງ

ງ. ໝວດພາສາມົ້ງ- ຢ້າວ

ບັນດາຊົນເຜົ່າທີ່ປາກພາສາໝວດນີ້ ມັກຕັ້ງພູມລຳເນົາຢູ່ເຂດສູງບ່ອນມີອາກາດເຢືອກເຢັນ, ເໝາະສົມແກ່ການປູກຝັງ, ຂອງບັນດາແຂວງທາງພາກເໜືອ (ແຕ່ຄຳມ່ວນຂຶ້ນໄປ). ໃນໝວດພາສາມົ້ງ-ຢ້າວ ປະກອບມີ ພາສາມົ້ງ (ມົ້ງລາຍ, ມົ້ງຂາວ, ມົ້ງດຳ, ມົ້ງແດງ), ຢ້າວ, ແລນແຕນ ...

ຈ. ໝວດພາສາຫໍ້ ແລະ ໝວດພາສາຫວຽດ-ເມືອງ

ຊົນເຜົ່າໃນສອງໝວດພາສານີ້ ມີພົນລະເມືອງໜ້ອຍທີ່ສຸດ ຖ້າທຽບໃສ່ພົນລະເມືອງຂອງເຜົ່າຊົນອື່ນໆ... ພາສາທີ່ນັບເຂົ້າໃນໝວດພາສາຫໍ້ ໄດ້ແກ່ ພາສາຫໍ້, ສ່ວນພາສາທີ່ນັບເຂົ້າໃນໝວດພາສາຫວຽດ-ເມືອງ ໄດ້ແກ່ພາສາເມືອງ, ສະລາງ, ຕຣີ .

៨. ອັກສອນໃນລາວ

ປະເທດລາວ ນອກຈາກຈະອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ມີພູຜາປ່າໄມ້ ແມ່ນ້ຳລຳເຊແລ້ວ ຍັງອຸດົມສົມບູນໄປດ້ວຍວັນນະຄະດີ ແລະຕົວອັກສອນ.

ວັນນະຄະດີ ແລະຕົວອັກສອນເຫລົ່ານີ້ ມັນໄດ້ສ່ອງແສງເຖິງຄວາມຈະເລີນກ້າວໜ້າທາງດ້ານວັດທະນະທຳ ແລະ ທັດສະນະຄະຕິສ້າງສັນຂອງປະຊາຊົນບັນດາເຜົ່າໃນລາວ.

ປະຊາຊົນລາວມີຕົວອັກສອນໃຊ້ມາຕັ້ງແຕ່ສະໄໝບູຮານ, ບັນດາຊົນເຜົ່າທີ່ສັງກັດຢູ່ໃນຊົນຊາດລາວລຸ່ມ ແມ່ນມີຕົວອັກສອນປະຈຳພາສາຂອງຕົນມາແຕ່ດົນນານແລ້ວ. ຕົວອັກສອນຂອງຊົນຊາດລາວລຸ່ມ ແມ່ນມີຫລາຍຮູບຫລາຍແບບ ເປັນຕົ້ນ ຕົວອັກສອນລາວ, ອັກສອນທຳ, ອັກສອນລື້, ອັກສອນໄທດຳ, ອັກສອນໄທຂາວ... ຊົນເຜົ່າທີ່ສັງກັດຢູ່ໃນຊົນຊາດລາວເທິງ ມີພຽງແຕ່ຊົນເຜົ່າລະເວນເທົ່ານັ້ນ ທີ່ມີຕົວອັກສອນປະຈຳພາສາຂອງຕົນ ຊຶ່ງມີລັກສະນະຢ່າງດຽວກັນກັບຕົວອັກສອນຂອມ, ສ່ວນຊົນເຜົ່າທີ່ສັງກັດຢູ່ໃນຊົນຊາດລາວສູງ ຍັງບໍ່ທັນມີອັກສອນສະເພາະປະຈຳພາສາຂອງຕົນຢ່າງແນ່ນອນເທື່ອ, ໃນໄລຍະຜ່ານມາ ເຂົາເຈົ້າເຄີຍໃຊ້ຕົວອັກສອນຈີນ-ລາວ-ລາແຕັງ ບັນທຶກພາສາຂອງຕົນ.

ນອກຈາກບັນດາຕົວອັກສອນທີ່ກ່າວມາແລ້ວ, ຢູ່ໃນລາວຍັງມີຕົວອັກສອນຂອມ ແລະ ມອນບູຮານ ຊຶ່ງຖືກສະຫລັກໄວ້ຢູ່ເທິງແຜ່ນສີລາເລກຕ່າງໆ ເປັນຕົ້ນວ່າ ສີລາເລກທີ່ໄດ້ມາຈາກບ້ານທ່າລາດ ແຂວງວຽງຈັນ ຊຶ່ງນັກປາດຊາວຝຣັ່ງ ໄດ້ຕີລາຄາວ່າ ຕົວອັກສອນທີ່ສະຫລັກຢູ່ນັ້ນ ແມ່ນອັກສອນມອນບູຮານ. ສຳລັບຕົວອັກສອນຂອມ ນອກຈາກຈະມີຢູ່ໃນສີລາເລກຕ່າງໆແລ້ວ, ບັນດານັກປາດລາວໃນສະໄໝບູຮານ ຍັງນຳໃຊ້ເຂົ້າໃນການບັນທຶກຄຳພີດີກາທາງດ້ານພຸດທະສາສະໜາໃສ່ເທິງໃບລານ.

ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ຢູ່ປະເທດລາວພວກເຮົາແມ່ນອຸດົມສົມບູນໄປດ້ວຍຕົວອັກສອນ. ບັນດາຕົວອັກສອນເຫລົ່ານີ້ ລ້ວນແຕ່ມີກົກເຄົ້າມາຈາກອັກສອນຂອງອິນເດຍ ແຕ່ມາຮອດປະຈຸບັນນີ້, ຕົວອັກສອນທີ່ຖືກນຳໃຊ້ຫລາຍກວ່າໝູ່ ໄດ້ແກ່ຕົວອັກສອນລາວ.

ບົດທີ ໆ

ວ່າດ້ວຍຕົວອັກສອນມອນ

I. ຊົນຊາດ ແລະຮ່ອງຮອຍວັດທະນະທຳສະໄໝບູຮານໃນດິນແດນສຸວັນນະພູມ

໑. ທັດສະນະກ່ຽວກັບດິນແດນສຸວັນນະພູມ

ຄຳວ່າ ສຸວັນນະພູມ ແປວ່າ ດິນແດນຄຳ. ດິນແດນແຫ່ງນີ້ແມ່ນໝາຍເຖິງສະຖານທີ່ໃດກັນແທ້ ? ຕໍ່ກັບບັນຫານີ້ ບັນດານັກບູຮານຄະດີ-ນັກປະຫວັດສາດກໍໄດ້ໃຫ້ທັດສະນະແຕກຕ່າງກັນໄປ ເຊັ່ນ

ກ. ນັກບູຮານຄະດີຊາວອິນເດຍ 90% ເຊື່ອວ່າ ສຸວັນນະພູມ ໄດ້ແກ່ແຫລມມະລາຢູ ຫລື ດິນແດນຕອນໃຕ້ຂອງປະເທດໄທລົງໄປສຸດເກາະສຸມາຕຣາ (ປະເທດອິນໂດເນເຊຍປັດຈຸບັນ) ສະໄໝນາລັນທາຮຸ່ງເຮືອງ (ສະຕະວັດທີ 7- 8) ນັ້ນ ໄດ້ມີນັກສຶກສາຈາກບ່ອນຕ່າງໆ ແລະຈາກນາລັນທາ (ອິນເດຍ) ໄດ້ເດີນທາງໄປຍັງສຸວັນນະພູມ ເພາະຢູ່ນັ້ນການສຶກສາຈະເລີນຫລາຍ. ພະຈີນເດີນທາງໂດຍທາງເຮືອໄປອິນເດຍ ກໍແວະພັກສຶກສາຢູ່ທີ່ນັ້ນກ່ອນ. ປະຫວັດພື້ນເມືອງບອກວ່າ ສະໄໝບູຮານແຖບນີ້ມີຄຳຫລາຍ, ເມື່ອມີການຫລິ້ນການພະນັນ ກໍນຳເອົາຄຳອອກມາວາງປະກັນ, ຄືໄກ່ກໍເອົາຄຳທີ່ກັບໂຕໄກ່ອອກມາເປັນເດີມພັນ. ເຂົາຈຶ່ງເຊື່ອວ່າ ສຸວັນນະພູມກໍແມ່ນແຫຼມມະລາຢູນັ້ນເອງ.

ຂ. ນັກບູຮານຄະດີອິນເດຍສ່ວນໜ້ອຍ ມີຄວາມເຫັນວ່າ ສຸວັນນະພູມໄດ້ແກ່ບໍລິເວນແຄມທະເລດ້ານຕາເວັນອອກຂອງອິນເດຍໃຕ້ ຄືລັດໂອລິດສາ (Orissa) ປະຈຸບັນ.

ຄ. ນັກບູຮານຄະດີພະມ້າໃຫ້ຄວາມເຫັນວ່າ ສຸວັນນະພູມໄດ້ແກ່ບໍລິເວນພາກກາງ ແລະ ພາກໃຕ້ຂອງພະມ້າ ແລະອ້າງວ່າ ອຸບາສົກ 2 ຄົນທຳອິດ ຄື ຕະປຸດສະ ກັບ ພັນລິກະ ຊຶ່ງເປັນພໍ່ຄ້າໄດ້ໄປພົບພະພຸດທະເຈົ້າ ພາຍຫລັງທີ່ພະອົງຕັດສະຮູ້ໄດ້ໃໝ່ໆນັ້ນ ກໍແມ່ນຄົນພະມ້າ ໄປຈາກສຸວັນນະພູມນັ້ນເອງ. ເມື່ອກັບຄືນມາພະມ້າ ໄດ້ນຳເອົາພະເກສາ (ຜົມ) ທີ່ພະພຸດທະເຈົ້າຊົງປະທານ ມາບັນຈຸໄວ້ທີ່ພະເຈດີໃຫຍ່ " ຊະເວດາກອງ " ແຫ່ງປະເທສພະມ້າ. ນີ້ເປັນຂໍ້ອ້າງຂອງພວກພະມ້າ.

ງ. ນັກບູຮານຄະດີຊາວເອີຣົບ ໂດຍມີທ່ານຣິສ ເດວິດ (ຄົນອັງກິດ) ໃຫ້ຄວາມເຫັນວ່າ ສຸວັນນະພູມປະເທດນັ້ນ ໝາຍເອົາປະເທດຣາມັນ (ມອນ) ຄືເຂດເມືອງທັງສາວະດີລົງໄປຈົນຮອດແຫລມມະລາຢູ.

ຈ. ນັກບູຮານຄະດີໄທ ໂດຍມີ ກົມພະຍາດຳລົງລາຊານຸພາບ ເຊື່ອວ່າ ສຸວັນນະພູມໄດ້ແກ່ພາກໃຕ້ຂອງປະເທດໄທ ຄືບໍລິເວນນະຄອນປະຖົມລົງໄປ ເພາະຢູ່ທີ່ນັ້ນມີ ພະທາດປະຖົມເຈດີເປັນຫລັກ ກົງທຳມະຈັກ ອັນສ້າງຂຶ້ນໃນສະໄໝພະເຈົ້າອະໂສກມະຫາລາດ.

ສ. ນັກປະຫວັດສາດລາວ ໂດຍມີມະຫາສີລາ ວີລະວົງ ໄດ້ໃຫ້ທັດສະນະວ່າ : ແຜ່ນດິນອັນເປັນພື້ນພູມປະເທດລາວ, ໄທ, ພະມ້າ, ຫວຽດນາມ, ກຳປູເຈຍ, ມາເລເຊຍ ແລະ ສິງກະໂປ ແຕ່ກ່ອນນານກວ່າ 2500 ປີມາແລ້ວ ໂຮມເຂົ້າກັນເອີ້ນວ່າ ສຸວັນນະພູມະເທດ ຫລື ແຫລມທອງ ເພາະຄົນອິນເດຍບູຮານຖືວ່າ ຂົງເຂດນີ້ມີຄຳຫລາຍ ຮັ່ງມີ ເຂົາເຈົ້າຈຶ່ງຕັ້ງຊື່ໃຫ້ວ່າ ສຸວັນນະພູມ. ຕໍ່ກັບທັດສະນະນີ້ ເຫັນວ່າເປັນໜ້າເຊື່ອຖືສົມຄວນ ເພາະພື້ນພູມປະເທດຕ່າງໆທີ່ໄດ້ກ່າວນາມມາຂ້າງເທິງນີ້ ອຸດົມຮັ່ງມີໄປດ້ວຍທອງຄຳ. ເຫດນັ້ນ ເມື່ອຊົນຊາດລາວໄດ້ເຂົ້າມາຕັ້ງຫລັກຖານບ້ານເມືອງຢູ່ໃນດິນແດນແຫ່ງນີ້ ເຮົາຈຶ່ງເອີ້ນນາມເມືອງ

ຫລວງຂອງປະເທດເຮົາວ່າ ເມືອງຊຽງທອງ. ດັ່ງນັ້ນ ອາດຖືໄດ້ວ່າ ປະເທດລາວເຮົາໃນສະໄໝກ່ອນ ກໍ່ນອນຢູ່ໃນສຸວັນນະພູມເໝືອນກັນ.

໔. ຊົນຊາດບູຮານໃນສຸວັນນະພູມ

ກ່ຽວກັບບັນຫາຊົນຊາດເດີມ ທີ່ດຳລົງຊີວິດ ແລະມີອຳນາດຢູ່ໃນດິນແດນສຸວັນນະພູມ ນັກຄົ້ນຄວ້າທາງດ້ານປະຫວັດສາດ ໄດ້ລົງຄວາມເຫັນບໍ່ສອດຄ່ອງກັນ. ບາງທັດສະນະໄດ້ໃຫ້ຄຳເຫັນວ່າ ຊົນຊາດທີ່ເປັນເຈົ້າຂອງດິນແດນສຸວັນນະພູມນັ້ນ ແມ່ນພວກລະວ້າ ຫລື ລົວະ, ເຂົາເຈົ້າໄດ້ເຂົ້າຄອບຄອງດິນແດນສຸວັນນະພູມ ໂດຍແບ່ງແຍກອອກເປັນອານາຈັກໃຫຍ່ໆສາມອານາຈັກ ຊຶ່ງທັງສາມອານາຈັກ ຕ່າງກໍ່ເປັນອິດສະຫລະແກ່ກັນ ຄື

1/ ອານາຈັກທະວາຣາວະດີ ຢູ່ທາງຕອນໃຕ້ຂອງຮູແມ່ນ້ຳເຈົ້າພະຍາ ມີເມືອງນະຄອນປະຖົມເປັນລາຊະທານີ, ເມືອງລະໂວ້ ຊຶ່ງຕໍ່ມາປ່ຽນເປັນລົບບູລີເມື່ອຂອມເຂົ້າປົກຄອງ, ປ່ຽນເປັນເມືອງສຸໂຂໄທເມື່ອໄທເຂົ້າປົກຄອງ

2/ ອານາຈັກຢາງ ຫລື ໂຍນົກ ມີເມືອງເງິນຍາງເປັນລາຊະທານີ ຢູ່ແຄມແມ່ນ້ຳຂອງເໜືອເມືອງຊຽງແສນ.

3/ ອານາຈັກໂຄຕະບູນ ຫລື ພະນົມ ຈີນເອີ້ນວ່າ ຟູນັນ ມີເມືອງນະຄອນພະນົມເປັນລາຊະທານີ.

ອີກທັດສະນະໜຶ່ງ ໃຫ້ຄວາມເຫັນວ່າ ພວກຂອມໄດ້ເຂົ້າມາຕັ້ງຖິ່ນຖານຢູ່ໃນສຸວັນນະພູມກ່ອນຊົນຊາດອື່ນໄດ້ຫລາຍພັນປີມາແລ້ວ ແລະໄດ້ຕັ້ງເປັນອານາຈັກໃຫຍ່ໆຂຶ້ນສອງອານາຈັກ ຄື

1/ ອານາຈັກທະວາຣາວະດີ ຫລື ອານາຈັກສີວິໄຊ ອານາຈັກນີ້ຕັ້ງຢູ່ທາງຕາເວັນຕົກ ຕັ້ງແຕ່ແດນເມືອງນະຄອນປະຖົມ ປະເທດໄທ ຈົນເຖິງປະເທດມອນ ແລະ ພະມ້າ ທາງຕາເວັນອອກ ຕະຫລອດຮອດປະເທດມະລາຍູ.

2/ ອານາຈັກໂຄຕະປຸຣະ ຫລື ໂຄຕະບູນ ຕັ້ງຢູ່ທາງຕາເວັນອອກໃນພື້ນທີ່ອັນເປັນເຂດວຽງຈັນ ໄປເຖິງປະເທດກຳປູເຈຍ.

ການທີ່ເພິ່ນສັນນິຖານໃຫ້ເຫັນວ່າ ພວກຂອມໄດ້ເຂົ້າມາຕັ້ງຖິ່ນຖານຢູ່ສຸວັນນະພູມກ່ອນຊົນຊາດອື່ນນັ້ນ ເພາະມີເຫດຜົນຫລາຍຢ່າງທີ່ເຊື່ອຖືໄດ້ ຄື

- ບູຮານວັດຖຸເກົ່າແກ່ ອັນມີຢູ່ດິນແດນດັ່ງກ່າວມານັ້ນ ເປັນຕົ້ນວ່າ ຜາສາດຫີນ, ກູ່ຫີນ, ກຳແພງຫີນ, ສະຫີນ ລ້ວນແຕ່ເປັນສີມືຂອງພວກຂອມບູຮານທັງມວນ.

- ຕົວອັກສອນ ແລະ ພາສາ ທີ່ມີຢູ່ສີລາເສກເກົ່າໆ ກໍ່ແມ່ນອັກສອນຂອມອັນດຽວກັນກັບຂອງພວກອິນເດຍບູຮານ.

- ພາສາເວົ້າຂອງຄົນທ້ອງຖິ່ນເດີມ ເຊັ່ນ ສ່ວຍ, ຂະມຸ (ລາວເທິງ), ຂະແມ, ມະລາຍູ ແລະ ມອນ ມີສຳນຽງເປັນອັນດຽວກັນ. ຕົວຢ່າງ ພາສາທີ່ໃຊ້ຝຶກຊ້າງເປັນຕົ້ນ ພວກສ່ວຍ, ຂະມຸ, ມອນ, ຂະແມ ແລະ ມະລາຍູ ຍັງໃຊ້ພາສາດຽວກັນຢູ່.

ທັດສະນະນີ້ ຍັງໃຫ້ຄວາມເຫັນອີກວ່າ ຊົນຊາດຂອມນີ້ ແມ່ນຊົນຊາດແຂກອິນເດຍບູຮານ ຊຶ່ງທຸກວັນນີ້ ໄດ້ກັບກາຍເປັນ ຂະແມ, ມອນ, ເມັງ, ລາວເທິງ, ມະລາຍູ.

ຖານຢູ່ເນສຸວັນນະພູມປະເທດຕອນເໜືອ ກ່ອນພວກຂອມ ຄືຕັ້ງແຕ່ເມືອງລົບບູລີຂຶ້ນໄປເຖິງອານາຈັກຊຽງແສນ ຕໍ່ແດນເມືອງຢູນານຂອງຈີນທຸກວັນນີ້. ພວກລົວະເປັນຊາດທີ່ບໍ່ມີຄວາມຈະເລີນເທົ່າທຽມພວກຂອມ ດັ່ງນັ້ນ ເມື່ອພວກຂອມແຜ່ອຳນາດຂຶ້ນມາທາງເໜືອ ພວກຂອມຈຶ່ງຍາດເອົາດິນແດນຂອງພວກລະວ້າໄປໝົດ ພວກລະວ້າຈຶ່ງເສື່ອມສູນລົງ ກາຍເປັນພົນລະເມືອງຂອງພວກຂອມ. (ບາງທັດສະນະກໍໃຫ້ຄວາມເຫັນວ່າ ຊົນຊາດລະວ້ານີ້ ກໍແມ່ນຂອມບູຮານນັ້ນເອງ).

ຊົນຊາດມອນ

ຊົນຊາດມອນ ກໍແມ່ນຊົນຊາດໜຶ່ງທີ່ເຄີຍມີອຳນາດຢູ່ໃນເຂດແຄວັນສຸວັນນະພູມ ຄຽງຄູ່ກັບຊົນຊາດຂອມ. ໃນພົງສາວະດານລາວ ຂອງມະຫາສິລາ ວີລະວົງ ໃຫ້ຄວາມເຫັນວ່າ ຊົນຊາດຂອມ ທຸກວັນນີ້ໄດ້ກັບກາຍເປັນ ຂະແມ, ມອນ, ເມັງ, ຂະມຸ, ມະລາຍູ ຈາກຄວາມເຫັນດັ່ງກ່າວ ມັນກໍໝາຍຄວາມວ່າ ມອນແມ່ນສືບເຊື້ອສາຍມາຈາກຂອມ ແລະ ກ່ອນນັ້ນ ມອນກໍແມ່ນຂອມນັ້ນເອງ. ຕາມການຄົ້ນຄວ້າຂອງນັກປະຫວັດສາດຊາວອັງກິດ ຊື່ ຣິສ ເດວິດ (Rhys Davis) ໄດ້ໃຫ້ຄວາມເຫັນວ່າ ສຸວັນນະພູມປະເທດນັ້ນ ໝາຍເອົາປະເທດຣາມັນ (ມອນ) ຄືເຂດເມືອງທົ່ງສາວະດີ ລົງໄປຈົນຮອດແຫລມມະລາຍູ. ຈາກຄຳເຫັນນີ້ ຊີ້ໃຫ້ເຫັນວ່າ ຊົນຊາດມອນ ມີອຳນາດຢູ່ທາງພາກຕາເວັນຕົກຂອງສຸວັນນະພູມ ແລະອາດເຊື່ອໄດ້ວ່າ ອານາຈັກທະວາຣາວະດີນັ້ນຄືອານາຈັກຂອງພວກມອນບູຮານ. ຫລັກຖານອັກຢ່າງໜຶ່ງທີ່ເຊື່ອວ່າທະວາຣາວະດີເປັນອານາຈັກຂອງພວກມອນນັ້ນ ກໍໄດ້ແກ່ ເສົາຫີນອັກສອນຈາລຶກ ຊຶ່ງນັກບູຮານຄະດີໃຫ້ຊື່ອັກສອນທີ່ຈາລຶກເທິງເສົາຫີນດັ່ງກ່າວອັກສອນມອນບູຮານ.

ໃນສະຕະວັດທີ່ 11 ຣາມັນ ຫລື ມອນ ຍັງຄົງໂຕເປັນປະເທດ, ແຕ່ພາຍຫລັງພະມ້າເຂົ້າມາບຸກຍຶດ ມອນກໍໄດ້ກາຍເປັນສ່ວນໜຶ່ງຂອງພະມ້າ. ມາຮອດປັດຈຸບັນ ຊົນຊາດມອນເປັນຊົນຊາດສ່ວນນ້ອຍໃນປະເທດພະມ້າ ແລະ ໄທ (ຊົນຊາດມອນໃນພະມ້າ ມີປະມານ 6 ແສນຄົນ, ຢູ່ໃນປະເທດໄທ ມີປະມານ 1 ແສນຄົນ).

4. ຮ່ອງຮອຍວັດທະນະທຳສະໄໝບູຮານໃນສຸວັນນະພູມ

ອີງຕາມຄຳພີມະຫາວົງຂອງລັງກາ ໄດ້ກ່າວໄວ້ວ່າ ເມື່ອປີ 307 ກ່ອນ ຄ.ສ. ພະເຈົ້າອະໂສກມະຫາລາດ ກະສັດຜູ້ຍິ່ງໃຫຍ່ໃນອິນເດຍ ໄດ້ທຳການເຜີຍແຜ່ພຸດທະສາສະໜາເປັນການໃຫຍ່ ໂດຍໄດ້ຈັດສົ່ງສະມະນະທູດ ໄປຍັງປະເທດຕ່າງໆເຖິງ 9 ສາຍ. ສາຍໜຶ່ງມາທາງສຸວັນນະພູມປະເທດ ຊຶ່ງມີພະໂສນະເຖລະ ແລະ ພະອຸດຕະລະເຖລະເປັນຜູ້ມາເຜີຍແຜ່. ດັ່ງນັ້ນ ຊົນຊາດມອນ ຊຶ່ງໄດ້ເປັນໃຫຍ່ຢູ່ໃນດິນແດນພາກຕາເວັນຕົກຂອງສຸວັນນະພູມ ຈຶ່ງໄດ້ຮັບເອົາອິດທິພົນທາງດ້ານວັດທະນະທຳຈາກອິນເດຍໂດຍສະເພາະແມ່ນພຸດທະສາສະໜາ.

ຮ່ອງຮອຍວັດທະນະທຳບູຮານທີ່ໄດ້ຮັບຈາກອິນເດຍ ໄດ້ສະແດງອອກໃນບູຮານວັດຖຸທີ່ໄດ້ປະດິດຂຶ້ນໃນສະໄໝກ່ອນ ຄ.ສ. 143 ປີ ເປັນຕົ້ນແມ່ນ ທາດເຈດີ, ຫີນກາທຳມະຈັກ, ຮອຍພະບາດ ແລະ ພະພຸດທະຮູບ. ນອກຈາກນັ້ນ ຍັງມີເສົາຫີນອັກສອນຈາລຶກຂອງມອນບູຮານນຳອີກ. ວັດຖຸບູຮານເຫລົ່ານີ້ ມີຢູ່ທີ່ນະຄອນປະຖົມ ປະເທດໄທປັດຈຸບັນ.

II. ວ່າດ້ວຍຕົວອັກສອນມອນ

ໃນຄັ້ງທຳອິດ ຊົນຊາດມອນຄັງບໍ່ທັນມີຕົວອັກສອນໃຊ້ເຂົ້າໃນການບັນທຶກຂີດຂຽນເທື່ອ. ພາຍຫລັງໄດ້ຮັບເອົາພຸດທະສາສະໜາ ມາເປັນສາສະໜາປະຈຳຊາດຂອງຕົນແລ້ວ, ເຂົາເຈົ້າກໍໄດ້ນຳເອົາອັກສອນຄຣິນ ຫລື ປາລີ ທີ່ໃຊ້ຂຽນຄຳພີພະໄຕປິດົກໃນສະໄໝພະເຈົ້າອະໂສກມະຫາລາດ ຊຶ່ງແມ່ນພະໂສນະເຖລະ ແລະ ອຸຕະລະເຖລະມາເຜີຍແຜ່ນັ້ນ ໃຊ້ເຂົ້າໃນການບັນທຶກຂອງຕົນ. ຕໍ່ມາເຂົາເຈົ້າຈຶ່ງໄດ້ດັດແປງມາເປັນອັກສອນຂອງຕົນເອງ ຊຶ່ງເອີ້ນວ່າ " ອັກສອນມອນ ".

໑. ອັກສອນມອນບູຮານສະໄໝເກະວາຣາວະດີ- ສະຕະວັດທີ ໖


ເຍ ທຳ ມາ ເຫ ຕຸ ປະ ພະ ວາ


ເຕ ພັງ ເຫ ຕຸງ ຕະ ຖາ ຄະ ໂຕ


ເຕ ສັນ ຈະ ໂຍ ນິ ໂຣ ໂທ


ເອ ວັງ ວາ ທີ ມະ ຫາ ສະ ມະ

໒. ອັກສອນມອນໃນສະໄໝຕໍ່ມາ ແລະໃຊ້ໃນປັດຈຸບັນ.

ສະຫລະລອຍ ຫລື ສະຫລະເຕັມຕົວ


ອະ ອາ ອິ ອີ ອຸ ອູ ເອ ໄອ ໂອ ເອົາ ອັງ ອະ

ສະຫລະຈົມ ຫລື ສະຫລະທີ່ໃຊ້ປະສົມກັບພະຍັນຊະນະ (ຍົກເວັ້ນພະຍັນຊະນະ ອ)

xາ xິ xີ xຸ xູ ເx ໄx ໂx ເxົາ ອັງ ອະ

ພະຍັນຊະນະ



III. ວ່າດ້ວຍອັກສອນພະມ້າ

ພາຍຫລັງຊົນຊາດພະມ້າເຂົ້າມາຢູ່ປົນກັບຊາດມອນແລ້ວ, ເຂົາເຈົ້າກໍໄດ້ຮັບເອົາອິດທິພົນທາງດ້ານວັດທະນະທຳຈາກມອນ ໂດຍສະເພາະແມ່ນບັນຖືພຸດທະສາສະໜາ, ຕົວອັກສອນມອນທີ່ໃຊ້ບັນທຶກຄຳພີດີກາທາງພຸດທະສາສະໜາ ກໍຖືກພະມ້ານຳໃຊ້, ຕໍ່ມາຈຶ່ງໄດ້ດັດແປງມາເປັນຕົວອັກສອນພະມ້າ. ເມື່ອເອົາອັກສອນທັງສອງຢ່າງນີ້ມາສົມທຽບໃສ່ກັນແລ້ວ ເຫັນວ່າຄ້າຍຄືກັນຫລາຍ, ມີແຕ່ບາງຕົວເທົ່ານັ້ນ ທີ່ຜິດແຜກແຕກຕ່າງກັນ.

※ ຕົວອັກສອນພະມ້າທີ່ນຳໃຊ້ໃນປັດຈຸບັນ

ສະຫລະລອຍ



ສະຫລະຈົມ

ຄຳຖາມ

1. ຊົນຊາດບູຮານທີ່ດຳລົງຊີວິດຢູ່ດິນແດນສຸວັນນະພູມກ່ອນແມ່ນຊົນຊາດໃດ ?
2. ຮ່ອງຮອຍວັດທະນະທຳສະໄໝບູຮານໃນສຸວັນນະພູມມີຫຍັງແດ່ ?
3. ຕົວອັກສອນມອນນີ້ເຄົ້າກຳເນີດມາຈາກອັກສອນໃດ ? ດ້ວຍສາເຫດໃດ ຈຶ່ງພາໃຫ້ເກີດມີອັກສອນມອນ ?

ບົດທີ 9

ວ່າດ້ວຍຕົວອັກສອນຂອມ

I. ຊົນຊາດຂອມ ແລະ ຮ່ອງຮອຍວັດທະນະທຳອັນຮຸ່ງເຮືອງ

໑. ຊົນຊາດຂອມ

ຂອມ ຫລື ຂະແມ (Khmer) ແມ່ນຊົນຊາດທີ່ເກົ່າແກ່ຊົນຊາດໜຶ່ງ ຊຶ່ງມີອິດທິພົນຢູ່ສຸວັນນະພູມມາແຕ່ເຫິງນານແລ້ວ. ນັກຊົນຊາດວິທະຍາ ໄດ້ຈັດຂອມ ຫຼືຂະແມນີ້ ເຂົ້າໃນຊົນຊາດທີ່ປາກພາສາໝວດມອນ-ຂະແມ ຫລື ເອີ້ນອີກຢ່າງໜຶ່ງວ່າ ອັອດສະໂຕຣ-ອາເຊຍຕິກ (Austro-Asiatic). ກ່ອນໜ້າ ທີ່ຂອມຈະເຂົ້າມາເປັນເຈົ້າຂອງທ້ອງຖິ່ນແຫ່ງນີ້ ສຸວັນນະພູມ ຫລື ແຫລມອິນດູຈີນໃນສະໄໝຍຸກຫີນປູນໃໝ່ (Neolithic period) ເປັນດິນແດນຂອງຊົນຊາດເດີມຂອງພວກເງາະ (proto-Melanasian) ແລະ ຊົນຊາດເດີມຂອງພວກອິນໂດເນຊຽນ (proto-Malay). ເມື່ອຂອມອົບພະຍົບເຂົ້າມາເຖິງລ່ອງແມ່ນ້ຳຂອງ ກໍໄດ້ປະເຊີນໜ້າກັບຊົນຊາດຕ່າງໆໃນແຖບນີ້ ຊຶ່ງເປັນຊົນຊາດເດີມໃນຕະກູນອິນໂດເນຊຽນ ,ຊຶ່ງໄດ້ແກ່ ພວກຈາມ ພວກຣະແດ ແລະ ຈຣາຍເປັນຕົ້ນ (ສອງພວກຫລັງນີ້ ຄືແມ່ນພວກລະວ້າ). ຂອມກໍໄດ້ປະທະ ແລະ ໄດ້ເປັນໃຫຍ່ເໜືອພວກເຫລົ່ານີ້. ໃນໄລຍະຕໍ່ມາ ປະມານ 2000 ປີ ລ່ວງມາແລ້ວ ມີຊາວອິນເດຍອົບພະຍົບກັນເຂົ້າມາໃນກຳປູເຈຍເປັນຫລາຍຄັ້ງຫລາຍຄາວ ແລ້ວຊາວອິນເດຍເຫລົ່ານີ້ ກໍໄດ້ປະສົມກັບຊົນຊາດຂອມທັງໃນເຊື້ອຊາດ ແລະ ວັດທະນະທຳ.

ຊົນຊາດຂອມແຕ່ເດີມນັ້ນຢູ່ໃສ ? ມີ 2 ທັດສະນະ ທີ່ເວົ້າກ່ຽວກັບບັນຫານີ້. ທັດສະນະແຕ່ເກົ່າເວົ້າວ່າເມື່ອຫລາຍພັນປີມາແລ້ວ ຊົນຊາດຂອມໄດ້ອົບພະຍົບຈາກອິນເດຍ ເຂົ້າມາທາງທິດຕາເວັນຕົກສຽງເໜືອຂອງສຸວັນນະພູມ ເພາະຍັງມີຊົນຊາດພື້ນເມືອງທີ່ເວົ້າພາສາໝວດມອນ-ຂະແມ ຮຽກວ່າ ພວກມຸນດະ (Munda) ເຫລືອຄ້າງໃນປະເທດອິນເດຍຢູ່. ສາເຫດທີ່ພາໃຫ້ພວກຂອມອົບພະຍົບມາຢູ່ສຸວັນນະພູມນັ້ນ, ໃນປຶ້ມພົງສາວະດານລາວ ຂອງມະຫາສິລາ ວີລະວົງ ໄດ້ຊຽນໄວ້ວ່າ : ພວກຂອມໄດ້ພາກັນເຂົ້າມາຕັ້ງຖິ່ນຖານຢູ່ໃນສຸວັນນະພູມປະເທດນີ້ ກ່ອນສະໄໝພຸດທະການຄືກ່ອນ 2500 ປີມາແລ້ວ, ແຕ່ທີ່ອົບພະຍົບມາຫລາຍທີ່ສຸດນັ້ນ ແມ່ນສະໄໝຂອງພະເຈົ້າອະໂສກມະຫາລາດ ຊຶ່ງໄດ້ຂຶ້ນສະເຫວີຍລາດຢູ່ເມືອງປາຕະລິບຸດ ໃນລະຫວ່າງປີ 325-314 ກ່ອນ ຄ.ສ. ໃນສິລາເລກຂອງພະເຈົ້າອະໂສກມະຫາລາດ ໄດ້ຈາລຶກໄວ້ວ່າ " ເມື່ອອະໂສກລາຊະກຸມມານຂຶ້ນສະເຫວີຍລາຊະສົມບັດເປັນເຈົ້າແຜ່ນດິນໃນນະຄອນປາຕະລິບຸດໄດ້ 1 ປີ ພະອົງໄດ້ຍົກທັບຫລວງລົງມາຕີເອົາປະເທດກະລິງຄະລັດ ອັນຢູ່ທາງໃຕ້ ໃນການສົງຄາມຄາວນີ້ ຊາວປະເທດກະລິງຄະລັດຖືກຂ້າຕາຍຫລາຍແສນຄົນ ສ່ວນທີ່ຖືກຈັບເປັນຊະເລີຍກໍຫລາຍແສນຄົນ "ຍ້ອນໄພສົງຄາມດັ່ງກ່າວພວກພື້ນເມືອງອິນເດຍພາກໃຕ້ ຈຶ່ງໄດ້ອົບພະຍົບເຂົ້າມາຢູ່ໃນສຸວັນນະພູມເປັນການໃຫຍ່.

ສ່ວນທັດສະນະໃໝ່ໃຫ້ຄວາມເຫັນວ່າ ຊົນຊາດຂອມ ແຕ່ດັ້ງເດີມຢູ່ທາງທິດຕາເວັນອອກຂອງແຫຼມອິນດູຈີນ.

໒. ຮ່ອງຮອຍວັດທະນະທຳອັນຮຸ່ງເຮືອງຂອງຂອມ

ເມື່ອປະມານ ຄ.ສ. 57 ສາສະໜາພາມອັນເປັນລັດທິສາສະໜາອັນເກົ່າແກ່ຂອງພວກອິນເດຍ

ໄດ້ແຜ່ຜາຍເຂົ້າມາທາງພາກໃຕ້ຂອງກຳປູເຈຍ ໂດຍແມ່ນພາມຜູ້ໜຶ່ງເຊິ່ງມີນາມວ່າ "ໂກນທັນຍະ" ເປັນຜູ້ນຳມາ. ໂກນທັນຍະພາມໄດ້ແຕ່ງດອງກັບລູກສາວຂອງພະຍາຂອມ, ພາຍລຸນມາເລີຍໄດ້ເປັນກະສັດຂອງພວກຂອມ ແລະ ສືບເຊື້ອສາຍຕໍ່ໆກັນມາ. ດ້ວຍເຫດດັ່ງກ່າວ ສາສະໜາພາມ ຈຶ່ງຈະເລີນຮຸ່ງເຮືອງໃນດິນແດນຂອງຂອມນັບແຕ່ນັ້ນມາ.

ຕໍ່ມາ ໃນລະຫວ່າງ ຄ.ສ. 417 ພະພິກຂຸຊາວກັດສະມີຣ໌ແຫ່ງອິນເດຍເໜືອ ໄດ້ນຳເອົາສາສະໜາພຸດລັດທິມະຫາຍານ ພ້ອມດ້ວຍຄຳພີພະໄຕປີດົກທີ່ຂຽນດ້ວຍອັກສອນສັນສະກິດ ມາເຜີຍແຜ່ໃນເກາະຊະວາ ເກາະສຸມາຕຣາ. ຈາກນັ້ນ ຈຶ່ງໄດ້ແຜ່ເຂົ້າສູ່ແຫລມອິນດູຈີນ, ດ້ວຍເຫດນັ້ນ ຊົນຊາດຂອມ ຊຶ່ງມີອຳນາດຢູ່ທາງຕອນໃຕ້ຂອງສຸວັນນະພູມ ຈຶ່ງໄດ້ນັບຖືສາສະໜາພາມ ແລະສາສະໜາພຸດລັດທິມະຫາຍານຄວບຄູ່ກັນໄປ. ສອງສາສະໜານີ້. ລ້ວນແຕ່ບັນທຶກຄຳພີຂອງຕົນດ້ວຍພາສາແລະອັກສອນສັນສະກິດ.

ນອກຈາກສາສະໜາແລ້ວ, ຂອມຍັງໄດ້ຮັບອິດທິພົນທາງດ້ານສິນລະປະຈາກອິນເດຍອີກ. ສະຖາປັດຕະຍະກຳຂອງຂອມໃນຂັ້ນຕົ້ນ ມີລັກສະນະໃກ້ຄຽງກັບສາສະນະສະຖານທາງພາກເໜືອຂອງອິນເດຍຫລາຍ.

ມາຮອດ ຄ. ສ. 857 ພະເຈົ້າໄຊຍະວະຣະມັນ ທີ 3 ໄດ້ສ້າງຜາສາດຫີນນະຄອນທົມຂຶ້ນ ເພື່ອເປັນບ່ອນປະດິດສະຖານຮູບພະອິສວນ ສຳລັບໄຫວ້ບູຊາຕາມລັດທິສາສະໜາພາມ. ມາຮອດປີ 1057 ກະສັດຂອມອີກອົງໜຶ່ງ ເຊິ່ງມີນາມວ່າ **ສຸຣິຍະວະຣະມັນ** ທີ 2 ໄດ້ສ້າງຜາສາດຫີນນະຄອນວັດຂຶ້ນ ຕາມລັດທິສາສະໜາພາມເຊັ່ນດຽວກັນ. ໃນໄລຍະຕັ້ງແຕ່ ຄ. ສ. 857 ເຖິງ ຄ. ສ. 1057 ຊຶ່ງເປັນເວລາດົນເຖິງ 200 ປີນັ້ນ ມັນເປັນເວລາທີ່ຊົນຊາດຂອມມີອຳນາດຮຸ່ງເຮືອງຢູ່ໃນສຸວັນນະພູມ, ໃນເວລານັ້ນຂອມມີອຳນາດຂຶ້ນໄປຮອດພາກເໜືອ (ອານາຈັກໂຍນົກ) ຊຶ່ງໄດ້ເຮັດໃຫ້ຊົນຊາດລະວ້າ ແລະຊົນຊາດມອນອ່ອນແອລົງ. ອິດທິພົນທາງວັດທະນະທຳອັນຮຸ່ງເຮືອງຂອງຂອມກໍໄດ້ແຜ່ຂະຫຍາຍໄປທົ່ວສຸວັນນະພູມ.

ມາຮອດກາງສະຕະວັດທີ 12 ສາສະໜາພຸດລັດທິຫີນະຍານໄດ້ເຂົ້າມາສູ່ຕອນໃຕ້ຂອງດິນແດນສຸວັນນະພູມ ໂດຍໄດ້ມາຈາກປະເທດລັງກາ.

II. ປະຫວັດຕົວອັກສອນຂອມ

ນັບຕັ້ງແຕ່ສະຕະວັດທີ 1 ເຖິງທີ 8 ຂອມມີອິດທິພົນຢູ່ທາງພາກໃຕ້ຂອງສຸວັນນະພູມ, ສ່ວນມອນມີອິດທິພົນຢູ່ທາງພາກຕາເວັນຕົກ. ວັດທະນະທຳທາງດ້ານພາສາ ແລະ ຕົວອັກສອນທີ່ຫລັ່ງໄຫລເຂົ້າມາສູ່ສຸວັນນະພູມນັ້ນ ເວົ້າລວມແລ້ວ ມີພາສາປາລີ- ສັນສະກິດ ແລະ ຕົວອັກສອນພຣາມີ. ຕົວອັກສອນພຣາມີທີ່ແຜ່ເຂົ້າມາສຸວັນນະພູມນັ້ນ ໄດ້ແຍກອອກເປັນ 2 ປະເພດຄື ອັກສອນຄຣົນ(ບາລີ) ແລະສັນສະກິດ. ອັກສອນຄຣົນ(ບາລີ) ຮູບຮ່າງຕົວມົນ ມີບົດບາດອິດທິພົນຢູ່ເກາະລັງກາ ແລະປະເທດມອນ. ສ່ວນອັກສອນສັນສະກິດຮູບຮ່າງຕົວລ່ຽມ ມີບົດບາດອິດທິພົນຢູ່ກຳປູເຈຍ.

ອີງຕາມແຜ່ນສີລາເລກສະໄໝພູນັນ (ພະນົມ) ປະມານສະຕະວັດທີ 2 ຊຶ່ງຄົ້ນພົບຢູ່ ໂວກັນ ພາກໃຕ້ຂອງກຳປູເຈຍ, ນັກບູຮານຄະດີຖືວ່າ ແຜ່ນສີລາເລກດັ່ງກ່າວມີອາຍຸເກົ່າແກ່ກວ່າໝູ່ໃນພາກພື້ນອາຊີອາຄະເນ. ເມື່ອເອົາຕົວອັກສອນໃນແຜ່ນສີລາເລກນັ້ນ ໄປລົມທຽບກັບຕົວອັກສອນສັນສະກິດສະໄໝລາຊະວົງປັນລະວະແລ້ວ ເຫັນໄດ້ວ່າຮູບຕົວອັກສອນທັງສອງຢ່າງນັ້ນ ບໍ່ຕ່າງກັນຈັກໜ້ອຍເລີຍ. ພາຍລຸນມາ ອັກສອນ

ໃນສີລາເລກດັ່ງກ່າວ ກໍຖືກດັດແປງເທື່ອລະເລັກລະນ້ອຍ ຈາກແບບຈາກແບບອິນເດຍມາເປັນແບບອັກສອນຂອມ ແລ້ວຄ່ອຍໆທັນປຸ່ງມາເປັນອັກສອນກາປູເຈຍປັດຈຸບັນ.

ສະນັ້ນ ຈຶ່ງຖືເອົາຕາມແຜ່ນສີລາເລກນີ້ ເປັນຫລັກຖານທີ່ສະທ້ອນໃຫ້ພວກເຮົາເຫັນໄດ້ຄາວອະດີດວ່າຂອມ ຫລືຂະແມນີ້ ມີອັກສອນໃຊ້ຕັ້ງແຕ່ສະຕະວັດທີ 1- 2 ພັນ ສິລະປະວັດທະນະທຳສັນສະກິດກໍໄດ້ມາມີອິດທິພົນຢູ່ກາປູເຈຍຕັ້ງແຕ່ຄາວນັ້ນ. ເຖິງສະຕະວັດທີ 5 ເຈົ້າເທວານີກະປົກຄອງຢູ່ ລິງຄະບັນພົດ (ແຂວງກຳປົງທົມປັດຈຸບັນ) ມີສີລາເລກຢູ່ບໍລິເວນນີ້ ຊຶ່ງສະແດງໃຫ້ເຫັນວ່າ ຕົວສັນສະກິດທີ່ຈາລຶກໃນແຜ່ນຫີນນັ້ນ ມີລັກສະນະຄ້າຍຄື ຕົວອັກສອນສັນສະກິດສະໄໝລາຊະວົງປັນລະວະຂອງອິນເດຍ ແລະ ຍັງຖືວ່າເປັນສີລາເລກແຜ່ນທຳອິດຂອງສະໄໝເຈນລາ.

໑. ຮູບຕົວອັກສອນຂອມສະໄໝສະຕະວັດທີ ໗

<u>ສະຫລະ</u>



<u>ພະຍັນຊະນະ</u>



lard SAVANG PAN'AVA

KHON In DIA

໔. ຕົວອັກສອນຂອມສະໄໝເຈນລາ

ອີງຕາມສິລາເລກປາອີງ, ວຽນກັນເຕນ, ເຊລຳເພົາ ໃນແຂວງກຳປົງທົມບອກໃຫ້ຮູ້ອີກ ໃນຕົ້ນສະຕະວັດທີ 7 (ສະໄໝເຈນລາ) ລັດຊະການຂອງເຈົ້າພະວະວໍລະມັນ ປະເທດຂະແມໄດ້ຮັບສິລະປະວັດທະນະທຳອິນເດຍຄົບຖ້ວນແລ້ວ ເພາະໃນສະໄໝນັ້ນ ຂະແມມີຄຳພີມະຫາພາຣະຕະ, ຣາມາຍະນະ ແລະຄຳພີປຸຣານະຢ່າງດຽວກັບອິນເດຍ ໂດຍສະເພາະແລ້ວ ແມ່ນມີຄຳພີໄຕຣເພດຂອງພຣາມັນນະ ແລະ ອຸປະນິສັດນຳອີກ. ສະໄໝດັ່ງກ່າວ ມີພາມຄົນໜຶ່ງຊື່ວ່າ ໂສມະສໍລະມັນ ເປັນນັກປາດໄດ້ແຕ່ງດອງກັບນ້ອງສາວຂອງພະວະວໍລະມັນ. ຕໍ່ມາທ່ານໄດ້ສ້າງຜາສາດປາອີງໄວ້ ເພື່ອເປັນບ່ອນປະດິດສະຖານຮູບພະອິສວນ ສຳລັບໄຫວ້ ແລະບູຊາຕາມລັດທິສາສະໜາພາມ.

ອີງຕາມສິລາເລກທັນໄຊ ແຂວງກຳປົງຈາມ ພວກເຮົາສາມາດສຶກສາອັກສອນສະໄໝເຈນລາໄດ້ ແລະສາມາດສັງເກດເຫັນວ່າ ຮູບຊົງຂອງຕົວອັກສອນສະໄໝດັ່ງກ່າວນີ້ ແມ່ນຄືກັນກັບຕົວອັກສອນທີ່ມີຢູ່ໃນຜາສາດປານະມາດຂອງອິນເດຍ. ໃນສິລາເລກນັ້ນໄດ້ຈາລຶກຊື່ ພະວະວໍລະມັນ ສະນັ້ນ ນັກປາດທາງດ້ານອັກສອນສາດຈຶ່ງບອກໄວ້ວ່າ ເປັນອັກສອນຂອມສະໄໝເຈນລາ ໃນຕົ້ນສະຕະວັດທີ 7 (ຄ.ສ. 613).

✦ ຮູບຕົວອັກສອນຂອມທີ່ຈາລຶກໃນສິລາເລກ ທັນໄຊ ສະໄໝເຈນລາ



ຄຳແປ : *ຊະໂຍ ພະອິສວນທີ່ມີຫົວເຊິ່ງປະດັບດ້ວຍມົງກຸດຄືພະຈັນ ຄຳໝູນພະຄົງຄາທີ່ມີຢາດນ້ຳຕົກມາສູ່ສວນພະເນດແຫ່ງນາງອຸມາ ປະກົດເໝືອນດອກໄມ້ງາມ.*

ຂໍ້ສັງເກດຕີລາຄາ :

ອີງຕາມຮູບແບບຕົວອັກສອນສະໄໝເຈນລາ ຕົ້ນສະຕະວັດທີ 7 ນີ້, ພວກເຮົາພໍຕີລາຄາໄດ້ດັ່ງນີ້: ແຕ່ສະຕະວັດທີ 1 ເຖິງທີ 5 ແຫ່ງ ຄ. ສ. ຂອມໄດ້ຮູບແບບຕົວອັກສອນຈາກອັກສອນສັນສະກິດສະໄໝລາຊະວົງປັນລະວະ ແຫ່ງປະເທດອິນເດຍ.

ມາເຖິງຕົ້ນສະຕະວັດທີ 7 ສະໄໝເຈນລາ ຮູບຕົວອັກສອນໃນສີລາເລກທັນໄຊ ແຂວງກຳປົງຈາມ ກໍຍັງຄືກັນກັບຕົວອັກສອນຢູ່ຜາລາດປາປະນາດ ແຫ່ງປະເທດອິນເດຍອີກ.

ຖ້າເຮົາເບິ່ງຮູບຕົວຈິງຂອງອັກສອນແລ້ວ ແມ່ນມີລັກສະນະຕົວມົນ ຄ້າຍຄືກັບອັກສອນມອນບູຮານ (ໃຫ້ສົມທຽບເບິ່ງລະຫວ່າງອັກສອນມອນບູຮານສະໄໝທະວາຣາວະດີ ກັບອັກສອນຂອມສະໄໝສະຕະວັດທີ 6 ແລະ ສະໄໝເຈນລາ). ສະນັ້ນຕົວມົນແມ່ນຕົວອັກສອນປາລີ, ທາງລັງກາ ແລະມອນນຳມາໃຊ້, ຕໍ່ມາສົ່ງຜົນສະທ້ອນເຖິງຂອມ. ອັກສອນແບບນີ້ ຢູ່ທາງອິນເດຍເອີ້ນວ່າ ຄຣິນຖ໌.

ສະນັ້ນ ອັກສອນລັງກາ, ມອນບູຮານ ແລະ ຂອມ ຈຶ່ງມີຮູບລັກສະນະໃກ້ຄຽງກັນ, ແຕ່ຄຳລັບໃນສີລາເລກນັ້ນ ແມ່ນພາສາສັນສະກິດ. ສ່ວນຮູບແບບຕົວໜັງສືໂລດແມ່ນຕົວມົນແບບປາລີ ແລະມີຕົວລ່ຽມສັນສະກິດປົນຢູ່ນຳ. ເຊື່ອວ່າ ອັກສອນແບບນີ້ ມີຢູ່ຫລາຍບ່ອນໃນສຸວັນນະພູມ ທາງຂະແມເອີ້ນວ່າ ອັກສອນສະໄໝເຈນລາ, ຢູ່ທາງເມືອງໄທ ແລະເມືອງລາວ ເອີ້ນວ່າ ອັກສອນມອນບູຮານ. ເມືອງລາວອີງຕາມສີລາເລກໄດ້ຈາກບ້ານທ່າລາດ ເມືອງແກ້ວອຸດົມ ແຂວງວຽງຈັນ ນັກປາດຝະລັ່ງເອີ້ນວ່າ ອັກສອນມອນບູຮານ. ຢູ່ທາງເມືອງໄທ ທີ່ນະຄອນປະຖົມເອີ້ນອັກສອນທີ່ມີຮູບຊົງຄືກັນນີ້ວ່າ ອັກສອນມອນບູຮານສະໄໝທະວາຣາວະດີສະຕະວັດທີ 6 ຊຶ່ງໄດ້ແບບມາຈາກອັກສອນຄຣິນແຫ່ງອິນເດຍໃຕ້.

ຄ. ຕົວອັກສອນຂອມສະໄໝຕໍ່ມາ

ມາຮອດສະຕະວັດທີ 12 (ຄ.ສ.1155) ຂອມ ຫລື ຂະແມ ໄດ້ຮັບເອົາພຸດທະສາສະໜາລັດທິຫີນະຍານ (ນິກາຍເຖລະວາດ) ທີ່ໄດ້ສັງຄາຍະນາໃໝ່ຈາກປະເທດລັງກາ. ພະໄຕປິດົກຂອງລັດທິຫີນະຍານນີ້ ບັນທຶກດ້ວຍພາສາປາລີ ແລະ ຂຽນດ້ວຍຕົວອັກສອນລັງກາ (ອັກສອນລັງກາກໍໄດ້ຮັບເຄົ້າແບບມາຈາກອັກສອນຄຣິນ (ບາລີ) ເຊັ່ນດຽວກັບອັກສອນມອນ). ເມື່ອຊາວຂະແມໄດ້ຮັບເອົາພຸດທະສາສະໜາລັງກາວົງມາເປັນສາສະໜາປະຈຳຊາດແລ້ວ, ພາສາບາລີກໍໄດ້ຖືກແຜ່ຂະຫຍາຍໄປທົ່ວກຳປູເຈຍ. ແບບຕົວອັກສອນຂອມກໍໄດ້ມີການວິວັດພັດທະນາໄປຕາມກາລະ ແລະ ສິ່ງແວດລ້ອມ, ຈາກບ່ອນນີ້ຈະເຫັນວ່າ ອັກສອນຂອມໃນສະໄໝຕໍ່ມາ ມີການປ່ຽນຮູບ ເພື່ອໃຫ້ມີລັກສະນະເອກະລັກຂອງຕົນເອງ.

ຮູບຕົວອັກສອນຂອມເມື່ອປະມານ ສະຕະວັດທີ ໑໓

ສະຫລະ

ພະຍັນຊະນະ



III. ສາຍພົວພັນລະຫວ່າງນະຄອນຊຽງທອງ ແລະນະຄອນອິນທະປັດຖາ

ອີງຕາມປະຫວັດສາດ ນັບແຕ່ຂຸນລໍໄດ້ມາສ້າງຕັ້ງເມືອງຊຽງທອງໃນສະຕະວັດທີ 6 ແລ້ວ ສາຍພົວພັນລະຫວ່າງລາວກັບຂະແມນັບມື້ນັບຂະຫຍາຍຕົວຂຶ້ນເລື້ອຍໆ ຄືນັບແຕ່ສະຕະວັດທີ 9 ເຖິງທີ 13 ຂອງນິຄົມທີ່ພົນຢູ່ສຸວັນນະພູມ ດັ່ງມີຈຸດເດັ່ນຕໍ່ໄປນີ້ :

ສະຕະວັດທີ 9 ພະເຈົ້າໄຊຍະວະຣະມັນທີ 3 ຫລື ເຈົ້າຍະໂສວໍຣະມັນ ໄດ້ສ້າງອິນທະປັດຖານະຄອນ ຫລື ນະຄອນທົມຂຶ້ນ, ໄດ້ສ້າງຄ້າຍຄູວຽງປະຕູຫ້າສິບທີ່ມີຊື່ວ່າ ຍບໂສທະປຸຣະ ເພື່ອປ້ອງກັນສັດຕູພາຍນອກ. ຕົ້ນສະຕະວັດທີ 12 ເຈົ້າສຸລິຍະວໍລະມັນທີ 2 ຫລືພະປະທຸມສຸຣິວົງ ໄດ້ສ້າງຜາສາດນະຄອນວັດ. ຕອນປາຍສະຕະວັດທີ 12 ເຈົ້າໄຊຍະວໍລະມັນທີ 7 ໄດ້ເຄື່ອນທັບບຸດຍຶດເອົາຫລາຍບ່ອນໃນສຸວັນນະພູມ.

ເມື່ອເຖິງສະຕະວັດທີ 14 ຍ້ອນການຂັດແຍ່ງກັນພາຍໃນຂອງພວກສັກດີນາໃນເມືອງຊຽງທອງ, ເຈົ້າຟ້າງຸ່ມຈຶ່ງຖືກພັດຖິ່ນໄປຢູ່ເມືອງອິນທະປັດຖາ. ເມື່ອໃຫຍ່ມາ ພະອົງໄດ້ຮຽນວິຊາສິລະປະຍຸດ, ວິຊາພາສາ ແລະ ອັກສອນສາດໃນລາຊະສຳນັກເມືອງນັ້ນ ຊຶ່ງຕົກຢູ່ໃນສະໄໝຂອງເຈົ້ານິພັນທະບົດ, ເຈົ້າສິດທານະຣາດ ແລະ ພະສີລຳພົງລາຊາ (ຄ.ສ.1340- 1347). ໃນໄລຍະດັ່ງກ່າວ ເມືອງອິນທະປັດຖາຕົກຢູ່ໃນລະຫວ່າງເສິກສົງຄາມລຽນຕິດ ຄື ເຈົ້າອູ່ທອງ ແຫ່ງກຸງສີອະຍຸດທະຍາ ໄດ້ຍົກທັບເຂົ້າຕີປະຕູເມືອງທາງດ້ານຕາເວັນອອກໄດ້. ພະສີສຸລິໂຍໄທ ນ້ອງພະສີລຳພົງລາຊາສູ້ກັບກອງທັບໄທຈົນເສຍຊີວິດໃນສະໜາມຮົບ. ໄທຈຶ່ງເຂົ້າເມືອງໄດ້ ແລ້ວພາກັນຂົນເອົາຊັບສົມບັດຕ່າງໆໄປຢ່າງມາກມາຍກ່າຍກອງ.

ຍ້ອນເລີກສົງຄາມເຂົ້າມາຣຸກຮານນະຄອນອິນທະປັດຖາຢ່າງລຽນຕິດນີ້ເອງ ຈຶ່ງໄດ້ສ້າງບິດຮຽນຕົວຈິງໃຫ້ແກ່ເຈົ້າຟ້າງຸ່ມທີ່ເມືອງນັ້ນ ຈົນເຮັດໃຫ້ທ່ານກາຍເປັນນັກຮົບທີ່ກ້າຫານຊານໄຊ ແລ້ວຂຶ້ນມາທ້ອນໂຮມແຜ່ນດິນລາວລ້ານຊ້າງໃຫ້ເປັນເອກະພາບ. ໃນສະໄໝນີ້ເອງ ສິລະປະວັນນະຄະດີ, ພາສາບາລີ- ສັນສະກິດ, ຄຳພີດີກາທາງພຸດທະສາສະໜາໄດ້ເຂົ້າມາສູ່ລາວນັບເປັນຄັ້ງປະຫວັດສາດທີ່ສຸດ. ພະບາງເຊິ່ງເປັນມິ່ງຂວັນຂອງຊາວພຸດລາວກໍນຳເອົາມາໃນສະໄໝນັ້ນ. ສາຍສຳພັນລະຫວ່າງສອງນະຄອນໃນຄາວນັ້ນ ແມ່ນຂີດໝາຍປະຫວັດສາດອັນສຳຄັນທີ່ສຸດ ຈົນເຮັດໃຫ້ທາງກຸງສີອະຍຸດທະຍາເກງຂາມພະເດຊານຸພາບ.

ສະຕະວັດທີ 14 ນີ້ ຖືວ່າເປັນສະຕະວັດແຫ່ງສິລະປະຂະແມ ແລະ ພຸດທະສາສະໜາແບບລັງກາວົງໄດ້ເຂົ້າມາສູ່ລາວຢ່າງເປັນທາງການ. ສະນັ້ນ ຄຳພີທາງພຸດທະສາສະໜາ, ພາສາບາລີ ພະສົງສາມະເນນ ພະພຸດທະຮູບ ແລະ ຯລຯ ຈຶ່ງໄດ້ເຂົ້າມາລົງເລິກໃນປະເທດລາວເຮົາຕັ້ງແຕ່ພຸ້ນມາ. ຈາກບ່ອນນີ້ ຈຶ່ງເຮັດໃຫ້ປະເທດລາວເຮົາອຸດົມສົມບູນໄປດ້ວຍຕົວອັກສອນຕ່າງໆ ເປັນຕົ້ນ ຕົວຂອມ, ຂອມທຳ, ຕົວຂະແມ.

⊕ ຕົວຢ່າງຕົວອັກສອນຂອມທຳທີ່ຂຽນເປັນພາສາລາວ :



ຄຸນພູທ່ານມານດານີ້ ມີມາກມາຍນັກ ມີອຸປະມາດັ່ງໜຶ່ງຫ້ວງນ້ຳມະຫາສະໝຸດ ເພາະມານດາ ໄດ້ອູ້ມທ້ອງມາແລ້ວ ລ້ຽງຄັນເປັນອັນດີ ຍ່ອມອົດຊຶ່ງຂອງປັ້ງວ ຂອງເຜັດ ຂອງຮ້ອນ ມານດາໄດ້ຖະໜອມເຮົາມີອາການເປັນເຊັ່ນນີ້ ກຸມານທັງຫລາຍຈຶ່ງກຳນົດຈົດຈຳໄວ້ ແລລ້ຽງດູທ່ານເປັນການຕອບແທນໃນອະນາຄົດ ຯລຯ

✱ [illegible]

[illegible]

ອັກສອນຂອມສະໄໝປັດຈຸບັນ (ກຳປູເຈຍເອີ້ນວ່າ ຕົວມົນ ຫລື ຕົວຂອມ)

<u>ສະຫລະ</u>

អ អា ឥ ិ ឦ ី

ឧ ុ ឩ ូ ឫ ឬ

ឭ ឮ ួ េ ឯ ែ

ឱ ោ ឳ ៅ អុំ អះ

<u>ພະຍັນຊະນະ</u>

ក ខ គ ឃ ង

ច ឆ ជ ឈ ញ

ដ ឋ ឌ ឍ ណ

ត ថ ទ ធ ន

ប ផ ព ភ ម

យ រ ល វ ឝ

ឞ ស ហ ឡ អ

ຄຳຖາມ

1. ຮ່ອງຮອຍວັດທະນະທຳອັນຮຸ່ງເຮືອງຂອງຂອມມີຫຍັງແດ່ ?
2. ຕົວອັກສອນຂອມມີເຄົ້າມູນມາຈາກອັກສອນໃດ ? ຍ້ອນສາເຫດໃດ ເພິ່ນຈຶ່ງພິສູດໄດ້ວ່າຕົວອັກສອນຂອມມີເຄົ້າກຳເນີດມາຈາກອັກສອນສັນສະກິດ ?



ບົດທີ 10

ວ່າດ້ວຍຕົວອັກສອນລື້ສິບສອງປັນນາ

I. ວ່າດ້ວຍແຄວ້ນສິບສອງປັນນາ ແລະ ຊົນເຜົ່າລື້

1. ແຄ້ວນສິບສອງປັນນາ

ເມື່ອສະຕະວັດທີ 6- 7 ຊົນຊາດໄທລາວຈຳນວນໜຶ່ງໄດ້ເຄື່ອນຍ້າຍຈາກອານາຈັກໜອງແສ ລົງມາຢູ່ເມືອງຊຽງຮຸ່ງ, ຊຽງຕຸງ ແລະ ເມືອງສິງ ຊຶ່ງອານາເຂດຂອງ 3 ເມືອງນີ້ເມື່ອໂຮມເຂົ້າກັນແລ້ວ ເອີ້ນວ່າ ແຄວ້ນສິບສອງປັນນາ.

ຄຳວ່າ ສິບສອງປັນນາ ແມ່ນໝາຍເຖິງຫຍັງ ? ສິບສອງປັນນາ ແມ່ນໝາຍເຖິງພື້ນທີ່ນາ ຊຶ່ງໃຊ້ແນວເຂົ້າຫວ່ານລົງໄປເຖິງ 12.000 ຕາງ. (ກະບຸງໃຊ້ຕວງເຂົ້າເປືອກ ບັນຈຸໄດ້ 15, 5 ກິໂລກຣາມ).

ສິບສອງປັນນານີ້ ແມ່ນຊື່ແຄ້ວນໜຶ່ງໃນປະຫວັດສາດ ທີ່ເຄີຍມີອຳນາດປົກຄອງຕົນເອງປະກອບດ້ວຍ 28 ຫົວເມືອງ, ມີເມືອງຊຽງຮຸ່ງເປັນເມືອງເອກ ປະຊາຊົນທີ່ດຳລົງຊີວິດຢູ່ແຄ້ວນສິບສອງປັນນານີ້ ສ່ວນຫລວງຫລາຍແມ່ນຊົນເຜົ່າລື້ ຊຶ່ງມີເຊື້ອສາຍລາຍລ່ອງອັນດຽວກັນກັບຊົນຊາດລາວ. ປັດຈຸບັນດິນແດນສິບສອງປັນນາສ່ວນໃຫຍ່ແມ່ນຕົກຢູ່ໃນເຂດປົກຄອງຂອງ ສ.ປ.ຈີນ.

2. ຊົນເຜົ່າລື້

ໃນແຄ້ວນສິບສອງປັນນາ ມີປະຊາຊົນຫລາຍເຜົ່າອາໄສຢູ່ ເປັນຕົ້ນແມ່ນ ຊານ(ງຽວ), ເຂີນ ແລະ ລື້. ຊົນເຜົ່າເຫລົ່ານີ້ ລ້ວນແຕ່ສືບເຊື້ອສາຍມາຈາກຊົນຊາດລາວອັນດຽວກັນ. ໃນບັນດາເຜົ່າທີ່ດຳລົງຊີວິດຢູ່ນະດິນແດນແຫ່ງນີ້, ລື້ເປັນຊົນເຜົ່າທີ່ຈຳນວນ ແລະອິດທິພົນຫລາຍກວ່າໝູ່. ເມື່ອຊົນເຜົ່າລື້ເຂົ້າມາຕັ້ງຖິ່ນຖານຢູ່ສິບສອງປັນນາແລ້ວ, ຈຶ່ງເຮັດໃຫ້ເຂົາເຈົ້າໄດ້ຢູ່ໃກ້ຊິດຕິດແທດກັບຊົນຊາດມອນ-ພະມ້າ. ແລະອິດທິພົນທາງດ້ານວັດທະນະທຳຂອງມອນ-ພະມ້າກໍ່ຄ່ອຍໆຊຶມເຂົ້າເທື່ອລະເລັກລະນ້ອຍ. ດ້ວຍເຫດນັ້ນ ວັດທະນະທຳຕ່າງໆຂອງປະຊາຊົນໃນຂົງເຂດນີ້ ຈຶ່ງໄດ້ແບບຢ່າງມາຈາກມອນ-ພະມ້າໂດຍກົງ, ເຊັ່ນມີວັດວາອາຮາມ ມີພະສົງສາມະເນນບວດຮຽນຊຽນຄ່ານ ມີການເຮັດບຸນສິນກິນທານ ແລະມີຄຳພີໃບລານຕ່າງໆ.

ເວົ້າສະເພາະຊົນເຜົ່າລື້ຢູ່ໃນລາວ ກໍແມ່ນເຜົ່າໜຶ່ງທີ່ມີປະຫວັດສາດ ແລະ ສິລະປະວັທະນະທຳທີ່ກ້າວໜ້າສົມຄວນ. ນັບແຕ່ສະຕະວັດທີ 16 ເປັນຕົ້ນມາ ເຜົ່າລື້ໄດ້ມີຜູ້ນຳພາຕ່າງກັນໃນການສ້າງບ້ານແປງເມືອງ ພ້ອມກັນຕໍ່ສູ້ກັບສັດຕູຜູ້ຮຸກຮານ ເຊັ່ນ ສັກດີນາພະມ້າ, ສັກດີນາຈີນ, ສັກດີນາສະຫຍາມ ຕະຫລອດຮອດສະໄໝມີພັກນຳພາຕ້ານກັບຈັກກະພັດຝະລັ່ງ ແລະ ອາເມລິກາ. ຕົວຢ່າງ : ເຈົ້າຟ້າຊຽງແຂງ (1820), ເພຍຄຳ (1912), ເຈົ້າຟ້າລຸງຄຳ (1915), ພະຍາເມືອງກາງ, ພະຍາເຊກອງ (1945) ແລະ ຜູ້ອື່ນໆ.

ເມື່ອເວົ້າເຖິງປະຫວັດສາດແຫ່ງການຂະຫຍາຍຕົວຂອງຊົນເຜົ່າລື້ແລ້ວ ແມ່ນມີການຕິດພັນຢ່າງສະນິດແໜ້ນກັບປະຫວັດສາດແຫ່ງການຂະຫຍາຍຕົວຂອງຊາດລາວ. ຈຳນວນພົນລະເມືອງເຜົ່າລື້ໃນປັດຈຸບັນມີປະມານ 20.000 ຄົນ, ສ່ວນຫລາຍແມ່ນດຳລົງຊີວິດຢູ່ 5 ແຂວງພາກເໜືອຂອງລາວ. ສະເພາະເມືອງສິງ ແຂວງຫລວງນ້ຳທາ ເຜົ່າລື້ມີຮອດ 10 ກ່ວາຄົນ.

ເວົ້າເຖິງທາງດ້ານວັດທະນະທຳສັງຄົມ, ເຜົ່າລື້ແມ່ນມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການເຮັດທູກເຂັນຝ້າຍ ມີສິລະປະລວດລາຍທີ່ສວຍງາມ. ການເວົ້າຈາພາທີ ມີສຳນຽງສຽງອ່ອນຫວານ, ມີນິໄສຖະໜອມຖ່ອມຕົວ ຮັກແຂກບ້ານແຂກເມືອງ. ການນຸ່ງຖື່ແບບພື້ນເມືອງ ມີການປະດິດສ້າງຢ່າງລະອຽດປານີດ ແລະ ຈີບງາມ, ນັບຖືສາສະໜາພຸດ, ຫລິ້ນບຸນປີໃໝ່ສົງການ. ດ້ານສິລະປະເກົ່າແກ່ມີ : ຂັບລື້, ອ່ານໜັງສື, ດົນຕີພື້ນເມືອງແມ່ນປີ່.

II. ວ່າດ້ວຍຕົວອັກສອນລື້

ພາສາໄທລື້ ແມ່ນພາສາໜຶ່ງທີ່ສັງກັດຢູ່ໃນໝວດພາສາລາວ-ໄທ ແລະ ເປັນພາສາທີ່ມີຕົວອັກສອນເປັນເອກະລັກຂອງຕົນເອງ.

ດ້ວຍສາເຫດທີ່ວ່າ ຊົນເຜົ່າລື້ໄດ້ມາຢູ່ໃກ້ຊິດກັບຊົນຊາດມອນ-ພະມ້າ ໂດຍສະເພາະແມ່ນໄດ້ຮັບອິດທິພົນທາງດ້ານວັດທະນະທຳ ຄື ພຸດທະສາສະໜາລັດທິຫີນະຍານຈາກມອນ-ພະມ້າ. ດັ່ງນັ້ນ ຕົວອັກສອນຂອງລື້ຈຶ່ງມີລັກສະນະຄ້າຍຄືກັບອັກສອນມອນ-ພະມ້າ (ຍ້ອນໄດ້ເຄົ້າແບບມາຈາກອັກສອນມອນ-ພະມ້ານັ້ນເອງ).

ໃນໄລຍະທີ່ຊົນເຜົ່າລື້ຮັບເອົາພຸດທະສາສະໜາມາເປັນສາສະໜາປະຈຳຊາດໃໝ່ໆນັ້ນ, ບັນດາຄູບາອາຈານຢູ່ຕາມວັດວາອາຮາມໃນເຂດສິບສອງປັນນາ ແມ່ນໄດ້ໝູນໃຊ້ຕົວອັກສອນມອນ-ພະມ້າ ເຂົ້າໃນການບັນທຶກຄຳພີດີກາຕ່າງໆ. ແຕ່ໃນໄລຍະຕໍ່ມາ ຍ້ອນຄວາມຈະເລີນທາງວັດທະນະທຳ ແລະການຂະຫຍາຍຕົວທາງດ້ານທັດສະນະຄິດປະດິດສ້າງ, ຊົນເຜົ່າລື້ ຈຶ່ງໄດ້ປະດິດຕົວອັກສອນແບບຂອງຕົນເອງຂຶ້ນ ໂດຍອີງຕາມແບບຂອງມອນ-ພະມ້າເປັນຫລັກ.

ປັດຈຸບັນ ຕົວອັກສອນລື້ ມີສະເພາະຢູ່ໃນຄຳພີໃບລານຕາມວັດວາອາຮາມຕ່າງໆທາງພາກເໜືອຂອງລາວ; ບັນດາຜູ້ເຖົ້າຊາວລື້ທີ່ໄດ້ບວດຮຽນຂຽນອ່ານຢູ່ວັດ ເຂົາເຈົ້າຍັງນິຍົມໃຊ້ກັນຢູ່.

24 / VII
ຫ້າມຈຳໜ່າຍ

ຮູບຕົວອັກສອນລື້

ສະຫລະເຄົ້າ

ສະຫລະປະສົມ



×ັກ ×າຍ ×າດ ×ຽງ ×ົວ ×ັດ ×ູມ ×ວມ

×ອກ ເ×ຍ ×ົວ ×ອງ ×ັງ ×ອດ ໄ×ຍ ×ຣາ

×ັບ ແ×ວ ×ັດ ×ູກ

ພະຍັນຊະນະ

ກ ຂ ຄ ຄ ງ ຈ ສ ຊ

ຕ ຖ ດ ທ ທ ນ ບ ປ ຢ ຜ

ພ ມ ຍ ລ ຣ ວ ສ ຫ ອ ຟ

ຕົວເຟື້ອງ

ໃຊ້ດັ່ງນີ້ ໃຊ້ດັ່ງນີ້ ໃຊ້ດັ່ງນີ້

" " "

ຕົວເລກລື້

໑ ໒ ໓ ໔ ໕ ໖ ໗ ໘ ໙ ໐

ຍາມນັ້ນ ສຸລີ ແຫ່ງຜີ ຍັກບ້າ ກໍໂທະ ເດີນ ມາ ລະ ລັງ

ອາກາດ ຊຸ່ມທິນ ກາຍຂິນ ກາດກັ້ງ ສຽງ ສະໜັ່ນ ກ້ອງ ໂລກາ

ລອຍ ລະລິ່ວ ຂຸ່ມ ເວຫາ ຖັດທີ່ ສາລາ ລວງລີ່ງ ລຸ່ມໃຕ້

ສ່ອນ ກຸມມານ ທັນຍັກ ມາໃກ້ ຈິ່ງບອກ ນາງໃນ ເມື່ອນັ້ນ

ວ່າ ຍໍ່ຊ້າ ກິວເມີ ນາຍນ້ອງຊັ້ນ ຈັກຕັດ ຂາດບັ້ນ ຕາຍວາຍ

ເຈົ້າ ກຳອາວຸດ ວິດວິງ ຜັດຜາຍ ຣຳກະບອງ ນາຍ ໄກ

ຊີ ຕໍ່ໜ້າ ທັນ ຍັກເຂ ຊາດເຢັນ ໃຈບ້າ ວ່າເປັນ ສຸລາ

ກ່ອນນັ້ນ ເມື່ອ ສອງຄົນເຮົາ ແມ່ເຈົ້າ ເຊື່ອງຊັ້ນ ເດີນສອດຄັ້ນ

ກາງໄພ

ລ້ານຊ້າງ, ບ້ານໃດມີວັດມີພະສົງ ບ້ານນັ້ນແມ່ນມີຕົວອັກສອນທຳໃຊ້. ປະຊາຊົນຄົນເຖົ້າແກ່ບູຮານ ຖືວ່າຕົວທຳເປັນອັກສອນສັກສິດ ເປັນຂອງສູງ ເຂົາເຈົ້າໃຫ້ຄວາມເຄົາລົບບູຊາ ມັ້ງນໄວ້ບ່ອນສູງ, ຍ້ອນວ່າມີກົກເຄົ້າມາຈາກອັກສອນປາລີ ຊຶ່ງໃຊ້ບັນທຶກຄຳສອນຂອງພະພຸດທະເຈົ້າ. ຄູບາອາຈານໃນສະໄໝກ່ອນ. ໃຊ້ຕົວທຳນີ້ຂຽນຄຳສອນ ປັດຊະຍາ ທິດສະດີຕ່າງໆຂອງພຸດທະສາສະໜາໃສ່ໃບລານ, ຍ້ອນໃຊ້ແຕ່ຕົວອັກສອນຊະນິດນີ້ ຂຽນບັນທຶກສິນທຳທາງພຸດທະສາສະໜາ ແລະ ສູດຮຽນໃນທາງທຳ ເພິ່ນຈຶ່ງເອີ້ນອັກສອນຊະນິດນີ້ວ່າ "ຕົວທຳ".

III. ຮູບຕົວອັກສອນທຳ

- ສະຫລະ -

ພະຍັນຊະນະປະສົມ

ທງ ໜ ໝ ທຍ ຫຼ ຫວ

- ຕົວເຟື້ອງ -



- ໄມ້ -

ໄມ້ກັນ ໄມ້ກົງ

- ຕົວເລກ -



໑ ໒ ໓ ໔ ໕ ໖ ໗ ໘ ໙ ໐

IV. ເຫດຜົນທີ່ພາໃຫ້ເຊື່ອວ່າຕົວທຳດັດແປງມາຈາກອັກສອນມອນ-ພະມ້າ :

1. ຍ້ອນວ່າຕົວທຳມີລັກສະນະຄ້າຍຄືກັບຕົວອັກສອນມອນ- ພະມ້າ.

ຕົວຢ່າງ: ພະຍັນຊະນະພະມ້າ / ພະຍັນຊະນະທຳ



2. ການຊ້ອນຕົວອັກສອນກໍ່ເຮັດວິທີດຽວກັບມອນ- ພະມ້າ.

ຕົວຢ່າງ: ພະມ້າ / ທຳ



3. ອັກສອນພະມ້າ ຕົວ ຊ້ອນ ລວມເຂົ້າກັນເປັນຕົວດຽວ ຕົວທຳກໍ່ເຊັ່ນດຽວກັນ.

ຕົວຢ່າງ: ພະມ້າ / ທຳ



4. ອັກສອນພະມ້າ ເມື່ອຕົວ ေ ຊ້ອນຕົວອື່ນ ຕ້ອງແປງ ေ ເປັນ ສ່ວນຕົວທຳກໍ່ເຊັ່ນກັນ.

ຕົວຢ່າງ: ພະມ້າ 

ທຳ 

5. ອັກສອນພະມ້າ ມີສະຫລະອາຍາວ ×) ຕົວທຳກໍ່ມີເຊັ່ນກັນ.

ຕົວຢ່າງ: ພະມ້າ 

ທຳ

6. ຕາມປະຫວັດສາດສະໄໝທີ່ລາວຢູ່ອານາຈັກໜອງແສ ບໍ່ປະກົດວ່າມີຕົວທຳໃຊ້. ຕໍ່ມາຄືນລາວໄດ້ອົບພະຍົບລົງມາຢູ່ສຸວັນນະພູມ ແລະໄດ້ມາຕັ້ງພູມລຳເນົາຢູ່ໃນຂົງເຂດອິດທິພົນວັດທະນະທຳຂອງມອນ. ເມື່ອລາວມາຢູ່ໃກ້ຊິດພວກມອນ-ພະມ້າແລ້ວ ຈຶ່ງໄດ້ຮັບເອົາວັດທະນະທຳຂອງມອນ-ພະມ້າ ໂດຍສະເພາະແມ່ນພະພຸດທະສາສະໜາ ແລະ ຕົວອັກສອນທີ່ໃຊ້ບັນທຶກຄຳສອນຂອງພະພຸດທະເຈົ້າ. ໃນຂັ້ນຕົ້ນແມ່ນອົບຊາດລາວເຜົ່າລື້ໃນສິບສອງປັນນາ ແລະເຜົ່າຍວນໃນອານາຈັກລ້ານນາເປັນຜູ້ຮັບເອົາໄປກ່ອນ, ຕໍ່ມາໃນສະຕະວັດທີ 16 ອັກສອນດັ່ງກ່າວ ຈຶ່ງຖືກນຳມາດັດແປງ ແລະນຳໃຊ້ຢູ່ໃນອານາຈັກລ້ານຊ້າງ ແລະ ເອີ້ນຊື່ໃໝ່ວ່າ ອັກສອນທຳ.

ຕົວຢ່າງອັກສອນທຳທີ່ຂຽນເປັນ[illegible]



ອິ່ມເກົ່າແລ້ວ ຢ່າອິ່ມໃຫມ່ເລີງໆ ດັບວາຍ ເຖິງຈິ່ງອ້ຈ້າ ຄັນວ່າ

ຕາຍ່ຂອ້ຳພ້າ ແລ້ວລົງສູ່ ອະເວຈີ ຍິງຊາຍເຮີຍ ຮັກສາໃຫ້ໄດ້

ຮອດດອກໄມ້ ກິ່ນຄັນທາ ມຸສາວາ ຄຳວາຈາ ຕົວະລາຍລ້ຽວ

ສັບສໍ່ສ້ຽວ ໃຫ້ທ່ານຈິບຫາຍ ຄຳເປົ່າດາຍ ບໍ່ເປັນປະໂຫຍດ

ສັບສໍ່ໂທດ ໃຫ້ທ່ານຜິດກັນ ໃຈຕີບຕັນ ບໍ່ຮູ້ຄຸນທ່ານ ສຸລາເມ

ຢ່າກິນເຫຼົ້າ ຢູ່ມືອເມົາ ບໍ່ກົວ ອັນເປັນບາບ ໃຈຫຍາບຊ້າ

ບໍ່ໃຫ້ສ່ອງເຫັນ ບຸນອັນເປັນຄຸນ ແລະ ເປັນໂທດ ໃຈໂກດກ້າ

ພາໂລ ບໍ່ຟັງຄຳສຳພຸດໂທ ພະເປັນເຈົ້າ ກິນແຕ່ເຫຼົ້າ ບໍ່ກົວເກງ

ອັນເປັນບາບ ຯລຯ

26/01/2010

ບົດທີ 12

ວ່າດ້ວຍຕົວອັກສອນໄທດຳ

I. ວ່າດ້ວຍເຜົ່າໄທດຳ

ຄຳວ່າ " ໄທ " ຫລື " ໄຕ " ເປັນຄຳເວົ້າອີ່ປູ່ອີ່ປູ້ຂອງຄົນລາວມາຕັ້ງແຕ່ສະໄໝບູຮານ ມາຈາກເຄົ້າສັບ ທຽນ-ຖຽນ ແລ້ວປ່ຽນສຽງມາເປັນ ທາຍ-ຖາຍ-ໄທ-ໄຕ-ໄທ ຊຶ່ງມີຄວາມໝາຍວ່າ: "ໄທຍ໌" ຫລື "ຫລວງ" ແມ່ນຄຳດຽວກັນກັບຄຳວ່າ "ດາຍ" ຂອງພາສາຫວຽດ ຫລື ຄຳວ່າ "ຕ້າ" ໃນພາສາຈີນ. ພາຍລຸນມາ ຄຳວ່າ ໄທ ເລີຍກາຍເປັນຄຳນຳໜ້າເອີ້ນຊື່ຄົນທີ່ມາຈາກເຊື້ອສາຍລາຍລ່ອງອ້າຍລາວອັນດຽວກັນ ໂດຍແຍ່ງອອກເປັນກຸ່ມເປັນພວກຕາມເຄື່ອງນຸ່ງ, ທ້ອງຖິ່ນ, ຫ້ວຍນ້ຳລຳເຊ ຫລື ຈຸດພິເສດສະເພາະອື່ນໆ ເປັນຕົ້ນວ່າ: ໄທ, ລາວ, ໄທລື້, ໄທເຂີນ, ໄທຍວນ, ໄທດຳ, ໄທແດງ, ໄທຂາວ ...

ສຳລັບຊົນເຜົ່າໄທດຳ ກໍແມ່ນຊົນເຜົ່າໜຶ່ງ ທີ່ມີເຊື້ອສາຍອັນດຽວກັນກັບຊົນເຜົ່າລາວ, ເຂົາເຈົ້າສືບເຊື້ອສາຍມາຈາກຊົນຊາດອ້າຍລາວແຫ່ງອານາຈັກໜອງແສ, ໄດ້ເຂົ້າມາຕັ້ງຖິ່ນຖານຢູ່ເຂດເມືອງແຖງ ຫລື ແຖນ ແລະແຖບຝັ່ງແມ່ນ້ຳດຳ ມາແຕ່ສະໄໝບູຮານ.

ໃນສະຕະວັດທີ 6 ເມືອງແຖນ ຫລື ແຖງ ຖືວ່າເປັນເມືອງປະຫວັດສາດ, ເປັນເມືອງທີ່ສ້າງເງື່ອນໄຂອັນດີໃຫ້ແກ່ຊົນຊາດລາວ ມີອຳນາດຢູ່ໃນເຂດແດນສຸວັນນະພູມ, ພ້ອມກັນນັ້ນ ຍັງເປັນເມືອງທີ່ສ້າງເງື່ອນໄຂອັນສະດວກໃຫ້ແກ່ຊົນຊາດລາວໃນການສ້າງຕັ້ງອານາຈັກລ້ານຊ້າງຂົ້ນອີກນຳ.

ເປັນຫຍັງເພິ່ນຈຶ່ງເອີ້ນຊົນເຜົ່ານີ້ວ່າ ໄທດຳ ? ເພິ່ນພາກັນເອີ້ນຊົນເຜົ່ານີ້ວ່າ ໄທດຳ ກໍຍ້ອນວ່າເຂົາເຈົ້ານິຍົມນຸ່ງຫົ່ມແພ່ນແພສີດຳ, ອີກຢ່າງໜຶ່ງ ກໍຍ້ອນວ່າເຂົາເຈົ້າມັກດຳລົງຊີວິດຢູ່ຕາມຝັ່ງແມ່ນ້ຳດຳ

ຊົນເຜົ່າໄທດຳນີ້ ມີສິລະປະວັນນະຄະດີ, ພາສາຄ້າຍຄືກັບຊົນເຜົ່າໄທລາວ ແຕ່ທາງດ້ານວັດທະນະທຳ ມີບາງອັນກໍແຕກຕ່າງກັນໄປ ຍ້ອນສະພາບທາງພູມີປະເທດ ແລະເງື່ອນໄຂທາງດ້ານການເມືອງ. ດັ່ງນັ້ນ ຈຶ່ງເຮັດໃຫ້ມີຫລາຍອັນແຕກຕ່າງກັນ.

ປັດຈຸບັນ ຊົນເຜົ່າໄທດຳໃນລາວ ມີຫລາຍຢ່າງຢູ່ແຂວງຫົວພັນ, ຜົ້ງສາລີ (ພາກເໜືອ)

II. ປະຫວັດຕົວອັກສອນໄທດຳ :

ອີງຕາມພົງສາວະດານລາວສະໄໝບູຮານ, ບັນດານັກຄົ້ນຄວ້າດ້ານອັກສອນສາດໄດ້ໃຫ້ການສັນນິຖານວ່າ: ໃນສະໄໝທີ່ຊົນຊາດລາວຕັ້ງອານາຈັກຢູ່ໜອງແສແສນຍ່ານ ໃນດິນແດນປະເທດຈີນຕອນໃຕ້ປັດຈຸບັນນັ້ນ, ຄົນລາວມີຕົວອັກສອນໃຊ້ແລ້ວ ຕົວອັກສອນດັ່ງກ່າວແມ່ນໄດ້ເຄົ້າແບບມາຈາກອັກສອນສັນສະກິດ, ມີຊື່ສະເພາະວ່າ ອັກສອນສະໄໝກວຍເຈົາ ຫລືອັກສອນກວຍເຈົາ

ຢູ່ໃນປຶ້ມ "ປະຫວັດຕົວອັກສອນໃນລາວ" ຂອງ ອາຈານ ບົວແກ້ວ ບຸນສີໄສ ຊໍາພັດມີຄວາມເຫັນແຕກຕ່າງຈາກນີ້. ຕໍ່ກັບເຄົ້າແບບຕົວອັກສອນລາວໃນສະໄໝໜອງແສ, ເພິ່ນໃຫ້ທັດສະນະວ່າ: ອັກສອນສະໄໝກວຍເຈົາ ອາດຈະໄດ້ຮັບອິດທິພົນຈາກອັກສອນຂະໂຣດຖີກໍເປັນໄດ້.

ເມື່ອເຄື່ອນຍ້າຍລົງມາທາງໃຕ້ ຊົນຊາດລາວພວກໜຶ່ງ ທີ່ລົງມາສ້າງຕັ້ງເມືອງແຖນ ກໍໄດ້ດັດແປງ

ຕົວອັກສອນທີ່ໄດ້ມາຈາກຫນອງແສ້ນັ້ນ, ດ້ວຍການຕື່ມພະຍັນຊະນະທີ່ບໍ່ທັນມີໃສ່, ສະຫລະຕົວໃດບໍ່ທັນຄົບກໍຕື່ມໃສ່, ຕົວໃດຂຽນຍາກກໍດັດແປງໃໝ່. ດ້ວຍເຫດນັ້ນ ສິລະປະໃນການຂຽນຈຶ່ງຜິດຈາກຮູບເດີມ. ທັງນີ້ກໍເພື່ອຮັບໃຊ້ສັງຄົມ ຊຶ່ງພວກເຮົາໄດ້ມາຢູ່ໃກ້ຊິດກັບຊົນຊາດຂອມ ແລະມອນ.

ຕົກມາຮອດກາງສະຕະວັດທີ 8 (ຄ. ສ. 757), ຂຸນລໍ ໄດ້ເຂົ້າມາຄອງເມືອງຊວາແທນພວກຂອມ ແລ້ວສະຖາປະນາອານາຈັກລ້ານຊ້າງຂຶ້ນເປັນຄັ້ງທຳອິດ. ຈາກສາຍເຫດດັ່ງກ່າວຈຶ່ງເຮັດໃຫ້ຊົນຊາດລາວນັບມື້ນັບມາຢູ່ໃກ້ຊິດພົວພັນກັບຂອມ ແລະມອນ. ໃນໄລຍະນັ້ນ ພວກເຮົາໄດ້ມາພົບວັນນະຄະດີ-ອັກສອນສາດແບບໃໝ່ ພົວພັນກັບສິ່ງແວດລ້ອມອັນໃໝ່. ດັ່ງນັ້ນ ຕົວອັກສອນທີ່ເຄີຍໃຊ້ຄາວຢູ່ເມືອງແຖນນັ້ນ ກໍໄດ້ມີການປ່ຽນແປງ ແລະຖືກເສີມຂະຫຍາຍ. ສ່ວນປະຊາຊົນທີ່ຢູ່ທາງເມືອງເດີມນັ້ນ; ຊ້ຳພັດຍັງໃຊ້ອັກສອນແບບເກົ່ານັ້ນຢູ່ ຊຶ່ງອັກສອນດັ່ງກ່າວ ກໍໄດ້ແກ່ອັກສອນໄທດຳນັ້ນເອງ.

ສະຫລຸບລວມແລ້ວ ອັກສອນໄທດຳທີ່ຜູ້ເຖົ້າຜູ້ແກ່ເຜົ່າໄທດຳ ຍັງໃຊ້ກັນຢູ່ຊູ່ມື້ນີ້ ແມ່ນຕົວອັກສອນລາວສະໄໝດັ້ງເດີມ ແຕ່ຄາວທີ່ຊົນຊາດລາວສ່ວນໃຫຍ່ຍັງດຳລົງຊີວິດຢູ່ເມືອງແຖນ ແລະຕີລາຄາໄດ້ວ່າ ຕົວອັກສອນໄທດຳນີ້ ຄົງໄດ້ເຄົ້າມາຈາກອັກສອນສັນສະກິດ ໂດຍຜ່ານຕົວອັກສອນກວຍເຈົ໋າ.

III. ຮູບຕົວອັກສອນໄທດຳ

1. ພະຍັນຊະນະ



2. ສະຫລະ

xຸກ, xົກ　xໍ　ເxົາ　xິ　xຸ　ເxືອມ, ເxີມ, ເxັມ　xາມ

xາງ　xອງ　ແxມ　xັມ　ເxີ　ໂxຍ　xວຍ　ເxີຍ

xໍ, xີ　ແxວ　xິມ　xາຍ　ແxງ　xວາຍ　ໄx　xູ

xົມ　ເxັມ　ໂxກ　ເxິງ　xຶກ　xໍາ　ແxງ　ເxືອ

xັບ　ເxືອງ　xົວ　xາວ　xົງ　xອມ　xອຍ

xາ　xູຍ　xົງ　ເxີ

3. ປະສົມພະຍັນຊະນະ ແລະສະຫລະເປັນຄຳເວົ້າ

(໑)

ຕົກຕໍ່　ເລົ່າມີ່ຢູ່　ເລົ່າເຫັນ　ເລົ່າເບືອນຢູ່

ເລົ່າບານວາງ　ເສີຍມ້ອງ　ແຖມປົ້ນ　ຄອງຖ້າ

[illegible]

ຕົກເວີຍ ຂວັນເວີຍ ເຂົາກໍເສຍແລ້ວ.

(໔) [illegible]

ຕົກຕໍ່ ຄົນຊາຍກ້າ ແຕ່ງຄວາຍ ໄຖກ້າ

[illegible]

ຕົກຕໍ່ນາງຢູ່ກ້າ ກິນຍ້ອມ ມັນເຂົາ ໄດ້ກິນ

[illegible]

ຕຸກເຣີຍ ຂວັນເຣີຍ.

(໕) [illegible]

ໝອງຫຼວງ ມີຈີ້ແຂ້ ຄາຄຳເຊົ້າ ອ້າປາກ ກິນຄົມ

[illegible]

ເຂົາກໍ ເສຍແລ້ວ ຕົກເວີຍ ຮຽມເວີຍ.

24/VII ห้ามจำหน่าย

4. ສົມທຽບອັກສອນກວຍເຈົ້າ - ໄທດໍາ - ລາວ



✧ ສັງເກດສຽງຂອງສະຫລະ ແລະ ພະຍັນຊະນະໃນອັກສອນໄທດໍາ :

1. ສຽງຂອງສະຫລະ

ສະຫລະໃຊ້ແທນກັນໄດ້ຫລາຍໂຕ ຕົວຢ່າງສະຫລະ ເxັ່ນ - ເxືອນ ເxືອງ - ເxືອນ ແລະ ເxີນ ອອກສຽງໃກ້ຄຽງກັນ, ສະຫລະ xໍາ ແລະ xື ໃຊ້ແທນກັນໄດ້. ລາງເທື່ອສະຫລະ xໍາ ກໍຂີດໄວ້ທາງເທິງຊ້ອນກັນ, ສະຫລະ xໍ ຄືກັນກັບໄມ້ xັ ໃນອັກສອນລາວ, ໄມ້ກົງ ຂຽນໄວ້ກ້ອງພະຍັນຊະນະ, ໄມ້ກັນ ເມື່ອມີຕົວສະກົດຈຶ່ງເປັນສະຫລະ xັນ ຄັນບໍ່ມີຕົວສະກົດເປັນສະຫລະ xໍ, ສະຫລະ xໍາ ເມື່ອມີສຽງວັນນະຍຸດເອກ ລາງຕົວມີຂີດເສັ້ນຢູ່ເທິງສາມເສັ້ນ, ສະຫລະ ເxຍ ເພິ່ນຂີດເປັນໄມ້ຕີນກາຢູ່ເທິງນັ້ນ.

ແຕ່ສະຫລະບາງຕົວເຂົາເຈົ້າໄດ້ປະດິດແຕ່ງຂຶ້ນຕາມສຳນຽງສຽງປາກຂອງເຂົາ ເຊັ່ນ ສະຫລະ ເ◌ີຍ ຢູ່ທ້າຍປະໂຫຍກຕອນຈົບ ເຂົາມັກຂຽນວ່າ ເຣີຍ ຄຳນີ້ເຂົາບໍ່ຂຽນເປັນຕົວອັກສອນແຕ່ເຂົາຊໍ້າພັດຂຽນເປັນຮູບດອກໄມ້ລາຍເຄືອຕ່າງໆຂົດກອດກ້ຽວກັນໄປມາ ແລ້ວເຂົາສົມມຸດກັນອ່ານວ່າ "ເຣີຍ".

ວິທີຂຽນສະຫລະ ແມ່ນຂຽນລຽນກັນໄປຄືອັກສອນລາວປັດຈຸບັນ ມີທາງໜ້າ ທາງຫລັງ ທາງລຸ່ມ ແລະ ທາງເທິງ ບໍ່ມີໃຊ້ວັນນະຍຸດ.

2. ສຽງຂອງພະຍັນຊະນະ

ຕົວ *ທ* ອອກສຽງຄືຕົວ *ຕ* ໃນອັກສອນລາວ, ຕົວ *ທ ຣ* ທັງສອງໃຊ້ແທນກັນໄດ້ ແລະ ມີສຽງໃກ້ຄຽງກັນ, ຕົວ *ຜ ພ* ທັງສອງໃຊ້ແທນກັນໄດ້ ແລະ ອ່ານອອກສຽງຄືຕົວ *ບ* ໃນອັກສອນລາວ, ຕົວ *ມ* ກັບຕົວ *ມ* ແມ່ນອັນດຽວກັນ, ຕົວ *ຄ ຂ ກ* ອອກສຽງຄືກັນ ຄື ອ່ານອອກສຽງຕົວ *ກ* ໃນອັກສອນລາວ, ຕົວ *ດ ລ* ທັງສອງໃຊ້ແທນກັນໄດ້ ແຕ່ເຫັນໃຊ້ຕົວ *ລ* ແທນຕົວ *ດ* ຫລາຍກ່ວາ, ລາງເທື່ອກໍ່ອ່ານຄວບໃສ່ກັນເລີຍ ຕົວຢ່າງ: ꪀꪲꪙ ꪊꪱꪥ (ກິນຈຊາຍ) ເປັນຕົ້ນ.

ປະຫວັດ ຕົວອັກສອນລາວ ເກົ່າ

ຈະເຫັນ

ຈະນັ້ນ ໂຕອັກສອນລາວ ເກົ່າ

ບົດທີ 13

ວ່າດ້ວຍຕົວອັກສອນໄທສະຫຍາມ

I. ຄວາມເປັນມາໂດຍຫຍໍ້ຂອງໄທສະຫຍາມ

ໃນພົງສາວະດານຈີນສະໄໝສາມກົກ ໄດ້ກ່າວໄວ້ວ່າ: ຂົງເບັ້ງ ແມ່ທັບຈີນໄດ້ເຂົ້າມາຮຸກຮານຊົນຊາດໄທລາວ ໃນສະຕະວັດທີ 3, ເວລານັ້ນຈີນເອີ້ນຊົນຊາດລາວວ່າ "ອ້າຍລາວ" ພວກເຮົາໄດ້ເຄີຍຕັ້ງຖິ່ນຖານຢູ່ອານາຈັກໜອງແສ (ປ້ານເຈົ້າ) ເປັນເວລາ 400 ປີ. ຍ້ອນທົນຕໍ່ການຮຸກຮານບຸກຍຶດຂອງຈີນບໍ່ໄດ້, ຊົນຊາດ "ອ້າຍລາວ" ຈຶ່ງໄດ້ອົບພະຍົບເຄື່ອນຍ້າຍລົງມາທາງທິດໃຕ້ຢ່າງເປັນຂະບວນໃຫຍ່. ສາຍໜຶ່ງລົງໄປທາງແຄວັນອັດສາມ ແຫ່ງປະເທດອິນເດຍ ກາຍເປັນ ໄທອະຫົມ, ໄທຄຳຕີ, ໄທຄຳຍາງ... ສາຍໜຶ່ງລົງມາທາງມົນທົນຢູນານ, ສິບສອງປັນນາ ແລະ ທາງແມ່ນ້ຳສາລະວິນດິນແດນພະມ້າ ກາຍເປັນ ລື້, ຂຶນ, ເຂີນ; ອີກສາຍໜຶ່ງລົງມາທາງເມືອງແຖນ ແລ້ວອົບພະຍົບລົງມາສູ່ແຖບຝັ່ງແມ່ນ້ຳຂອງ, ແມ່ນ້ຳປິງ-ວັງ-ຍົມ-ນ່ານ ແລະແມ່ນ້ຳເຈົ້າພະຍາ. ພວກທີ່ອົບພະຍົບລົງມາທາງສາຍນີ້ ໄດ້ກາຍເປັນ ລາວລ້ານຊ້າງ, ລາວລ້ານນາ ແລະໄທສະຫຍາມ.

ການປາກົດຕົວຂອງປະເທດສະຫຍາມ ແມ່ນຜົນແຫ່ງການເຄື່ອນຍ້າຍຂອງຄົນໄທພວກໜຶ່ງຄ່ອຍໆລົງມາຕາມສອງຝັ່ງແມ່ນ້ຳເຈົ້າພະຍາ ຊຶ່ງມີຂຸນບາງກາງທ້າວເປັນຫົວໜ້າພັກພວກ ລົງມາບຸກຍຶດເອົາເມືອງສຸໂຂໄທຈາກຊົນຊາດຂອມ. ເມື່ອໄດ້ຮັບໄຊຊະນະແລ້ວ ກໍໄດ້ຕັ້ງລາຊະວົງເອກະເທດຂອງຕົນເອງຂຶ້ນ ຊຶ່ງເອີ້ນວ່າ ລາຊະວົງສິງຫະນະວັດ ແລະແຕ່ງຕັ້ງຕົນເອງຂຶ້ນເປັນເຈົ້າແຜ່ນດິນມີນາມວ່າ ຂຸນສີອິນທະຣາທິດ ພ້ອມກັນນັ້ນກໍໄດ້ປະກາດຕັ້ງສຸໂຂໄທເປັນລາຊະທານີ ແລະ ຮຽກຊື່ປະເທດວ່າ "ສະຫຍາມ" (ຄ. ສ. 1257). ເຂດແດນປະເທດສະຫຍາມໃນເວລານັ້ນ ມີພຽງແຂວງພິະລຸກ ແລະກຳແພງເພັດ ແລະພິສະນຸໂລກເທົ່ານັ້ນ.

ຂຸນສີອິນທະຣາທິດແຫ່ງລາຊະວົງສິງຫະນະວັດນີ້ ເປັນຍາດວົງຂອງເຈົ້າມະຫາວັນແຫ່ງນະຄອນໄຊບູລີ ຊຽງແສນ ຊຶ່ງກໍແມ່ນສືບເຊື້ອສາຍມາຈາກຂຸນບູລົມແຫ່ງເມືອງແຖນນັ້ນເອງ.

II. ປະຫວັດຕົວອັກສອນໄທສະຫຍາມ

ຂຸນລາມຄຳແຫງ ຖືວ່າເປັນຜູ້ໃຫ້ກຳເນີດອັກສອນໄທສະຫຍາມ*. ທ່ານມີຊີວິດຢູ່ໃນສະຕະວັດທີ 13, ເປັນລູກຊາຍຜູ້ທີ 3 ຂອງຂຸນສີອິນທະລາທິດ. ເມື່ອໄດ້ຂຶ້ນຄອງລາຊະສົມບັດແລ້ວ, ທ່ານກໍໄດ້ຟື້ນຟູຮີດຄອງປະເພນີວັດທະນະທຳ-ຕົວອັກສອນ ທີ່ໄດ້ຖ່າຍທອດໄປຈາກເມືອງແຖນ ແລະເມືອງຊຽງທອງນັ້ນເປັນການໃຫຍ່. ໂດຍສະເພາະໃນປີ ຄ. ສ. 1292 ທ່ານໄດ້ປະດິດຮູບແບບອັກສອນໄທສະຫຍາມເປັນຄັ້ງທຳອິດ, ໃນສິລາຈາລຶກຂອງທ່ານໄດ້ຂຽນໄວ້ວ່າ "ເມື່ອກ່ອນລາຍສືໄທນີ້ບໍ່ມີ 1205 ສົກປີມະແມ ພໍ່ຂຸນລາມຄຳແຫງຫາໃຄ່ໃຈໃນໃຈແລໃສ່ລາຍສືໄທນີ້ ລາຍສືໄທນີ້ຈຶ່ງມີເພື່ອຂຸນຜູ້ນັ້ນໃສ່ໄວ້" ອັກສອນໄທທີ່ຂຸນລາມຄຳແຫງປະດິດຂຶ້ນນັ້ນ ໄດ້ເຄົ້າມາຈາກອັກສອນຂອມຫວັດ ແລະອັກສອນລາວເດີມ.

---

* ນັກປະຫວັດສາດຕ່າງປະເທດ ແລະໄທຈຳນວນໜຶ່ງ ບໍ່ເຊື່ອວ່າ ຂຸນລາມກຳແຫງເປັນຜູ້ໃຫ້ກຳເນີດອັກສອນໄທສະຫຍາມ ແລະເຊື່ອວ່າສິລາຈາລຶກຂອງຂຸນລາມກຳແຫງຫາກໍຖືກສ້າງຂຶ້ນຫວ່າງຮ້ອຍກວ່າປີຜ່ານມານີ້ ເພື່ອຫວັງຜົນທາງດ້ານການເມືອງ

◇ ລັກສະນະອັກສອນຂອງຊຸມຊົນລາວຄຳແຫງ ໐

໑. ຈັດພະຍັນຊະນະເປັນວັກຕາມຖານທີ່ເກີດ ແລະເສດວັກ ເຊັ່ນດຽວກັບອັກສອນມອນ-ຂອມ.

໒. ດັດແປງອັກສອນຂອມຫວັດ ແລະມອນບູຮານ ໂດຍຕັດຫອນ (ໄທເອີ້ນວ່າ ສິກ ຫລື ໜາມເຕີຍ).

໓. ເພີ່ມພະຍັນຊະນະຂຶ້ນໃຫ້ພໍກັບສຽງໃນພາສາໄທ ເຊັ່ນ

໔. ເພີ່ມວັນນະຍຸດ ຄືໄມ້ເອກ x̍ (x̍) ແລະ ໄມ້ໂທ x⁺ (x̌).

໕. ຈັດສະຫລະ ແລະພະຍັນຊະນະໄວ້ໃນແຖວດຽວກັນ ແລະສູງສະເໝີກັນ ສະຫລະສ່ວນໃຫຍ່ຢູ່ໜ້າພະຍັນຊະນະ.

໖. ສະຫລະ xະ ເມື່ອມີຕົວສະກົດ ໃຊ້ຕົວສະກົດຊ້ອນກັນ ເຊັ່ນ ขบบ(ຂັບ) หนงง(ໜັງ).

໗. ສະຫລະ x̄ ແລະ ສະຫລະ x̊ ບໍ່ໃຊ້ ອ ຄຽງ ເຊັ່ນ ຊື່ອ ເປັນ ຊື່   ພໍ່ ເປັນ ພ່

໘. ນິກຄະຫິດໃຊ້ແທນ ມ ໄດ້ ເຊັ່ນ ทงงคิล (ທັງກຣິມ)

◇ ຮູບອັກສອນໄທສະໄໝຊຸມຊົນລາວຄຳແຫງ :

- ພະຍັນຊະນະ



• ສະຫລະ



• ຂຽນເປັນຄວາມເວົ້າ



" *ເມື່ອກ່ອນລາຍສືເຫນີ້ບໍ່ມີ 1205 ສົກ ປີມະແມ ພໍ່ຂຸນຣາມຄໍາແຫງຫາໃຄ່ໃຈໃນໃຈ ແລໃສ່ລາຍສືເຫນີ້ ລາຍສືເຫນີ້ຈິ່ງມີເພື່ອຂຸນຜູ້ນັ້ນໃສ່ໄວ້...* "

III. ການປ່ຽນຮູບຂອງອັກສອນຂຸນລາມຄໍາແຫງ

໑. ປະມານ ຄ. ສ. 1356 ໃນລັດຊະການພະຍາລີໄທ ການຂຽນຕົວອັກສອນມີການປ່ຽນແປງດັ່ງນີ້.

ກ. ຮູບສະຫລະ ອິ ອີ ອຶ ອື ຢູ່ເທິງພະຍັນຊະນະ, ອຸ ອູ ຢູ່ລຸ່ມພະຍັນຊະນະ.

ຂ. ສະຫລະ x̂ ຊຶ່ງເປັນຮູບຄ້າຍວົງມົນ ປ່ຽນເປັນຮູບເດືອນແຮມ.

ຄ. ສະຫລະ ໄx ໃx ໂx ສູງຂຶ້ນພົ້ນແຖວ.

໑. ເພີ່ມໂຕ ຊ, ຟ, ໂຕ ຍູ(ຍ) ເພີ່ມຕີນເຂົ້າ ແຕ່ກ່ອນຂຽນ ຍູ.

໔. ໃນສະໄໝສົມເດັດພະບາລາຍມະຫາລາດ ຕົວອັກສອນໄທປ່ຽນຮູບໄປຈາກເດີມຫລາຍເຊັ່ນ:

ກ. ສະຫລະອະທີ່ມີຕົວສະກົດ ເຄີຍໃຊ້ຕົວສະກົດຊ້ອນ ປ່ຽນເປັນໄມ້ກັນ x̆ ມີຕົວສະກົດດຽວ ເຊັ່ນ

ฉบๆๆ ເປັນ ฉบัง   น่นน ເປັນ นั้น

ຂ. ມີວັນນະຍຸດຕີ x̃ ແລະ ຈັດຕະວາ x́ ເພີ່ມຂຶ້ນ ສ່ວນວັນນະຍຸດໂທ ຊຶ່ງເຄີຍຂຽນ x́ ປ່ຽນເປັນຮູບ x̆.

ຄ. ເພີ່ມ ศ (ສໍຄໍ) ແລະ ษ (ສໍບໍ).

ງ. ສະຫລະ เxย ຊຶ່ງແຕ່ເກົ່າໃຊ້ ย ຕົວດຽວ ປ່ຽນເປັນ เxีย

໕. ໃນສະໄໝລັດຕະນະໂກສິນ ລັດຊະການທີ ໔ ໄດ້ມີການດັດແປງອັກສອນໄທຂຶ້ນໃໝ່ເພື່ອສະດວກແກ່ການຂຽນ ແລະ ສອດຄ່ອງກັບແບບອັກສອນສາກົນ ດັ່ງນີ້:

ກ. ຮູບພະຍັນຊະນະຄືເກົ່າ

ຂ. ສະຫລະປ່ຽນໃໝ່ໝົດທຸກຕົວ

ຄ. ສະຫລະວາງໄວ້ຫລັງພະຍັນຊະນະທຸກຕົວ ແລະ ຢູ່ໃນແຖວດຽວກັນ

ງ. ຮູບສະຫລະທີ່ປະສົມກັບພະຍັນຊະນະ อ ຂຽນແຕ່ຮູບສະຫລະ ບໍ່ຕ້ອງມີ อ ປະສົມ ເຊັ່ນ
อมร ເປັນ I มร   อินทร์ ເປັນ Oนทร์.

ຈ. ບໍ່ໃຊ້ໄມ້ກັນ x̆ ໃຊ້ສະຫລະອະ ຊຶ່ງເປັນຮູບ I ແທນ.

ການປ່ຽນຕົວອັກສອນໃນສະໄໝດັ່ງກ່າວ, ລົມບໍ່ນິຍົມໃຊ້ ແລະ ໃນທີ່ສຸດກໍ່ມີການປ່ຽນແປງອີກ.

ໃນສະໄໝລັດຕະນະໂກສິນ ເມື່ອສະໄໝຈອມພົນ ປ. ພິບູນສົງຄາມເປັນນາຍົກລັດຖະມົນຕີ ປີ ຄ.ສ. 1942 ມີການປ່ຽນແປງຕົວອັກສອນອີກເທື່ອໜຶ່ງ ເຊັ່ນ

ກ. ຕັດພະຍັນຊະນະ ฃ ฅ ฆ ฎ ฏ ฐ ฑ ฒ ณ ศ ษ ฬ

ຂ. ຕັດສະຫລະ ใx ฤ ฤๅ ฦ ฦๅ.

ຄ. ຕັດຕີນ ญ = ญ

ງ. ทร ໃນຄຳໄທໃຊ້ ซ ເຊັ່ນ ซาบ ซาย ซง.

ຈ. ญ ໃນຄຳໄທໃຊ້ ย ເຊັ່ນ หยิง หย้า

ສ. ศ ษ ໃຊ້ ส ແທນ ເຊັ່ນ เสิก ดาษดา ໃຊ້ ดาสดา

ຊ. อ นำ ย ໃຊ້ ห ເຊັ່ນ หยา หยู่ หย่าง หยาก

ຍ. ຄຳໄທທີ່ໃຊ້ รร ປ່ຽນເປັນ อัน,

ການຂຽນໜັງສືແບບນີ້ໃຊ້ຢູ່ເປັນເວລາ 3 ປີ ເລີກລົ້ມໄປເມື່ອປີ 1945.

✧ ຮູບຕົວອັກສອນໄທທີ່ໃຊ້ໃນປັດຈຸບັນ

❊ ພະຍັນຊະນະ

ก	ข	ฃ	ค	ฅ	ฆ	ง	จ	ฉ	ช	ซ	ฌ
ກ	ຂ	ຂ	ຄ	ຄ	ຄ	ງ	ຈ	ສ	ຊ	ຊ	ຊ
ญ	ฎ	ฏ	ฐ	ฑ	ฒ	ณ	ด	ต	ถ	ท	ธ
ຍ	ດ	ຕ	ຖ	ທ	ທ	ນ	ດ	ຕ	ຖ	ທ	ທ
น	บ	ป	ผ	ฝ	พ	ฟ	ภ	ม	ย	ร	ล
ນ	ບ	ປ	ຜ	ຝ	ພ	ຟ	ພ	ມ	ຍ	ຣ	ລ
ว	ศ	ษ	ส	ห	ฬ	อ	ฮ				
ວ	ສ	ສ	ສ	ຫ	ລ	ອ	ຮ				

❊ ສະຫລະ

xะ	xา	xิ	xี	xึ	xื	xุ	xู	เxะ	เx	แxะ	แx
xະ	xາ	xິ	xີ	xຶ	xື	xຸ	xູ	ເxະ	ເx	ແxະ	ແx
โxะ	โx	เxาะ	xอ	เxียะ	เxีย	เxือะ	เxือ	xัวะ	xัว	ฤ	ฤๅ
ໂxະ	ໂx	ເxາະ	xໍ	ເxັຍ	ເxຍ	ເxືອ	ເxືອ	xົວະ	xົວ	ຣຶ	ຣື
ฦ	ฦๅ	ใx	ไx	xำ	เxา						
ລຶ	ລື	ໃx	ໄx	xຳ	ເxົາ						

❊ [illegible]

[illegible]

[illegible]

+ [illegible]

[illegible]

[illegible]

16.7.13.

ບົດທີ 14

ປະຫວັດຄວາມເປັນມາຂອງພາສາລາວ

I. ວ່າດ້ວຍຕະກູນຂອງພາສາລາວ.

ພາສາລາວແມ່ນພາສາໜຶ່ງທີ່ສັງກັດຢູ່ໃນໝວດພາສາລາວ- ໄທ ຊຶ່ງຜ່ານມາເພິ່ນເຄີຍເອີ້ນວ່າ ພາສາຕະກູນໄຕ, ໝວດພາສາລາວ- ໄທ ຫລື ພາສາຕະກູນໄຕນີ້ ນັກປາດຫລາຍຄົນໄດ້ຈັດເຂົ້າຢູ່ໃນວົງເຊື້ອພາສາຈີນ-ທິເບດ. ມັນເປັນໝວດພາສາ ທີ່ແຜ່ຂະຫຍາຍຢ່າງກວ້າງຂວາງຢູ່ໃນຂົງເຂດພາກຕາເວັນອອກສຽງໃຕ້ຂອງທະວີບອາຊີ.

ພາສາລາວ- ໄທນີ້ ມີຢູ່ທາງພາກເໜືອແຜ່ໄປຮອດແຂວງກວາງເຈົາ (ປະເທດຈີນ), ທາງພາກໃຕ້ຮອດແຫລມມາລັກກາ, ທາງຕາເວັນອອກຮອດແຂວງກວາງສີ, ກວາງຕຸ້ງ ແລະ ເກາະຮາຍນັງຂອງຈີນ, ທາງຕາເວັນຕົກຮອດແຄວັນອັດສຳ ແລະ ສາຍພູຈັນຊຸ້ນຂອງປະເທດອິນເດຍ.

ພາສາລາວມີຫຼາຍພົວພັນຢ່າງໃກ້ຊິດສະໜິດແໜ້ນກັບພາສາໄທ, ໄທດຳ, ໄທແດງ, ໄທຂາວ, ຍ້ຶວ, ລື້, ເຂີນ, ໄທອະຫົມ......

ຕົວຢ່າງການປຽບທຽບພາສາໃນຕະກຸນໄຕ.

ພາສາລາວ	ພາສາໄທຄຳຕີ	ພາສາໄທສະຫຍາມ
ໝາກ	*ໝາກ*	*ມະ*
ໝາກມ່ວງ	*ໝາກມ່ວງ*	*ມະມ່ວງ*
ລີ້ນ	*ລີ້ນ*	*ປລ້ຽວ*
ບາຍ, ກຳ	*ກຳ*	*ຈັບ*

ສຳລັບພາສາຊານ (ຍ້ຽວ) ແລະພາສາເຂີນ ແຕກຕ່າງກັນຢູ່ບ່ອນວ່າ ສຽງສະຫຼະ ໂxະ ໃນພາສາຍ້ຽວກາຍເປັນສະຫຼະ ເxາະ ໃນພາສາເຂີນ ແລະ ສະຫຼະ ເxະ ກາຍເປັນສະຫຼະ ແxະ:

ພາສາຍ້ຽວ	ພາສາເຂີນ
ລິ້ນ	*ລ້ອນ*
ປົກ	*ປ້ອກ*
ກົ້ນ	*ກ້ອນ*
ຕົ້ນ	*ຕ້ອນ*
ເຈັບ	*ແຈັບ*
ເດັກ	*ແດັກ*

ພາສາຍ້ຽວໃນພາກໃຕ້ພະມ້ານັ້ນ ໃກ້ກັບພາສາລາວປັດຈຸບັນທີ່ສຸດ, ຕ່າງແຕ່ສຽງຍາວເປັນສຽງສັ້ນ, ສຽງເອກເປັນສຽງໂທ:

ພາສາລາວ	ພາສາຍ້ຽວ
ຕີນ	ຕີນ
ທ້ອງ	ຕ້ອງ
ເມຍ	ເມ
ດຳ	ລຳ
ພໍ່	ປໍ້

ກ່ຽວກັບບັນຫາຕະກູນຂອງພາສາລາວນີ້, ຢູ່ໃນປຶ້ມ "ຄົ້ນຄວ້າພາສາລາວ" ໂດຍ ສຸລັງ ເດດວົງສາ, ປະຈິດ ສຸລິສັກ, ພິນ ໂກໄຊໂຍ ແລະ ຊຣ. ເຊນເບີເລນ ກໍໄດ້ຂຽນໄວ້ຢ່າງລະອຽດສົມຄວນ ແລະ ເຊື່ອວ່າມັນຄົງເປັນປະໂຫຍດໃຫ້ແກ່ການຄົ້ນຄວ້າໃນຕໍ່ໜ້າ. ດັ່ງນັ້ນ ພວກເຮົາຈຶ່ງຖອດເອົາ ແລະ ນຳມາສະເໜີ ເຊິ່ງມີເນື້ອໃນດັ່ງຕໍ່ໄປນີ້:

ພາສາຕະກູນໄຕ

໑. ປະຫວັດຄວາມເປັນມາ

ກ່ອນຈະໃສ່ຊື່ ໝວດພາສາທີ່ຈັດເຂົ້າໃນຕະກູນໄຕວ່າ " ກຸ່ມດຽວ" ນັ້ນ ເພາະເຮົາຖືວ່າແຕ່ກ່ອນພາສາເຫຼົ່ານີ້ແຕກອອກຈາກເຫງົ້າເງື່ອນໜຶ່ງແມ່ດຽວ. "ພາສາແມ່" ນັ້ນ ແມ່ນພາສາໄຕເດີມ ເຊິ່ງມີສາມແຂງທີ່ອອກຈາກກົກດຽວ (ແມ່ດຽວ) ດັ່ງຈະຊີ້ແຈງໃນຕໍ່ໜ້າ. ພາສາທີ່ແຕກອອກໄປເຫຼືອຄ້າງຕາມດິນແດນຕ່າງໆ ໃນປັດຈຸບັນນີ້ ຂໍໃສ່ຊື່ວ່າ " ແຂງພາສາ " (ພາສາລູກ).

ຖິ່ນຖານກຳເນີດຂອງຊົນຊາດທີ່ໃຊ້ພາສາໄຕເດີມ ເຊິ່ງນັກພາສາສາດ ໄດ້ຄົ້ນຄວ້າມາແລ້ວນັ້ນກໍຍັງບໍ່ຄັກແນ່ວ່າຢູ່ເຂດແດນໃດແທ້. ນັກຄົ້ນຄວ້າຊື່ວ່າ ໂມດ (Mote) 1964-1965 ໄດ້ປະຕິເສດທິດສະດີທີ່ວ່າ ນ່ານເຈົ້າເປັນດິນແດນທີ່ເກົ່າຂອງຊົນຊາດຕະກູນໄຕ ແລະໄດ້ສະເໜີຫຼັກຖານ ດ້ວຍເຫດຜົນຕ່າງໆວ່າທິດສະດີນີ້ບໍ່ມີມູນຄວາມຈິງ. ທ່ານອ້າງໄດ້ອ້າງເຖິງ ເອກະສານຕ່າງໆຂອງນ່ານເຈົ້າທີ່ຟານໂຈ (Fancho) ບັນທຶກໄວ້ຕາມໜັງສືຈີນ ມັງຊູ (Manshu) ເຊິ່ງຂຽນຂຶ້ນໃນລະຕະວັດທີ 9 ຢູ່ນ່ານເຈົ້າ, ໃນບັນທຶກດັ່ງກ່າວນີ້ ບໍ່ມີຄຳໃດເລີຍເປັນຄຳພາສາຕະກູນໄຕ. ຄຳເຫຼົ່ານັ້ນລ້ວນແຕ່ແມ່ນຄຳພາສາໂລໂລ. ອີກຢ່າງໜຶ່ງ ທ່ານບອກວ່າຫຼັກຖານຈາກພາສາສາດ (1964) ໄດ້ຊີ້ແຈ້ງວ່າ ແດນຫວຽດນາມ ແລະກວາງຕຸ້ງ ເປັນຖິ່ນເດີມຂອງພາສາຕະກູນໄຕ.

ນັກພາສາສາດ ອາຈານເກດນີ (Gedney 1965) ໄດ້ເອົ້າວ່າ ທິດສະດີຂອງ "ໂມດ" ກໍມີມູນຄວາມຈິງຢູ່ດ້ວຍເຫດຜົນຫຼາຍປະການຄື:

1. ຄວາມແຕກຕ່າງຢ່າງໃຫຍ່ຫຼວງລະຫວ່າງພາສາຕະກູນໄຕໃນກວາງສີ ແລະ ຫວຽດນາມເໜືອ ປຽບທຽບໃສ່ພາສາຕະກູນໄຕທາງຕາເວັນຕົກ ເຊິ່ງໃຊ້ພາສາຄ້າຍກັນຫຼາຍຢູ່ລາວ, ໄທ ແລະ ພະມ້າ.
2. ຄວາມສຳພັນອັນໃກ້ຊິດລະຫວ່າງຕະກູນໄຕ ແລະ ການຊຸຍ ທາງຕາເວັນອອກ.
3. ຄວາມຈິງແລ້ວ ພາສາຕະກູນໄຕ ທີ່ມີຢູ່ໃກ້ນ່ານເຈົ້າປັດຈຸບັນນີ້ ກໍແມ່ນສ່ວນຍ່ອຍຂອງພາສາລື້ ພາສາຍ້ຽວ ແລະພາສາເໜືອ ທີ່ໄດ້ອົບພະຍົບຂຶ້ນໄປທາງເໜືອ. ປັດຈຸບັນນີ້ ອາຈານເກດນີພວມສະເໜີຄວາມຄິດເຫັນວ່າ ພາສາຕະກູນໄຕຕາເວັນຕົກສ່ຽງໃຕ້ ອາດເປັນງ່າໜຶ່ງ ທີ່ແຕກຕ່າງໝູ່ທີ່ສຸດໃນຕະກູນໄຕ. ພາສາຕະກູນໄຕ ອາດມີກົກເຫງົ້າເຄົ້າກໍ ຢູ່ດິນແດນເໜືອຖິ່ນກວາງສີ ແລະ

ຫວຽດນາມ.

໔. ກ່ອນພາສາຕະກຸນໄຕເດີມ: ຕະກຸນໄຕມີຄວາມສຳພັນກັບພາສາຕະກຸນອື່ນໆຄື ຕະກຸນກະໄດ ແລະ ຕະກຸນກາມຊຸຍ. ສະຫຼຸບແລ້ວ ສາມຕະກຸນນີ້ມີກຳເນີດມາຈາກ " ແມ່ດຽວ " ໃນສະໄໝບູຮານດັ່ງແຜນສະແດງຕໍ່ໄປນີ້:



(ຄ.ສ 0000)

ພາສາຕະກຸນກະໄດເກືອບບໍ່ມີເຫຼືອຢູ່ແລ້ວໃນສະໄໝປັດຈຸບັນນີ້. ພາສາເກລາວ, ພາສາກວາ, ພາສາລາຕີ ຍັງເຫຼືອຢູ່ແຕ່ໜັອຍດຽວເທົ່ານັ້ນ ໃນຖິ່ນຮາຍາງຕາມແມ່ນ້ຳແຈ້ງແຫ່ງຫວຽດນາມເໜືອ. ຕົກມາສະໄໝນີ້ ການຄົ້ນຄວ້າພາສາຕະກຸນດັ່ງກ່າວ ຍັງບໍ່ກ້າວໜ້າໃດເທື່ອເຮົາຮູ້ພຽງແຕ່ຕະກຸນກະໄດ ແລະ ກາມຊຸຍເທົ່ານັ້ນ ເຊິ່ງມີຄວາມສຳພັນກັບຕະກຸນໄຕ.

ມ. ແຂງຕະກຸນໄຕ ມີ 3 ຕະກຸນ

ຕະກຸນໄຕແບ່ງອອກເປັນສາມແຂງ[1] ໃນພາກພື້ນອາຊີອາຄະເນດີ: ໄຕເໜືອ, ໄຕກາງ ແລະ ໄຕຕາເວັນຕົກ ສຽງໃຕ້.

ມ.໑ ໄຕເໜືອ:

ພາສາຖິ່ນໄຕເໜືອສ່ວນໃຫຍ່ກໍມີຢູ່ໃນກວາງເຈົາ ແລະ ກວາງສີ ໃນປະເທດຈີນເຊັ່ນ: ພາສາຈ້ວງ, ພາສາຢູຢີ, ພາສາວູມີງເປັນຕົ້ນ. ຄົນທີ່ໃຊ້ພາສາແຂງນີ້ ມີຈຳນວນໜ້ອຍຄື: ພາສາຮາຍ (ຢ້າງ) ໃນຫວຽດນາມເໜືອ ແລະ ລາວ (ຜົ້ງສາລີ ແລະຫົວຂອງ), ຢູ່ແຂວງຄຳມ່ວນກໍມີພາສາແຊັກ (ທວກ) ເຊິ່ງສຳຄັນຫຼາຍ ແລະໜ້າຮູ້ ເພາະວ່າສຽງຂອງໄຕເດີມຍັງຕິດຢູ່ຢ່າງແກະບໍ່ອອກ. ທ່ານ ເມຊີ (Macey) ຍັງຕື່ມຄວາມເຫັນອີກວ່າ ພາສາແຊັກນີ້ມີຢູ່ຕາມແຄມແມ່ນ້ຳກະດິງເໝືອນກັນ ແຕ່ປັດຈຸບັນນີ້ ກໍໄດ້ອົບພະຍົບໄປທາງໃຕ້ໝົດ.

ມ.໒ ໄຕກາງ

ໄຕກາງໃຊ້ກັນຢູ່ຫວຽດນາມ ແລະ ກວາງສີ. ພາສາແຂງໝວດນີ້ ແຕກຕ່າງກັນຫຼາຍ ແລະ ຄົນຫວຽດນາມໃຫ້ຊື່ວ່າ ໂຖ ຫຼື ນຸງ. ນອກນັ້ນກໍຍັງມີພາສາຖິ່ນອີກຮຽກວ່າ ນຸງຕາວັນຕົກທີ່ໄດ້ອົບພະຍົບໄປຢູ່ລາວກາຍໃນຫວຽດນາມພາກເໜືອແລ້ວ.

---

[1] Li 1959

24/VII
ຫ້າມຈຳໜ່າຍ

໑.໑ ໄຕຕາເວັນຕົກສຽງໃຕ້

ກ. ພາສາແມ່

ດິນແດນຫວຽດນາມພາກເໜືອດ້ານຕາເວັນຕົກມີຊື່ວ່າ ສິບສອງຈຸໄຕ (ສິບສອງຈຸໄທ) ເຊິ່ງເປັນຖິ່ນເກີດຂອງພາສາເດີມ ແລະເປັນແມ່ຂອງພາສາໄຕທັງໝົດທີ່ມີຢູ່ໃນລາວ, ໄທ, ພະມ້າ, ອິດສາ ແລະ ຍຸນນ່ານ. ສະນັ້ນ ນັກພາສາສາດ ຈຶ່ງຖືວ່າພາສາເຫຼົ່ານີ້ ແຕກຂະຫຍາຍອອກຈາກດິນແດນດັ່ງກ່າວ.

ຂ. ພາສາຖິ່ນຕ່າງໆ

ເຫດຜົນສຳຄັນທີ່ເນັ້ນໃຫ້ເຮົາຮູ້ວ່າ ສິບສອງຈຸໄຕເປັນຖິ່ນເກີດຂອງພາສາໄຕຕາເວັນຕົກສຽງໃຕ້ນັ້ນ ກໍເພາະວ່າ ມີພາສາໃຊ້ຫຼາຍໃນຂອບເຂດອັນແຄບໆ. ຢູ່ສິບສອງຈຸໄຕ ແລະອ້ອມແອ້ມໃກ້ໆນັ້ນມີພາສາລື້, ພາສາໄທດຳ, ພາສາໄທດ່ອນ (ຂາວ), ພາສາໄທແດງ, ພາສາໄທເໜືອ (ຕ່າງກັນກັບແຂວງໃຕ້ເໜືອ), ພາສາລາວ (ເມືອງງອຍ), ພາສາພວນ, ພາສາຜູ້ໄທ, ພາສາໄທເມີຍ, ພາສາໄທຍໍ, ພາສາໄທໂຢ້ຍ ຯລຯ.

+ ພາສາແຂວງໄຕຕາເວັນຕົກສຽງໃຕ້ມີ ສອງສ່ວນຄື: ສ່ວນ *ປ* ແລະ ສ່ວນ *ພ* ໃນຈຳພວກສ່ວນ *ປ* ພະຍັນຊະນະຕົ້ນທີ່ອອກສຽງກັກກ້ອງຄື: *b, *d, *g (ພະຍັນຊະນະສິຖິນ); ຄຳທີ່ໃຊ້ພະຍັນຊະນະ *ພ ທ ຄ* ອອກສຽງຄື *ປ ຕ ກ* ແຕ່ສຽງທີ່ຜັນດ້ວຍວັນນະຍຸດນັ້ນຕ່າງໆ (ພາສາທີ່ຈັດເຂົ້າໄວ້ໃນສ່ວນ *ປ* ມີຄື: ໄທດຳ, ໄທດ່ອນ, ໄທແດງ, ໄທລື້, ໄທຫຼວງ(ຊານຢູ່ພະມ້າ), ໄທເຂີນ, ໄທຍວນ (ຄຳເມືອງ) ແລະໄທອະຫົມ.

+ ໃນພວກພາສາສ່ວນ *ພ* ຄື ລາວ, ໄທພາກໃຕ້, ໄທເໜືອ, ພວນ ແລະ ໄທສະຫຍາມ ອັກສອນຕ່ຳທີ່ອອກສຽງອັນນັ້ນເປັນພະຍັນຊະນະທະນິດ) ພາສາໝວດ "ພ" ກໍແບ່ງອອກເປັນສອງສ່ວນ ຍ່ອຍອີກຄື: (ເໜືອ ພວນ ໄທສະຫຍາມ) ແລະ (ລາວ ໄທພາກໃຕ້) ເຫດຜົນໃນການແບ່ງນີ້ ກໍກ່ຽວກັບການໃຊ້ວັນນະຍຸດໂທນັ້ນ ມີສຽງຕ່າງກັນກັບພະຍາງເປັນໝວດໃນພະຍັນຊະນະກາໆ ຫຼື ເມື່ອທີ່ໃຊ້ວັນນະຍຸດໂທ. ຕົວຢ່າງ ເກົ່າ, ຂ້າ ແລະ ກ້າ ມີການຜັນສຽງຕ່າງກັນ. ພາສາໄທພາກໃຕ້ກໍມີລັກສະນະນີ້ອີກ ແຕ່ພາສາພວນ, ພາສາເໜືອ ແລະພາສາໄທສະຫຍາມນັ້ນຕ່າງ...

* ເຫດ ເພັ່ນ ໃນການແບ່ງ 2 ໝວດ (ຄືໝວດ ປ ແລະ ໝວດ ພ) ຍ້ອນ ການອອກສຽງບໍ່ຄືກັນ.

ພາສາໄຕເດີມຕາເວັນຕົກສຽງໃຕ້ ມີ 2 ໝວດ

((ໝວດ ປ))
ໄທດຳ- ໄທດ່ອນ- ໄທແດງ
ໄທລື້- ໄທຫຼວງ- ໄທເຂີນ
ໄທຍວນ- ໄທອະຫົມ

((ໝວດ ພ))
- ເໜືອ
  - ພວນ
  - ໄທສະຫຍາມ
- ລາວ
  - ໄທພາກໃຕ້

ຄ. ພາກພູມີສາດ:

ເຮົາສາມາດຊີ້ແຈງທາງພູມສາດວ່າ ບໍລິເວນທີ່ຢູ່ຂອງພາສາໝວດ *ປ* ແລະ ໝວດ *ພ* ນີ້ແມ່ນ ສິບສອງຈຸໄທລະຫວ່າງເມືອງລາ (ສົງຫລາ) ແລະເມືອງວາດ. ຄົນໄທດຳເມືອງລາກໍປາກພາສາໝວດ *ປ* ຊະນິດໜຶ່ງອີກ, ແຕ່ຄົນໄທດຳເມືອງວາດນັ້ນ ປາກພາສາໝວດ *ພ* ຄືພາສາເມືອງຊາ (ຊາເໜືອ) ແລະ ຊຽງຄໍ້ ສ່ວນພາສາລາວເດີມ ກໍມີຢູ່ໃກ້ເມືອງງອຍ.

① ເມືອງລາ ຢູ່ເມືອງຊິງ ຕິດກັບ ແຂວງ ຫຼວງນ້ຳທາ, ເມືອງວາດ ຢູ່ແຂວງ ຫຼວງນ້ຳທາ

ຕາມຫຼັກຖານທີ່ໄດ້ນໍາມາອ້າງອີງ ກ່ຽວກັບການນໍາໃຊ້ວັນນະຍຸດນັ້ນ ເຮົາສາມາດສັນນິຖານວ່າ ພາສາສຸໂຂໄທມາຈາກຫຼວງພະບາງ ແລະພາສາໄທພາກໃຕ້ມາຈາກສຸໂຂໄທ. ພາສາໄທອະຍຸດທະຍາ (ໄທສະຫຍາມ) ນັ້ນມາຈາກພາສາເໜືອ-ພວນ. ຖ້າສຶກສາຄົ້ນຄວ້າເບິ່ງການອົບພະຍົບຂອງຊາວໄຕໃນພາກພື້ນອາຊີອາຄະເນແລ້ວ ຄົງໄດ້ຄວາມແຈ່ມແຈ້ງກວ່າທີ່ເລົ່າມານີ້.

ພາສາໄຕໃນຫວຽດນາມພາກເໜືອມີປະຫວັດການຫຍໍ້ໆດັ່ງນີ້: ແມ່ນໍ້າແດງເປັນຊາຍແດນລະຫວ່າງໄທດໍາໄທດ່ອນທາງຝັ່ງຊ້າຍ ແລະ ພາສາໂຖທາງຝັ່ງຂວາ. ໄທດ່ອນຢູ່ໃກ້ແຄມນໍ້າສ່ວນໄທດໍານັ້ນຢູ່ອ້ອມແອ້ມເມືອງລໍ່*. ເມືອງລໍ່ເປັນຊື່ແຮກພາຍຫຼັງລົງມາແຕ່ເມືອງຟ້າ (ແຖນ), ຈາກເມືອງລໍ່ກໍໄດ້ອົບພະຍົບໄປທາງພາກຕາເວັນຕົກ. ນອກຈາກນັ້ນກໍມີໄທລື້ຢູ່ເມືອງຟົງໂທຮອດອູເໜືອ ແລະສິບສອງປັນນາ.

ບ່ອນຢູ່ຂອງພາສາລາວເດີມກໍເປັນໜ້າສົນໃຈທີ່ສຸດ. ແດນເດີມຂອງພາສາຖິ່ນຫຼວງພະບາງແມ່ນເມືອງບຸ້ມໃກ້ເມືອງແຖແຖບແມ່ນໍ້າດໍາທາງຕາເວັນຕົກຂອງແຂວງຊໍາເໜືອ.ທາງຕາເວັນອອກຂອງແຂວງຊໍາເໜືອກໍເປັນບ້ານເດີມຂອງພາສາລາວອີກສ່ວນໜຶ່ງ ເຊິ່ງມີພາສາໂຢ້ຍ, ພາສາຍໍ້. ອາດຈະແມ່ນວ່າ ພາສາລາວມາຮອດດິນແດນນີ້ກ່ອນພວກໄທເໜືອ ແລະພວກໄທດໍາຈຶ່ງເຂົ້າມາຜ່າພາສາເປັນສອງສ່ວນ ແລ້ວພາສາຫຼວງພະບາງເລີຍຕາມແມ່ນໍ້າຂອງລົງໄປຮອດພາກໃຕ້ຂອງເມືອງລາວແຫ່ງໜຶ່ງ ແລະຮອດສຸໂຂໄທຕໍ່ໄປທາພາກໃຕ້ຂອງເມືອງໄທ.

ພາສາລາວ-ໄທພາກໃຕ້ ກໍແບ່ງອອກເປັນສາມສ່ວນ: ສຸໂຂໄທ ຫຼວງພະບາງ ແລະທົ່ວພັນ. ພາສາຖິ່ນຫຼວງພະບາງກໍແບ່ງອອກເປັນສາມສ່ວນອີກ: ຫຼວງພະບາງ, ວຽງຈັນ ແລະພາກໃຕ້. ພາສາຖິ່ນທົ່ວພັນໄດ້ຍ້າຍໄປຢູ່ພາກອີສານ ເຊິ່ງມີຢູ່ປັດຈຸບັນນີ້ ໃນຈັງຫວັດສະກົນນະຄອນ ແລະໂຄລາດ. ທ່ານ ບຣາວ (Brown 1965) ໄດ້ຈັດວາງໄວ້ຢ່າງແຈ່ມແຈ້ງດີສໍາລັບໄທພາກໃຕ້.

ເພື່ອເຂົ້າໃຈດີຂໍເຊີນເບິ່ງແຜນສະແດງເຖິງແມ່ຂອງພາສາລາວ ດັ່ງຕໍ່ໄປນີ້:

* ຕາມປະຫວັດສາດໄທດໍາ


ສິບສອງຈຸໄທ
ພາສາລາວເດີມ
ສຸໂຂໄທ
ຫຼວງພະບາງ
ຫຼວງພະບາງ
ເມືອງງອຍ
ນ້ຳບາກ
ດ່ານຊ້າຍ
ແກ່ນທ້າວ
ເລີຍ
ຫົວພັນ
ຍໍ້
ໂປ້ຍ
ກະເລີງ
ວຽງຈັນ
ວຽງຈັນ
ທຸລະຄົມ
ຫລົ່ມສັກ
ນະຄອນສະຫວັນ
ໄຊຍະພູມ
ລາວໃຕ້
ຮ້ອຍເອັດ
ອຸບົນ
ບົວໃຫຍ່
ຂອນແກ່ນ
ອຸດອນ
ສີສະເກດ
ທ່າຕູ້ມ
ສະຫວັນນະເຂດ
ປາກເຊ
ໄທພາກໃຕ້
ໂຄລາດ

II. ການກຳເນີດ ແລະ ຂະຫຍາຍຕົວຂອງພາສາລາວ

1. ລັກສະນະພາສາລາວໃນເບື້ອງຕົ້ນ

ພາສາລາວ ກໍເຊັ່ນດຽວກັບພາສາທັງຫຼາຍໃນໂລກ ທີ່ໄດ້ກຳເນີດມາຈາກການອອກແຮງງານຂອງຄົນເຮົາ, ມັນໄດ້ເປັນພາຫະນະໃນການແລກປ່ຽນຄຳເວົ້າແນວຄິດທີ່ສຳຄັນລະຫວ່າງຄົນລາວດ້ວຍກັນ ພ້ອມກັນນັ້ນມັນຍັງເປັນອຸປະກອນໃນການສໍ່ສະແດງເຖິງແນວຄິດຈິດໃຈ ແລະຄວາມມຸ່ງມາດປາດຖະໜາຂອງຄົນລາວ ຕະຫຼອດເຖິງການປະດິດຄິດແຕ່ງວັດທະນະທຳທາງດ້ານຈິດໃຈອີກນຳ.

ພາສາລາວໃນເບື້ອງຕົ້ນ ຫຼືທີ່ເອີ້ນວ່າ ພາສາລາວເດີມນັ້ນ ເປັນພາສາທີ່ມີລັກສະນະພະຍາງດຽວ ຫຼື ເປັນຄຳໂດດລ້ວນໆ ແຕ່ລະສັບຕ່າງກໍປະກອບມີພຽງພະຍາງດຽວເທົ່ານັ້ນເຊັ່ນ: ພໍ່ ແມ່ ອ້າຍ ເອື້ອຍ ນ້ອງ ຄົນ ເຮືອນ ຈູງ ຍູ້ ສາມ ໝູ ໝາ ເປັດ ໄກ່ ໄປ ມາ ຍ່າງ ແລ່ນ ເປັນຕົ້ນ ໃນເມື່ອຕ້ອງການເວົ້າເຖິງເຫດການຕ່າງໆ ທີ່ຕ້ອງໃຊ້ຫຼາຍສັບນຳກັນ ເພື່ອປະກອບເປັນປະໂຫຍກ (ຄວາມເວົ້າ) ທີ່ມີສັບພະຍາງດຽວຫຼາຍສັບຮຽງກັນໄປ ຊຶ່ງໃນນັ້ນ ສັບພະຍາງດຽວແຕ່ລະສັບຍັງຄົງຮັກສາຄວາມໝາຍເດີມຂອງມັນຢູ່ ເຊັ່ນ: ຄົນກິນເຂົ້າ, ເຂົາໄປຫຼິ້ນ, ໝູເຮັດນາໝາກິນເຂົ້າ ດັ່ງນີ້ເປັນຕົ້ນ.

ບາງນໍລະນີ ຄວາມໝາຍເດີມຂອງສັບພະຍາງດຽວສອງສັບ ທີ່ປະກອບເຂົ້າກັນນັ້ນ ກໍເຊື່ອມເຂົ້າກັນເປັນຄວາມໝາຍລວມອັນໃໝ່ ແຕ່ກໍຍັງຮັກສາຄວາມໝາຍກົກເຄົ້າຂອງແຕ່ລະຄຳສັບພະຍາງດຽວນັ້ນຢູ່ເຊັ່ນ: ພໍ່ນາ, ແມ່ເຮືອນ, ພໍ່ຄ້າ, ທາງກວຽນ.....

ພາສາລາວລັກສະນະພະຍາງດຽວແບບນີ້ ແຜ່ຂະຫຍາຍຢ່າງກວ້າງຂວາງຢູ່ຕາມບັນດາເມືອງບູຮານຂອງລາວ ໃນຕະຫຼອດໄລຍະເວລາທີ່ສາສະໜາພຸດ ແລະພາມ ພ້ອມທັງຄຳພີຕ່າງໆທີ່ເປັນພາສາສັນສະກິດ ແລະ ປາລີບໍ່ທັນເຂົ້າມາມີອິດທິພົນໃນດິນແດນດັ່ງກ່າວນັ້ນເທື່ອ. ໃນເວລານັ້ນ ສັງຄົມລາວຍັງຢູ່ໃນຂັ້ນສັກດີນາເບື້ອງຕົ້ນກະແຈກກະຈາຍ, ການແບ່ງຊົນຊັ້ນວັນນະຍັງບໍ່ທັນເລິກເຊິ່ງ. ສະນັ້ນ ໃນພາສາລາວເດີມ ຄຳແທນນາມຈຶ່ງມີແຕ່ຄຳວ່າ: ກູ, ມຶງ, ຕູ, ສູ, ເຮົາ, ໂຕ, ເຂົາ... (ຄຳແທນນາມເຫຼົ່ານີ້ ເປັນຄຳທີ່ນິຍົມໃຊ້ກັນໃນສັງຄົມລາວທົ່ວໄປ).

ຕົວຢ່າງຄຳຜະຫຍາ ເຊິ່ງຖືວ່າເປັນວັນນະຄະດີດັ້ງເດີມຂອງລາວເຫັນວ່າ ບໍ່ມີຄຳປາລີ ແລະສັນສະກິດຢູ່ນຳເລີຍ:

ບໍ່ຕ້ອງຕາດ	*ຄືບ້ອງແກວ່ງຫຼາ*
ບໍ່ຕ້ອງວີ	*ຄືບ້ອງແກວ່ງອົ້ວ*
ຟ້າຍິກຄື້ອ	*ຄືບ້ອງແກວ່ງແຂນ*

2. ການຂະຫຍາຍຕົວຂອງພາສາລາວ:

ເມື່ອສາສະໜາພຸດ ແລະ ພາມແຜ່ຂະຫຍາຍມາເຖິງດິນແດນລາວແລ້ວ, ພາສາສັນສະກິດ ແລະ ປາລີ ເຊິ່ງເປັນພາຫະນະຖ່າຍທອດຄຳສອນ ແລະເລື່ອງລາວຕ່າງໆຂອງພຸດ ແລະພາມ ກໍທະຍອຍ ເຂົ້າມາປົນກັບພາສາລາວເດີມ.

ໃນຂັ້ນຕົ້ນແມ່ນສາສະໜາພຸດລັດທິມະຫາຍານ ເຊິ່ງບັນທຶກຄຳສັ່ງສອນຂອງພະພຸດທະເຈົ້າດ້ວຍພາສາສັນສະກິດ ໄດ້ແຜ່ເຂົ້າສູ່ດິນແດນລາວເດີມ (ອານາຈັກ ໜອງແສ) ໃນສະຕະວັດທີ 1, ແຕ່ພາສາສັນສະກິດໃນສະໄໝດັ່ງກ່າວ ບໍ່ທັນເຂົ້າມາປົນເປກັບພາສາລາວເດີມ ຢ່າງເລິກເຊິ່ງເທື່ອ.

ເມື່ອຕົກມາຮອດສະຕະວັດທີ 14, ສະໄໝເຈົ້າຟ້າງຸ່ມນຳເອົາພຸດທະສາສາສະໜາລັດທິຫີນະຍານແບບລັງກາວົງຈາກກຳປູເຈຍເຂົ້າມາສູ່ອານາຈັກລ້ານຊ້າງ ພາສາປາລີກໍໄດ້ເຂົ້າມາມີບົດບາດປົນຢູ່ກັບພາສາລາວ, ພ້ອມກັນນັ້ນ ພວກສັກດີນາຍັງພາກັນເຄົາລົບນັບຖືລັດທິສາສະໜາພາມນຳອີກ, ດ້ວຍເຫດນັ້ນຈຶ່ງເຮັດໃຫ້ພາສາສັນສະກິດ ເຂົ້າມາມີບົດບາດປົນຢູ່ກັບພາສາລາວຕື່ມອີກ. ນອກຈາກພາສາປາລີ-ສັນສະກິດແລ້ວ ກໍຍັງມີພາສາຂະແມ.

ພາສາປາລີ- ສັນສະກິດໄດ້ເຂົ້າມາປົນກັບພາສາລາວຢ່າງເລິກເຊິ່ງ ແມ່ນພົບແຕ່ມີການແປຄຳພີພະໄຕປີດົກ ແລະເລື່ອງຊາດົກຕ່າງໆໃນພາສາລາວລະຫວ່າງສະຕະວັດທີ 15 ສະໄໝພະຍາຫຼ້າແສນໄຕພູວະນາດ. ໃນໄລຍະດັ່ງກ່າວນີ້ ພາສາສັນສະກິດ- ປາລີ ໄດ້ສະແດງຄວາມສາມາດຂອງຕົນໃນການເວົ້າເຖິງເຫດການໃໝ່ໆທີ່ເກີດຂຶ້ນ ພ້ອມໆກັນກັບຂະຫຍາຍຕົວຂອງສັງຄົມລາວ ເຊິ່ງພາສາລາວບໍ່ສາມາດຈະສະແດງແຕ່ຜູ້ດຽວໄດ້. ສະນັ້ນ ພາສາລາວຈຶ່ງໂອນຮັບເອົາສັບຕ່າງໆຈາກພາສາສັນສະກິດ ແລະປາລີເຂົ້າມາໄຂ່ມຢູ່ໃນຄັງສາງ (ປະມວນ) ສັບຂອງຕົນໂດຍທັບປ່ຽນສັບເຫຼົ່ານັ້ນອອກສຽງເປັນສຳນຽງລາວ ແລະເຂົ້າກັບລັກສະນະສະເພາະຂອງໄວຍາກອນລາວ. ເພາະສະນັ້ນໃນພາສາລາວຈຶ່ງເກີດມີສັບລາວໃໝ່ໆ ທີ່ໄດ້ເຄົ້າມາຈາກພາສາປາລີ ແລະສັນສະກິດຢ່າງຫຼວງຫຼາຍ ແລະ ຈຳນວນໜຶ່ງກໍໄດ້ເຄົ້າມາຈາກພາສາ ຂະແມ.

ຕົວຢ່າງ: - ສັບທີ່ໄດ້ເຄົ້າມາຈາກພາສາສັນສະກິດ

ສະຫວັນ(ສວຣຄ), ພິກສາ (ວຊິກສ), ລະດູ (ຣິດູ), ອັກສອນສາດ (ອັກສຣສາດຣ),

ແພດ (ເວທະຍາ), ປັດຊະຍາ(ປຣັຊຍາ)

- ສັບທີ່ໄດ້ເຄົ້າມາຈາກປາລີ

ສະໄໝ (ສມຍ), ນິດໄສ(ນິສສຍ), ໄວຍາກອນ(ເວຍຍາກຣນ), ນະຄອນ (ນຄຣ)

- ສັບທີ່ໄດ້ເຄົ້າມາຈາກພາສາຂະແມ

ສຳເລັດ(ສັອມເຣັຈ), ທຸະທີ່ນ (ຖນົລ), ຈະເລີນ (ຈເຣີນ)

ຫຼັກການແຕ່ງສັບໃໝ່ກໍອຸດົມຮັ່ງມີ ແລະສະດວກຂຶ້ນຕື່ມອີກ: ນອກຈາກວິທີໃຊ້ສັບພະຍາງດຽວສອງສັບ ຫຼື ຫຼາຍສັບມາລວມຕໍ່ເຂົ້າກັນໃຫ້ກາຍເປັນສັບຫຼາຍພະຍາງດັ່ງທີ່ເຮົາເຄີຍເຮັດມາກ່ອນແລ້ວ, ຍັງມີວິທີສົນທິ ແລະສະໝາດ ຕາມແບບພາສາປາລີ-ສັນສະກິດ.

ສົນທິ ແມ່ນການຕໍ່ເອົາຄຳສັບສອງສັບຂອງພາສາປາລີ-ສັນສະກິດ ເຂົ້າເປັນຄຳດຽວໂດຍມີການປ່ຽນແປງສະຫຼະ ຫຼືພະຍັນຊະນະ ເພື່ອຜັນປ່ຽນມາເປັນຄວາມລາວ ທີ່ມີລັກສະນະອ່ອນນວນກວ່າ.

ຕົວຢ່າງ: *ສຸຂະ + ອະພິປາລ = ສຸຂາພິບານ*

ກັມມະ + ອາຊີບ = ກຳມາຊີບ

- ສະໝາດ ແມ່ນການຫຍໍ້ຄຳສັບສອງສັບໃນພາສາປາລີ- ສັນສະກິດໃຫ້ເປັນຄຳດຽວ.

ຕົວຢ່າງ: *ມະຫັນໂຕ + ປຸຣິໂສ = ມະຫາປຸຣິໂສ = ມະຫາບຸລຸດ*

ວິໂຣ + ຊະໂນ = ວິຣະຊະໂນ = ວິລະຊົນ

ນອກຈາກນັ້ນ ເມື່ອມີການແບ່ງຊົນຊັ້ນວັນນະ ໃນສັງຄົມສັກດີນາລາວນັບມື້ນັບຈະແຈ້ງ ແລະເລິກເຊິ່ງ

ຂຶ້ນໃນປະມວນສັບພາສາລາວກໍປະກົດມີຄຳສັບໃໝ່ໆຂຶ້ນຕື່ມເຊັ່ນ: ຂ້ອຍ, ເຈົ້າ, ພະຍາ, ຂ້ານ້ອຍ, ອາໍດຍາ, ຂ້າພະເຈົ້າ, ພະອົງ ຫຼື ຝ່າບາດ, ຂ້າພະບາດ ຫຼື ຜູ້ຂ້າ ແລະອື່ນໆອີກ.

ພ້ອມກັນນັ້ນ ຍັງເກີດມີສັບໃຊ້ສະເພາະໃນວົງການຂອງພວກສັກດີນາຊັ້ນສູງເຊັ່ນ: ໃຊ້ໃນຂອບເຂດພະລາຊະວັງ ຫຼື ໃຊ້ໃນເວລາລົມກັບເຈົ້າຊີວິດ ແລະ ເສນາອາມາດຊັ້ນສູງ.ສັບສະເພາະແບບນີ້ມີລວມກັນເປັນລະບົບຕ່າງຫາກ ເຊິ່ງເອີ້ນວ່າ " ລາຊາສັບ " ອັນໄດ້ເຄົ້າມູນມາຈາກພາສາຂະແມ- ປາລີ - ສັນສະກິດ.

ຕົວຢ່າງ: *ສະເດັດ, ສະເຫວີຍ, ບັນທົມ, ເກສາ, ສົງ, ພະເນດ, ພະກັນ, ພະທັດ, ພະບາດ...*

ສ່ວນວົງການພຸດທະສາສະໜາ ທີ່ໄດ້ມີບົດບາດເປັນສາສະໜາປະຈຳຊາດນັ້ນ ກໍມີສັບສະເພາະຂອງຕົນຄືກັນເຊັ່ນ: *ອາຕະມາ, ນິມົນ, ສັນ, ຈຳວັດ, ເທດ, ເທດສະໜາ, ພໍ່ອອກ, ແມ່ອອກ, ຍາດໂຍມ...* ຈາກສາເຫດດັ່ງກ່າວນີ້ ໄດ້ພາໃຫ້ພາສາລາວເດີນຂະຫຍາຍຕົວຢ່າງວ່ອງໄວ ແລະອຸດົມຮັ່ງມີຂຶ້ນຕື່ມ, ຈາກບ່ອນເປັນພາສາພື້ນເມືອງກາຍມາເປັນທາງການ ທີ່ມີພາສາວັນນະຄະດີ ອັນສະເໜາະເໜາະມ່ວນ ແລະແຫຼມຄົມ. ຈາກບ່ອນພາສາເປັນພະຍາງດຽວ ກາຍເປັນພາສາທີ່ມີຫຼາຍພະຍາງ. ສິ່ງເຫຼົ່ານີ້ ໄດ້ພາໃຫ້ພາສາລາວນັບມື້ນັບມີສະມັດຖະພາບສູງຂຶ້ນ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຄົນລາວ ແລະສັງຄົມລາວທີ່ນັບມື້ນັບຂະຫຍາຍຕົວສູງຂຶ້ນຢ່າງບໍ່ຢຸດຢັ້ງ. ໂດຍສະເພາະຢ່າງຍິ່ງມາເຖິງສະຕະວັດທີ 17 ເມື່ອສັງຄົມສັກດີນາລາວ ແລະວັດທະນະທຳລາວໄດ້ຮັບການພັດທະນາສູ່ຍອດສູງ,ພາສາວັນນະຄະດີລາວຂະຫຍາຍຕົວຢ່າງງອກງາມ ອັນສະແດງອອກໃນປຶ້ມວັນນະກຳ ຕ່າງໆທີ່ດີເດັ່ນເຊິ່ງຊາວລາວທຸກທົ່ວໜ້າຍັງນິຍົມຊົມຊອບ ແລະເອກອ້າງທະນົງໃຈນຳຈົນເຖິງທຸກວັນນີ້ ເຊັ່ນ: ເລື່ອງ "ສັງສິນໄຊ", "ທ້າວຮຸ່ງທ້າວເຈືອງ", "ກາລະເກດ", "ນາງແຕງອ່ອນ" ທີ່ຂຽນເປັນຄຳກອນ ແລະເລື່ອງ "ສຽວສະຫວາດ" ທີ່ຂຽນເປັນຄຳຮ້ອຍແກ້ວ. ແຕ່ໜ້າເສຍດາຍ ທີ່ການຂະຫຍາຍຕົວຂອງພາສາລາວໄດ້ຢຸດສະຫງັກໄປເປັນເວລາຫຼາຍ 10 ປີ ນັບແຕ່ປະເທດລາວຖືກພວກສັກດີນາສະຫຍາມເຂົ້າມາບຸກຍຶດຄອບຄອງ ແລະຕໍ່ມາກໍຖືກພວກລ່າເມືອງຂຶ້ນຝຣັ່ງຕັດແບ່ງຍຶດຄອງ ແລະ ຫຼັງຈາກນັ້ນ ກໍຖືກພວກຈັກກະພັດອາເມລິກາເຂົ້າມາຮຸກຮານ ແລະຄວບຄຸມຕໍ່ຈົນເຖິງວັນທີ 2 ທັນວາ 1975.

3. ຊະຕາກຳຂອງພາສາລາວໃນໄລຍະສັກດີນາ ແລະຈັກກະພັດຕ່າງດ້າວເຂົ້າມາຮຸກຮານ:

ໃນສະໄໝພວກສັກດີນາໄທສະຫຍາມມາບຸກຍຶດຄອບຄອງດິນແດນລາວນັ້ນ (ໂດຍສະເພາະແມ່ນແຕ່ປີ 1829-1893), ພາສາລາວແລະວັດທະນະທຳລາວເວົ້າລວມໄດ້ຖືກຢຽບຢ່ຳທຳລາຍຢ່າງປ່າເຖື່ອນທີ່ສຸດ.ບົດວັນນະກຳຂອງລາວພ້ອມທັງນັກຂຽນ, ນັກກະວີ ແລະໝໍລຳທີ່ດີເດັ່ນໄດ້ຖືກກວາດຕ້ອນໄປໄທ,ປະຊາຊົນລາວໃນເຂດທີ່ໄທຍຶດຄອງນັ້ນໄດ້ຖືກບັງຄັບໃຫ້ຮຽນ ແລະປາກພາສາໄທ ໂດຍຫວັງຢາກໃຫ້ຄົນລາວເຫຼົ່ານັ້ນຫຼົງລືມປະລະຄວາມເປັນລາວຂອງຕົນ ແລ້ວຍອມກາຍເປັນຄົນເຜົ່າໜຶ່ງຂອງໄທ, ຂຶ້ນກັບໄທ. ຈຸດປະສົງດັ່ງກ່າວນີ້, ພວກປະຕິການຂວາຈັດໄທ ທີ່ເຊີດຊູລັດທິໄທໃຫຍ່ ຍັງຄົງສືບຕໍ່ປະຕິບັດມາຈົນເຖິງປັດຈຸບັນ.

ແຕ່ເຖິງປານນັ້ນກໍຕາມ ມາຮອດປັດຈຸບັນເກືອບສະຕະວັດໜຶ່ງໄດ້ຜ່ານມາແລ້ວ ນັບແຕ່ພວກລ່າເມືອງຂຶ້ນຝຣັ່ງ ມາຕົກລົງຕັດແບ່ງດິນແດນລາວກັບໄທ, ຄົນລາວທີ່ຕົກຢູ່ໃຕ້ການຄວບຄຸມຂອງໄທກໍຍັງ ຄົງທະນຸຖະໜອມພາສາລາວຂອງຕົນໄວ້ ແລະຍັງໃຊ້ພາສາລາວໃນວົງການເຄື່ອນໄຫວຕ່າງໆຂອງຕົນໄວ້ ແລະຍັງໃຊ້ພາສາລາວ ໃນວົງການເຄື່ອນໄຫວຕ່າງໆຂອງຕົນ ເຖິງວ່າພາສາລາວຢູ່ພາກອີສານຈະ ຖືກພາສາໄທແຊກຊຶມເຂົ້າມາປົນເປຢູ່ນຳກໍຕາມ. ອາດເວົ້າໄດ້ວ່າ ຄົນລາວບໍ່ຕ່ຳກວ່າ 20 ລ້ານຄົນໃນພາກອີສານຂອງໄທປັດຈຸ

1829-1893

ບັນ ຍັງຄົງສືບຕໍ່ທະນຸຖະໜອມ ແລະໃຊ້ພາສາລາວຂອງຕົນຢູ່ ທັງໆທີ່ໂຮງຮຽນຕ່າງໆຢູ່ທົ່ວພາກອີສານນີ້ລ້ວນແຕ່ສອນດ້ວຍພາສາໄທທັງສິ້ນ.

ເມື່ອຝຣັ່ງເຂົ້າມາຕັດແບ່ງດິນແດນ ແລະຍຶດຄອງປະເທດລາວ, ເຂົາກໍໄດ້ນຳເອົາພາສາຝຣັ່ງມາເຜີຍແຜ່ ແລະບັງຄັບໃຫ້ໃຊ້ໃນວົງການລາຊະການ ໂດຍຖືເອົາພາສາລາວເປັນພາສາພື້ນເມືອງນອກວົງການ, ໃນໂຮງຮຽນ ແລະສຳນັກງານອົງການຕ່າງໆ ກໍລ້ວນແຕ່ໃຊ້ພາສາຝຣັ່ງ, ແຕ່ປານນັ້ນຄົນລາວຢູ່ຝັ່ງຊ້າຍແມ່ນ້ຳຂອງນັບທັງໄຊຍະບູລີ ແລະຈຳປາສັກ ກໍຍັງສືບຕໍ່ທະນຸຖະໜອມ ແລະໃຊ້ພາສາລາວຢູ່, ທັງໄດ້ປ້ອງກັນຕໍ່ສູ້ທວງໃຫ້ພາສາລາວກັບມາມີທີ່ຕັ້ງບົດບາດເປັນພາສາທາງການຄືນ.ປັນຍາຊົນລາວຜູ້ມີນ້ຳໃຈຮັກຊາດຕ່າງໆກໍພາກັນເຂົ້າຮ່ວມໃນການຕໍ່ສູ້ດັ່ງກ່າວນັ້ນຕາມລະດັບ ແຕກຕ່າງກັນ ເດັ່ນກວ່າໝູ່ແມ່ນການຕໍ່ສູ້ຢ່າງຈິງຈັງຂອງພວກປັນຍາຊົນລາວຜູ້ຮັກຊາດຊຶ່ງຕໍ່ມາໄດ້ ເຕົ້າໂຮມກັນເຂົ້າຢູ່ໃນແນວລາວອິດສະຫຼະ ຊຶ່ງໄດ້ເຕົ້າໂຮມກຳລັງແຮງມະຫາສານຂອງປະຊາຊົນລາວ ທັງຊາດ ຕໍ່ສູ້ຊີງໄຊກັບພວກລ່າເມືອງຂຶ້ນຝຣັ່ງ ແລະລູກມືຂອງເຂົາຈົນບັນລຸໄຊຊະນະອັນຍິ່ງໃຫຍ່ ໃນປີ 1954 ສາມາດພ້ອມກັບຫວຽດນາມ ແລະກຳປູເຈຍ ບັງຄັບໃຫ້ຝຣັ່ງຕ້ອງຍອມເຊັນສັນຍາເຊີແນວວ່າ ດ້ວຍການຮັບຮູ້ເອກະລາດ ແລະ ອະທິປະໄຕຂອງສາມປະເທດອິນດູຈີນ, ໃຈວຸ່ນຄັ້ງກ່າວ ໄດ້ສ້າງເງື່ອນໄຂບັງຄັບໃຫ້ພວກຈັກກະພັດອາເມລິກາທີ່ໂດດເຂົ້າມາແທນຝຣັ່ງຈຳຕ້ອງດັດແປງສັດຖະທຳມະນູນຄືນໃໝ່ໃນປີ 1956. ໃນລັດຖະທຳມະນູນສະບັບນີ້ ຊຶ່ງລົງວັນທີ **29/12/1956** ໄດ້ລະບຸໄວ້ວ່າພາສາລາວເປັນພາສາທາງລາຊະການໃນທົ່ວປະເທດລາວ. ແຕ່ໃນຕົວຈິງແລ້ວ ພາສາຝຣັ່ງຍັງຄົງສືບຕໍ່ຮັກສາທີ່ຕັ້ງບົດບາດອັນເກົ່າຂອງມັນຕາມໂຮງຮຽນ ແລະອົງການທາງລາຊະການຕ່າງໆ. ສ່ວນພາສາລາວນັ້ນພໍແຕ່ເປັນວິຊາໜຶ່ງໃນຈຳນວນວິຊາສອນຕາມໂຮງຮຽນຊັ້ນປະຖົມສຶກສາເທົ່ານັ້ນ. ນັບແຕ່ຊັ້ນປະຖົມຂຶ້ນໄປພາສາລາວໄດ້ກາຍເປັນຄື ພາສາຕ່າງປະເທດ ທີ່ພວກນັກຮຽນມີສິດເລືອກຮຽນຕາມສະໝັກໃຈ. ສະພາບແບບນີ້ໄດ້ແກ່ຍາວມາຮອດວັນທີ 2 ທັນວາ 1975.

ດ້ວຍທ່າອະທິບາຍທີ່ນັບມື້ນັບເສື່ອມໂຊມລົງຢ່າງຮ້າຍແຮງ, ໃນໄລຍະຫຼອດໄລຍະດັ່ງກ່າວນັ້ນ ຢູ່ໃນ**ເຂດຄວບຄຸມຊົ່ວຄາວຂອງຝ່າຍ**ລັດຖະບານຫຸ່ນວຽງຈັນ ພາສາລາວໄດ້ຖືກຢຽບຢ່ຳທຳລາຍຈົນ ກາຍເປັນພາສາຊອດກະຈາໄປໝົດ. ລັດທິລ່າເມືອງຂຶ້ນແບບໃໝ່ທີ່ຈັກກະພັດອາເມລິການຳເຂົ້າມາຄອບຄອງເຂດວຽງຈັນນັ້ນ ໄດ້ພາໃຫ້ເກີດຄວາມເສື່ອມໂຊມທີ່ແຜ່ລາມໄປຢ່າງກວ້າງຂວາງ ແລະເລິກເຊິ່ງໃນສັງຄົມລາວ, ໃນວັດທະນະທຳລາວ ຊຶ່ງໃນນັ້ນລວມມີພາສາລາວອີກດ້ວຍ. ແບບແຜນດຳລົງຊີວິດແບບເສື່ອມຊາມ ຕາມຮອຍຕາເວັນຕົກ ທີ່ແຜ່ລາມເຂົ້າມາຮອດເຂດວຽງຈັນ ໂດຍຜ່ານດິນແດນໄທເປັນຕົ້ນຕໍນັ້ນ ໄດ້ນຳ ເອົາພາສາອັງກິດ- ໄທ ເຂົ້າມາປົນເປກັບພາສາລາວ ໂດຍບໍ່ມີການເລືອກເຟັ້ນແຕ່ຢ່າງໃດ, ອັນພາໃຫ້ພາສາວັນນະຄະດີລາວທີ່ໄດ້ຮັບການເຈຍລະໄນຢ່າງສົດໃສ ແລະສວຍງາມມາແຕ່ກ່ອນນັ້ນ ຕ້ອງຕົກຢູ່ໃນສະພາບອັນເສົ້າໝອງ, ຊອດກະຈາ ຈົນເປັນໜ້າເຈັບໃຈ ແລະວິຕົກນຳ.

ໃນພາສາລາວເຂດວຽງຈັນ ໄດ້ປາກົດມີສັບຊອດກະຈາຂຶ້ນຕັ້ງຫຼວງຫຼາຍ ເຊັ່ນ: *ໂຊ (ແທນທີ່ຈະເວົ້າວ່າ ສະແດງ ຫຼື ໂຄສະນາ), ແຟຊັ່ນ (ແບບ), ໜັງ-ພາພະຍົນ (ຮູບເງົາ), ສະປອດ (ກິລາ), ຢັງມ (ເກັ່ງ), ບູ້ (ເຈົ້າຊູ້ ,ງາມ), ສະເຕດ (ເວທີ), ແຟນ (ຄົນຮັກ)...*

1954 [illegible]

4. ການຟື້ນຟູພາສາລາວໃນເຂດປົດປ່ອຍ ແລະໃນປະເທດ ສ.ປ.ປ. ລາວ

ໃນເວລາດຽວກັນນັ້ນ ຢູ່ໃນເຂດປົດປ່ອຍຂອງບັນດາກຳລັງຮັກຊາດໄດ້ມີການເຊີດຊູປັບປຸງພາສາລາວຢູ່ຕະຫຼອດມາ. ໃນໂຮງຮຽນແລະສຳນັກງານອົງການຕ່າງໆໃນທົ່ວເຂດປົດປ່ອຍ ກໍແມ່ນພາສາລາວເປັນພາສາທາງການແຕ່ພາສາດຽວເທົ່ານັ້ນ. ພະແນກສຶກສາສູນກາງ ແລະ ພະແນກໂຄສະນາອົບຮົມສູນກາງໄດ້ເອົາໃຈໃສ່ຢ່າງຫຼວງຫຼາຍ ແລະເປັນປະຈຳຕໍ່ການປັບປຸງເຈຍລະໄນພາສາລາວໃຫ້ລຶດໃສ ແລະອຸດົມຮັ່ງມີ, ມີລັກສະນະຊາດ, ວິທະຍາສາດ ແລະມະຫາຊົນ.

ການປະຕິວັດໄດ້ເຮັດໃຫ້ຄັງສາງປະມວນສັບລາວອຸດົມຮັ່ງມີແລະລຶດໃສຂຶ້ນຕື່ມດ້ວຍສັບລາວໃໝ່ຈຳນວນຫຼວງຫຼາຍທີ່ຖືກແຕ່ງຂຶ້ນມາຢ່າງຖືກຕ້ອງເໝາະສົມໂດຍເອົາພາສາລາວເດີມເປັນກົກເຄົ້າພື້ນຖານ ເຊັ່ນ: *ສູນກາງພັກ, ແນວໂຮມ, ອົງການຈັດຕັ້ງ, ມະຫາຊົນ, ລູກຣີ, ຕໍ່ຕ້ານ, ປົດ ປ່ອຍ, ພະນັກງານ, ນັກຮົບແຂ່ງຂັນ, ຕະລຸມບອນ, ບຸກໜ້າບືນຕົວ, ສູ້ຊົນ...* ມາໃນປີ 1967 ພະແນກສຶກສາສູນກາງໄດ້ພິມຈຳໜ່າຍ ປື້ມ "ໄວຍາກອນລາວ" ຂອງທ່ານ ພູມີ ວົງວິຈິດ ອອກເຜີຍ ແຜ່ຢ່າງກວ້າງຂວາງ. ໃນປື້ມເຫລັ້ມນີ້ ຜູ້ແຕ່ງໄດ້ປະສົບຜົນສຳເລັດ ຢ່າງ ໜ້າສັນລະເສີນ ໃນການ ພະຍາຍາມເຮັດໃຫ້ໄວຍາກອນລາວມີລັກສະນະຊາດ, ມະຫາຊົນ, ກ້າວໜ້າທັນສະໄໝ ແລະຖືກ ກັບວິທະຍາສາດເພື່ອເອົາເປັນຫລັກໃນການໃຊ້ພາສາລາວໃຫ້ຖືກຕ້ອງແລະເປັນເອກະພາບ ກັນໃນທົ່ວປະເທດ. ການປາກົດຕົວຂອງປື້ມໄວຍາກອນລາວເຫລັ້ມນີ້ ໄດ້ກາຍເປັນບາດລ້ຽວໃໝ່ທາງດ້ານຄຸນນະພາບໃນການຂະຫຍາຍຕົວຂອງພາສາລາວ, ພາໃຫ້ພາສາລາວກັບຄືນມາຫາກົກເຄົ້າແຫຼ່ງກຳເນີດຂອງມັນ ຄື ພາສາລາວເດີມ ທີ່ຍັງຢືນຢົງຢູ່ໃນໝູ່ປະຊາຊົນ. ພ້ອມກັນນີ້ກໍໄດ້ຮັບການຍົກລະດັບຂຶ້ນເທົ່າທຽມກັບຄວາມກ້າວໜ້າສີວິໄລຂອງສັງຄົມລາວ ໃນສະໄໝໃໝ່ອັນພາໃຫ້ພາສາລາວສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການທຸກດ້ານຂອງຍຸກສະໄໝແຫ່ງການປະຕິວັດຊາດປະຊາທິປະໄຕຂອງປະຊາຊົນລາວໄດ້. ການສະຖາປານາຂອງ ສ.ປ.ປ.ລ ເມື່ອວັນທີ 2 ທັນວາ 1975 ໄດ້ໄຂສັງກາດໃໝ່ໃຫ້ແກ່ການຂະຫຍາຍຕົວຂອງພາສາລາວ. ນັບວ່າເປັນເທື່ອທຳອິດໃນປະຫວັດສາດຕັ້ງຫຼາຍພັນປີຂອງຊາດລາວ. ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດໃນວັນທີ 2 ທັນວາ 1975 ໄດ້ລະບຸຢ່າງຈະແຈ້ງ ແລະຂາດຕົວວ່າ:

1/ ໃຫ້ໃຊ້ພາສາລາວເປັນພາສາກາງເປັນພາສາທາງລາຊະການ (ປັດຈຸບັນເອີ້ນວ່າທາງລັດຖະການ).

2/ ໃຫ້ເລີກໃຊ້ລາຊາສັບໃນການຂີດຂຽນ ແລະ ເວົ້າລົມປະຈຳວັນ, ເວັ້ນແຕ່ເສຍໃນກໍລະນີ ທີ່ໃຊ້ເຂົ້າໃນກາບກອນແລະວັນນະຄະດີໃນເວລາຈຳເປັນເທົ່ານັ້ນ.

ນັບຕັ້ງແຕ່ນັ້ນມາ ພາສາລາວໄດ້ຮັບການປັບປຸງ ແລະ ເຈຍລະໄນໃຫ້ອຸດົມຮັ່ງມີ ແລະ ລຶດໃສຂຶ້ນຢ່າງວ່ອງໄວ, ຢູ່ຕາມໂຮງຮຽນ ແລະມະຫາວິທະຍາໄລຕ່າງໆ ບໍ່ວ່າວິຊາໃດ ກໍລ້ວນແຕ່ ສອນເປັນພາສາລາວໝົດ (ນັບທັງວິຊາວິທະຍາສາດທຳມະຊາດ ທີ່ແຕ່ກ່ອນຢູ່ເຂດວຽງຈັນເກົ່າ ເຄີຍມີຜູ້ຫຼົງເຊື່ອວ່າ ບໍ່ອາດຈະປ່ຽນມາສອນເປັນພາສາລາວໄດ້). ຢູ່ໃນສຳນັກງານອົງການໃນກອງປະຊຸມ ຫຼື ພິທີທາງການຕ່າງໆທຸກໆເທື່ອກໍລ້ວນແຕ່ໃຊ້ພາສາລາວ. ການຄົ້ນຄວ້າພາສາລາວ ທັງໃນທາງເລິກ ແລະທາງກວ້າງກໍມີບາດກ້າວຂະຫຍາຍຕົວໃໝ່ຢ່າງໜ້າເພິ່ງພໍໃຈ.

ໃນໄລຍະຊາວກວ່າປີຜ່ານມານີ້, ຄັງສາງສັບພາສາລາວກໍໄດ້ເພີ່ມຄວາມອຸດົມຮັ່ງມີຂຶ້ນຢ່າງຫຼວງຫຼາຍ ແລະວ່ອງໄວທີ່ສຸດ, ຢູ່ຕາມໜາໜັງສືພິມ ແລະປື້ມຕ່າງໆຂອງ ສ.ປ.ປ. ລາວໄດ້ປາກົດມີສັບໃໝ່ນັບມື້

ນັບຫຼາຍຂຶ້ນ. ພວກນັກຄົ້ນຄວ້າລາວ ແລະຕ່າງປະເທດໄດ້ແຕ່ງ ແລະຈັດພິມວັດຈະນານຸກົມຕ່າງໆອອກມາຫຼາຍພໍສົມຄວນ. ນອກຈາກນັ້ນ ຢູ່ພາຍໃນກໍຄືຕ່າງປະເທດກໍໄດ້ມີການຄົ້ນຄວ້າຫຼາຍບັນຫາກ່ຽວກັບພາສາລາວເຊັ່ນ : ຫຼັກການຜັນສຽງໃນພາສາລາວ, ຫຼັກວາກະຍະສຳພັນໃນພາສາລາວ ແລະ ອື່ນໆ.

ທຸກສິ່ງທຸກຢ່າງເຫຼົ່ານີ້ ລ້ວນແຕ່ເປັນການປະກອບສ່ວນຢ່າງມີປະສິດທິພາບ ເຂົ້າໃນການປັບປຸງ ແລະ ຈະເລີນພາສາລາວໃຫ້ອຸດົມຮັ່ງມີ, ລຶດໃສ້, ມີລັກສະນະຊາດ, ກ້າວໜ້າທັນສະໄໝ ຖືກກັບວິທະຍາສາດ, ມີສະມັດຖະພາບສູງ, ສາມາດຕອບສະໜອງຄວາມຕ້ອງການໃນທຸກດ້ານຂອງຍຸກສະໄໝແຫ່ງການສ້າງສາປະເທດຊາດໄດ້ຢ່າງຄົບຖ້ວນບໍລິບູນຂຶ້ນນຳທຸກມື້.

ບົດທີ 15

ປະຫວັດຄວາມເປັນມາຂອງອັກສອນລາວ

I. ກົກເຄົ້າ ແລະ ຄວາມເປັນມາຂອງອັກສອນລາວ

ພາສາລາວແມ່ນພາສາໜຶ່ງ ທີ່ມີຕົວອັກສອນສະເພາະຂອງຕົນມາແຕ່ເຫິງນານແລ້ວ. ແຕ່ການກໍານົດໄລຍະເວລາກໍາເນີດຂອງຕົວອັກສອນລາວນັ້ນ ຍັງບໍ່ທັນມີຕົວໜັງສືຫົວໃດ ຫຼື ສີລາເລກແຜ່ນໃດຂຽນໄວ້ຢ່າງແນ່ນອນວ່າ ຕົວອັກສອນລາວຖືກປະດິດແຕ່ງຂຶ້ນໃນປີນັ້ນປີນີ້ ໂດຍແມ່ນທ່ານຜູ້ນັ້ນຜູ້ນີ້, ມີພຽງແຕ່ຄໍາສັນນິຖານຂອງນັກອັກສອນສາດລາວ, ບັນດາສີລາເລກທີ່ ຄົ້ນພົບ ແລະ ສົມທຽບໃສ່ຕົວອັກສອນຊາດຕ່າງໆທີ່ໄດ້ເຄົ້າມູນມາຈາກບ່ອນດຽວກັນ. ມາຮອດປັດຈຸບັນ ບັນຫານີ້ ຍັງຄົງເປັນບັນຫາທີ່ຈະຕ້ອງຄົ້ນຄວ້າຢ່າງລະອຽດ, ເລິກເຊິ່ງ ແລະຍາວນານສົມຄວນ ຈຶ່ງສາມາດສະຫຼຸບໄດ້ຢ່າງຂາດຕົວ. ເຖິງແມ່ນຍັງບໍ່ທັນມີນັກອັກສອນສາດທ່ານໃດຢືນຢັນໄດ້ຢ່າງແນ່ນອນວ່າ ຕົວອັກສອນລາວນີ້ ເກີດຂຶ້ນມາແຕ່ສະໄໝໃດກັນແທ້, ແຕ່ນັກຄົ້ນຄວ້າລາວ ແລະຕ່າງປະເທດສ່ວນຫຼາຍຕ່າງກໍ່ໃຫ້ຄໍາສັງເກດຄືກັນວ່າ ອັກສອນລາວມີມາໄດ້ເກືອບສອງພັນປີແລ້ວ ຈາກບັນຫາດັ່ງກ່າວ, ພວກເຮົາຄວນ ພາກພູມໃຈໃນການທີ່ຊາດລາວເຮົາມີຕົວອັກສອນເປັນເອກະລັກປະຈໍາພາສາຂອງຕົນເອງ.

ເມື່ອເວົ້າເຖິງກົກເຄົ້າການກໍາເນີດ ແລະຄວາມເປັນມາຂອງຕົວອັກສອນລາວແລ້ວ. ແມ່ນມີຫຼາຍທັດສະນະໃຫ້ຄວາມເຫັນແຕກຕ່າງກັນ. ບາງທັດສະນະເຊັ່ນ: ທ່ານຟີໂນ (Finot), ສຸລັງ ເດດວົງສາ, ພູວົງ ພົມມະສອນ ໄດ້ຢືນຢັນວ່າ: "ຕົວອັກສອນລາວນີ້ ໄດ້ແບບຢ່າງມາຈາກຕົວອັກສອນໄທ ທີ່ຂຸນຣາມຄໍາແຫງ ເຈົ້າແຜ່ນດິນໄທ ເມືອງສຸໂຂໄທ ໄດ້ປະດິດຂຶ້ນແຕ່ປີ 1292". ຕໍ່ກັບທັດສະນະດັ່ງກ່າວນີ້ ຖືວ່າຜິດພາດທີ່ສຸດເພາະຄວາມຈິງແຫ່ງປະຫວັດສາດຄວາມເປັນມາຂອງອັກສອນລາວ ໄດ້ຢັ້ງຢືນໃຫ້ເຫັນວ່າອັກສອນລາວໄດ້ມີມາກ່ອນອັກສອນຂອງຂຸນລາມຄໍາແຫງຕັ້ງຫຼາຍຮ້ອຍປີ. ບາງທັດສະນະ ໃນໜັງສືສໍາພາດເມືອງລາວຂອງນັກຄົ້ນຄວ້າຊາວຝຣັ່ງ ໄດ້ຂຽນໄວ້ວ່າ ຊົນຊາດລາວ ມີຕົວໜັງສືໃຊ້ມາແລ້ວ ປະມານ 300 ປີ ກ່ອນ ຄ.ສ. ຊຶ່ງໄດ້ເຄົ້າມາຈາກອັກສອນຂະໂຣດຖີ ທີ່ຂຽນແຕ່ຂວາຫາຊ້າຍ. ຕໍ່ທັດສະນະດັ່ງກ່າວ ເຫັນວ່າຍັງບໍ່ທັນຊັດເຈນ ເພາະຕົວອັກສອນຂະໂຣດຖີມີໃຊ້ຢູ່ພາກຕາເວັນຕົກສ່ຽງເໜືອຂອງອິນເດຍ (ປາກິສະຖານປັດຈຸບັນ), ຊຶ່ງບໍ່ມີຊາຍແດນຕິດຈອດກັບອານາຈັກລາວເດີມສະໄໝໜອງແສ. ດັ່ງນັ້ນ ຈຶ່ງບໍ່ສາມາດຢັ້ງຢືນໄດ້ວ່າອັກສອນລາວກໍາເນີດເກີດຈາກອັກສອນຂະໂຣດຖີ. ຄຽງຄູ່ກັບທັດສະນະທີ່ກ່າວມາຂ້າງເທິງ, ກໍຍັງມີທັດສະນະ ແລະຄໍາສັນນິຖານທີ່ມີຂໍ້ມູນ ແລະເຫດຜົນພໍສົມຄວນ ຊຶ່ງສາມາດເປັນພື້ນຖານໃຫ້ແກ່ການຄົ້ນຄວ້າກົກເຄົ້າກໍາເນີດ ແລະຂະບວນວິວັດຂອງຕົວອັກສອນລາວ ໃຫ້ເລິກເຊິ່ງເຖິງຖອງໃນຕໍ່ໜ້າ.

ປະຫວັດ ແລະ ຂໍ້ມູນຕ່າງໆກ່ຽວກັບອັກສອນລາວ ທີ່ນໍາມາສະເໜີຕໍ່ໄປນີ້ ແມ່ນອີງຕາມຂໍ້ມູນປຶ້ມ "ປະຫວັດໜັງສືລາວ" ຂອງມະຫາສີລາ ວິລະວົງ , ປຶ້ມ "ປະຫວັດຕົວອັກສອນໃນລາວ" ຂອງອາຈານບົວແກ້ວ ບຸນສີໃສ ແລະບົດ "ປະຫວັດຄວາມເປັນມາຂອງໜັງສືລາວ" ໃນປຶ້ມວັນນະ ຄະດີລາວ ຂອງກະຊວງສຶກສາ ຈາກຂໍ້ມູນຂອງເອກະສານເຫຼົ່ານີ້ ສາມາດຮີບໂຮມເປັນເນື້ອໃນດັ່ງນີ້:

ອີງຕາມພົງສາວະດານລາວສະໄໝບູຮານ, ເມື່ອສັດຕະວັດທີ 1 ສະໄໝທີ່ຊົນຊາດລາວດໍາ ລົງຊີວິດຢູ່ອານາຈັກໜອງແສ (ບ່ານເຈົ້າ ຊຶ່ງແມ່ນດິນແດນມົນທົນເສສວນ ແລະແຂວງຢູນນານຂອງປະເທດຈີນປັດ

ຈຸບັນ). ເຂດແດນຂອງປະເທດເບື້ອງຕາເວັນຕົກຕິດກັບພາກເໜືອຂອງອິນເດຍໃນ ສະໄໝນັ້ນຊົນຊາດລາວຄົງໄດ້ໄປມາຄ້າຂາຍຕິດຕໍ່ທາງດ້ານວັດທະນະທຳກັບຊົນຊາດອິນເດຍມາແລ້ວ ແລະຍັງໄດ້ຮັບເອົາພຸດທະສາສະໜາລັດທິມະຫາຍານມານັບຖື ພ້ອມດ້ວຍຄຳພີປະໄຕປິດົກທີ່ຈາລຶກດ້ວຍອັກສອນສັນສະກິດ, ຈາກເຫດຜົນດັ່ງກ່າວ ຈຶ່ງຢັ້ງຢືນໃຫ້ເຫັນວ່າ ອັກສອນລາວໄດ້ ເຄົ້າມາຈາກອັກສອນສັນສະກິດທີ່ແຜ່ເຂົ້າມາຮອດດິນແດນລາວເດີມພ້ອມດ້ວຍສາສະໜາພຸດມະ ຫາຍານຕັ້ງແຕ່ສະຕະວັດທີ 1 ພຸ້ນ. ນັກຄົ້ນຄວ້າບາງຄົນໃຫ້ຄຳເຫັນວ່າ ຕົວອັກສອນທີ່ຊົນຊາດລາວເດີມໃຊ້ໃນສັດຕະວັດທີ 1 ນັ້ນ ມາຮອດປະຈຸບັນນີ້ ຍັງເຫຼືອຄ້າງຢູ່ ຊຶ່ງໄດ້ແກ່ຕົວອັກສອນກວຍເຈົາ.

ຕົກມາເຖິງສັດຕະວັດທີ 8 ຊົນຊາດລາວພວກໜຶ່ງ ໄດ້ເຄື່ອນຍ້າຍລົງມາສ້າງຕັ້ງເມືອງແຖນຢ່າງເປັນຂະບວນໃຫຍ່. ສາຍທີ່ລົງມາສ້າງຕັ້ງເມືອງແຖນນີ້ ແມ່ນສາຍປະຫວັດສາດທີ່ສຸດ, ຂຸນບູລົມ ໄດ້ສົ່ງລູກຊາຍທັງເຈັດ ໄປປົກຄອງເມືອງຕ່າງໆຢູ່ເຂດສຸວັນນະພູມ. ໃນນັ້ນ ຂຸນລໍໄດ້ປົກຄອງເມືອງຊຽງທອງ ແລະໄດ້ສ້າງຕັ້ງອານາຈັກລາວລ້ານຊ້າງຂຶ້ນເປັນຄັ້ງທຳອິດ. ດ້ວຍເຫດນີ້ຊົນຊາດລາວ ຈຶ່ງ ໄດ້ເຂົ້າມາຢູ່ປົນກັບຊົນຊາດທ້ອງຖິ່ນເດີມຊຶ່ງໄດ້ແກ່ ຂອມ ແລະບອນ ກໍຄ່ອຍໆແຊກຊຶມເຂົ້າເທື່ອລະເລີກລະໜ້ອຍ, ຊຶ່ງໄດ້ສົ່ງຜົນສະທ້ອນໃຫ້ແກ່ຕົວອັກສອນລາວເດີມທີ່ເຄີຍຢູ່ເມືອງແຖນ (ປັດຈຸບັນໄດ້ແກ່ຕົວອັກສອນໄທດຳ) ຄ່ອຍມີການປ່ຽນແປງ ແລະຖືກເສີມຂະຫຍາຍ.

ມາເຖິງສະຕະວັດທີ 13, ຂຸນລາມຄຳແຫງເຈົ້າຄອງເມືອງສຸໂຂໄທ ແຫ່ງອານາຈັກສະຫຍາມ ໄດ້ສືບທອດເອົາອັກສອນລາວເດີມ ສົມທົບໃສ່ຕົວອັກສອນຂອມ ແລ້ວດັດແປງເປັນໄທສະຫຍາມແບບທຳອິດຂຶ້ນ. ຕົກມາເຖິງສະຕະວັດທີ 14; ອານາຈັກລາວລ້ານຊ້າງເອກະພາບໃຕ້ການນຳພາຂອງເຈົ້າຟ້າງຸ່ມໄດ້ຮັບສາສະໜາພຸດລັດທິຫີນະຍານແບບລັງກາວົງມາຈາກກຳປູເຈຍ ມາເປັນສາສະໜາປະຈຳຊາດ, ເຖິງວ່າຄຳພີດີກາຕ່າງໆທີ່ຖືກນຳເອົາເຂົ້າມານັ້ນ ຈະບັນທຶກດ້ວຍອັກສອນຂອມ-ສັນສະກິດກໍຕາມ ນັກປາດລາວ ຄົນລາວໃນເວລານັ້ນ ກໍຍັງໃຊ້ອັກສອນລາວ ທີ່ຕົນເຄີຍໃຊ້ມາແຕ່ເດີມຄຽງຄູ່ກັບອັກສອນຂອມ-ສັນສະກິດ. ຕ່າງແຕ່ວ່າອັກສອນຂອມແມ່ນໃຊ້ໃນທາງສາສະໜາ, ສ່ວນອັກສອນລາວແມ່ນໃຊ້ໃນທາງຝ່າຍບ້ານເມືອງ.

ມາເຖິງສະຕະວັດທີ 16, ວົງການພຸດທະສາສະໜາລາວ ໄດ້ຮັບເອົາພະໄຕປິດົກ ແລະຄຳພີດີກາຕ່າງໆຢ່າງຫລວງຫລາຍມາຈາກລ້ານນາຊຽງໃໝ່ (ຊຽງໃໝ່ກໍໄດ້ມາຈາກພວກມອນ-ພະມ້າ) ຄຳພີເຫລົ່ານີ້ລ້ວນແຕ່ຂຽນດ້ວຍຕົວອັກສອນຍວນ ຊຶ່ງຕໍ່ມາໄດ້ຜັນແປມາເປັນຕົວອັກສອນທຳຂອງລາວ. ຍ້ອນຄິດກິພົນ ແລະຖານະບົດບາດຂອງພຸດທະສາສະໜາທີ່ສູງຂຶ້ນ ແລະແຜ່ຂະຫຍາຍຢ່າງກວ້າງຂວາງໃນໝູ່ປະຊາຊົນລາວທຸກຊົນຊັ້ນວັນນະໃນຍຸກສະໄໝດັ່ງກ່າວ, ຕົວອັກສອນທຳຈຶ່ງສົ່ງຜົນສະທ້ອນອັນສຳຄັນຢ່າງເປັນຮູປະທຳຕໍ່ການຂະຫຍາຍຕົວຂອງອັກສອນລາວທີ່ມີຖານະເປັນນັງສືຝ່າຍບ້ານເມືອງ ນອກວົງການສາສະໜາ. ຍ້ອນໄດ້ຮັບຜົນສະທ້ອນດັ່ງກ່າວນີ້ເອງ ຕົວອັກສອນລາວຈຶ່ງຄ່ອຍໆປ່ຽນຈາກຮູບຫລ່ຽມມາເປັນຮູບມົນ.

ດິນາສະຫຍາມຈັບໄດ້ ເອົາໄປຂັງໄວ້ທີ່ກຸງເທບ ແລະກໍສັ້ນພະຊົນຢູ່ທີ່ນັ້ນ ເມື່ອປີ 1828. ຫຼັງຈາກນັ້ນ ລາຊະອານາຈັກລ້ານຊ້າງກໍຕົກເປັນທີ່ວເມືອງຂຶ້ນຂອງໄທໂດຍກົງ. ໃນໄລຍະນີ້ເອງ, ຕົວອັກສອນ ລາວໄດ້ຖືກຢຽບຢ່ຳລົງຈົນເກືອບຈະຫາຍສາບສູນໄປ, ພວກເຂົາໄດ້ສົ່ງເສີມອັກສອນໄທສະຫຍາມຂຶ້ນ. ຈົນເຖິງປີ ຄ.ສ 1893 ພວກລ່າເມືອງຂຶ້ນຝຣັ່ງໄດ້ມາຍາດແຍ່ງເອົາແຜ່ນດິນລາວທາງຝັ່ງຊ້າຍແມ່ນ້ຳຂອງອອກຈາກສະຫຍາມ. ພວກສັກດິນາສະຫຍາມເຫັນດັ່ງນັ້ນ ຈຶ່ງໄດ້ປະກາດໂຮມເອົາດິນແດນລ້ານຊ້າງທາງຝັ່ງຂວາຂອງແມ່ນ້ຳຂອງເຂົ້າເປັນແຜ່ນດິນສະຫຍາມໃນປີ ຄ.ສ 1899. ນັບແຕ່ນັ້ນມາ ຄົນລາວທີ່ຖືກກວາດຕ້ອນໄປຢູ່ດິນໄທ ແລະຄົນລາວຢູ່ໃນເຂດການປົກຄອງຂອງໄທ (ພາກອີສານຂອງໄທປັດຈຸບັນ) ໄດ້ຖືກພວກເຂົາບັງຄັບໃຫ້ຮຽນ ແລະໃຊ້ອັກສອນໄທ ຈົນຊາວອີສານໃນປະເທດໄທປັດຈຸບັນ ບໍ່ຮູ້ຈັກອັກສອນລາວເລີຍ. ເປັນອັນວ່າຕົວອັກສອນລາວທີ່ເຄີຍໃຊ້ໃນທົ່ວດິນແດນລ້ານຊ້າງຝັ່ງຂວາແມ່ນ້ຳຂອງ (ຍົກເວັ້ນແຂວງໄຊຍະບູລີ ແລະຈຳປາສັກ) ໄດ້ເຖິງການອະວະສານ ໂດຍມີອັກສອນໄທເຂົ້າມາແທນທີ່.

ຕໍ່ມາເມື່ອພວກລ່າເມືອງຂຶ້ນຝຣັ່ງເຂົ້າມາຕັດແບ່ງດິນແດນ ແລະ ຍຶດຄອງປະເທດລາວແລ້ວ, ອັກສອນລາວກໍຖືກຢຽບຍ່ຳລົງໄປຕື່ມອີກຂັ້ນໜຶ່ງຈົນເກືອບສູນເສຍໄປ. ພວກເຈົ້ານາຍລາວ, ຈຳນວນໜຶ່ງ ທີ່ນິຍົມຝຣັ່ງໄດ້ເຫັນດີໃຫ້ລົບລ້າງອັກສອນລາວຖິ້ມ ແລ້ວບັນຍັດເອົາຕົວອັກສອນຝຣັ່ງ(ລາແຕັງ)ໃຊ້ຂຽນຄຳລາວແທນຕົວອັກສອນລາວ ທີ່ເປັນມໍລະ ດົກອັນລ້ຳຄ່າຂອງຊາດ. ຕໍ່ເຫດການດັ່ງກ່າວມັນໄດ້ປຸກລະດົມໃຫ້ປັນຍາຊົນລາວຈຳນວນ ໜຶ່ງ ທີ່ມີຈິດໃຈໜຶ່ງ ທີ່ມີຈິດໃຈຊາດ ພາກັນສູ້ຊົນ ເພື່ອຟື້ນຟູອັກສອນລາວຄືນມາໃຊ້ ໂດຍພະຍາຍາມຫາວິທີປັບປຸງໃຫ້ມັນສົມບູນດີຂຶ້ນຕື່ມ. ຕໍ່ໜ້າກະແສຟອງແຫ່ງການຕໍ່ສູ້ອັນເດັດດ່ຽວຂອງປະຊາຊົນລາວບັນດາເຜົ່າດັ່ງກ່າວມານັ້ນ ພວກລ່າເມືອງຂຶ້ນຝຣັ່ງຈຳຕ້ອງໄດ້ ຍິນຍອມໃຫ້ຄົນລາວມີສິດຮຽນ ແລະໃຊ້ອັກສອນລາວຄືນອີກ ທັງໆທີ່ພາສາຝຣັ່ງ ແລະອັກສອນຝຣັ່ງ ຍັງຄົງສືບຕໍ່ເປັນຜູ້ມີຖານະບົດບາດໃນສັງຄົມທາງການຂອງລາວຢູ່ຕໍ່ໄປອີກ ຕາມ. ໃນໄລຍະນີ້ເອງ (ຕົ້ນສະຕະວັດ 20) ອັກສອນລາວໄດ້ຮັບການຟື້ນຟູ ແລະປັບປຸງໃຫ້ສົມບູນຂຶ້ນຕື່ມຂັ້ນໜຶ່ງໂດຍສະເພາະແມ່ນໄດ້ຮັບເອົາລະບົບວັນນະຍຸດເຂົ້າມາໃຊ້ຢ່າງເປັນທາງການ.

ເຫດການຕົວຈິງທີ່ສະແດງໃຫ້ເຫັນເຖິງການສູ້ຊົນເພື່ອຟື້ນຟູ ປັບປຸງ ແລະປົກ ປັກຮັກສາອັກສອນລາວຂອງປັນຍາຊົນຜູ້ຮັກຊາດ: ໃນປີ 1932 ອົງການ " ພຸດທະບັນດິດສະພາຈັນທະບູລີ " ໄດ້ຈັດຕັ້ງຄະນະກຳມະການໜຶ່ງຂຶ້ນ ເພື່ອຄົ້ນຄວ້າປັບປຸງຕົວອັກສອນລາວໃຫ້ສາມາດຂຽນໄດ້ທັງຄຳລາວ ແລະ ຄຳປາລີ-ສັນສະກິດ. ໃນກອງປະຊຸມຄົ້ນຄວ້າຄັ້ງນີ້ມີ 3 ຄຳເຫັນແຕກຕ່າງກັນຄື:

1. ພວກທີ່ໄດ້ຮຽນໜັງສືຝຣັ່ງຫຼາຍ ແລະມີແນວຄິດນິຍົມຝຣັ່ງ ເຫັນດີໃຫ້ລົບລ້າງຕົວອັກສອນລາວຖິ້ມ ແລ້ວບັນຍັດເອົາຕົວອັກສອນຝຣັ່ງ (ແບບລາແຕັງ) ໃຊ້ຂຽນຄຳລາວ ແລະຄຳປາລີ. ຄຳເຫັນນີ້ຖືກຕ້ານຄືນຢ່າງແຂງແຮງ.
2. ພວກທີ 2 ເຫັນວ່າ ໃຫ້ຮັກສາຕົວອັກສອນລາວໄວ້ຄືເກົ່າ. ສຳລັບຕົວລາວທີ່ບໍ່ມີຢູ່ໃນອັກສອນປາລີນັ້ນ ໃຫ້ຈ້ຳຈຸດ " . " ກ້ອງຕົວອັກສອນລາວເອົາ, ເຮັດຄືກັນກັບອັກສອນໂຣມັນ(ລາແຕັງ) ທີ່ໃຊ້ຂຽນຄຳປາລີ. ຕໍ່ຄຳເຫັນນີ້ ທີ່ປະຊຸມເຫັນວ່າບໍ່ສະດວກໃນການໃຊ້ ແລະມັກພາໃຫ້ຫລົງສະເໝີ.
3. ພວກທີ 3 ເຫັນດີໃຫ້ຮັກສາອັກສອນລາວໄວ້ຄືເກົ່າແລະຕື່ມຕົວທີ່ຍັງຂາດໃນອັກສອນປາລີ-ສັນສະກິດນັ້ນເຂົ້າມາໃໝ່.

ຍ້ອນພວກທີ 3 ມີສຽງສ່ວນຫລາຍ ແລະມີເຫດຜົນດີກວ່າ, ໃນທີ່ປະຊຸມຈຶ່ງລົງມະຕິໃຫ້ຕົ້ນຕົວອັກສອນລາວໃຫ້ຄົບຕາມຕົວປາລີ-ສັນສະກິດ. ດັ່ງນັ້ນ ໃນປີ 1935 ປື້ມໄວຍາກອນລາວພາກ "ອັກຂະຫລະວິທີ" ຂອງຄະນະກຳມະການຫໍສະໝຸດພຸດທະບັນດິດສະພາຈັນທະບູລີ ຈຶ່ງຖືກພິມອອກໃຊ້.

* ຮູບພະຍັນຊະນະໃນປື້ມໄວຍາກອນເຫລັ້ມດັ່ງກ່າວ ມີທັງໝົດ 41 ຕົວ ດັ່ງນີ້:



ອັກຂະຫລະວິທີແບບນີ້ ຖືກນຳໃຊ້ສະເພາະແຕ່ໃນໂຮງຮຽນປະລິຍັດຕິທຳເທົ່ານັ້ນ, ເພິ່ນໄດ້ອາໄສແບບອັກຂະຫລະວິທີນີ້ ເປັນຫລັກເຂົ້າໃນການແຕ່ງປື້ມຮຽນພາສາປາລີ ຕະຫລອດຮອດຫລັກສູດຕ່າງໆໃນທາງສາສະໜາ ຊຶ່ງໄດ້ອອກແຜ່ຜາຍຮ່ຳຮຽນເປັນເວລາຫລາຍປີ. ແຕ່ທາງຝ່າຍໂລກຊ້ຳພັກຍັງນິຍົມຂຽນຕົວອັກສອນລາວແບບເກົ່າ.

ເຖິງແມ່ນຈະມີການປັບປຸງແກ້ໄຂຕົວອັກສອນລາວໂດຍຄະນະກຳມະການ "ພຸດທະບັນດິດສະພາຈັນທະບູລີ" ກໍຕາມ, ບັນດາປັນຍາຊົນຜູ້ຮັບຜິດຊອບກ່ຽວກັບວຽກງານວັດທະນະທຳໃນເວລານັ້ນ ຕ່າງກໍຍັງສູ້ຖຽງກັນໃນບັນຫາຕົວອັກສອນ ແລະວິທີຂຽນໜັງສືລາວ. ພວກລູກມືຂອງຝຣັ່ງ, ຍາມໃດກໍຍັງບໍ່ທັນປະລະໃນການໃຊ້ເລ່ກົນທີ່ຫວັງຢາກລົບລ້າງອັກສອນລາວຖິ້ມ ແຕ່ພວກເຂົາກໍຖືກປະລາໄຊ. ເຫດການຕົວຈິງໃນຕົ້ນຊຸມປີ 40 ຂອງສະຕະວັດທີ່ແລ້ວ ຊຶ່ງສະແດງອອກຢູ່ໃນຕອນໜຶ່ງຂອງບົດ "ຄວາມຊົງຈຳຂອງຊີວິດເຮົາ..." ຂອງທ່ານພູມີ ວົງວິຈິດ. ທ່ານໄດ້ບັນທຶກກ່ຽວກັບບັນຫານີ້ວ່າ: " ເວລານັ້ນ ພວກຝະລັ່ງໃຊ້ລູກມືຂອງເຂົາທີ່ຮຽນໜັງສືມາແຕ່ເມືອງຝະລັ່ງມາສູ້ຖຽງ ເພື່ອຈະໃຫ້ໃຊ້ຕົວໜັງສືລາຕິນແທນ ແລ້ວຍຸບເລີກຕົວໜັງສືລາວໂດຍອ້າງເຫດຜົນວ່າ ມັນບໍ່ຄົບສຽງຂອງຕ່າງປະເທດ ແລະວ່າຈະໄປເຮັດພິມດີດມາຕີ ແລະຫລໍ່ຕົວໜັງສືມາພິມເປັນໂຮງພິມກໍຍາກ. ກອງປະຊຸມແຕ່ລະເທື່ອມີແຕ່ຜູ້ຖຽງກັນໃນບັນຫານີ້, ບາງເທື່ອກໍເກີດຕີກັນຢູ່ໃນກອງ

ປະຊຸມ, ເປັນຕົ້ນແມ່ນເວລາກິນເຫລົ້າເມົາ. ຜູ້ທີ່ສູ້ຖຽງກັນໃນບັນຫາຕົວໜັງສື ແລະວິທີຂຽນໜັງສືລາວນີ້ ມີ 3 ພວກດ້ວຍກັນ ຄື ພວກໜຶ່ງແມ່ນພວກຮຽນໜັງສືມາແຕ່ເມືອງຝຣັ່ງ ເຊິ່ງຢາກຍຸບເລີກຕົວໜັງສືລາວແລ້ວຂຽນພາສາລາວດ້ວຍຕົວໜັງສືລາຕິນ ແລະຂຽນໜັງສືທາງການຫາກັນເປັນພາສາຝະລັ່ງເລີຍ ເຊິ່ງຕົວຕັ້ງຕົວຕີແມ່ນ ທ້າວຫຍຸຍ ອະໄພ, ກະຕ່າຍ ໂດນສະໂສລິດດ ອຸລິດ ສຸວັນນະວົງດ ສຸພັນ ບະລັງຊາເດີລາບລິດ; ພວກທີສອງ ແມ່ນຄົນລາວທີ່ເຄີຍຮຽນໜັງສືໄທ ແລະມະຫາທີ່ສຶກອອກຈາກວັດທີ່ຢາກໃຫ້ເພີ່ມຕື່ມຕົວໜັງສືລາວໃຫ້ຄົບຕາມສຽງສາກົນ ແລະຂຽນມີຕົວສະກົດກາລັນຕາມວາດຂຽນຂອງໄທ, ເຊິ່ງຕົວຕັ້ງຕົວຕີ ແມ່ນມະຫາພູມີ, ມະຫາເຣືອງ, ມະຫາອ້ວນ, ມະຫາເກືອງ ປະທຸມຊາດ, ທ້າວແກ້ວຕາ, ຜຸຍ ປັນຍາ; ພວກທີສາມ ແມ່ນພວກທີ່ຢາກຮັກສາການຂຽນໜັງສືລາວໄວ້ຕາມເດີມຄືຂຽນຕາມສຽງປາກຂອງຄົນລາວ, ເພີ່ມແຕ່ໄມ້ເອກ ໄມ້ໂທ ໄມ້ຕີ ໄມ້ຈັດຕະວາ, ເຊິ່ງຕົວຕັ້ງຕົວຕີ ແມ່ນ ປີແອ ງິນ, ທ້າວບົງ ສຸວັນນະວົງ, ທ້າວຄຳສີ, ທ້າວເກນ ແລະເຮົາເອງ (ພູມີ ວົງວິຈິດ). ການຖົກຖຽງກັນກິນເວລາຫລາຍເດືອນບໍ່ຕົກລົງກັນໄດ້, ທ້າຍສຸດ ແມ່ນເຈົ້າເພັດຊະລາດຕັດສິນໃຫ້ ໂດຍໃຫ້ເອົາຄຳເຫັນຂອງພວກທີສາມນີ້ທັງໝົດ".

ມາຮອດ ປີ 1948, ຄະນະກຳມະການອັກສອນສາດລາວ ໄດ້ອອກຂໍ້ບັນຍັດວ່າ ຕົວພະຍັນຊະນະລາວມີແຕ່ 27 ຕົວ ໂດຍຕື່ມຕົວ ຣ ເຂົ້າອີກ ແລະບັນຍັດໃຫ້ຖືຫລັກການຂຽນພາສາລາວຕາມສຽງຄຳເວົ້າ ແຕ່ອະນຸຍາດໃຫ້ໃຊ້ສະກົດພິເສດ ສຳລັບຄຳທີ່ມາຈາກປາລີ-ສັນສະກິດ.

ໃນເວລາຕໍ່ມາ ຢູ່ໃນເຂດຄວບຄຸມຊົ່ວຄາວຂອງລັດຖະບານຫຸ່ນວຽງຈັນ, ພວກນັກສັກສອນສາດລາວກໍໄດ້ພະຍາຍາມດັດແກ້ ແລະປັບປຸງການຂຽນອັກສອນລາວ ແຕ່ຍ້ອນຂາດທິດນຳອັນຖືກຕ້ອງ, ຂາດຄວາມເຂົ້າໃຈພື້ນຖານກ່ຽວກັບລັກສະນະຊາດ, ມະຫາຊົນ ແລະລັກສະນະວິທະຍາສາດກ້າວໜ້າໃນການຄົ້ນຄວ້າ ແລະນຳໃຊ້ອັກສອນລາວ, ສະນັ້ນ ຄວາມພະຍາຍາມດັ່ງກ່າວຈຶ່ງບໍ່ສຳເລັດຜົນ. ຍິ່ງໄປກວ່ານັ້ນ ລັດທິລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາ ຍັງໄດ້ອຳນວຍຄວາມສະດວກທຸກຢ່າງໃຫ້ອັກສອນຝຣັ່ງ, ອັງກິດ, ໄທເຂົ້າມາຢຶດເອົາຖານະບົດບາດອັນໄດ້ປຽບກວ່າໃນວົງການສັງຄົມລາວວຽງຈັນ. ຄະນະກຳມະການວັນນະຄະດີລາວຊຶ່ງຕໍ່ມາໄດ້ກາຍເປັນລາຊະບັນດິດສະພາລາວຝ່າຍວຽງຈັນ ໄດ້ພະຍາຍາມວາງຫລັກການເອກະພາບໃນການຂຽນອັກສອນລາວອອກມາດ ແຕ່ບໍ່ປະສົບຜົນສຳເລັດ. ສະນັ້ນການໃຊ້ແລະຂຽນໜັງສືລາວຢູ່ເຂດວຽງຈັນເກົ່າຈຶ່ງມີລັກສະນະກະເທີນ, ຊອດກະຈ້າ ແລະບໍ່ເປັນເອກະພາບກັນ. ໃນບົດຄຳນຳຂອງປື້ມປະຫວັດໜັງສືລາວ ໂດຍ ສິລາ ວິລະວົງ (ປີ 1973) ໄດ້ຂຽນໄວ້ຕອນໜຶ່ງວ່າ: "ອັກສອນສາດລາວໃນທຸກວັນນີ້ ມີຫລາຍແງ່ຫລາຍວາດ ຍັງບໍ່ຍຸຕິເປັນແບບດຽວກັນ ເຖິງແມ່ນທາງລາຊະການໄດ້ຈັດຕັ້ງກຳມະການອັກສອນສາດລາວມາແຕ່ປີ 1948 ແລະຈົນກຳມະການຄະນະນັ້ນ ໄດ້ປ່ຽນແປງມາເປັນຄະນະກຳມະການວັນນະຄະດີລາວຈົນຕະຫລອດມາເປັນລາຊະບັນດິດສະພາລາວໃນທຸກວັນນີ້ແລ້ວກໍດີ ການອັກສອນສາດລາວ ກໍຍັງບໍ່ຍຸດຕິເປັນລະບຽບແນ່ນອນແທ້ ເພາະເຫດໃນວົງການນັກຂຽນໜັງສືລາວທັງທາງລາຊະການ ແລະສ່ວນຕົວຍັງຂຽນບໍ່ລົງຮອຍກັນຢູ່".

III. ການຂະຫຍາຍຕົວຂອງອັກສອນລາວ •

ຢູ່ໃນເຂດປົດປ່ອຍຂອງບັນດາກຳລັງຮັກຊາດ, ພັກປະຊາຊົນປະຕິວັດລາວ ໄດ້ເອົາໃຈໃສ່ຊີ້ນຳການໃຊ້ພາສາ ແລະຕົວອັກສອນໃຫ້ເປັນເອກະພາບ, ໂດຍພະຍາຍາດັດແກ້, ປັບປຸງມັນໃຫ້ນັບມື້ນັບດີຂຶ້ນຕາມທິດທາງຮັບປະກັນ ແລະເສີມຂະຫຍາຍລັກສະນະຊາດ, ມະຫາຊົນ ແລະວິທະຍາສາດອັນກ້າວໜ້າທັນສະ

ໃໝ່. ພັກໄດ້ຢືນຢັນຫລັກໝັ້ນຂອງຕົນກ່ຽວກັບຫລັກການຂຽນໜັງສືລາວຄືຂຽນຕາມສຽງຢ່າງເປັນເອກະພາບ. ພະແນກສຶກສາ ແລະພະແນກໂຄສະນາອົບຮົມສູນກາງໄດ້ເປັນເຈົ້າການຊຸກຍູ້ ປຸກລະດົມເສີມຂະຫຍາຍທ່າແຮງຂອງມັນສະໝອງລວມໝູ່ຂອງປັນຍາຊົນ ແລະນັກຮຽນຮູ້ປະຕິວັດທຸກຖ້ວນໜ້າໃນການທະນຸຖະໜອມ ຄົ້ນຄວ້າ, ສຶກສາ ແລະດັດແກ້ປັບປຸງພາສາ-ອັກສອນລາວໃຫ້ນັບມື້ນັບສົມບູນຂຶ້ນ.

ປຶ້ມໄວຍາກອນລາວຂອງ ທ່ານພູມີ ວົງວິຈິດ ທີ່ພິມເຜີຍແຜ່ໃນປີ 1967 ນັ້ນ, ຜູ້ແຕ່ງໄດ້ຢືນຢັນຄືນຫລັກການຂຽນໜັງສືລາວຕາມສຽງຢ່າງມີພື້ນຖານວິທະຍາສາດອັນກ້າວໜ້າ ແລະມີລັກສະນະມະຫາຊົນຢ່າງເລິກເຊິ່ງ. ນອກຈາກນີ້ ຍັງໄດ້ໄຂຊ່ອງທາງ ແລະຊີ້ທິດນຳອັນຖືກຕ້ອງໃຫ້ແກ່ການສືບຕໍ່ຄົ້ນຄວ້າ, ດັດແກ້ ແລະປັບປຸງພາສາລາວ-ອັກສອນລາວໃນອະນາຄົດ ປຶ້ມໄວຍາກອນລາວເຫລັ້ມນີ້ ເປັນຂີດໝາຍອັນໜັກແໜ້ນ ແລະສຳຄັນຍິ່ງໃນການຂະຫຍາຍຕົວຂອງພາສາ ແລະອັກສອນລາວທີ່ໄດ້ຫລັກການໃຊ້ຢ່າງເປັນເອກະພາບໃນທົ່ວປະເທດ ໂດຍຮັບປະກັນລັກສະນະຊາດ, ມະຫາຊົນແລະກ້າວໜ້າທຽບທັນກັນກັບລະດັບວິທະຍາສາດອັນທັນສະໄໝຂອງໂລກ.

ແຕ່ກໍເປັນທຳມະດາຢູ່ວ່າ ເມື່ອສັງຄົມລາວຂະຫຍາຍຕົວກ້າວໜ້າຂຶ້ນເທົ່າໃດ ພາສາລາວ ແລະອັກສອນລາວອັນເປັນພາຫະນະຮັບໃຊ້ການພົວພັນຊຶ່ງກັນແລະກັນໃນສັງຄົມນັ້ນ ກໍຈະຕ້ອງຂະຫຍາຍຕົວຂຶ້ນໄປນຳເທົ່ານັ້ນ ຈຶ່ງຈະຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການອັນນັບມື້ນັບສູງຂຶ້ນຂອງຍຸກສະໄໝ. ເພາະສະນັ້ນ ວິຊາການພາສາສາດ-ອັກສອນສາດລາວ ຈຶ່ງຍັງຈະຕ້ອງໄດ້ແກ້ໄຂບັນຫາຕ່າງໆຫລາຍຢ່າງຕື່ມອີກ ເພື່ອອຳນວຍຄວາມສະດວກອັນຈຳເປັນໃຫ້ແກ່ການຂະຫຍາຍຕົວຂອງພາສາ ແລະອັກສອນລາວ. ສະເພາະພວກອັກສອນສາດລາວນັ້ນ ຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າ ແລະແກ້ໄຂບັນຫາຕ່າງໆທີ່ຫຍຸ້ງຍາກ ແຕ່ຈຳເປັນທີ່ສຸດໃນການດັດແກ້ ແລະປັບປຸງຫລັກການຂຽນອັກສອນລາວໃຫ້ຖືກຕ້ອງເໝາະສົມກວ່າເກົ່າອີກ.

ຕົວຢ່າງ:

- *ບັນຫາຫລັກການຂຽນສະຫລະປະສົມ ແລະການໃຊ້ຕົວສະກົດ.*
- *ບັນຫາການໝາຍບັນທຶກສຽງດ້ວຍລະບົບວັນນະຍຸດ ແລະການເຕັ້ນສຽງໃນພາສາລາວ.*
- *ບັນຫາການໃຊ້ອັກສອນລາວເພື່ອບັນທຶກພາສາຕ່າງປະເທດ ແລະອື່ນໆ...*

ບັນຫາຕ່າງໆເຫລົ່ານີ້ ພວມໄດ້ຮັບການຄົ້ນຄວ້າຈາກພວກນັກອັກສອນສາດ ພາຍໃຕ້ການຊີ້ນຳຢ່າງໃກ້ຊິດຂອງພັກ ແລະລັດທີ່ຍາມໃດກໍບໍ່ໄດ້ລົດລະຄວາມເປັນຫ່ວງເປັນຕໍ່ການຂະຫຍາຍຕົວຂອງພາສາ, ອັກສອນ ແລະສິລະປະວັນນະຄະດີລາວ ອັນເປັນພາກສ່ວນໜຶ່ງທີ່ໃຫຍ່ຫລວງແລະສຳຄັນຍິ່ງໃນວັດທະນະທຳແຫ່ງຊາດລາວເຮົາ.

(*) [illegible]

ເອກະສານອ້າງອີງ

1. ໄກສອນ ພົມວິຫານ, 25 ປີ ແຫ່ງການຕໍ່ສູ້ ແລະໄຊຊະນະຂອງພັກປະຊາຊົນປະຕິວັດລາວ, ວຽງຈັນ: ສປປລ. 1980.
2. ຄຳຮຸ່ງ ແສນມະນີ, ພາສາສາດ: ທິດສະດີພາສາ, ວຽງຈັນ: ມສຄ, 1980.
3. ໜັງສືພິມວັນນະສິນ ສະບັບທີ 98, 99.
4. ບໍ່ແສງຄຳ ວົງດາລາ ແລະຄະນະ, ວັນນະຄະດີລາວ, ວຽງຈັນ: ວິສະຫະກິດການພິມຈຳໜ່າຍສຶກສາ, 1987.
5. ບົວແກ້ວ ບຸນສີໃສ, ປະຫວັດຕົວອັກສອນໃນລາວ, ວຽງຈັນ: ມສຄ, 1980.
6. ສ. ເດດວົງສາ, ພາສາ, ວັນນະຄະດີ ແລະວັດທະນະທຳຕາເວັນອອກ, ວຽງຈັນ:........, 1974.
7. ທອງຫວາ ຈັນທະໄພບູນ, ພາສາລາວ ມ. 4, ວຽງຈັນ: ຮຣ ຟ້າງຸ່ມ. 1973.
8. ກຳໄຊ ທອງຫລໍ່, ຫລັກພາສາ, ບາງກອກ: ລວມສານ, 2509.
9. ສະຖຽນ ໂກເສດ, ປະຫວັດສາດໄລກສະໄໝບູຮານ, ບາງກອກ, 2515.
10. ມະຫາສິລາ ວິລະເສດໂຖ, ປະຫວັດວັດທະນະທຳອິນເດຍ, ບາງກອກ, 2512.
11. ສິລາ ວິລະວົງ, ພົງສາວະດານລາວ, ວຽງຈັນ: ວິທະຍາໄລແບບປະສົມ "ຟ້າງຸ່ມ", 1973.
12. ສ. ເດດວົງສາ ແລະຄະນະ, ຄົ້ນຄວ້າພາສາລາວ, ວຽງຈັນ:1/2/1972.

A

- ສົມເດັດເຈົ້າມະຫາລາດ.